
ຊຸດມໍລະດົກວຽງຈັນ
ສິນໄຊ
ເຫຼັ້ມດຽວຈົບ
ຈາກຄຳກອນຂອງ ປາງຄຳ
ຂຽນປັບຄຳເວົ້າທຳມະດາ
ໂດຍ ອຸທິນ ບຸນຍາວົງ
5.9191
ປຄ

ສິນໄຊ

ເຫຼັ້ມດຽວຈົບ

ຈາກຄຳກອນ ຂອງ ປາງຄຳ

ຂຽນເປັນຄຳເວົ້າທຳມະດາ

ໂດຍ ອຸທິນ ບຸນຍາວົງ

ຫໍສະໝຸດແຫ່ງຊາດ
ເລກທະບຽນ 001054/11
ເລກໝູ່ໜັງສື 895.9191

ຂອງຂວັນຈາກ ດອກເກດ

ລາວ--ວັນນະຄະດີ

ສຳນັກພິມ ດອກເກດ

ຊຸດນໍລະດົກວຽງຈັນ
ສິນໄຊ ເຫຼັ້ມດຽວຈົບ
ຂຽນເປັນຄຳເວົ້າທຳມະດາ : ອຸທິນ ບຸນຍາວົງ
ຮູບປະກອບ : ວົງສະຫວັນ ດຳລົງສຸກ
ຮູບເມືອງເປັງຈານ (ຮູບແຕ້ມສີນ້ຳ): ອ.ຈ ກົງພັດ ຫຼວງລາດ

ພິມຄັ້ງທີ 1 1991
ພິມຄັ້ງທີ 2 1992, ໂຮງພິມວັນນະສິນ, ຈຳນວນ 1500 ຫົວ
ພິມຄັ້ງທີ 3 1996
ຄັ້ງທີ 4 ບໍລິສັດ ດອກເກດ ຈັດພິມຈຳກັດ, 2003
ຄັ້ງທີ 5 ບໍລິສັດ ດອກເກດ ຈັດພິມຈຳກັດ, 2004-2005

ຄັ້ງທີ 6, ຈັດພິມໂດຍ ສຳນັກພິມ ດອກເກດ, ຕຸລາ 2010
ທະບຽນອະນຸຍາດ ເລກທີ 278 ພຈ 20102010
ພິມທີ່ ພະໄຊ ກຣາບຟິກ.

ຈັດຈຳໜ່າຍໂດຍ ບໍລິສັດ ດອກເກດຈັດພິມ ຈຳກັດ
ໂທ:(+856-21)263748 www.doked.com
e-mail.dokked@veetoo.net

ຂໍ້ມູນທາງບັນນານຸກົມຂອງຫໍສະໝຸດແຫ່ງຊາດ

ປາງຄຳ

ສິນໄຊ/ປາງຄຳ, ຂຽນເປັນຄຳເວົ້າທຳມະດາ ໂດຍ ອຸທິນ ບຸນຍາວົງ, ພາບປະກອບ ໂດຍ ສຸກສະຫວັນ ດຳລົງສຸກ. ພິມຄັ້ງທີ 6. ວຽງຈັນ:
ສຳນັກພິມດອກເກດ 2010. 148 ໜ້າ: ພາບປະກອບສີ, 21 ຊມ
(ຊຸດນໍລະດົກວຽງຈັນ) 1.ວັນນະຄະດີລາວ, I. ຊື່ເລື່ອງ II. ຊື່ຊຸດ

895.9191 dc-22
ISBN 978-9932-07-013-8

ຄຳນຳ ສຳນັກພິມ

ສິນໄຊ ຫຼື ສັງສິນໄຊ ຖືວ່າເປັນເລື່ອງເອກຂອງວັນນະຄະດີບູຮານຂອງລາວເຮົາ. ສຳນວນທີ່ລຶດຈະນາຈາກໃບລານ ໂດຍ ມະຫາສິລາ ວິຣະວົງສ໌ ນັ້ນຖືວ່າເປັນສະບັບທີ່ສົມບູນກວ່າໝູ່ ແລະພິມອອກມາຫຼາຍເທື່ອນັບແຕ່ຊຸມປີ 1940 ເປັນຕົ້ນມາ.

ມາຮອດປີ 2010 ໃນໂອກາດສະຫຼອງວຽງຈັນເປັນນະຄອນຫຼວງ 450 ປີ ກໍ່ເປັນວາລະອັນສຳຄັນຍິ່ງທີ່ຈະໄດ້ຮຽນຮູ້ວັນນະຄະດີລາວ ອາຍຸເກືອບ 400 ປີ ເລື່ອງນີ້ໃຫ້ເລິກເຊິ່ງກວ່າເກົ່າ.

ສຳນັກພິມດອກເກດຈຶ່ງໄດ້ຈັດພິມຮວມເຫຼັ້ມສິນໄຊສະບັບຄຳເວົ້າທຳມະດາທີ່ຮຽບຮຽງໂດຍ ມົ້ລາງ ອຸທິນ ບຸນຍາວົງ ເຫຼັ້ມນີ້ ເປັນຄັ້ງທີ 6 ໃນຮອບ 10 ປີ. ສ່ວນສັງສິນໄຊເຫຼັ້ມທີ່ເປັນຄຳກອນ ຫຼື ຮ້ອຍກອງ ທີ່ມີຄຳອະທິບາຍຄຽງຄູ່ກັນກໍໄດ້ປາກົດສູ່ສາຍຕາຜູ່ອ່ານມາແຕ່ປີ 2009 ແລ້ວ. ກ້າວ່າຜູ່ໃດຍັງບໍ່ທັນມີກໍຢາກບອກວ່າກ້າໄດ້ອ່ານສະບັບຄຳເວົ້າທຳມະດານີ້ແລ້ວ ມັນກໍຈະກະຕຸ້ນໃຫ້ຢາກອ່ານສະບັບຄຳກອນທີ່ຫຼາຍຄົນຈົ່ມວ່າມີແຕ່ຄຳຍາກໆ ມີແຕ່ຄຳສັບສັນສະກຣິດ ປາລີ ລາຊາສັບ ແຕ່ເມື່ອຮູ້ເລື່ອງແລ້ວກໍເຮັດໃຫ້ເຂົ້າໃຈຄຳສັບຍາກໆ ເພາະມີຄຳແປອະທິບາຍໄວ້ພ້ອມ.

ຄວາມສົນໃຈຂອງຜູ້ອ່ານຕໍ່ວັນນະກຳນັ້ນເປັນດັ່ງເຫວົ້າພະລັງທາງບວກສຳລັບວັນນະຄະດີລາວ. ຫວັງວ່າທ່ານຜູ່ອ່ານຈະເປັນທັງກຳລັງຊຸກຍູ້ແລະຜູ່ຊົມໃຊ້ມໍລະດົກທາງວັດທະນະທຳຕ່ອນນີ້ໄວ້ໃຫ້ຄົງຢູ່ຕະຫຼອດໄປ.

ສຳນັກພິມດອກເກດ

ຕຸລາ 2010

ຄຳນຳ

ຜູ້ອ່ານສ່ວນຫຼາຍເວົ້າວ່າ ໄດ້ອ່ານເລື່ອງສິນໄຊ ແຕ່ບໍ່ເຂົ້າໃຈແຈ້ງ ຍ້ອນຄຳກອນມີສັບຍາກຫຼາຍ. ດັ່ງນີ້ ຈຶ່ງອ່ານບໍ່ສຸດ ແລ້ວກໍບໍ່ຮູ້ຄວາມເລິກແລບຂອງເລື່ອງ. ໂດຍທົ່ວໄປປະຊາຊົນລາວເຄີຍໄດ້ຍິນໄດ້ຟັງເລື່ອງສິນໄຊຈາກການເລົ່າຂອງຄູອາຈານ ຫຼື ຜູ້ອາວຸໂສທັງຫຼາຍ ໂດຍເລົ່າສືບຕໍ່ກັນມາຫຼາຍເຊັ່ນຄົນ.

ປຶ້ມຫົວນີ້ ຖືເປັນຄວາມພະຍາຍາມຂອງວັນນະສິນ ທີ່ຢາກຕອບສະໜອງຄວາມຕ້ອງການຂອງຜູ້ອ່ານ. ໂດຍສະເພາະຜູ້ອ່ານທີ່ເປັນເຍົາວະຊົນ. ພວກເຮົາຈຶ່ງເຮັດໂຄງການຄົ້ນຄວ້າ ແລະຮຽບຮຽງເລື່ອງສິນໄຊຈາກຄຳກອນມາເປັນຄຳເວົ້າທຳມະດາ ຫຼື ຄຳຮ້ອຍແກ້ວ ໂດຍໄດ້ຮັບຄວາມຮ່ວມມືຈາກມູນນິທິໂຕໂຢຕາແຫ່ງປະເທດຍີ່ປຸ່ນ. ດ້ວຍຈຸດປະສົງໃຫ້ຄົນທົ່ວໄປອ່ານເຂົ້າໃຈງ່າຍຜູ້ຮຽບຮຽງຈຶ່ງໃຊ້ຄຳສັບທຳມະດາ, ບໍ່ໃຊ້ລາຊາສັບ ຍົກເວັ້ນບາງຄຳທີ່ຈຳເປັນແທ້ໆ. ຊື່ຕົວລະຄອນກໍເອີ້ນຕາມມວນຊົນເວົ້າຕິດປາກເຊັ່ນ ສິນໄຊ, ສັງທອງ, ສີໂຫ (ແທນທີ່ຈະເອີ້ນ ສັງສິນໄຊ, ສັງຂາຣະກຸມານ, ສີຫະຣາດກຸມານ). ການເອີ້ນແບບນີ້ສະດວກສະບາຍສຳລັບຜູ້ອ່ານ ແລະ ຜູ້ຂຽນໃນການຈື່ຈຳ. ດັ່ງດຽວກັບກັບທີ່ພວກເຮົາເອີ້ນຫາດຫຼວງຊື່ງຕິດປາກ ແລະ ງ່າຍດາຍກວ່າເອີ້ນເຈດີໂລກະ ຈຸລາມະນີ.

ການນຳເອົາວັນນະຄະດີບູຮານ (Classic) ມາດັດແປງໃຫ້ເໝາະສົມກັບຜູ້ອ່ານຕາມຍຸກສະໄໝນັ້ນ ຫຼາຍປະເທດໄດ້ເຮັດກັນມາແລ້ວ. ມັນເປັນວິທີໃຫ້ເຍົາວະຊົນເຂົ້າເຖິງວັນນະຄະດີຂອງຊາດຕົນ ແລະ ປູກຝັງນິໄສມັກອ່ານໃຫ້ແກ່ເດັກແລ້ວຕໍ່ໄປກໍອາດເກີດມີແນວຄິດຢາກຄົ້ນຄວ້າລົງເລິກວັນນະຄະດີດັ່ງກ່າວໃນແບບສະບັບເດີມຂອງມັນ.

ໃນການຄົ້ນຄວ້າຮຽບຮຽງນີ້ ພວກເຮົາອາໄສສະບັບທີ່ລິດຈະນາ ໂດຍມະຫາ ສິລາ ວີລະວົງ ເປັນຕົ້ນຕໍ. ນອກນັ້ນກໍໄດ້ອ່ານສະບັບໃບລານໜຶ່ງຜູກ.

ສະບັບທີ່ເປັນບົດລຳເລື່ອງ. ສະບັບທີ່ພິມເປັນພາສາໄທ ແລະ ສະບັບທີ່ພິມໂດຍສຳນັກພິມຈຳໜ່າຍ ສ. ປ. ປ. ລາວ.

ການຮຽບຮຽງປຶ້ມໃຫ້ອ່ານງ່າຍນັ້ນເປັນເລື່ອງຍາກ ໂດຍສະເພາະເລື່ອງສິນໄຊທີ່ເປັນຄຳກອນ, ດັ່ງນີ້ຈຶ່ງບໍ່ອາດປາສະຈາກສິ່ງຂາດຕົກບົກພ່ອງໄດ້. ພວກເຮົາຍິນດີຮັບຄຳຕິຊົມ ແລະ ຫວັງວ່າຈະໄດ້ຮັບ ການໃຫ້ອະໄພຈາກທ່ານຜູ້ຮອບຮູ້ດ້ວຍ.

ວັນທີ 22 ກໍລະກົດ 1991

ດາຣາ ກັນລະຍາ

ຜູ້ອຳນວຍການ ວາລະສານ ວັນນະສິນ

ສາລະບັນ

1- ເມືອງເປັງຈານ

2- ພະຍາກຸສະລາດ

4- ນາງສຸມຸນທາ

5- ກຸມພັນແຫ່ງເມືອງອະໂບລາດ

8- ລາງບອກເຫດ

10- ມະໂຫລະສົບທີ່ສວນອຸທິຍານ

12- ຍັກລັກເອົານາງສຸມຸນທາ

15- ພະຍາກຸສະລາດອອກບວດ

18- ມະຫາເຖນອອກເດີນທາງ

19- ເມືອງຈຳປາ

22- ພະຍາກຸສະລາດຕ່າວຄືນເມືອງ

27- ບັ້ນແຕ່ງດອງ

36- ທ້າວສິນໄຊເກີດ

43- ຊີວິດໃນປ່າ

49- ທ້າວທັງທິກ

52- ທ້າວທັງທິກໄປພໍ້ສິນໄຊ

57- ລູກບໍ່ສັດຊື່

61- ຄືນໄປຫາສິນໄຊ

64- ການຜະຈົນໄພ: ສູ້ກັບງູຊວງ

68- ຣົບກັບຍັກໂຕທໍາອິດ
70- ຜາບແພ້ຊ້າງ
72- ບຸກດ່ານຍັກ
74- ພໍ້ຍັກຂິນີ
76- ສູ້ຣົບກັບພະຍາທອນ
78- ຮອດແດນຍັກອັດສະມຸຂີ
80- ຕົ້ນກັບລະພຶກ
82- ກິນນະລີລົງອາບນໍ້າ
85- ພົບອາສຸມຸນທາ
89- ລອງແຮງ ກັບ ກຸມພັນ
91- ກອງທັບຍັກໄລ່ຕິດຕາມ
96 ບັ້ນຣົບຕັດສິນ
102- ໄປເມືອງນາກ
108- ນາງສີດາຈັນພົບພໍ່ແມ່
112- ສິນໄຊຖືກປອງຮ້າຍ
116- ນາງສຸມຸນທາກັບຄືນສູ່ເປັງຈານ
122 ຈັບຜູ້ຄິດລ້າຍ
128- ພະຍາກຸສະລາດໄປຊອກຫາສິນໄຊ
133- ສິນໄຊຄືນເມືອງເປັງຈານ

138 ອະທິບາຍສັບ

ເມືອງເປັງຈານ

ຕາມນິທານອັນເລົ່າກັນມາແຕ່ດົນນານນັ້ນວ່າ ໃຕ້ລຸ່ມຟ້ານີ້ມີເມືອງເປັງຈານ ຊຶ່ງເປັນລັດຖະນະຄອນທີ່ມີອຳນາດເຂັ້ມແຂງ ແຜ່ອິດທິພົນກວມອານາເຂດອັນກວ້າງໃຫຍ່ໄພສານ.ຫຼາຍໆເມືອງມາອ່ອນນ້ອມ ໂດຍເອົາເຄື່ອງບັນນາການມາມອບໃຫ້ເປັນປະຈຳທຸກປີ.

ຕົວເມືອງມີກຳແພງລ້ອມ ແລະ ມີນ້ຳອ້ອມເກືອບທຸກດ້ານ. ຫໍຜາສາດ ຊູຍອດຊໍ່ຟ້າສູງຂຶ້ນໄປຈົນຈຸເມກ ແລະຮຸ່ງເຫຼື້ອມເປັນຍິບຍັບ ເມື່ອຕ້ອງກັບແສງຕາເວັນ. ບ້ານເຮືອນປຸກລຽນຕິດລຽນຕໍ່ກັນໄປຈົນສຸດສາຍຕາ. ຫຼັງຄາວັດເປັນສີເຫຼືອງຄຳປາກົດໃຫ້ເຫັນຢູ່ເປັນຍ່ານໆ ແລະງາມສົດໃສ

ຢູ່ໃຕ້ທ້ອງຟ້າສີຄາມ. ໃຜໄດ້ເຫັນກໍວ່າງາມປານສະຫວັນຊັ້ນດາວະດຶງ.

ປະຊາຊົນຊາວເມືອງເປັງຈານມີມາກມາຍອັ່ງອໍ. ຊາວພໍ່ຄ້າພານິດຈາກຕ່າງແດນຫຼັ່ງໄຫຼກັນເຂົ້າມາເພື່ອທຳການຄ້າຂາຍຢູ່ຕະຫຼອດເວລາ. ບາງພ່ອງເອົາສິນຄ້າມາທາງເຮືອສະເພົາ. ບາງພ່ອງມາທາງບົກ. ເສັ້ນທາງຕ່າງໆມາຈອດກັນທີ່ເມືອງນີ້. ຕະຫຼາດຈຶ່ງອຸດົມສົມບູນໄປດ້ວຍອາຫານການກິນແລະສິນຄ້ານາໆຊະນິດ. ຜູ້ຄົນຍ່າງໄປມາສັບສົນ ສຽງເສບຄົບງັນດັງລະງົມເປັນທີ່ມ່ວນແມ້ງອອນຊອນໃຈຢູ່ຕະຫຼອດເວລາ. ພະສົງອົງຄະເຈົ້າທີ່ໄດ້ຮຽນຮູ້ຄຳພີສາສະໜາທັງຫຼາຍກໍພາກັນແປພະທຳຄຳສັ່ງສອນຂອງພະພຸດທະເຈົ້າ ແລະເທສະໜາອະທິບາຍໃຫ້ປະຊາຊົນທົ່ວໄປເຂົ້າໃຈແຈ້ງກ່ຽວກັບສັດຈະທຳໃນຄຳສອນເຫຼົ່ານັ້ນ. ນັກປາດອາຈານສາຂາຕ່າງໆມີຈຳນວນນັບບໍ່ໄຫ່ວ. ພວກເສນາອາມາດລ້ວນແຕ່ມີຄວາມຮູ້ປັນຍາຄວາມສະຫຼາດຫຼັກແຫຼມແລະປະຊຸມກັນເປັນເນື່ອງນິດຢູ່ຂ່ວງສະໜາມພາຍໃນຫໍໂຮງຂອງຜູ້ເປັນເຈົ້າຄອງນະຄອນ.

ພະຍາກຸສະລາດ

ບັນດາເສນາອາມາດ, ນັກປາດອາຈານ, ປະຊາລາສະດອນແຫ່ງເມືອງເປັງຈານມີຄວາມເຫຼື້ອມໃສສັດທາແລະຈົງຮັກພັກດີຕໍ່ຜູ້ເປັນເຈົ້າຄອງນະຄອນຊຶ່ງມີນາມວ່າ ພະຍາກຸສະລາດ. ພະອົງທຳການປົກຄອງບ້ານເມືອງດ້ວຍຄວາມຍຸຕິທຳແລະມີເມດຕາກະລຸນາຕໍ່ປະຊາຊົນທຸກຖ້ວນໜ້າ. ດັ່ງນີ້ ພະອົງຈຶ່ງໄດ້ຮັບຄວາມເຄົາລົບນັບຖື ແລະການອຸທິດທັງແຮງກາຍແລະແຮງໃຈຈາກປະຊາຊົນ. ອຳນາດທີ່ເກີດຈາກແຮງສັດທາຂອງປະຊາລາສະດອນດັ່ງກ່າວ ເຮັດໃຫ້ຊື່ສຽງຂອງພະອົງ

ເປັນທີ່ເກງກົວໄປທຸກແຫ່ງຫົນແລະລືຊາຜາກົດໄປຮອດເມືອງຍັກ.

ພະຍາກຸສະລາດຢູ່ສະໜຸກສຸກສະບາຍໃນຜາສາດແລະມີມະເຫສີຊື່ງມີນາມວ່າ ນາງຈັນທາ. ທັງສອງພະອົງຊົງກະເສມສຳລານແວດລ້ອມໄປດ້ວຍຊັບສິນບັດເຊັ່ນ ແກ້ວ ແຫວນ ເງິນ ຄຳ ເຄື່ອງປະດັບເອ້ຍ້ອງອັນວິຈິດສວຍງາມ. ອ້ອມຮອບຕົວມີແຕ່ສິ່ງຈະເລີນຕາຈະເລີນໃຈ. ໄປທາງໃດກໍມີບໍລິວານແຫນແຫ່. ນອກນັ້ນ ຍັງມີຊ້າງນັບເປັນພັນໆໂຕ ແຕ່ລະໂຕມີງາປະດັບດ້ວຍປອກຄຳສີເຫຼືອງເຫຼື້ອມ. ເຫຼົ່າຄວານຊ້າງກຳກັບລ້ຽງແລະເຝິກແອບຊ້າງຢ່າງຕັ້ງໜ້າຢູ່ເດີ່ນອັນກວ້າງໃຫຍ່ ມ້າຈຳນວນຫຼາຍຖືກນຳມາແອບໃຫ້ເຂົ້າເປັນຂະບວນ ໂດຍມີທະຫານຖືດາບຖືຫອກຂີ່ຢູ່ເທິງຫຼັງ. ການເຄື່ອນໄຫວທີ່ເປັນຈັງຫວະເພືອບໆຂອງຂະບວນສັດດັ່ງກ່າວນີ້ສະແດງໃຫ້ເຫັນເຖິງແສນຍານຸພາບຂອງເມືອງເປັງຈານທີ່ບໍ່ມີເມືອງໃດມາທຽບໄດ້.

ນາງສຸມຸນທາ

ແນວໃດກໍຕາມ ພະຍາກຸສະລາດກໍມີຄວາມອຸກອັ່ງກັງວົນຢູ່ໃນຫົວໃຈ ເພາະພະອົງຍັງບໍ່ທັນມີລູກໄວ້ສືບໜໍ່ແທນແນວເພື່ອທຳການປົກຄອງອານາຈັກອັນຮຸ່ງເຮືອງນີ້ສືບຕໍ່ໄປ.ພະອົງບໍ່ມີອ້າຍນ້ອງທີ່ເປັນຊາຍ. ມີແຕ່ນ້ອງສາວຄົນດຽວທີ່ໂສມງາມປານອິນແຕ້ມແຕ່ງແລະພະອົງກໍຮັກແພງນ້ອງສາວຜູ້ນີ້ປານແກ້ວຕາ. ນາງມີຊື່ວ່າສຸມຸນທາ ກຸລະສະຕີຜູ້ງາມເລີດລ້ຳລືເທົ້າໜື່ນເມືອງ.ເປັນມິ່ງຂວັນຂອງຊາວເປັງຈານ.ສຸມຸນທາ ເປັນເຈົ້າຍິງໃນຝັນຂອງເຈົ້າຊາຍທົ່ວທັງທະວີບແລະເປັນເຈົ້າຍິງໃນຝັນຂອງຍັກກຸມພັນນຳອີກດ້ວຍ.

ນາງສຸມຸນທາ ໃຊ້ຊີວິດຢູ່ຢ່າງກະເສີມສຳລານໃນຫ້ອງທຳທີ່ຕົກແຕ່ງປະດັບປະດາດ້ວຍມຸກແລະລູກແກ້ວຫຼາກສີໃສເຫຼື້ອມຍິບຍັບຄືດັ່ງດາວໃນທ້ອງຟ້າຍາມລາຕີ. ດອກໄມ້ນາໆຊະນິດທີ່ຈັດໄວ້ພາຍໃນບໍລິເວນຫ້ອງທຳແລະຕາມສອງຂ້າງຕຽງ ສົ່ງກິ່ນຫອມບໍ່ມີຍາມເຫີຍ. ນົກນາໆຊະນິດສົ່ງສຽງຮ້ອງດັງເຈື້ອຍແຈ້ວ, ມີນົກແຂກແກ້ວ ນົກເອົ້າ ນົກຄໍ່ ນົກຍູງແລະອື່ນໆ... ນາງງາມທັງຮູບໂສມງາມທັງນ້ຳໃຈແລະມີຄວາມນິຍົມຫຼົງໄຫຼໃນທຳມະຊາດ, ອອນຊອນພູຜາປ່າໄມ້ບຸບຜາມາລີແລະຮັກສັດສາວາສິ່ງທັງມວນ.

ກຸມພັນແຫ່ງເມືອງອະໂນລາດ

ເມືອງທີ່ມີຄວາມເຂັ້ມແຂງແລະເປັນທີ່ລືຊາຜາກົດອີກເມືອງນຶ່ງກໍແມ່ນເມືອງອະໂນລາດ. ຍັກກຸມພັນເປັນຜູ້ປົກຄອງເມືອງນີ້. ບັນດາຍັກທັງຫຼາຍໃນແຜ່ນດິນພາກັນນັບຖືຢຳເກງແລະເອົາສິ່ງຂອງມີຄ່າມາມອບໃຫ້ກຸມພັນເພື່ອສະແດງຄວາມນອບນ້ອມຄາລະວະ. ກຸມພັນເປັນຍັກທີ່ມີລິດເດດຫຼາຍເພາະໄດ້ຮຽນຮູ້ເວດມົນຄາຖາມາຢ່າງຄົບຖ້ວນ ຊ້ຳຍັງເປັນພີ່ນ້ອງເຊື້ອສາຍຂອງ ພະຍາເວດສຸວັນຜູ້ເປັນເຈົ້າຈອມແຫ່ງຍັກ ຊຶ່ງຢູ່ເມືອງຈາຕູມ. ມັນມັກເວົ້າຊຶກຊາກຢ່າງສະຫາວວ່າ: "ໃຕ້ລຸ່ມຟ້ານີ້ບໍ່ມີຢ້ານຢ່ອນໃຜເວີ້ຍ!"

ນອກຈາກນັ້ນແລ້ວ ກຸມພັນຍັງມີຊັບສິນບັດຢ່າງຫຼວງຫຼາຍເຊັ່ນແກ້ວມະນີ, ເງິນ ຄຳ ແລະ ເຄື່ອງປະດັບທຳໂຮງອື່ນໆ. ເວົ້າໄດ້ວ່າມັນມີທຸກສິ່ງທຸກຢ່າງຈົນນັບບໍ່ຖ້ວນ. ແຕ່ແນວໃດກໍຕາມ ມັນກໍຍັງຫາຜູ້ເປັນມິ່ງມະເຫສີບໍ່ທັນໄດ້ ຈຶ່ງເປັນພະຍາໂທນນອນແລ້ງຢູ່ດຽວດາຍຕະຫຼອດມາ.

ກຸມພັນຄິດຄະນຶງຫາ ຜູ້ຈະມາເປັນເມຍຢູ່ທຸກເວັນທຸກຍາມ. ບໍ່ຮູ້ວ່າ ຍິງທີ່ເຄີຍຮ່ວມສາຍແນບກັບມາແຕ່ຊາດກ່ອນໄປເກີດຢູ່ແຫ່ງຫົນໃດຈຶ່ງບໍ່ມີໂອກາດຈອບພໍ້ກັບຈິບປານນີ້. ເມື່ອຄິດຫຼາຍກໍກາຍເປັນຄວາມອຸກອັ່ງຮ້ອນຫຸ່ມພໍປານມີໄຟສຸມໃນອົກ ຫຼື ປານມີໜໍ້ນະຣົກຢູ່ໃນໃຈຈົນເຖິງຂັ້ນຈະທົນທານຕໍ່ໄປບໍ່ໄດ້ອີກ. ແລ້ວກຸມພັນກໍທະຍານຂຶ້ນເທິງຟ້າໄປຫາພະຍາເວດສຸວັນທີ່ເມືອງຈາຕູມເພື່ອຂໍຖາມກ່ຽວກັບຜູ້ຈະມາເປັນຄູ່ຊ້ອນນອນຮຽງ. ຜູ້ເປັນເຈົ້າຈອມແຫ່ງຍັກຮູ້ສາເຫດຂອງຄວາມອຸກອັ່ງກັງວົນຂອງກຸມພັນຈຶ່ງບອກໃຫ້ຮູ້ວ່ານາງໄປເກີດໃນໂລກມະນຸດແລ້ວມີຊື່

04/06/2026, 03:32

ວ່ານາງສຸມົນທາ ເປັນນ້ອງສາວຂອງພະຍາແຫ່ງເມືອງເປັງຈານ ຊຶ່ງເປັນອານາຈັກທີ່ເຂັ້ມແຂງ ມີກຳລັງພົນມາກມາຍຫຼວງຫຼາຍ. ເດຊານຸພາບຂອງພະຍາເມືອງນີ້ລືກ້ອງໄປໄກແລະເປັນທີ່ເກງກົວຂອງບັນດາເມືອງນ້ອຍໃຫຍ່ໃນແຜ່ນດິນ. ພະຍາເວດສຸວັນໄດ້ສັ່ງຫ້າມບໍ່ໃຫ້ໄປນຳເອົາມາເປັນເມຽເພາະຢ້ານເກີດພິພາດບາດໝາງແລ້ວໄພພິບັດຈະລຸກລາມມາເຖິງຍັກທັງມວນ.

ຝ່າຍກຸມພັນເວົ້າຢ່າງທ້າທາຍວ່າຕົນບໍ່ເຄີຍຢ້ານຢ່ອນໃຜແລະຈະໄປນຳເອົານາງໃຫ້ໄດ້ເຖິງວ່າຈະຢູ່ໃນໂລກມະນຸດກໍຕາມ. ເວົ້າແລ້ວມັນຂໍອຳລາພະຍາເວດສຸວັນກັບຄືນສູ່ເມືອງອະໂນລາດແລະໃຊ້ຫົວຄິດປັນຍາຫາວິທີເພື່ອຈະໄປເອົານາງສຸມົນທາມາເປັນເມຽຕາມທີ່ຕັ້ງໃຈໄວ້.

ກຸມພັນຄິດໜັກ ກິນເຂົ້າບໍ່ແຊບ ຈິດວິ່ໃຈວອນຫາຜູ້ເປັນຍອດຊູ້ໃນຝັນຈົນນ້ຳຕາໄຫຼອາບແກ້ມ. ມັນຄິດວ່າເປັນໄປບໍ່ໄດ້ທີ່ຈະໄປຂໍເອົານາງສຸມຸນທາມາເປັນຄູ່ຊີວິດເພາະເຊື້ອແນວແຕກຕ່າງກັນປານຟ້າກັບດິນ. ມີແຕ່ໄປຈອບລັກເອົາເທົ່ານັ້ນຈຶ່ງພໍມີທາງໄປສູ່ຄວາມສຳເລັດໄດ້. ມັນເອົາມືລູບອົກໄປມາແລະຄິດວ່າອົດສາເຍື້ອນຕໍ່ໄປບໍ່ໄດ້ອີກແລ້ວ. ຫົວໃຈມັນປັ່ນປ່ວນ ກະວົນກະວາຍ ປານວ່າຈະແຕກທະລາຍຕາຍດັບໄປ.

ແລ້ວໃນທີ່ສຸດວັນໜຶ່ງ ມັນກໍຈັບເອົາອາວຸດອັນມີສອນແລະກົງຈັກທີ່ມີອານຸພາບຮ້າຍແຮງແລ້ວບິນຜະຫຍອງລ່ວງໄປເທິງຟ້າມຸ່ງໜ້າສູ່ເມືອງເປັງຈານ.

https://online.fliphtml5.com/iqwiz/utcv/

ລາງຝັນບອກເຫດ

ຄືນນີ້ ພາຍຫຼັງຟັງມະໂຫລີເປັນທີ່ເບີກບານສໍາລານໃຈແລ້ວ ພະຍາກຸສະລາດກໍເຂົ້ານອນໃນຫ້ອງບັນທົມ. ຄວາມຄິດຂອງພະອົງຍັງ ວົນວຽນຢູ່ນໍາເລື່ອງຜູ້ທີ່ຈະມາສືບທອດລາຊະບັນລັງ ເພາະເມືອງເປັງ ຈານອັນຮຸ່ງເຮືອງເຫຼືອງເຫຼື້ອມນີ້ຈໍາເປັນຕ້ອງມີໜໍ່ແນວກະສັດຜູ້ປີຊາ ສາມາດໄວ້ທໍາການປົກຄອງສືບຕໍ່ໄປ. ອານາຈັກທີ່ມີມາກມາຍຫຼາຍ ເມືອງມາຂຶ້ນສ່ວຍເຊັ່ນນີ້ ເປັນທໍາມະດາທີ່ພະອົງຕ້ອງເປັນຫ່ວງກັງວົນ ແລະຄິດໜັກແມ່ນຢາກໄດ້ບຸດຊາຍຫຼາຍໆຄົນ ເພື່ອຈະສົ່ງໄປປົກຄອງ ເມືອງສ່ວຍເຫຼົ່ານັ້ນ. ນາງຈັນທາຜູ້ເປັນມະເຫສີຍັງບໍ່ທັນມີບຸດໄວ້ໃຫ້ພະ

ອົງຊື່ນຊົມເທື່ອເລີຍ.

ພະຍາກຸສະລາດເຊືອບຫຼັບໄປ ແລ້ວກໍຝັນວ່າມີແຂກຕ່າງດ້າວທ້າວຕ່າງແດນ ທ່າທາງຄືຍັກເວົ້າຈາຊຶກຊາກເຂົ້າມາຖະຫວາຍສານແລ້ວສວຍໂອກາດຖອດງ້າວຟັນພະອົງຖືກທີ່ແຂນຂວາຈົນເລືອດໄຫຼອາບຕົນຕົວ.ເຫດການເປັນໄປຢ່າງບໍ່ໄດ້ຄາດຄິດມາກ່ອນພະອົງຢ້ານກົວຈົນຫົວໃຈຫັກຫວາມຈຶ່ງຮ້ອງເຫຼີສຽງດັງກ້ອງໄປທົ່ວວັງ. ສຽງເຫຼີໃຫຼປຸກໃຫ້ຄົນພາຍໃນວັງຕື່ນຂຶ້ນມາ, ນາງຈັນທາຜູ້ເປັນມະເຫສີ, ນາງສຸມຸນທາຜູ້ເປັນນ້ອງສາວແລະມະຫາດເລັກທັງຫຼາຍແລ່ນອີ່ເລີເປີເສີໄປຍັງຫ້ອງບັນທົມແລ້ວປຸກພະຍາກຸສະລາດໃຫ້ຕື່ນຈາກອາການຫຼັບໃຫຼ. ຜູ້ໃດກໍແຕກຕື່ນຕົກໃຈ, ຫຼາຍຄົນຮ້ອງໄຫ້ຫຼັ່ງນ້ຳຕາເພາະຢ້ານພະຍາກຸສະລາດຈະມີໂພຍໄພຈົນເຖິງຂັ້ນເສຍຊີວິດ. ເມື່ອພະອົງຮູ້ເມື່ອຄືງແລ້ວ ກໍພົບວ່າມີຜູ້ຄົນມາເຕັມຫ້ອງ, ທຸກຄົນພາກັນນົບນອບຂາບໄຫວ້ ທັງຈົ່ມພາວະນາຂໍໃຫ້ພະອົງຫາຍຈາກຄວາມທຸກຮ້ອນທັງປວງ. ພະຍາກຸສະລາດຟື້ນຄືນເປັນປົກກະຕິແລ້ວກໍໄປອາບນ້ຳ ເພື່ອໃຫ້ຮ່າງກາຍແລະຈິດໃຈເປັນສຸກສະບາຍ. ບັນດາເສນາອາມາດພາກັນເບົາອົກເບົາໃຈ ສະຫງົບສະຕິອາລົມ ແລ້ວກໍຈັດແຈງຕ້ອນຮັບວັນໃໝ່ທີ່ພວມໄຂແຈ້ງ.

ຮຸ່ງຂຶ້ນວັນຕໍ່ມາພະຍາກຸສະລາດມີຄຳສັ່ງເຕົ້າໂຮມເສນາມຸນຕີນ້ອຍໃຫຍ່ໃຫ້ມາຮັບຟັງການເລົ່າເຫດການໃນຄວາມຝັນເມື່ອຄືນທີ່ຜ່ານມາ. ພວກທີ່ຖືກເອີ້ນມານີ້ມີຜູ້ນຶ່ງເປັນໝໍໂຫນຫຼວງຊຶ່ງມີປະສົບການເລື່ອງທຳນາຍເຫດການຄື້ວດີເປັນພິເສດ ເມື່ອພະອົງເລົ່າເລື່ອງຄວາມຝັນສູ່ທຸກຄົນຟັງແລ້ວ ໝໍໂຫນກໍທຳນາຍວ່າອາການຝັນແບວນີ້ສະແດງວ່າພະອົງຈະສູນເສຍພີ່ນ້ອງເຊື້ອວົງກະສັດຜູ້ເປັນທີ່ຮັກແພງພໍປານແກ້ວຕາ. ແຕ່ວ່າຖ້າໄດ້ທຳພະລີກຳເພື່ອເສຍເຄາະເສຍເຂັນແລ້ວເຫດ

ຮ້າຍກໍຈະບໍ່ມາແຕະຕ້ອງເລີຍ. ພຽງແຕ່ພະອົງອາດຈະໄດ້ຫ່າງເຫີນຈາກນະຄອນເປັງຈານໄປເປັນເວລາເຫີງນານພໍສົມຄວນ.

ເມື່ອຊາບຈາກໝໍໂຫນເຊັ່ນນັ້ນແລ້ວພະອົງກໍສວ່າງໃຈຫາຍກັງວົນອາລົມແຈ່ມໃສຂຶ້ນ. ແລ້ວບັນດາເສນາອາມາດກໍພາກັນເລີກລາກັບເມືອ.

ມະໂຫລະສົບທີ່ສວນອຸທິຍານ

ມັນເປັນວັນທີ່ແຈ່ມໃສ ນາງສຸມຸນທາອອກໄປຍັງສວນອຸທິຍານເພື່ອພັກຜ່ອນຢ່ອນອາລົມຕາມທີ່ເຄີຍປະຕິບັດມາ ໂດຍມີຂະບວນແຫ່ແຫນຍາວຍຶດແລະມີທະຫານມ້າຄອຍລະວັງຮັກສາຄວາມປອດໄພຢ່າງເຕັມກຳລັງ. ອອກໜ້າຂະບວນແມ່ນພວກເສບດົນຕີທີ່ບັນເລງເພງສຽງດັງສະນັ່ນຫວັ່ນໄຫວ, ມີສຽງຄ້ອງສຽງກອງສຽງແກປະສົມປະສານກັນດັງກ້ອງກັງວານໄປທົ່ວປ່າດົງພົງໄພປຸກໃຫ້ສັບພະສັດທັງຫຼາຍຕາມສອງຂ້າງທາງພາກັນແຕກຕື່ນລະວັງຕົວ, ຝູງນົກບິນເຈີດແຈ້ວແລ້ວບິນ

ເວີ່ນຂຶ້ນສູ່ເວຫາແລະເບິ່ງຄືວ່າແນນລົງມາເບິ່ງຂະບວນແຫ່ດ້ວຍຄວາມຊື່ນຊົມອອນຊອນ.

ເມື່ອໄປຮອດສວນອຸທິຍານ ການລະຫຼິ້ນມະໂຫລະສົບຄຶບຊຶ້ນກໍເປັນໄປຢ່າງເຕັມອິດ. ສຽງປີ່ ສຽງແກ ສຽງຊຸງ (ກະຈັບປີ່) ດັງປະສານເຂົ້າກັບສຽງຄ້ອງສຽງກ້ອງຟັງແລ້ວຄ້າຍຄືວ່າ ອຸທິຍານແຫ່ງນີ້ລອຍຂຶ້ນໄປເຖິງຟ້າ. ພວກນາງນາດຕະສິນຟ້ອນແອ່ນ ເຢາະຍ້ອນແຂນຂາຂຶ້ນລົງເຂົ້າກັບຈັງຫວະສຽງຂັບລຳ. ຮ່າງຄີງກໍນງາມປະດັບດ້ວຍຮອດແກ້ວໃສເຫຼື້ອມຍິບຍັບ. ຜົມຂອງພວກນາງເກົ້າເປັນມວຍ ທານ້ຳມັນຈິບເຫຼື້ອມຕັດກັບຜິວຂາວນວນປານດອກຊ້ອນເບິ່ງແລ້ວອອນຊອນຕາຄືຈະບໍ່ມີມື້ອິ່ມເປັນ.

ພວກບ່າວທີ່ຮ່ວມມາໃນຂະບວນຕ່າງກໍພາກັນມ່ວນຊື່ນຢ່າງເຕັມອິດ. ເຂົາເຈົ້າເກັບດອກໄມ້ມາຮ້ອຍເປັນພວງ, ນັ່ງເວົ້າຢອກໄຍກັນຕາມພຸ່ມໄມ້, ເອົາດອກໄມ້ສຽບໃສ່ແຊມຜົມແລະຂັບລຳກ້ຽວກັນຢ່າງມີຄວາມສຸກທາງໃຈກໍພາວະນາໃຫ້ມື້ນີ້ບໍ່ມີຍາມສ້ຽງສຸດເປັນ.

ນາງສຸມຸນທາມ່ວນຊື່ນຕື່ນຕາໄປກັບສຽງເສບລຳແລະການຟ້ອນນາດຕະສິນຂອງນາງສາວຜູ້ຄີງງາມອ່ອນຊ້ອຍຄືດັ່ງນາງກິນນະລີ, ອາລົມຂອງນາງອ່ອນໄຫວເມີງໃຈກັບກິ່ນຫອມດອກໄມ້ທີ່ພວກບໍລິວານເກັບມາຖະຫວາຍອັນມີທັງດອກຈູມຈີ ດອກເບັ່ງບານເບີຍແຍ້ມທີ່ຮ້ອຍເປັນພົ້ວເປັນພວງ. ຄວາມຄິດຂອງນາງລ່ອງລອຍໄປໄກ ນາງຮູ້ສຶກເປັນສຸກໃຈທີ່ເຫັນທຸກຄົນມ່ວນຊື່ນສະໜຸກສະໜານຢູ່ທ່າມກາງພຶກສາຊາດ. ການພັກຜ່ອນຢູ່ອຸທິຍານແຫ່ງນີ້ດຳເນີນໄປຈົນຕາເວັນບ່າຍຄ້ອຍແສງແດດອ່ອນລົງແລະລົມຍາມແລງພັດເຢັນສະບາຍ. ທຸກຄົນມ່ວນຊື່ນໃນຫົວໃຈຈົນລືມເວລາ...

ຫໍສະໝຸດແຫ່ງຊາດ

ຍັກລັກເອົານາງສຸມຸນທາ

ໃນຂະນະທີ່ສຽງເສບຂັບດັງລະງົບກ່ອມໃຫ້ທຸກຄົນເບີກບານສຳລານໃຈຈົນລືມເນື້ອລືມຕົວນັ້ນ ປ່າໄມ້ບ່ອນບຶງແຄມອຸທິຍານກໍໄຫວຕົວຢ່າງຮຸນແຮງຄືດັ່ງມີລົມພາຍຸພັດຕ້ອງ. ສັດປະຫຼາດຊູດລົງມາຫອບອູ້ມເອົານາງສຸມຸນທາແລ້ວທະຍານຂຶ້ນສູ່ເວຫາບິນໜີໄປທ່າມກາງຄວາມແຕກຕື່ນຕົກສະເງີ້ຂອງທຸກຄົນ. ສຽງດົນຕີຢຸດລົງຢ່າງກະທັນຫັນ. ສຽງຮ້ອງເຫຼີໃຫຼອື່ເລີເປີເສີເປັນໄປຢ່າງສັບສົນອົນລະຫົນ. ທຸກຄົນມີໜ້າຫຼາຕາຕາຍຈິດໃຈບໍ່ຢູ່ກັບເນື້ອກັບຕົວ. ຕໍ່ມາກໍແມ່ນສຽງຮ້ອງໄຫ້ຫວົ່ງ

ຫາ. ສຽງຈິ່ມເສຽດາຍແລະໂສກເສົ້າເສຽໃຈທີ່ຕ້ອງມາສູນເສຍຍິງຜູ້ເປັນມິ່ງຂວັນເມືອງໄປໂດຍບໍ່ຄາດຝັນ.

ຍັກກຸມພັນໄດ້ລັກເອົາບາງສຸມຸນທາໄປແລ້ວ! ຕົວຈັງໄຣນີ້ໄດ້ມາຈອບຢູ່ປ່າແຄມອຸທິຍານຄອຍຫາໂອກາດເໝາະສົມ ແລ້ວປ່ອຍຄາຖາອາຄົມໃສ່ທະຫານຍາມຮັກສາໃຫ້ມີຄວາມລະເຫຼີງໃຈແລະຄວາມຢ້ານກົວແລ້ວມັນກໍປະຕິບັດຕາມຈຸດປະສົງອັນຜິດສິນທຳຢ່າງສຳເລັດຜົນ.

ເມື່ອສູນເສຍຜູ້ເປັນທີ່ເຄົາລົບນັບຖືເຊັ່ນນີ້ ຄວາມສັບສົນຮ້ອນຮົນກໍເປັນໄປຢ່າງສຸດຂີດປານວ່າເກີດໄຟເຜົາໄໝ້ສວນແຫ່ງນີ້. ຜູ້ຄົນໂສ້ເຫຼັກັບແລະຫຼັ່ງກັບຄືນສູ່ເມືອງ. ມີສຽງຈິ່ມ, ສຽງພາວະນາຫາສິ່ງສັກສິດໃຫ້ມາປົກປັກຮັກສາເພື່ອໃຫ້ນາງສຸມຸນທາປອດໄພແລະໃຫ້ໄດ້ກັບຄືນມາສູ່ບ້ານສູ່ເມືອງ.

ບໍ່ດົນຂ່າວຮ້າຍກໍໄປຮອດພະລາຊະວັງ. ເສນາອາມາດທີ່ພວມປະຊຸມກັນຢູ່ຕ່າງກໍຮ້ອງຄາງຂຶ້ນດ້ວຍຄວາມປະຫຼາດແລະຕົກໃຈເພາະຢ້ານເກີດໂກລະຫົນໄປທົ່ວເມືອງ. ບາງຄົນແລ່ນນຳຫາລູກຫາເມຍບາງຄົນໜ້າຫຼາຕາຕາຍເຮັດຫຍັງບໍ່ຖືກ. ເສນາຜູ້ໃຫຍ່ຄົນນຶ່ງເຂົ້າໄປບອກພະຍາກຸສະລາດກ່ຽວກັບເຫດຮ້າຍທີ່ເກີດຂຶ້ນພະອົງໄດ້ຍິນຂ່າວແລ້ວກໍຫົວໃຈຫັກຫວາມຮູ້ສຶກປານມີຫອກແຫຼມແທງຂ້ຳທີ່ເອິກ, ນ້ຳຕາໄຫຼແລະຈິ່ມຮ່ຳໄຮອອກມາວ່າ:

ບັດນີ້ ເສຽແກ່ນແກ້ວ ສະເໜີຂວັ້າຂອບເມືອງ ແລນໍ
ແໜງສູ້ທວຍທວງເທິ້ງ ແທງຕົນຕາຍພໍ່າ ກັນຖ້ອນ
ແມ່ນຈັກອົດຢູ່ໄດ້ ມີມື້ວຮ່ອມຄະນິງ ແທ້ແລ້ວ
ວິບາກແຄ້ນ ຄືຄູ່ກິນສະແຫຼງ
ແມ່ນຊິເນົາໃນປາງ ບໍ່ສະບາຍເບົາຮ້ອນ.

04/06/2026, 03:32

ນອກຈາກຜູ້ຄົນໂສກເສົ້າອາໄລຫາ ນາງສຸມຸນທາແລ້ວ ພວກສັດລ້ຽງນ້ອຍໃຫຍ່ທັງຫຼາຍກໍພາກັນຢືນຊືງດ້ວຍອາການຫງ່ອມເຫງົາແລະບໍ່ກິນເຫຍື່ອອາຫານໃດໆຄືກັບວ່າຮູ້ສຳນຶກໃນບຸນຄຸນຂອງຜູ້ທີ່ເຄີຍລ້ຽງດູຊຶ່ງໄດ້ພັດພາກຈາກໄປໂດຍບໍ່ເຫຼືອຮ່ອງຮອຍ.

ຝ່າຍນາງສຸມຸນທາທີ່ຖືກຍັກອູ້ມເຫາະເຫີນໄປນັ້ນ ກໍມີອາການຕົກຄະນ່າໜ້າເຫຼືອງເພາະຄາດບໍ່ເຖິງວ່າໄພອັນຕະລາຍຈະມາເຖິງຕົວ. ນາງພະຍາຍາມດີ້ນດັ່ນອັດຂືນແຕ່ກໍໄຮ້ຜົນເພາະຍັກກຸມພັນມີລິດເດດອາຄົມແລະມີກຳລັງແຮງອັນມະຫາສານ. ນາງປຽບຄືນົກນ້ອຍໃນອົ້ງເລັບອັນແຫຼມຄົມຂອງຮຸ້ງໃຫຍ່ເຖິງຈະດີ້ນດັ່ນປານໃດກໍບໍ່ມີທາງຫຼຸດໄດ້. ແລ້ວນາງກໍປ່ອຍໃຫ້ເປັນໄປຕາມກຳຕາມເວນ. ຈົນໃນທີ່ສຸດຍັກກຸມພັນກໍເອົານາງໄປຮອດເມືອງຍັກຊຶ່ງຜາສາດມີຍອດຊໍ່ຟ້າສີສົ້ວຮຸ່ງໃສແລະສູງຈົນພຽງເມກ. ໃນຜາສາດເຕັມໄປດ້ວຍຊັບສົມບັດມາກມ່າຍກ່າຍກອງເຊັ່ນ ແກ້ວ, ແຫວນ, ເງິນ, ຄຳ, ມ້າວ, ແຜ່ນແພໄໝແລະເຄື່ອງປະດັບຕ່າງໆສິ່ງແສງເຫຼື້ອມຍິບຍັບ. ແຕ່ຊັບສົມບັດເຫຼົ່ານີ້ກໍບໍ່ໄດ້ເຮັດໃຫ້ນາງສຸມຸນທາປະເອີບໃຈນຳແຕ່ຢ່າງໃດ. ກຸມພັນເອົາເຄື່ອງຂອງມີຄ່າຮ້ອຍອັນພັນແນວມາກອງຕໍ່ໜ້າສຸມຸນທາເພື່ອໃຫ້ນາງເລືອກເອົາຕາມໃຈມັກແຕ່ນາງກໍເມີນເສີຍ. ມັນພະຍາຍາມເວົ້າອ່ອນອອຍໃຫ້ນາງເຊົາຄຽດຂົມທັງຮັບອາສາເຮັດທຸກຢ່າງທີ່ນາງປາຖະໜາ. ມັນວ່າທີ່ໄດ້ເຮັດຜິດຮີດຜິດຄອງໄປເພາະຢາກໄດ້ນາງມາເປັນມິ່ງມະເຫສີ.

ນາງສຸມຸນທາ ເວົ້າດ່າມັນວ່າ: "ບັກຍັກໂຂຜີເຜດມຶງເອີຍ, ບໍ່ຕ້ອງມາຕືຖະແຫຼງເວົ້າໃຫ້ໃຈອ່ອນດອກ. ເອົາແຕ່ມຶງຊິເຮັດເທາະ, ກູຫ້າມມຶງບໍ່ໄດ້ດອກ. ກູຄືລູກນົກນ້ອຍໆໃນກົງເລັບຂອງເສືອ..."

https://online.fliphtml5.com/iqwiz/utcv/

ຍັກກຸມພັນ ບໍ່ລົດລະຄວາມພະຍາຍາມ. ມັນເອົາອົກເອົາໃຈ ເອົາພວງດອກໄມ້ອັນຫອມຫວນມາຍົກຍໍໃຫ້ແລະເຮັດຕາມໃຈນາງທຸກຢ່າງ. ເຖິງແມ່ນມັນຈະມີສາວສະໜົມຫຼວງຫຼາຍຈົນນັບບໍ່ໄຫວ ແຕ່ກໍບໍ່ປັກໃຈຫຼົງໄຫຼນຳຜູ້ໃດນອກຈາກສຸມຸນທາຄົນດຽວແລະຍໍຍົກນາງຂຶ້ນເປັນເອກມະເຫສີເປັນເທວີແຫ່ງເມືອງອະໂນລາດ.

ນາງສຸມຸນທາຢູ່ໃນທ່າຈຳໃຈເພາະຕົວຄົນດຽວຢູ່ທ່າມກາງເມືອງຍັກ. ເປັນເຫຍື່ອກຸມພັນຜູ້ມີລິດເດດແຂງກ້າ. ທັງໄກຈາກພີ່ຈາກນ້ອງຈາກເຊື້ອເຜົ່າພົງພັນ. ນາງຖືກອິ່ນອອຍກ່ອມກິ້ງຫຼາຍວັນຫຼາຍຄືນເຂົ້າກໍເລີຍຄືດັ່ງຂີ້ເຜີ້ງໃກ້ໄຟຍ່ອມເສື່ອມອ່ອນໄປຕາມສະພາບ. ນາງປົງຕົກໂດຍເຊື່ອວ່າເປັນຍ້ອນສາຍແນນແຕ່ປາງກ່ອນ. ໃນທີ່ສຸດ ກໍຝືນອົກຝືນໃຈເປັນເມຍຂອງກຸມພັນທັງທີ່ເຊື້ອແນວຕ່າງກັນຈົນບໍ່ມີຫຍັງປຽບທຽບໄດ້.

ພະຍາກຸສະລາດອອກບວດ

ນັບແຕ່ນາງສຸມຸນທາຖືກຍັກຫຼອນລັກເອົາໄປ ຈົນເຖິງດຽວນີ້ກໍກາຍສາມເດືອນແລ້ວແຕ່ພະຍາກຸສະລາດກໍຍັງທຸກໂສກ. ກິນເຂົ້າບໍ່ແຊບກິນຄຳໃດກໍແຄ້ນ. ຕົນຕົວຈ່ອຍຜອມຫຼ່າເຫຼືອງພໍປານໃບຕອງແກ່. ໜ້າຕາບໍ່ຊື່ນບານເອົາແຕ່ຄຶດຫານ້ອງສາວທຸກມື້ທຸກວັນ. ພະອົງບໍ່ມີຈິດໃຈຫ້າວຫັນໃນການປົກຄອງບ້ານເມືອງເລີຍ. ມີແຕ່ຄິດຢາກໄປບວດແລ້ວດັ້ນດົ້ນໄປສືບຫານ້ອງສາວ. ເມື່ອຄິດພິຈາລະນາຢູ່ຫຼາຍເວລາແລ້ວພະອົງກໍຮຽກເອົາມະເຫສີ, ພວກເສນາມຸນຕີມະຫາດເລັກທັງຫຼາຍຕະຫຼອດສາວສະໜົມທຸກສ່ຳມາຟັງການຕັດສິນໃຈຂອງພະອົງ.

"ເຮົານີ້ອຸກອັ່ງແຄ້ນເຄືອງໃນໃຈຫຼາຍຈົນຊິເປັນບ້າປ່ວງ. ດັ່ງນີ້ຈຶ່ງຊິໄປບວດຮັກສາສິນໃຫ້ຈິດໃຈສະຫງົບສາກ່ອນ. ບັດນັ້ນຊິອອກເດີນທາງທ່ຽວໄປນຳສືບຫາເບິ່ງນາງສຸມຸນທາ. ຂໍມອບເມືອງເປັງຈານໃຫ້ມະເຫສີພ້ອມທັງເສນາຜູ້ໃຫຍ່ທັງຫຼາຍທຳການປົກຄອງສືບແທນຕໍ່ໄປ."

ເມື່ອຮູ້ແຈ້ງຈຸດປະສົງຂອງພະຍາດັ່ງນັ້ນແລ້ວ ທຸກຄົນກໍຕ່ຳຄ້ອຍນ້ອຍໃຈຈົນນ້ຳຕາພັງຍ່າວ. ເສນາຜູ້ໃຫຍ່ກາບ ທູນຕໍ່ພະອົງວ່າ: "ການທີ່ນາງສຸມຸນທາພັດພາກສາບສູນໄປນັ້ນ ສ້າງຄວາມໂສກາອາດູນເປັນທີ່ສຸດແລ້ວ. ບັດນີ້ ພະອົງເອງຈະຈາກໄພ່ພົນໄປອີກ, ແໜງວ່າໃຫ້ພວກຂ້ານ້ອຍເອົາຕົວເອງເຂົ້າສູ່ກອງໄຟໃຫ້ດັບວາຍໄປໝົດດີກວ່າ."

ສ່ວນນາງຈັນທາມະເຫສີກໍເວົ້າວ່າ:

"ໃຫ້ຂ້ານ້ອຍແຖທົວບວດນຳເປັນແມ່ຂາວ. ຂ້ານ້ອຍທົນບໍ່ໄດ້ແຫ້ງຖ້າຢູ່ໂດຍປາສະຈາກພະອົງ ເພາະນັບແຕ່ຢູ່ຮ່ວມກັນມາທັງສອງເຮົາບໍ່ເຄີຍພັດພາກຈາກກັນເລີຍ, ອີກປະການນຶ່ງຂ້ານ້ອຍເປັນຜູ້ມີບຸນໜ້ອຍຈະຕັ້ງຕົວເປັນຜູ້ປົກຄອງໄພ່ພົນຈຳນວນມະຫາສານນີ້ຊິເປັນໄປບໍ່ໄດ້. ເມື່ອປາສະຈາກພະອົງແລ້ວຂ້ານ້ອຍກໍມີແຕ່ຈະແຫ້ງຫ່ຽວຕາຍ..."

ເຖິງແມ່ນວ່າຈະຝືນກັບຈິດໃຈຂອງໄພ່ພົນ ແຕ່ພະຍາກຸສະລາດກໍໄດ້ຄິດຮິ່ນຕອງຖີ່ຖ້ວນແລະຕັດສິນໃຈທີ່ຈະໄປບວດແລ້ວ. ພະອົງຊີ້ແຈງວ່າຈະຈາກໄປບໍ່ເທິງບໍ່ດົນ ພໍໄດ້ເວລາສົມມາພາຄວນແລ້ວກໍຈະກັບຕ່າວຄືນມາ. ພະອົງສັ່ງໃຫ້ເສນາຈັດແຈງເອົາເຄື່ອງບໍລິຂານສຳລັບບວດກຽມໄວ້ຄົບຖ້ວນທຸກຢ່າງ. ຕໍ່ມາມະຫາດເລັກກໍໄດ້ຮັບຄຳສັ່ງໃຫ້ມາແຖທົວພະອົງ.

ການກະກຽມກອງບວດເປັນໄປຢ່າງຟົດຟື້ນ. ສຽງຄ້ອງສຽງກອງດັງ

ຟົດສະນັ່ນ,ບັນຍາກາດສົດຊື່ນແຈ່ມໃສປາກົດກັບຄືນສູ່ວັງອີກ. ຊ້າງຫຼາຍໂຕຖືກນຳມາແຕ່ງເຄື່ອງແຫ່ພິທີເພື່ອເຂົ້າສູ່ຂະບວນແຫ່, ງາຂາວໆປະດັບດ້ວຍປອກຄຳເປັນສີເຫຼືອງງາມສະດຸດຕາ. ເມື່ອເຖິງເວລາຕາມທີ່ກຳນົດພະຍາກຸສະລາດກໍລົງຈາກບັນລັງຄຳຂຶ້ນຂີ່ຊ້າງ ແລ້ວຂະບວນແຫ່ກໍເປັນສາຍອອກໄປເປັນຍືດໆ...ພວກກອງເສບອັນມີປີ່ ຂຸ່ຍ ແລະ ທອຍສັງກໍບັນເລງສຽງສະນັ່ນຟ້າ, ທະຫານມ້າແລະທະຫານຍ່າງຖືດາບ, ຫອນ, ງ້າວຄອຍລະວັງຮັກສາຂະບວນແຫ່ອັນຍືດຍາວທີ່ພວມມຸ່ງໜ້າສູ່ວັດຂອງລາຊະຄູໃຫຍ່. ຫົນທາງແປນດີແລະປູດ້ວຍແຜ່ນແພຈົນຮອດປະຕູໂຂງວັດ. ໄພ່ພົນໄປຮ່ວມອັ່ງອໍເຕັມວັດແລະລົ້ນອອກມາຢູ່ນອກວັດກໍຫຼວງຫຼາຍ. ທຸກຄົນນ້ຳຕາໄຫຼສະອື້ນໃນໃຈເພາະຄິດວ່າບ້ານເມືອງເຖິງຂັ້ນເວັ້ນຫວ່າງຈາກກະສັດໃນເມື່ອພະຍາກຸສະລາດບວດເປັນພະສົງ.

ຢູ່ວັດ ພະສົງຫຼາຍຮູບມາໂຮມກັນຢູ່ໃນສິມເພື່ອຈັດພິທີບວດເມື່ອພະຍາກຸສະລາດຊື່ງຢູ່ໃນຊຸດນາກມາຮອດແລ້ວກໍເຂົ້າໄປຂາບໄຫວ້ພະອຸປະຊາ.ພິທີດຳເນີນໄປຖືກຕ້ອງຄົບຕາມຂະບວນການ. ບັດນີ້ພະຍາເມືອງເປັງຈານຖືເພດເປັນສົມມະນະແລະໄປນັ່ງຢູ່ອາສະນະດ້ວຍອາການສະຫງົບ. ຕໍ່ຈາກນັ້ນບໍ່ດົນມະເຫສີ, ເສນາອາມາດ, ບໍລິວານທັງຫຼາຍ ແລະປະຊາລາສະດອນກໍພາກັນທະຍອຍຕ່າວຄືນ ດ້ວຍໃບໜ້າຫງອຍເຫງົາ. ບັນຍາກາດອັນສຸດເສົ້າໂສກາປົກຄຸມໄປທົ່ວເມືອງເປັງຈານປານວ່າຈຸອະວະສານໄດ້ມາເຖິງຂີດພາຍຂອງມັນແລ້ວ.



ມະຫາເຖນອອກເດີນທາງ

ພະຍາກຸສະລາດບວດຮຽນຢູ່ວັດນີ້ດົນນານໄດ້ເຈັດເດືອນແລະມີຄວາມຮູ້ເລີກເຊິ່ງເຖິງຂັ້ນເປັນຍອດໃນທາງທຳມະ. ຄູບາເຊື້ອກະສັດອົງນີ້ມີຊື່ວ່າ ມະຫາເຖລະກຸສະລາດ ຫຼື ທີ່ຄົນທົ່ວໄປເອີ້ນວ່າ ມະຫາເຖນ. ທ່ານຕັ້ງໃຈຮຽນຮູ້ພະວິໄນແລະປະຕິບັດຮີດຄອງຢ່າງເຄັ່ງຄັດ. ແນວໃດກໍຕາມມະຫາເຖນກໍຍັງຄິດຄະນຶງຫານ້ອງສາວບໍ່ມີຍາມເຊົາ ແລະ ຕັ້ງໃຈແນວແນ່ທີ່ຈະນຳໄປຊອກຫາໃຫ້ພົບພໍ້ຈົນໄດ້. ດັ່ງນີ້ ຈຶ່ງຂາບລາພະເຖລະຕົນເປັນຄູບາອາຈານແລ້ວເດີນດຽວເຂົ້າປ່າຜ່ານພູສູງແລະແມ່ນ້ຳຫຼາຍສາຍ. ມະຫາເຖນເລາະໄປເລື້ອຍໆຈົນຕົກເຖິງຕ່າງແດນອັນເປັນເຂດຂອງພວກຊາວແຍ້. ຊາວພູດອຍທີ່ທ່ຽວໄປຫາມາສູ່ກັນກັບຊາວແຍ້ນີ້ກໍມີຊາວລາຂຽວ, ຊາວເມືອງຢ່າເຢີແລະອື່ນໆ.

ມະຫາເຖນໄປຈົນເຖິງແດນໄກໆແຕ່ກໍຍັງບໍ່ພົບຮ່ອງຮອຍຂອງນ້ອງສາວເລີຍ. ຍ່າງແຕ່ເຊົ້າເທົ້າຄໍ່າໄປຕາມລໍາພັງ. ເມື່ອຮອດບ້ານຄົນກໍໄປບິນບາດ ພໍໄດ້ເຂົ້າມາສັນແລ້ວກໍຍ່າງຕໍ່ທ່າມກາງປ່າດົງວົງກົດ ເຫັນດອກສ້ຽວບານເຮືອງເຮື່ອຫຼາຍກົກຫຼາຍກໍນັບບໍ່ຖ້ວນທັງໄດ້ຍິນສຽງນົກສຽງແມງໄມ້ຮ້ອງດັງແວ່ວໆ... ນົກກາເວົາຮ້ອງດັງກ້ອງພົງໄພຄືດັ່ງຮ້ອງຫາຄູ່ທີ່ພັດພາກຈາກກັນເປັນເວລາດົນນານ ສຽງນີ້ຍັງເຮັດໃຫ້ມະຫາເຖນຈິດໃຈວິ່ວອນສະທ້ອນອີກສະທ້ອນໃຈ. ນົກເຂົາກໍຂັບສຽງປະສານກັບສຽງນົກຍູງ. ນົກໃສ່. ນົກເປົ້າ. ນົກສາລິກາ ແລະ ອື່ນໆ...

ມື້ນຶ່ງ ມະຫາເຖນມາຮອດນໍ້າຕົກຕາດໃຫຍ່ແລະງົດງາມເປັນຕາອອນຊອນ. ສາຍນໍ້າໄຫຼທັ່ງໂງ່ນຫີນຕົກລົງເຫວເລິກ ຊຶ່ງພື້ນລຸ່ມເປັນພະລານຫີນຮາບພຽງ. ນໍ້າຟົ້ງເປັນຝອຍເຢັນຊື່ນຕະຫຼອດເວລາ. ມີສາລາເກົ່າແກ່ແຄມນໍ້າຫຼັງນຶ່ງຊຶ່ງປາກົດມີຮ່ອງຮອຍຂອງຜູ້ຄົນເຄີຍມາພັກເຊົາຢູ່ກ່ອນໃນບ່ອນນີ້ມາແລ້ວ ມາຫາເຖນພັກຢູ່ສາລານີ້ຄືນນຶ່ງ ເພື່ອພັກຜ່ອນໃຫ້ເຊົາເມື່ອຍລ້າ ແລ້ວກໍເດີນທາງຕໍ່ເມື່ອຮຸ່ງເຊົ້າມື້ຖັດມາ.

ເມືອງຈໍາປາ

ນັບແຕ່ເດີນທາງດັ້ນປ່າຜ່າດົງມາເປັນເວລາສາມເດືອນປາຍມະຫາເຖນກໍມາຮອດແດນເມືອງຈໍາປາ. ພະຍາປົກຄອງເມືອງນີ້ຊື່ວ່າພະຍາກາມະທາ. ຕົວເມືອງມີກໍາແພງລ້ອມແລະມີຫໍຄອຍຕັ້ງເປັນຍ່ານໆຈໍານວນສາມຮ້ອຍບ່ອນ. ຫໍຄອຍນີ້ມີຫຼັງຄາເປັນຮູບຍອດຜາສາດແລະມີທະຫານຍາມຄອຍລະວັງຢູ່ຕະຫຼອດເວລາ. ດ້ານນອກມີນໍ້າອ້ອມອີກ



ຊັ້ນນຶ່ງ. ເມື່ອຫຼຽວແຕ່ໄກຈະເຫັນຜາສາດຫຼາຍຍອດຕ້ອງກັບແສງຕາເວັນຈົບເຫຼື້ອມຕາແລະສະທ້ອນເງົາລົງທີ່ໜ້ານ້ຳ. ວັດໃຫຍ່ຫຼາຍວັດພົ້ນເດັ່ນຂຶ້ນເຫັນຫຼັງຄາສີມຣຸ່ງເຮືອງເຫຼືອງເຫຼື້ອມ. ບ້ານເຮືອນລາສະດອນປຸກລຽນກັນຢູ່ເປັນຍ່ານໆສະຫຼັບດ້ວຍສີຂຽວອຸ່ມທຸ່ມຂອງຕົ້ນໝາກ ຕົ້ນພ້າວ ທີ່ເໜັງນວຍນາຍເມື່ອລົມພັດຕ້ອງ.

ຄົນຢູ່ໃນເມືອງນີ້ມີມາກມ່າຍອັ່ງອໍ. ພໍ່ຄ້າຊາວຂາຍທ່ອງທ່ຽວໄປມາເປັນສິບໆ. ພວກນາຍສະເພົາຈາກຕ່າງເມືອງພາກັນຂົນເອົາສິນຄ້ານາໆຊະນິດມາຕະຫຼາດໃຫຍ່ແລະມີຂອງຂາຍຮ້ອຍອັນພັນແນວ. ສິ່ງອຳນວຍຄວາມສະດວກມີຫຼາຍຢ່າງ ພາໃຫ້ຄົນໃນເມືອງນີ້ອັນມີທັງພວກເສດຖີ, ພວກກະດຸມພີ, ພວກພາມແລະອື່ນໆດຳລົງຊີວິດຢ່າງມີຄວາມ

04/06/2026, 03:32

ສຸກ. ຍູທ່າງສ້າງສາແລະທຳການຄ້າຂາຍຫາລາຍໄດ້. ຊາວຕ່າງແດນທີ່ມາຂຶ້ນສ່ວຍຕໍ່ເມືອງຈຳປາກໍມີພວກຄາຂຽວ,ພວກຍາລາຍແລະອື່ນໆ.

ມະຫາເຖນໄປພັກເຊົາຢູ່ວັດນອກເມືອງ. ເຈົ້າຫົວຄູຜູ້ເປັນໃຫຍ່ຢູ່ວັດນີ້ໃຫ້ການຕ້ອນຮັບແລະທັກຖາມດ້ວຍໄມຕີຈິດອັນດີ ເພາະທ່າທາງແລະວາດເວົ້າຂອງມະຫາເຖນເປັນທີ່ເຊື່ອຖືແລະຖືກໃຈ. ມະຫາເຖນຜູ້ເດີນທາງບອກວ່າມາຢ້ຽມຢາມເບິ່ງບ້ານເບິ່ງເມືອງ ເພາະຄົນເຂົາເລົ່າກັນວ່າເມືອງນີ້ສະໜຸກມ່ວນຊື່ນປານເມືອງຟ້າ ທັງມີເມືອງຕ່າງໆມາສ່ວຍຄຳຕັ້ງຫຼວງຫຼາຍຈົນນັບບໍ່ຖ້ວນ. ຊາວບ້ານທີ່ຢູ່ໃນວັດໄດ້ຍິນດັ່ງນັ້ນກໍເວົ້າເສີມຕໍ່ວ່າ: "ມີຫຼາຍເມືອງໃນໃຕ້ລຸ່ມຟ້ານີ້ມາຂຶ້ນສ່ວຍຕໍ່ເມືອງຈຳປາ,ຕົວຢ່າງພວກຄາຂຽວທີ່ຢູ່ເຂດພູແຜງມ້າ. ພວກນີ້ທ່ຽວໄປຮອດເມືອງແຖນ, ເມືອງຍ່າເຍີ, ໄປຮອດເມືອງຍັກ.ພວກເຂົາທ່ຽວໄປມາແບບຄົນກໍໄດ້ ແບບເຫາະເຫີນໄປກໍໄດ້."

ເມື່ອມີຜູ້ເວົ້າຮອດເມືອງຍັກ ມະຫາເຖນເລີຍສວຍໂອກາດສໍ້ຖາມຕື່ມອີກເພື່ອຊອກຮູ້ລາຍລະອຽດກ່ຽວກັບທີ່ຢູ່ຂອງພວກຍັກ. ເຈົ້າຫົວຄູຊີ້ແຈງວ່າ: "ຟາກເຂດຂອງພວກຄາຂຽວໄປພຸ້ນແມ່ນເຂດແດນຂອງຍັກໃຫຍ່ໂຕຊື່ວ່າກຸມພັນ. ມັນເປັນເຊື້ອສາຍຂອງພະຍາ ເວດສຸວັນ ຜູ້ເປັນເຈົ້າຈອມຂອງຍັກທີ່ຢູ່ເມືອງຈາຕູມ. ມັນມີລິດເດດເກັ່ງກ້າພໍປານກັບພະນາລາຍພຸ້ນໃດ!"

ເມື່ອໄດ້ຍິນດັ່ງນີ້ມະຫາເຖນຈຶ່ງເວົ້າວ່າ:

"ຕາມທີ່ເຈົ້າຫົວຄູເລົ່າມານີ້ເຫັນວ່າກົງກັບຂ່າວທີ່ຍັກໄປລັກເອົານາງສຸມຸນທານ້ອງສາວຄິງໆຂອງພະຍາແຫ່ງເມືອງເປັງຈານ. ຍັກໄປລັກເອົາຕອນມີມະໂຫລະສົບ ຢູ່ສວນອຸທິຍານ. ຈົນຮອດດຽວນີ້ຍັງບໍ່ຮູ້ຂ່າວຄາວຂອງນາງເລີຍ. ຜູ້ເປັນອ້າຍໂສກເສົ້າຫງ່ວມເຫງົາຫຼາຍເພາະ

https://online.fliphtml5.com/iqwiz/utcv/

ຂິດຫວ່ງອາໄລຫານ້ອງ. ດັ່ງນີ້ ຈຶ່ງປະລະເມືອງແລ້ວອອກນຳຊອກຫານ້ອງສາວ. ອັນຊ່ຳແຕ່ຄົນທຳມະດານີ້ຊິໄປສູ້ຣົບຕົບຕີເອົາຄືນຊິໄດ້ບໍ່ ?"

ຕໍ່ເລື່ອງນີ້ເຈົ້າຫົວຄູອະທິບາຍວ່າ: "ຄົນທຳມະດາບໍ່ສາມາທຳການຕໍ່ສູ້ເອົາຄືນໄດ້ດອກຕ້ອງແມ່ນໜໍ່ພະໂພທິຍານ[1] ຜູ້ເປັນເຊື້ອວົງພະພຸດທະເຈົ້າທີ່ມີລິດເດດພໍປານພະອິນພຸ້ນຈຶ່ງຊິເອົາຄືນໄດ້."

ພະເຖລະທັງສອງສົນທະນາກັນຫຼາຍເລື່ອງຈົນເຖິງເວລາຄ່ຳມືດແລ້ວກໍພາກັນໄຕ້ທູບທຽນໄຫວ້ພະສູດມົນແລ້ວເຂົ້ານອນ.

ພະຍາກຸສະລາດຕ່າວຄືນເມືອງ

ແສງຕາເວັນສ່ອງພົ້ນພູຂຶ້ນມາເໜືອຟ້າເມືອງຈຳປາສຽງຕີກັງສະດານ[2] ບອກເວລາບິນບາດ, ພະສົງສາມະເນນພາກັນອອກຈາກວັດນັ້ນວັດນີ້ຍ່າງເປັນແຖວໄປບິນບາດຕາມຄຸ້ມຕ່າງໆ ມະຫາເຖນກຸສະລາດຍ່າງໄປຮອດຄຸ້ມອັນເປັນທີ່ຢູ່ຂອງບັນທະເສດຖີ ຜູ້ມີລູກສາວເຈັດຄົນທີ່ພວມເປັນສາວເຕັມຄີງ.ຜູ້ຫຼ້າເອີ້ນກັນວ່ານາງລຸນ.ພວກນາງພ້ອມກັນມາໃສ່ບາດທຸກວັນເປັນປະຈຳ, ແຕ່ລະຄົນມີຜິວພັນຜ່ອງໃສຂາວນວນປານກີບດອກບົວບານ, ຜົມດຳເຫຼື້ອມປານນິນ, ຮ່າງຄີງກົມກ້ຽງປະດັບດ້ວຍສາຍສັງວານເຫຼື້ອມຍິບຍັບ. ທັງເຈັດນາງນຸ່ງຜ້າສະໃບສີດອກຄຳເຂົ້າກັບວາດຊົງອ່ອນຊ້ອຍຍິ້ມນ້ອຍໆພ້ງາມທ່າທາງສະຫງ່ຽມຄ່ຽມຄົມ. ມື້ນີ້ພວກນາງໄດ້ຕັກບາດໃຫ້ທານແດ່ລູບາຕ່າງແດນອົງນຶ່ງຊຶ່ງພວກນາງບໍ່ໄດ້ຄິດຫຍັງເລີຍເປັນພິເສດຖືວ່າເປັນການປະກອບກິດຈະວັດປະຈຳວັນທຳມະດາ. ແຕ່ວ່າທຸກອິລິຍະບົດຂອງພວກນາງເປັນພາບປະທັບຢູ່ໃນຄວາມຊົງຈຳຂອງມະຫາເຖນຕະຫຼອດເວລາ.

ພາຍຫຼັງການບິນບາດເຊົ້າວັນນັ້ນມະຫາເຖນ ກໍຕັດສິນໃຈຕ່າວຄືນເມືອງເປັງຈານໄວກວ່າທີ່ຄາດຄະເນໄວ້. ເພິ່ນເຂົ້າໄປສັ່ງລາເຈົ້າຫົວຄູແລ້ວກໍອອກເດີນທາງໂດຍມຸ່ງໜ້າໄປຍັງຂົວຂ້າມແມ່ນ້ຳສາຍນຶ່ງ. ຂົວນີ້ຍາວຫ້າຮ້ອຍວາປາກົດຕົວຂຶ້ນມາຍ້ອນການອະທິດຖານເນລະມິດຂຶ້ນໄວ້ໂດຍພະພົມເມື່ອຄັ້ງປາງປະຖົມ. ຢູ່ໃກ້ຫັ້ນມີນ້ຳສ້າງແກ້ວຊຶ່ງຜູ້ຄົນມັກສ່ຽງທວາຍເບິ່ງບຸບວາດສະໜາ ໂດຍຊ່ອງເບິ່ງເງົາໃນນ້ຳແລ້ວຈະປາກົດເຫັນເສັ້ນຊາຕາຊີວິດ, ຜູ້ທີ່ສ່ຽງທວາຍເບິ່ງຄູ່ຊີວິດກໍຈະເຫັນຮູບຜູ້ເປັນຄູ່ຮັກປາກົດຕາມໜ້ານ້ຳ. ເມື່ອໄປຮອດບໍລິເວນດັ່ງກ່າວມະຫາເຖນກໍໄປຊ່ອງເບິ່ງນ້ຳສ້າງແລະເຫັນຮູບນາງລຸນປາກົດເດັ່ນ, ສ່ວນເອື້ອຍທັງຫົກນັ້ນປາກົດໃຫ້ເຫັນຢູ່ໄກໆຄືຈັ່ງວ່າໄກເປັນຫຼາຍໂຍດ.

ການເດີນທາງຕ່າວຄືນ ເປັນໄປຢ່າງເຮັ່ງຮີບ, ຜ່ານທົ່ງນາແລ້ວເຂົ້າສູ່ປ່າໄພໜາທ່າມກາງສຽງນົກຮ້ອງກ້ອງດົງ, ດອກໄມ້ປ່າສົ່ງກິ່ນຫອມຫວນ ເຮັດໃຫ້ຫົວໃຈມະຫາ ເຖນປັ່ນປ່ວນເອົ້າອັ່ງ ເພາະມີທັງຄວາມຄິດຫ່ວງຫຼັງ, ທັງຢາກຫົວ ທັງຢາກໄຫ້ທໍ່ໆກັນ, ຜ່ານບັ້ນເດີນທາງອັນຍາວໄກ ໃນທີ່ສຸດ ເພິ່ນກໍມາຮອດເຂດແດນເມືອງເປັງຈານ.

ຂ່າວກ່ຽວກັບການຕ່າວຄືນມາຂອງມະຫາເຖນກຸສະລາດ ດັງໄປຮອດເມືອງເປັງຈານ ດັ່ງນັ້ນນາງຈັນທາຜູ້ເປັນແມ່ເມືອງ ຈຶ່ງສັ່ງໃຫ້ຈັດໂຮມໄພ່ພົນພ້ອມດ້ວຍຊ້າງມ້າອອກໄປຕ້ອນຮັບ ບັນຍາກາດຟົດຟື້ນຊື່ນບານປົກຄອງໄປທົ່ວເມືອງອີກເທື່ອນຶ່ງ ພໍປານວ່າພະອິນພະພົມໄດ້ໂຜດໃຫ້ຝົນຕົກລົງມາສູ່ພື້ນດິນພາຍຫຼັງທີ່ແຫ້ງແລ້ງຕິດຕໍ່ກັນຫຼາຍປີ.

ຂະບວນໄພ່ພົນຫຼັ່ງອອກຈາກເມືອງເປັນສາຍຍາວຢຶດໂດຍມີນາງຈັນທາເປັນຜູ້ນຳພາອອກໄປ. ຂະບວນໄປຢຸດລົງຕໍ່ໜ້າມະຫາເຖນເພື່ອນ້ອມນະມັດສະການ. ທຸກຄົນກົ້ມຂາບໄຫວ້ທັງຫຼັ່ງນ້ຳຕາດ້ວຍຄວາມຕື້ນ

ຕັນໃຈທີ່ເຫັນກະສັດຂອງຕົນກັບຕ່າວຄືນມາ. ມະຫາເຖນຖາມສະບາຍທຸກສຸກກັບອອກຕົນຍາດໂຍມດ້ວຍຄວາມເບີກບານສຳລານໃຈ. ຝ່າຍຜູ້ໄປຕ້ອນຮັບກໍສະແດງຄວາມຮູ້ສຶກທີ່ເຕັມປ່ຽມໄປດ້ວຍ ຄວາມຈົງຮັກພັກດີແລະຄວາມນອບນ້ອມຄາລະວະ ໂດຍກ່າວວ່າບ້ານເມືອງຍາມທີ່ຂາດພະອົງນັ້ນມັນຄືດັ່ງຕົ້ນໄຮທີ່ຢູ່ແຄມຝັ່ງນ້ຳໄຫຼ ມີແຕ່ຄອງວັນເວລາທີ່ຈະລົ້ມລົງໃນຂະນະໃດຂະນະນຶ່ງ. ມັນຄືດັ່ງແຫຼວໃຫຍ່ໂຕເກັ່ງກາດທີ່ຖືກຫຼົກປີກອອກໝົດແລ້ວນຳໄປປະໄວ້ທ່າມກາງຂີ້ຕົມ. ມັນຄືດັ່ງແຜ່ນດິນທີ່ຂາດແສງຕາເວັນ ຍ່ອມປົກຄຸມໄປດ້ວຍຄວາມມືດມົນອົນທະການ.

ບັນຍາກາດການຕ້ອນຮັບ ມີຊີວິດຊີວາ. ມະຫາເຖນຂຶ້ນແຢ່ງຊ້າງແລ້ວຂະບວນແຫ່ ກໍມຸ່ງໜ້າເຂົ້າສູ່ໃນເມືອງ. ທຳອິດ ພະອົງໄປພັກຢູ່ວັດໃຫຍ່. ພວກເສນາມຸນຕີກໍພາກັນມາຫ້ອມລ້ອມເພື່ອຂາບໄຫວ້ ແລະຖາມຂ່າວຄາວກ່ຽວກັບນາງສຸມຸນທາ. ມະຫາເຖນເລົ່າວ່ານັບແຕ່ອອກຈາກເມືອງໄປເປັນເວລາດົນນານໄດ້ຜ່ານໄປຫຼາຍອົງເຂດແລະໄປຮອດເມືອງ

ຈຳປາ. ເມືອງນີ້ຕິດຕໍ່ພົວພັນກັບຫຼາຍເມືອງຫຼາຍເຊື້ອຊາດອັນມີເມືອງແມນ, ເມືອງມ່ານ, ເມືອງທໍ້, ຕະຫຼອດຮອດເມືອງຟ້າຕໍ່ອັນເປັນແດນຜີ ເປັນທີ່ເລົ່າລືກັນມາວ່າຟາກເຂດນັ້ນໄປອີກແມ່ນແດນຂອງພະຍາຍັກ. ນາງສຸມຸນທາອາດຊິຕົກໄປຢູ່ແດນຂອງພວກຍັກກຸມພັນ. ເປັນເລື່ອງສຸດວິໄສທີ່ຄົນທຳມະດາຈະໄປນຳເອົາຄືນມາໄດ້. ແຕ່ເຈົ້າຫົວຄູຢູ່ວັດແຫ່ງນຶ່ງທີ່ເມືອງຈຳປາບອກວ່າຖ້າມີເຊື້ອແນວເປັນໜໍ່ພະໂພທິຍານກໍສາມາດໄປຜາບຍັກລົງແລ້ວເອົານາງຄືນມາໄດ້.

ມະຫາເຖນ ເລົ່າເຫດການຕ່າງໆທີ່ໄດ້ພົບພໍ້ແລະຊີ້ແຈງຈຸດປະສົງຂອງພະອົງໃຫ້ທຸກຄົນຮູ້. ບັນດາເສນາມຸນຕີຕ່າງໆກໍຟັງດ້ວຍຄວາມຕື່ນເຕັ້ນສົນໃຈ ແລະ ມີຄວາມກະຕືລືລົ້ນທີ່ຈະປະຕິບັດຄຳສັ່ງເພື່ອໃຫ້ເກີດດອກອອກຜົນ.

ຊາວເມືອງເປັງຈານທີ່ເຄີຍປະສົບພາວະເວັ້ນຫວ່າງກະສັດມາລະຍະນຶ່ງ ມາບັດນີ້ເຂົາເຈົ້າປາຖະໜາຢ່າງແຮງກ້າ ໃຫ້ພະອົງກັບຄືນສູ່ລາຊະບັນລັງອີກ. ດັ່ງນີ້ ມະຫາເຖນກຸສະລາດຈຶ່ງຈຳຕ້ອງລາສິກອອກມາເພື່ອຈະເປັນພະຍາຄອງເມືອງຕາມເດີມ ເພື່ອເປັນສິລິມຸງຄຸນແລະເປັນໄປຕາມຮີດຄອງປະເພນີ. ພວກເສນາອາມາດຕະຫຼອດໄພ່ພົນກໍພ້ອມກັນຈັດພິທີອຸປະພິເສກຫົດສົງໃຫ້ພະອົງຂຶ້ນສະເຫວີຍລາດຢ່າງສະຫງ່າຜ່າເຜີຍ. ວັນນັ້ນເປັນວັນສຸກເວລາງາຍອັນເປັນຍາມໄຊຊະໂຊກ. ກອງດຸລິຍາງບັນເລງເພງສຽງກ້ອງສະນັ່ນ.ສຽງກອງຕະໂພນແລະກອງຫາງດັງກ້ອງໄປໄກປະສານເຂົ້າກັບສຽງສັງ. ສຽງພິນ. ສຽງໄຄ້. ສຽງແຄນແລະສຽງຂຸ່ຍ ປຸກໃຫ້ໝົດເມືອງຕື່ນຂຶ້ນມີຊີວິດຊີວາ. ພະຍາກຸສະລາດຂຶ້ນຂີ່ຊ້າງຊື່ວ່າ ພາຍຂວັນຊຶ່ງປະດັບປະດາດ້ວຍລູກແກ້ວມະນີສີຮຸ່ງໃສທີ່ຮ້ອຍເປັນເສັ້ນແລະແຂວນໄວ້ເປັນຮາວຕາມສອງຂ້າງໂຕ

04/06/2026, 03:32 ປຶ້ມເວື່ອງ ສິນໄຊ

ຊ້າງ. ເສັ້ນສາຍຄຳຂຶງຜ່ານໄປທາງທ້າຍ. ຊາປະດັບດ້ວຍປອກຄຳສຸບລຽນກັບຖີ່ງບາງຈັບທາຂັ້ນຂີ່ຊ້າງຖ່າວ[3] ຊື່ວ່າມະນີບິນຊຶ່ງຕົບໂຕປະດັບດ້ວຍດາວຄຳເຮັດເປັນຮູບນາກຢູ່ທັງສອງຂ້າງ. ສ່ວນພວກນາງສະໜົມຫຼາຍຄົນຂັ້ນຂີ່ຊ້າງພັງ[4]ແລ້ວຂະບວນແຫ່ກໍມຸ້ງໜ້າສູ່ສະໜາມໄຊໂດຍມີພວກທ້າວຂຸນຂີ່ມ້າຖືແສ້ຄອຍລະວັງຮັກສາຄວາມສະຫງົບຕາມທົບທາງຊຶ່ງປູດ້ວຍແພລາຍ. ບໍ່ດົນຂະບວນແຫ່ກໍມາຮອດສະໜາມໄຊຊຶ່ງໄດ້ຮັບການກະກຽມໃຫ້ສະຫງ່າງາມຈະເລີນຕາປະດັບປະດາດ້ວຍເສດຕະສັດເຫຼືອງເຫຼື້ອມ. ພະຍາລົງຈາກຫຼັງຊ້າງແລ້ວເຂົ້າສູ່ຫໍສົງໂດຍມີພາມພາພະອົງໄປນັ່ງລົງເທິງອາສະນະທີ່ເຮັດດ້ວຍແກ້ວຢູ່ໃຕ້ຮາງລິນຄຳ. ເມື່ອພະອົງນັ່ງຮຽບຮ້ອຍແລ້ວສຽງກອງກໍດັງຂຶ້ນຕຶ້ງໆ. ພະເຖລະຜູ້ໃຫຍ່ຖືເອົາກະອອມນ້ຳຫອມຖອກລົງຮາງລິນເປັນການເລີ່ມຕົ້ນຫົດສົງ. ຕໍ່ຈາກນັ້ນກໍແມ່ນບັນດາເສນາມຸນຕີແລະບໍລິວານທັງຫຼາຍທຳການຫົດສົງຕໍ່ໆກັນມາ. ນ້ຳຄັນທະເສນໄຫຼລົງຮາງລິນສົ່ງກິ່ນຫອມກຸ້ມໄປທົ່ວຜາສາດລາຊະວັງ. ໄພ່ພົນທີ່ມາຮ່ວມພິທີຢ່າງຄັບຄາໜາແໜ້ນຮ້ອງສົ່ງສຽງສາທຸການດັງຟົດສະນັ່ນ. ຂະນະທີ່ການຫົດສົງດຳເນີນໄປນີ້ກໍມີການຫວ່ານກັບລະພຶກໂດຍໃຊ້ເງິນຄຳເປັນຈຳນວນຫຼວງຫຼາຍ. ຜູ້ຄົນພາກັນຍາດແຍ່ງເອົາໃຜເອົາລາວຈົນຜູ້ສັ້ນເຂ່ຽປະຮ່າງຄິງເປົ່າເປືອຍໄປກໍມີ.

ເມື່ອການຫົດສົງສຳເລັດລົງພະອົງກໍອອກມານັ່ງທີ່ບັນລັງຄຳທ່າມກາງສຽງດົນຕີເສບງັນດັງລະງົມພໍປານເມືອງສະຫວັນ. ຜູ້ຄົນທີ່ມາເຝົ້າແຫນແຫ່ເຕັມໄປທົ່ວຫ້ອງອັນກວ້າງໃຫຍ່. ນັບເປັນພິທີໃຫຍ່ໂຕມະໂຫລານຊຶ່ງມີຄວາມໝາຍສຳຄັນຕໍ່ຊາວເມືອງເປັງຈານເປັນຢ່າງຍິ່ງ. ພວກພາມຍົກມືຂຶ້ນເປັນຊອນລອນທັງກ່າວຄຳຖະຫວາຍພອນໄຊ. ພວກເສນາມຸນຕີນ້ອຍໃຫຍ່ຫຼັ່ງໄຫຼເຂົ້າໄປຖະຫວາຍທຽນຈົນຄົບແລ້ວ

https://online.fliphtml5.com/iqwiz/utcv/ 36/152

ພິທີກໍອັດລົງ.

ພະຍາກຸສະລາດຂຶ້ນສະເຫວີຍລາດເປັນເຈົ້າຄອງເມືອງເປັງຈານສືບຕໍ່ໄປອີກດັ່ງເດີມ.

ບັ້ນແຕ່ງດອງ

ນັບແຕ່ຂຶ້ນສະເຫວີຍລາດຄືນໃໝ່ ເປັນຕົ້ນມານີ້ ພະຍາກຸສະລາດປາກົດວ່າ ຢູ່ກະເສມສຳລານດີ. ແຕ່ໃນສ່ວນ ເລິກຂອງຫົວໃຈແລ້ວພະອົງຄິດຄະນຶງຫານາງທັງເຈັດບໍ່ມີຍາມເວັ້ນຫວ່າງ, ຈິດໃຈປວດກະສັບດັ້ນດົ້ນ, ຍາມກິນຍາມນອນມີແຕ່ຄຶດອາວອນໂອ້ອ່າວຫາ.

ພະອົງເລົ່າຄວາມຈິງທີ່ໄດ້ໄປພົບເຫັນລູກສາວທັງເຈັດຂອງເສດຖີຢູ່ເມືອງຈຳປາສູ່ພວກເສນາອາມາດຟັງວ່າ ພວກນາງເຫຼົ່ານັ້ນງາມປານນາງຟ້າ, ຜູ້ກົກຊື່ວ່ານາງປະທຸມມາ, ຜູ້ນ້ອງຫຼ້າຊື່ວ່ານາງລຸນ. ທ່າທາງກິລິຍາວາດແຕ່ງອົງຊົງເພດຂອງພວກນາງສົມເປັນກຸລະສະຕີ ແລະເໝາະສົມທີ່ຈະເອົາມາເປັນມິ່ງມະເຫສີ, ພໍ່ເປັນຄົນຊິນຊັ້ນພານຊື່ວ່ານັນທະເສດຖີ ຊຶ່ງເປັນເຊື້ອວົງພີ່ນ້ອງຂອງພະຍາກາມະທາຜູ້ເປັນພະຍາປົກຄອງເມືອງຈຳປາ. ດັ່ງນີ້ພະອົງຈຶ່ງໂອ້ລົມກັບເສນາອາມາດເຖິງຄວາມເໝາະສົມແລະຄວາມເປັນໄປໄດ້ທີ່ຈະສົ່ງທູດໄປຂໍເອົານາງທັງເຈັດມາເປັນມະເຫສີເພື່ອຫວັງຈະມີບຸດໄວ້ສືບແທນລາຊະບັນລັງໃນອະນາຄົດ. ພວກເສນາອາມາດນ້ອຍໃຫຍ່ທັງຫຼາຍ ຕ່າງກໍຍິນດີບໍ່ມີສິ່ງຂັດຂ້ອງໃດໆແລະອັນອາສາທີ່ຈະໄປເຈລະຈາຂໍເອົານາງມາໃຫ້ໄດ້ຕາມຈຸດປະສົງຂອງພະອົງ.

ເມື່ອເຫັນວ່າສະພາບການເປັນທີ່ອຳນວຍແລະໂອກາດເໝາະສົມ

ມາຮອດແລ້ວ ພະອິງກໍສັ່ງໃຫ້ເສນາຜູ້ໃຫຍ່ທີ່ຮູ້ຈັກຮີດບ້ານຄອງເມືອງດີພິຈາລະນາເບິ່ງສິ່ງທີ່ຈະເອົາເປັນເຄື່ອງບັນນາການໄປຍັງເມືອງຈຳປາເພື່ອສູ່ຂໍຕາມປະເພນີໃຫ້ສົມກຽດແລະຊື່ສຽງ.ມີການຕົກລົງເອົາເຄື່ອງບັນນາການຊຶ່ງປະກອບດ້ວຍຊ້າງພັນໂຕ, ມ້າພັນໂຕ, ງົວແມ່ພັນຄູ່ກັບທັງຄົນລ້ຽງສັດເຫຼົ່ານີ້ຢ່າງຄົບຖ້ວນ, ນອກນັ້ນຍັງມີເງິນແລະຄຳໜັກພັນຊັ່ງຂຸນຄອນແລະຂຸນສີໄດ້ຮັບການແຕ່ງຕັ້ງໃຫ້ເປັນທູດ ໄປເຈລະຈາສູ່ຂໍແລະນຳເຄື່ອງບັນນາການດັ່ງກ່າວໄປຍັງເມືອງຈຳປາ.

ເມື່ອໄດ້ລືກງາມຍາມດີສອງຂຸນກໍພາຂະບວນອອກເດີນທາງໂດຍມີໄພ່ພົນຮັກສາຄວາມປອດໄພໄປນຳຈຳນວນພັນຄົນ.

ຂະບວນຊ້າງເປັນແຖວຍາວຍ່າງໄປເປັນຍວຍໆຕິດໆຕໍ່ໆກັນ, ທັງໝົດຂະບວນຫຼັ່ງໄຫຼອອກຈາກຕົວເມືອງຜ່ານເຂດທົ່ງນາແລ້ວກໍເຂົ້າສູ່ເຂດປ່າໄມ້ດົງໜາ, ມີຕົ້ນຄໍ້, ຕົ້ນແຄຜາ, ຕົ້ນຍາງສູງຈົນສຸດຢ້ຽມ[7]ດອກໄມ້ພວມບານເຮືອງເຮື່ອ, ດອກງີ້ວບານເປັນສີແດງງາມເດັ່ນເດຍລະດາດຢູ່ທົ່ວ,ດອກລະຍອມບານເປັນສີເຫຼືອງພວມຊຸຫຼົ່ນລົງດິນ. ນົກກາເວົາ

ຮ້ອງສຽງດັງວ່ອນໆ ສະທ້ອນໄປທົ່ວປ່າເຮັດໃຫ້ສອງຂຸນຄຶດຮອດຄອບຄົວທີ່ປະລະໄວ້ເບື້ອງຫຼັງເປັນທີ່ສຸດ. ແນວໃດກໍຕາມເພື່ອເຫັນແກ່ວຽກງານຕາມໜ້າທີ່ສອງຂຸນເວົ້ານຳກັນວ່າ ຕ້ອງຮີບຮ້ອນໄປໃຫ້ເຖິງຈຸດໝາຍໄວໆເພາະເສັ້ນທາງຍາວໄກແລະຢ້ານວ່າໄພ່ພົນຈະຂາດເຂີນສະບຽງອາຫານຖ້າວ່າມີການຊັກຊ້າແກ່ເວລາໃຫ້ຍາວໄປ.

ເຖິງເວລາຄ້ອຍຄໍ່າລົງແລງສອງຂຸນປ່າວເຕືອນໃຫ້ໄພ່ພົນພັກເຊົາເອົາແຮງຈັດການດັງໄຟແຕ່ງກິນໃຫ້ແລ້ວກ່ອນຈະຄໍ່າ, ອີກສ່ວນນຶ່ງກໍຈັດແຈງແປງທີ່ພັກນອນແຮມຄືນໄວ້ຕາມກ້ອງຕົ້ນໄມ້ ຫຼື ກ້ອງງ່ອນຜາແລ້ວກໍພັກຜ່ອນຊໍາຊາຮອດມື້ເຊົ້າວັນໃໝ່ ແລ້ວຈຶ່ງອອກເດີນທາງຕໍ່ໄປ.

ຂະບວນອັນຍາວຍືດຊື່ງມີທັງຄົນແລະສັດເດີນດຸ່ງໜ້າມື້ຕິດມື້ຕໍ່, ຜ່ານຫຼາຍປ່າໂຄກ, ດົງຕຶບ ແລະ ຫ້ວຍຮ່ອງຈົນນັບບໍ່ໄຫ່ວ, ເວລາຜ່ານໄປເປັນເດືອນຈຶ່ງມາເຖິງແຄມແມ່ນໍ້າຍົມ, ຈາກບ່ອນນີ້ກໍແນມເຫັນເມືອງຈຳປາຮຸ່ງເຫຼື້ອມຍິບຍັບຢູ່ໃຕ້ທ້ອງຟ້າອັນສົດໃສ. ຜູ້ເດີນທາງຕ່າງກໍໂລ່ງໃຈເພາະຈຸດໝາຍປາຍທາງປາກົດຢູ່ຕໍ່ໜ້າແລ້ວ. ອີກເທື່ອນຶ່ງຂະບວນໄດ້ຢຸດເຊົາເປັນຕອນສຸດທ້າຍ ກ່ອນຈະນຳສານເຂົ້າໄປຍັງຕົວເມືອງຂຸນຄອນກັບຂຸນສີປີກສາຫາຮູ້ນຳກັນ ແລ້ວກໍພາຄະນະຖືສານມຸ່ງໜ້າສູ່ພະລາຊະວັງທ່າມກາງປະຊາຊົນຊາວເມືອງຈຳປາ ມາຫຸ້ມລ້ອມເບິ່ງຢ່າງຄັບຄັ່ງອັ່ງອໍ, ຊາວເມືອງພາກັນແຕ່ງເຜດດ້ວຍອາພອນອັນສວຍງາມເປັນພິເສດແລະຕ້ອນຮັບແຂກເມືອງ ດ້ວຍອັດທະຍາໄສອັນອົບອຸ່ນ.ພວກຜູ້ສາວກໍສົ່ງສຽງເວົ້າຢອກໄຍຢ່າງມ່ວນຊື່ນກັບພວກຜູ້ບ່າວທີ່ຮ່ວມມາໃນຄະນະແຂກເມືອງ. ສອງຂຸນຍ່າງອອກຫົວແຖວໄປຍັງສຳນັກຂອງມະຫາເສນາຜູ້ສຳເລັດລາຊະການບ້ານເມືອງແລະແຈ້ງຈຸດປະສົງຂອງການມາຢ້ຽມຢາມຄັ້ງນີ້ໂດຍບອກວ່າ ພະຍາກຸສະລາດຜູ້ຄອງເມືອງ

ເປັງຈານປະສົງຢາກໄດ້ລູກສາວທັງເຈັດຂອງນັນທະເສດຖີໄປເປັນມະເຫສີ ເພື່ອຫວັງໄດ້ຜູ້ສືບໜໍ່ແທນແນວທີ່ເປັນເຊື້ອວົງກະສັດແຫ່ງເມືອງຈຳປາ. ອີກທັງຍັງເປັນການສ້າງສະພານແຫ່ງມິດໄມຕີລະຫວ່າງສອງແຜ່ນດິນນີ້ໃຫ້ຈະເລີນງອກງາມຕະຫຼອດໄປຊົ່ວກາລະນານ. ເພື່ອຈຸດປະສົງອັນສູງສົ່ງດັ່ງກ່າວນີ້ ພະຍາກຸສະລາດມີສານເຖິງພະຍາກາມະທາ. ດັ່ງນັ້ນຈຶ່ງຂໍໃຫ້ມະຫາເສນາຜູ້ເປັນກົກເປັນເຄົ້າຊ່ອຍແນບນຳແລະອຳນວຍໃຫ້ບັນລຸຜົນຕາມຄວາມມຸ່ງມາດປາຖະໜາດັ່ງກ່າວນັ້ນດ້ວຍ.

ຝ່າຍມະຫາເສນາສະແດງຄວາມຍິນດີທີ່ສອງແຜ່ນດິນນີ້ມີນະໂຍບາຍຂອດຮັກຂອດແພງຊຶ່ງກັນແລະກັນ ແລະວ່າທີ່ສອງຂຸນຖືສານມານັ້ນເປັນການຖືກຕ້ອງຕາມຮີດຄອງທີ່ປະຕິບັດກັນມາ ແຕ່ບູຮານນະການແລ້ວ. ມະຫາເສນາພ້ອມທັງຂຸນນາຜູ້ໃຫຍ່ແຫ່ງເມືອງຈຳປານຳເອົາເນື້ອໃນຂອງສານແຈ້ງຕໍ່ພະຍາກາມະທາຢ່າງລະອຽດ. ພະອົງມີຈິດໃຈເບີກບານມ່ວນຊື່ນແລະສັ່ງໃຫ້ນຳແຂກເມືອງເຂົ້າພົບໃນວັນນັ້ນແລ້ວມະຫາເສນາກໍແຕ່ງໃຫ້ຂຸນຈັນເສນາຜູ້ນ້ອຍ ພາແຂກເມືອງເຂົ້າສູ່ທໍ່ສະໜາມພ້ອມດ້ວຍເຄື່ອງບັນນາກາຄົບຖ້ວນເພື່ອທຳພິທີຖະຫວາຍທຽນແກ່ກະສັດຜູ້ຄອງເມືອງຈຳປາ.

ຂຸນຄອນ ແລະ ຂຸນສີແຕ່ງຕົວດ້ວຍເຄື່ອງນຸ່ງສີສົດໃສພາກັນຂີ່ມ້າໂດຍມີຂຸນຈັນເປັນຜູ້ນຳພາເຂົ້າໄປຍັງທໍ່ສະໜາມ ທ່າມກາງຜູ້ຄົນເຕັມບໍລິເວນ.ທັງສາມຂຸນລົງຈາກມ້າແລ້ວກໍເຂົ້າໄປໃນຫ້ອງອັນກວ້າງຂວາງສະຫວາດສະເຫວີຍ. ຂຸນຄອນແລະຂຸນສີເອົາເຄື່ອງບັນນາການອັນມີເງິນແລະແພໄໝມອບແກ່ມະຫາເສນາກ່ອນ, ແລ້ວຕໍ່ມາມະຫາເສນາກໍພາແຂກເມືອງເຂົ້າຖະຫວາຍທຽນແກ່ພະຍາກາມະທາ. ໃນການຖະຫວາຍທຽນນັ້ນນອກຈາກສານແລ້ວກໍມີເງິນນຶ່ງໝື່ນແລະຄຳພັນກ້ອນ.

ພະຍາກາມະທາໃຫ້ການຕ້ອນຮັບແຂກເມືອງດ້ວຍອັດທະຍາໄສອັນດີຍິ່ງແລະຖາມວ່າ "ພະຍາກຸສະລາດ ທີ່ສະເຫວີຍລາຊະສົມບັດຢູ່ເມືອງເປັງຈານພຸ້ນຍັງຢູ່ສຸກສະບາຍດີບໍ?"

ຂຸນຄອນຍົກມືໃສ່ຫົວແລ້ວຕອບໄປວ່າ:

"ເພິ່ນຍັງຢູ່ສະບາຍດີທຸກປະການ, ແຕ່ເພິ່ນກໍຍັງມີຄວາມປະສົງທີ່ເໜືອສິ່ງອື່ນໃດຢູ່ບໍ່ເລີກບໍ່ແລ້ວນັ້ນກໍຄື ຢາກໄດ້ນາງທັງເຈັດຊຶ່ງເປັນລູກສາວຂອງບັນທະເສດຖີຜູ້ເປັນເຊື້ອສາຍຂອງພະຍາໄປເປັນມິ່ງມະເຫສີ. ດັ່ງນີ້ຂ້ານ້ອຍຈຶ່ງໄດ້ຂ້າມພູຂ້າມດອຍລ່ວງມາຮອດພີ້ໂດຍນຳເອົາເຄື່ອງບັນນາການມາຖະຫວາຍແລະຫວັງວ່າພະຍາຈະກະລຸນາເຫັນດີຕາມພະປະສົງດັ່ງກ່າວດ້ວຍ."

ພະຍາກາມະທາຮັບຟັງເລື່ອງລາວດ້ວຍຄວາມປິຕິຍິນດີແລະຖາມວ່າ: "ເມືອງເປັງຈານນັ້ນຂາດເຂີນເຊື້ອແນວນາງກະສັດຊັ້ນບໍພວກເຈົ້າທັງສອງຈຶ່ງຈຳຕ້ອງດັ້ນດົ້ນມາຮອດແຫ່ງນີ້."

ຂຸນຄອນຕອບວ່າ: "ຜູ້ສາວທີ່ເປັນເຊື້ອແນວໜໍ່ກະສັດກໍຫຼາຍນັບເປັນພັນແຕ່ເບິ່ງຄືວ່າບໍ່ມີນາງໃດເປັນທີ່ພໍໃຈຂອງເພິ່ນເລີຍ.ເພິ່ນແນມມາແຕ່ກ້ຳຝ່າຍເມືອງຈຳປາພີ້ຕະຫຼອດເວລາ. ຖ້າພະຍາຕອບປະຕິເສດຫຼືສະແດງຄວາມຂັດຂ້ອງແນວໃດແນວນຶ່ງຊຶ່ງເຮັດໃຫ້ຄວາມຫວັງພັງທະລາຍແລ້ວ ຈັ່ງໃດພະຍາກຸສະລາດກໍຄົງດັ່ນດົ້ນທອດຫິວຕາຍເປັນແນ່ແທ້."

ໄດ້ຍິນດັ່ງນັ້ນພະຍາກາມະທາກໍກ່າວຕອບດ້ວຍອາລົມດີວ່າບໍ່ຂ້ອງບໍ່ຂິນແລ້ວບອກໃຫ້ເສນານຳພາແຂກເມືອງໄປຫາບັນທະເສດຖີທັງມີຄຳສັ່ງແນບນຳໄປພ້ອມວ່າບໍ່ໃຫ້ປະຕິເສດ, ແຕ່ໃຫ້ປູກແຕ່ງຕາມຈຸດປະສົງທີ່ເວົ້າມາໃນສານນັ້ນ.

04/06/2026, 03:32

ແລ້ວຕໍ່ມາຂຸນຈັນກໍພາແຂກເມືອງໄປຍັງຜາສາດຂອງນັນທະເສດຖີ. ຫຼັງຈາກລົມກັບພໍຮູ້ຈັກວ່າແມ່ນໃຜມາແຕ່ໃສແລ້ວຂຸນຄອນກໍບອກຈຸດປະສົງທີ່ໄດ້ມາຮອດມາເຖິງຄັ້ງນີ້. ທຳອິດຝ່າຍນັນທະເສດຖີສະແດງຄວາມຂັດຂ້ອງໂດຍກ່າວວ່າ:

ອັນນຶ່ງ ພໍ່ກໍຮັກຍິ່ງພົ້ນຮວງ ພະລັບເລືອດໃນອົກ
ດູດັ່ງ ຄາວໄກສຸດ ບໍ່ວາງໄປໄດ້

ເມຣເສດຖີເອງກໍເວົ້າວ່າລູກສາວທັງເຈັດນັ້ນປຽບຄືໜ່ວຍຕາຊິໃຫ້ຄວັກເອົາໜ່ວຍຕາອອກໄດ້ຈັ່ງໃດ.

ຝ່າຍຂຸນຄອນກໍບໍ່ລົດລະຄວາມພະຍາຍາມໂດຍອ້າງເຫດຜົນຫຼາຍປະການຄືໃຫ້ເສດຖີແນມເຫັນການໄກໄວ້. ຂໍໃຫ້ຄຶດວ່າເປັນການສ້າງສະພາບທອງທ່ຽວໄຕ່ເພື່ອໃຫ້ເມືອງໃຫຍ່ສອງຝ່າຍກ້ຳນິຂັ້ນໃດແກ້ວກ່າຍກັນ.

ພາຍໃນເຮືອນຂອງເສດຖີມີພີ່ນ້ອງຈຸ້ມເຈື້ອມາຮວມຟັງນຳຫຼາຍຄົນ. ທຸກຄົນເວົ້າອົບຮົມໃຫ້ສອງຜົວເມຍເສດຖີປະຕິບັດຕາມທີ່ພະຍາການະຫາສັ່ງແນະນຳມາເພາະວ່າສາຍແນນວາງມາແຕ່ຟ້າແຕ່ແຖນແລ້ວຈຶ່ງບໍ່ຄວນຂ້ອງຂິນ. ໃນທີ່ສຸດຜົວເມຍເສດຖີກໍເອີ້ນລູກສາວທັງເຈັດມາຖາມ. ຜູ້ພໍ່ເວົ້າວ່າ:

"ພະຍາເມືອງເປັງຈານມີຄວາມປະສົງຢາກໄດ້ລູກໝົດທຸກຄົນໄປເປັນມະເຫສີພວກລູກຈະວ່າແນວໃດ?"

ລູກສາວທັງເຈັດເວົ້າວ່າ: "ສຸດແລ້ວແຕ່ພໍ່ແມ່. ຫາກພໍ່ແມ່ເຫັນດີພວກລູກກໍບໍ່ຊ່າງຂິນຄວາມ."

ນັນທະເສດຖີຕັດສິນໃຈດ້ວຍຄວາມລຳບາກເພາະມັນເທົ່າກັບເອົາມີດລົມໆມາຄວັກເອົາຕາຕົນເອງອອກ. ມັນສຸດແສນທໍລະມານທີ່ພວກ

https://online.fliphtml5.com/iqwiz/utcv/ 42/152

ລູກໆຈະຕ້ອງມາພັດພາກຈາກພໍ່ແມ່ໄປ, ແຕ່ໂດຍເຫັນແກ່ຄວາມສຳພັນອັນດີງາມແລະຍືນຍົງລະຫວ່າງສອງນະຄອນທ່ານຈຶ່ງຍອມຍົກລູກສາວໃຫ້ໄປ, ສ່ວນເມຣູກໍຝືນໃຈທີ່ສຸດແຕ່ເມື່ອເຫັນວ່າມັນເປັນກຽດອັນສູງສຸດທີ່ລູກສາວຂອງຕົນຈະໄດ້ເປັນມິ່ງມະເຫສີຈຶ່ງສະຫຼະໄປແຕ່ນ້ຳຕາຂອງຄວາມເປັນແມ່ກໍໄຫຼອາບແກ້ມ. ນາງເວົ້າສັ່ງສອນລູກໃຫ້ຮັກແພງກັນຢ່າຖິ້ມປະລະໄລກັນ. ໃຫ້ປະຕິບັດຕົນຄ່ຽມຄົມສຸຂຸມ, ຊອກຮຽນຮູ້ຮີດຄອງລາຊາເພື່ອບໍ່ໃຫ້ທຳຕົນຜິດພາດ, ພ້ອມດຽວກັນນາງກໍເວົ້າກັບສອງຂຸນຜູ້ເປັນທູດວ່າ:

"ຈົ່ງບອກພະຍາກຸສະລາດໃຫ້ສັ່ງສອນເອົາແນວໃດທີ່ພວກນາງບໍ່ຮູ້ກ່ຽວກັບຮີດຄອງທຳນຽມໃນວັງ, ຖ້າວ່າພວກນາງເຮັດຜິດພາດປະການໃດຈົນບໍ່ສາມາດແກ້ໄຂໄດ້ກໍຂໍໃຫ້ສົ່ງຄືນມາຫາພໍ່ແມ່,ຢ່າໄດ້ລົງໂທດໜັກໜ່ວງເຖິງຂັ້ນຕາຍເລີຍ."

ສອງຂຸນຜູ້ເປັນທູດຮັບຄຳຕາມທີ່ພໍ່ແມ່ຂອງນາງທັງເຈັດບອກແລ້ວຕໍ່ມາກໍມອບເຄື່ອງບັນນາການອັນມີຄ່າມະຫາສານ ຊຶ່ງພະຍາເມືອງເປັງຈານເລືອກເຟັ້ນສົ່ງມາ. ການປະຕິບັດໜ້າທີ່ຂອງຂຸນຄອນແລະຂຸນສີເປັນໄປຕາມຈຸດປະສົງຢ່າງຮຽບຮ້ອຍດີທຸກປະການ.

ກ່ອນທີ່ນາງທັງເຈັດຈະອອກເດີນທາງໄປຍັງເມືອງເປັງຈານຜູ້ເປັນພໍ່ຈັດແຈງແບ່ງສົມບັດໃຫ້ເທົ່າໆກັນທຸກຄົນຊຶ່ງມີເງິນຄຳ, ສັດລ້ຽງແລະສາວໃຊ້ຈຳນວນນັບເປັນຮ້ອຍໆ. ໃນມື້ອອກເດີນທາງພວກນາງຖືທຽນເຂົ້າໄປຂາບລາພໍ່ແມ່ດ້ວຍນ້ຳຕາໄຫຼອາບແກ້ມ. ຜູ້ເປັນແມ່ເປັນຫ່ວງເປັນໃຍນຳລູກຫຼາຍທີ່ສຸດໂດຍສະເພາະນາງລຸນເພາະຍັງນ້ອຍ, ຈຶ່ງບອກໃຫ້ຜູ້ເປັນເອື້ອຍທັງຫຼາຍເອົາໃຈໃສ່ເບິ່ງແຍງບອກສອນນ້ອງ. ເວົ້າແລ້ວແມ່ກໍເປັນລົມສະຫຼົບໄປຈົນຕ້ອງເດືອດຮ້ອນຄົນທັງເຮືອນ. ເມື່ອ

ກອບກູ້ເອົາຊີວິດແມ່ຄືນມາມີການໃຊ້ຢູກຢາ ທັງຄາຖາອາຄົມແລະນ້ຳມົນເປົ່າເປັນອີກກະທົກ. ໃນທີ່ສຸດຜູ້ເປັນແມ່ກໍ່ຟື້ນຄືນມາ.

ການສັ່ງລາທີ່ເສົ້າສະຫຼົດເຕັມໄປດ້ວຍນ້ຳຕາກໍ່ມາຮອດບັ້ນພັດພາກຈາກໄປ. ນາງທັງເຈັດຂຶ້ນນັ່ງເທິງສະລ່ຽງແຜໄໝສອດດ້ວຍໄມ຺້ຄານສີເຫຼືອງຄຳແລ້ວໄພ່ພົນກໍ່ຫາມພວກນາງອອກຈາກຕົວເມືອງໄປທ່າມກາງສຽງຮ້ອງໂຮຟົດຟື້ນຂອງຊາວເມືອງຈຳປາທີ່ມາເຝົ້າເບິ່ງຕາມສອງຂ້າງທາງ.

ຂະບວນແຫ່ໄປເຕົ້າໂຮມກັນຢູ່ສາລານອກເມືອງບ່ອນພັກເຊົາໄພ່ພົນສ່ວນໃຫຍ່, ແລ້ວການເດີນທາງອັນຍາວໄກຈຶ່ງເລີ່ມຕົ້ນໂດຍມີຊ້າງມີມ້າເປັນພາຫະນະ. ໄພ່ພົນອີກສ່ວນນຶ່ງຍ່າງເປັນແຖວຍາວຢຽດທັງຄອຍລະແວດລະວັງຮັກສາຄວາມສະຫງົບ. ທັງໝົດມຸ່ງໜ້າກັບຄືນສູ່ເມືອງເປັງຈານດ້ວຍບັນຍາກາດສົດຊື່ນສົມຫວັງ.

ການເດີນທາງກິນເວລາຫຼາຍວັນ, ຜ່ານດົງຫຼວງ, ຂ້າມຫ້ວຍຮ່ອງ, ລຽບເຫວຊັນ, ໃນທີ່ສຸດກໍ່ມາຮອດເຂດຊານເມືອງເປັງຈານ. ຂຸນຄອນກັບຂຸນສີສັ່ງໃຫ້ຄົນຂີ່ມ້າໄວພະລັນໄປບອກພະຍາກຸສະລາດຊາບລ່ວງໜ້າກ່ອນ, ພະຍາຜູ້ຄອງຄອຍດ້ວຍໃຈຈົດຈໍ່ມາເປັນເວລາດົນນານນັ້ນຕື່ນເຕັ້ນດີໃຈຫາອັນປຽບບໍ່ໄດ້, ແລ້ວກໍ່ສັ່ງໃຫ້ເສນາອາມາດທ້າວທາຂະບວນໄປຕ້ອນຮັບມ້າຂາວນັບເປັນໝື່ນໂຕ ຖືກນຳມາກະກຽມແຕ່ງອານໃສ່ມ້າຊື່ວ່າ ສິນທວາ ສຳລັບພະຍາຂີ່ກໍ່ຖືກແຕ່ງຢ່າງສະຫງ່າງາມອານປະດັບດ້ວຍດອກດວງຮູບດາວຄຳເຫຼືອງເຫຼື້ອມ, ພວກຟ້ອນລະບຳປະຈຳລາຊະສຳນັກແຕ່ງຕົວສີສົດ, ທຸກຄົນຍິ້ມແຍ້ມແຈ່ມໃສທີ່ຈະໄປຕ້ອນຮັບແຂກຈາກແດນໄກ, ທຸກສິ່ງທຸກຢ່າງກຽມພ້ອມແລ້ວພະຍາກຸສະລາດກໍ່ຂີ່ມ້າອອກໄປໂດຍມີເສນານັບໝື່ນຂີ່ມ້າແຫ່ຄອຍລະວັງຮັກສາ

ເປັນແຖວຍາວຍືດ, ຂະບວນຜ່ານທົ່ງນາຫຼວງແລ້ວຜ່ານປ່າ, ພົ້ນຈາກບ່ອນນີ້ກໍພໍດີແນມເຫັນຊ້າງທີ່ນາງທັງເຈັດຂີ່ມາ, ພະຍາກຸສະລາດຢຸດມ້າໄວ້ແລ້ວແນມເບິ່ງດ້ວຍຫົວໃຈທີ່ເປັນສຸກ, ຕໍ່ມາຂຸນຄອນແລະຂຸນສີເລັ່ງມ້າເຂົ້າມາລາຍງານເຖິງຄວາມສຳເລັດໃນການໄປສູ່ຂໍເອົານາງທັງເຈັດຕະຫຼອດຮອດການເດີນທາງທີ່ເປັນໄປດ້ວຍຄວາມຮຽບຮ້ອຍຈົນກ້າວມາຮອດວັນນີ້. ແລ້ວພະຍາກໍຂີ່ມ້າເຂົ້າໄປຫາພວກນາງແລະອວານເອົາຂະບວນເດີນທາງເຂົ້າສູ່ຕົວເມືອງ. ຊ້າງແລະມ້າທັງໄພ່ພົນຫຼັ່ງໄຫຼເຂົ້າມາຈົນອັ່ງອໍເຕັມເມືອງ, ຊ້າງແຕ່ລະໂຕທີ່ພວກນາງຂີ່ມາໄປຢຸດຢູ່ທີ່ເກີຍຂວາງ ເພື່ອໃຫ້ພວກນາງລົງ, ແລ້ວຂຸນຄອນກັບຂຸນສີກໍພາຍ່າງຊ້າໆເຂົ້າໄປຫາພະຍາກຸສະລາດທີ່ເຝົ້າເບິ່ງຢູ່ໃກ້ໆຫັ້ນ,ຕໍ່ມາພະຍາກໍພານາງທັງເຈັດເຂົ້າສູ່ຫໍພັກທ່າມກາງບັນຍາກາດສົດຊື່ນແຈ່ມໃສທີ່ມີເສນາບ້ອຍໃຫຍ່ແລະບໍລິວານທັງຫຼາຍມາຮ່ວມຕ້ອນຮັບ.

ພະຍາກຸສະລາດບອກແກ່ພວກນາງວ່າ: "ຈະຈັດພິທີອຸປະພິເສກຂຶ້ນເປັນມະເຫສີທັງເຈັດຄົນໃຫ້ມີຄວາມສຸກສະເໝີກັນ, ທຸກໆຄົນຈະໄດ້ຮັບເງິນຄຳຈາກການສ່ວຍສາອາກອນແລະຊັບສົມບັດອື່ນໆອີກຫຼາຍຢ່າງ, ຖ້າຍາມໃດຢາກກັບເມືອຢາມພໍ່ແມ່ພີ່ນ້ອງກໍຈະຈັດໄພ່ພົນໄປສົ່ງແລະອຳນວຍຄວາມສະດວກສະບາຍໃຫ້ທຸກປະການ."

ຫໍຫົດສົງໄດ້ຮັບການປະດັບປະດາຢ່າງສວຍງາມສະດຸດຕາ,ເມື່ອຮອດລຶກງາມຍາມດີໝໍໂຫນຂານເຊີນໃຫ້ເລີ່ມຕົ້ນພິທີ, ແລ້ວພະຍາກຸສະລາດກໍຈູງມືນາງທັງເຈັດເຂົ້າສູ່ຫໍຫົດສົງ. ພວກນາງໄປນັ່ງລົງເທິງອາສະນະແລ້ວການຫົດສົງດ້ວຍນ້ຳອຸດຕະມະ ເພື່ອເປັນສິລິມຸງຄຸນກໍດຳເນີນໄປຊ້າໆແຕ່ຄ່ຽມຄົມ. ຫຼັງຈາກນັ້ນພວກນາງກໍມານັ່ງອ້ອມພາຂວັນເພື່ອຮັບພອນແລະຜູກຄໍ່ຕໍ່ແຂນ, ສຸດທ້າຍພະຍາກຸສະລາດມອບວັດຖຸສິ່ງ

ຂອງສຳລັບໃຊ້ໃນຫ້ອງທຳເພື່ອໃຫ້ທັງເຈັດນາງມີຊີວິດຢູ່ຢ່າງສະບາຍ ເຕັມທີ່ປາສະຈາກຄວາມທຸກກັງວົນໃດໆ. ສ່ວນຂຸນຄອນກັບຂຸນສີກໍໄດ້ຮັບການຍ້ອງຍໍຊົມເຊີຍທີ່ປະຕິບັດໜ້າທີ່ດ້ວຍຄວາມສຳເລັດ. ທັງສອງໄດ້ຮັບການເລື່ອນຊັ້ນຂຶ້ນເປັນເຈົ້າກົມຣຣກວ່າ ກົມມະຂຸນຄອນແລະກົມມະຂຸນສີ.

ພະຍາກຸສະລາດຄອງລາຊະສົມບັດຢ່າງເປັນສຸກໂດຍມີມະເຫສີພາບດຽວກັນ 8 ຄົນ. ພະອົງຮັກແພງນາງຈັນທາມະເຫສີຜູ້ເກົ່າແລະນາງທັງເຈັດມະເຫສີຜູ້ໃໝ່ດ້ວຍນ້ຳໃຈກະລຸນາເທົ່າທຽມກັນ.

ທ້າວສິນໄຊເກີດ

ພະຍາກຸສະລາດຄຶດຄະນຶງຫານາງສຸມຸນທາຜູ້ເປັນນ້ອງສາວບໍ່ມີຍາມຈືດຈາງຫວ່າງເວັ້ນ, ທຸກເວລານາທີພະອົງຄິດຄົ້ນຫາວິທີກຳຮາບປາບຍັກໃຫ້ປະລາໄຊແລ້ວເອົານ້ອງສາວກັບຄືນມາເປັນມິ່ງບ້ານຂວັນເມືອງຕາມເດີມ. ເມື່ອໄດ້ມະເຫສີຕື່ມອີກເຈັດຄົນຊຶ່ງເປັນເຊື້ອແນວກະສັດແຫ່ງເມືອງຈຳປາດັ່ງນີ້ພະອົງຫວັງວ່າຈະໄດ້ລູກຊາຍທີ່ມີລິດເດດເກັ່ງກ້າສາມາດຜາບແພ້ພວກຍັກພວກມານທັງຫຼາຍ. ພະອົງບອກມະເຫສີທັງແປດວ່າໃຫ້ຕັ້ງໃຈອະທິຖານວິງວອນເທບພະເຈົ້າເພື່ອໃຫ້ສິ່ງຜູ້ປະເສີດເລີດລ້ຳມາເກີດນຳ, ມາເຫສີຜູ້ໃດໄດ້ລູກຕາມຄວາມປາຖະໜາດັ່ງກ່າວນີ້ຈະໄດ້ເປັນເອກອັກຄະມະເຫສີ.

ນາງຈັນທາແລະນາງລຸນ ນ້ອມໄຫວ້ຫາພະອິນຂໍໃຫ້ສິ່ງຜູ້ມີບຸນມາເກີດນຳເພື່ອໃຫ້ເປັນໜໍ່ພະໂພທິຍານໃນພາຍໜ້າ. ໃນຄ່ຳຄືນທີ່ສອງນາງທຳການອະທິຖານນັ້ນ ພະອິນຢູ່ເທິງຟ້າຫຼິງລົງມາຍັງໂລກມະນຸດ

ແລະຮູ້ແຈ້ງເຖິງຄວາມປາຖະໜາຂອງພວກນາງ ຈຶ່ງສົ່ງລູກສາມອົງລົງມາເກີດ ໂດຍໃຫ້ສອງອົງເກີດໃນທ້ອງໃນລຸນ, ແລະນຶ່ງອົງເກີດໃນທ້ອງຂອງນາງຈັນທາ. ຄືນນັ້ນເມື່ອນາງລຸນຫຼັບໄປກໍຝັນວ່າ ພະຈັນໄດ້ສະເດັດລົງມາຢູ່ຊື່ເທິງຫົວສົ່ງແສງຮຸ່ງເຫຼື້ອມໄປທົ່ວພິພົບ, ມືຂອງນາງລຸນຈັບງ້າວດວງໃສເປັນປະກາຍມາບແມບ, ສ່ວນນາງຈັນທາຝັນວ່າໄດ້ຂີ່ຊ້າງເຜືອກຂາວບໍລິສຸດ ແລ້ວໜີອອກຈາກເມືອງໄປ. ພະຍາກຸສະລາດກໍຝັນດີເປັນພິເສດ ຄືໃນບໍລິເວນຣາຊະວັງປາກົດມີສະໃຫຍ່ເກີດຂຶ້ນ, ມີດອກບົວສີແດງສາມດອກພວມບານເຮືອງເຮື່ອແລະສົ່ງແສງຮຸ່ງເຫຼື້ອມໄປຮອດເມືອງຟ້າ, ສ່ວນດອກອື່ນໆພວມຈູມຈີເປັນຊອນລອນອ້ອມສາມດອກນັ້ນໄວ້.

ນາງຈັນທາແລະນາງລຸນຕັ້ງທ້ອງຖືພາມານັບແຕ່ຄືນນັ້ນເປັນຕົ້ນມາ. ສ່ວນນາງທັງຫົກກໍຕັ້ງທ້ອງໃນເວລາດຽວກັນທັງໝົດ.

ພະຍາກຸສະລາດເລົ່າຄວາມຝັນອັນປະຫຼາດຕ່າງໆນັ້ນສູ່ຄົນທັງຫຼາຍຟັງ. ພວກເສນາຜູ້ໃຫຍ່ກ່າວວ່າຝັນແນວນີ້ພະອົງຈະໄດ້ລູກຊາຍຜູ້ປະເສີດສາມຄົນ, ເປັນຊາຍທີ່ມີລິດເດດຜາບແພ້ສັດຕູໝູ່ມານຈາກທຸກ

ທີດທຸກທາງ. ພະອົງດີໃຈເປັນຢ່າງຍິ່ງທີ່ໄດ້ຟັງເລື່ອງອັນເປັນມຸງຄຸນ. ແຕ່ຍັງຢາກຮູ້ວ່າມະເຫສີຄົນໃດຈະໄດ້ລູກຜູ້ປະເສີດດັ່ງກ່າວນັ້ນ. ພະອົງສັ່ງໃຫ້ໝໍໂຫນມາທຳນາຍເບິ່ງແລະພາຍຫຼັງໄລ່ເລກດູນໍຕາມຫຼັກເກນເລກທໍາລະຄຸນ[10]ແລ້ວໝໍໂຫນບອກວ່າ ນາງລຸນກັບນາງຈັນທາຈະມີລູກຊາຍຜູ້ກ້າຫານລື່ນໂລກມາເກີດນຳ. ສ່ວນນາງທັງທິກຈະໄດ້ລູກຊາຍທີ່ຊົ່ວຊ້າເຫຼືອປະມານ.

ຄຳທຳນາຍຂອງໝໍໂຫນນຳຄວາມຍິນດີມາສູ່ພະຍາກຸສະລາດກັບມະເຫສີຄືນາງຈັນທາແລະນາງລຸນຢ່າງລົ້ນເຫຼືອ. ແຕ່ພ້ອມດຽວກັນນັ້ນນາງທັງທິກຊ້ຳມີແຕ່ຄວາມອັບອາຍຂາຍໜ້າແລະຖືກຜູ້ຄົນຫຍໍ້ຫຍັນໄປທົ່ວເມືອງ. ຂ່າວກ່ຽວກັບເລື່ອງທີ່ນາງທັງທິກບໍ່ພໍໃຈຕໍ່ຄຳທຳນາຍຂອງໝໍໂຫນນັ້ນ ດັງໄປຮອດຫູແມ່ຢາແຝດຄົນນຶ່ງທີ່ມັກເລາະລ່ອງໄປຕາມໃນເມືອງເພື່ອສົ້ງຊອມຫາຜູ້ທີ່ຈະໃຫ້ສິນຈ້າງລາງວັນ.

ແລ້ວວັນນຶ່ງແມ່ຢາແຝດກໍເຂົ້າໄປຫານາງປະທຸມມາຜູ້ເປັນເອື້ອຍໝູ່ຂອງນາງທັງທິກ. ການສົນທະນາແບບຊັບຊິ່ມດ້ວຍຄວາມລະມັດລະວັງດຳເນີນໄປເປັນເວລາດົນນານຈົນເປັນທີ່ເຂົ້າໃຈກັນດີລະຫວ່າງສອງກ້າສອງຝ່າຍ. ແມ່ຢາແຝດເຂົ້າໃຈແຈ້ງເຖິງຈຸດປະສົງຂອງພວກນາງທັງທິກແລ້ວຍິ້ມຢູ່ໃນໃຈເພາະໄດ້ພໍ້ເຫຍື່ອສົມຄວາມປາຖະໜາ ແລະເວົ້າອວດອ້າງຄວາມສັກສິດຂອງຢາແຝດຂອງຕົນວ່າ ສາມາດເຮັດໃຫ້ຄວາມຮັກລະຫວ່າງຊາຍ-ຍິງຈືດຈາງຫ່າງອອກໄປຍາມໃດກໍໄດ້. ຫຼືວ່າຖ້າມີຄົນຄຽດໃຫ້ກັນແລະຊັງກັນເຖິງຂັ້ນຢູ່ຮ່ວມໂລກດຽວກັນບໍ່ໄດ້ກໍສາມາດເຮັດໃຫ້ຄົນເຫຼົ່ານັ້ນຮັກຫອມກັນໄດ້ຈົນລືມແລງລືມງາຍ.

ແມ່ຢາແຝດວ່າ: "ບັນຫາຂອງນາງທັງທິກນີ້ບໍ່ມີຫຍັງຫຍຸ້ງຍາກຈັກດີ້ແກ້ໄຂຄາວດຽວກໍສຳເລັດລຸລ່ວງສະດວກສະບາຍ. ຂໍພຽງແຕ່ເອົາຄຳ

04/06/2026, 03:32

ແດງໆໃສ່ມືໃຫ້ພໍ່ເປັນກຳລັງໃຈ ເພື່ອໄປເສກເປົ່າຢາແຝດໃຫ້ມັນເຂັດມັນຢ້າ ແລ້ວທຸກສິ່ງທຸກຢ່າງຈະເປັນໄປຕາມຈຸດປະສົງ."

ທັງທິກບາງເວົ້າເປັນສຽງດຽວກັນດ້ວຍຄວາມໂມໂຫໂກທາ ແລະຢືນຢັນດ້ວຍຄວາມໜັກແໜ້ນວ່າ ຈະຕອບບຸນແທນຄຸນຢ່າງບໍ່ອັ້ນ ຖ້າແຜນການສຳເລັດຕາມຄາດໝາຍ. ພວກບາງເຕັມໄປດ້ວຍອາລົມເຄືອງແຄ້ນທີ່ຢູ່ດີໆກໍມີຜູ້ມາກ່າວຫາວ່າເປັນຄົນຕ່ຳຊ້າຈັງໄຣ ຈົນຖືກຫຍໍ້ຫຍັນນິນທາຈາກຄົນທົ່ວທັງເມືອງ.

ເມື່ອໄດ້ໂອກາດແມ່ຢາແຝດຜູ້ເຕັມໄປດ້ວຍເລ່ຫຼ່ຽມກໍຈອບມອງເຂົ້າໄປໃນຫ້ອງອາບນ້ຳຂອງພະຍາກຸສະລາແລ້ວເອົາຢາແຝດໃສ່ລົງໄປໃນໄຫນ້ຳ. ພຶດຕິກຳດັ່ງກ່າວນີ້ດຳເນີນໄປດ້ວຍຄວາມລະມັດລະວັງແລະບໍ່ມີຜູ້ອື່ນໄດ້ສັງເກດເຫັນເລີຍ. ພໍຮອດຍາມອາບນ້ຳພະຍາກໍເອົາບວຍຕັກນ້ຳໃນໄຫອາບຕາມປົກກະຕິ. ເມື່ອທົດນ້ຳໄປໄດ້ຫຼາຍບວຍພະອົງກໍຮູ້ສຶກແປກຕ່າງໃນຈິດໃຈ, ມັນເປັນຄວາມຫຸ່ມຮ້ອນປັ່ນປ່ວນທົ່ວໃຈອັ່ງແໜ້ນໄປດ້ວຍຄວາມຊັງຄວາມບໍ່ໄວ້ເນື້ອເຊື່ອໃຈບາງຈັນທາແລະບາງລຸນ. ຂະນະດຽວກັນພະອົງກັບຮູ້ສຶກເປັນຫ່ວງກັງວົນນຳພວກບາງທັງທິກຊຶ່ງໝໍໂຫນເຄີຍທຳນາຍໂຊກຊາຕາໄວ້ໃນແງ່ບໍ່ດີບໍ່ງາມ.

ອາການປະຫຼາດຕ່າງໆຂອງພະຍາດຳເນີນໄປຕະຫຼອດມື້ແລະບໍ່ມີທ່າຈະຢຸດເຊົາລົງໄດ້. ດັ່ງນີ້ພະອົງຈຶ່ງສັ່ງໃຫ້ໝໍໂຫນມາໄລ່ເລກດູນໍເບິ່ງໃໝ່. ບາງທັງທິກສວຍໂອກາດນີ້ກ່ອນທີ່ໝໍໂຫນຈະເຂົ້າໄປຍັງຜາສາດຂອງພະຍາໂດຍເອົາຄຳຍັດໃສ່ມືໃຫ້ໝໍໂຫນທັງຊັບຊິ່ມບອກວ່າໃຫ້ເວົ້າແຕ່ແນວດີເປັນມຸງຄຸນກ່ຽວກັບພວກບາງທັງທິກ.

ຕໍ່ໜ້າພະຍາກຸສະລາດແລະທ່ານກາງເສນາອາມາດໝໍໂຫນທຳນາຍຄິດໜັກ, ໄລ່ເລກຫຼາຍຫຼືບຫຼາຍຕ່າວແລ້ວກ່າວຂຶ້ນວ່າ: "ຂ້າ

https://online.fliphtml5.com/iqwiz/utcv/

ນ້ອຍອີງຕາມເລກອອກມາເຫັນວ່າຊາຕາຂອງນາງທັງຫົກນັ້ນດີ. ສ່ວນນາງຈັນທາກັບນາງລຸນບໍ່ມີໂຊກຄືດັ່ງທີ່ທຳນາຍໄວ້ແຕ່ກ່ອນ. ທີ່ຮ້າຍແຮງໄປກວ່ານັ້ນກໍຄືກຸມມານໃນທ້ອງຂອງນາງທັງສອງນີ້ຈະບໍ່ມີຮູບໂສມຄືມະນຸດທົ່ວໄປ. ແຕ່ຈະເປັນສັດປະຫຼາດໂຕເຮີຮ້າຍ"

ໄດ້ຍິນດັ່ງນັ້ນພະຍາກຸສະລາດຮູ້ສຶກບໍ່ດີໃຈແຕ່ກໍເຮັດຫຍັງບໍ່ໄດ້ໃນເວລານີ້ຕ້ອງຄອຍໃຫ້ວັນເວລາເປັນສິ່ງຕັດສິນເພາະໝໍໂຫນກໍກ່າວໄປຕາມເລກມໍທີ່ອອກມາ. ພະອົງຖ້າໃຫ້ມະເຫສີແຕ່ລະຄົນປະສູດລູກອອກມາສາກ່ອນແລ້ວຫຼັກຖານຕົວຈິງກໍຈະພິສູດຕົວມັນເອງ.

ເວລາຜ່ານໄປຈົນລ່ວງຮອດເດືອນຫົກອອກໃໝ່ຄ່ຳນຶ່ງອັນເປັນເວລາຖືພາຄົບເກົ້າເດືອນຂອງມະເຫສີທັງໝົດ. ນາງລຸນເປັນຜູ້ທຳອິດເຈັບທ້ອງຈ້າວໆແລ້ວລູກກໍອອກມາ. ຮູບໂສມເປັນຫອຍສັງເຮັດໃຫ້ຜູ້ຄົນອັນມີແມ່ລ້ຽງໝໍຕຳແຍແລະນາງສະໜົມທັງຫຼາຍປະຫຼາດໃຈອ້າປາກມືນຕາກວ້າງ. ຕໍ່ມາສຽງເວົ້າກ່າວຂວັນທີ່ບໍ່ເປັນມຸງຄຸນກໍດັງເປັນແຊວໆ.

ຂະນະທີ່ສຽງເນືອງນັນບໍ່ທັນມິດງຽບລົງນັ້ນນາງລຸນກໍອອກລູກຜູ້ທີສອງເປັນມະນຸດຮູບງາມມືຖືທະນູແລະດາບອອກມາພ້ອມ. ຕາມປະເພນີລູກຝາແຝດທີ່ເກີດລຸນຖືກຍົກໃຫ້ເປັນອ້າຍແລະໃສ່ຊື່ວ່າສິນໄຊສ່ວນຜູ້ນ້ອງຊື່ສັງທອງ. ທ້າວທັງສອງຖືກນຳໄປລ້າງສ່ວຍດ້ວຍນ້ຳຫອມແລ້ວນຳໄປວາງໄວ້ພານທອງແລະຫົ່ມຄຸມດ້ວຍແພໄໝຄຳທ່າມກາງສາຍຕາທີ່ງຶດງໍ້ອັດສະຈັນໃຈເພາະປາກົດການທຳນອງນີ້ບໍ່ເຄີຍມີມາກ່ອນ. ທະນູແລະດາບທີ່ສິນໄຊຖືຕິດຕົວມານຳນັ້ນຖືກເກັບມ້ຽນໄວ້ແລະປິດເປັນຄວາມລັບ. ຖັດນັ້ນມາກໍແມ່ນນາງຈັນທາເຈັບທ້ອງອອກລູກ. ເດັກທີ່ເກີດມາເປັນລາຊະສີຫຼືສິງທີ່ມີທັງງວງທັງງາຮູບຮ່າງປະຫຼາດ

ກວ່າສັດໃດໆໃນພິພົບ. ເສນາອາມາດທັງຫຼາຍເວົ້າກັບວ່າເດັກເກີດໃໝ່ເປັນຕົວອຸບັດທີ່ອາດຈະນໍາຄວາມຫາຍຍະນະມາສູ່ບ້ານເມືອງຈຶ່ງສົມຄວນເອົາໄປໄຫຼນໍ້າຫຼືເອົາໄປປ່ອຍໄວ້ໃນປ່າ. ແຕ່ນາງຈັນທາແລະນາງລຸນຜູ້ເປັນແມ່ບໍ່ຍອມຟັງສຽງຜູ້ໃດ. ເຖິງຈະເປັນຕາຍຮ້າຍດີແນວໃດກໍບໍ່ຍອມປະປ່ອຍລູກເພາະໄດ້ອະທິດຖານຂໍນໍາພະອິນແລ້ວ.

ໃນວັນດຽວກັນນັ້ນນາງທັງຫົກກໍອອກລູກເປັນຊາຍລ້ວນທັງຫົກຄົນ. ຜູ້ເປັໜນແມ່ຕ່າງກໍຊື່ນຊົມຍິນດີທີ່ຄໍາທໍານາຍເທື່ອໃໝ່ຂອງໝໍໂຫນກາຍເປັນຄວາມຈິງທຸກປະການ. ພວກນາງເອົາຊະນະການຫຍໍ້ຫຍັນຈາກຜູ້ບໍ່ຫວັງດີແລະລົບລ້າງຄວາມອັບອາຍຂາຍໜ້າໄປໄດ້ຢ່າງໝົດກ້ຽງ. ມັນເປັນວັນຊຶ່ງເຮັດໃຫ້ພວກນາງມີຄວາມເຊື່ອໝັ້ນໃນອະນາຄົດຢ່າບໍ່ເຄີຍເປັນມາກ່ອນ.

ພາຍໃນບໍລິເວນລາຊະວັງກຸ່ມຄົນແບ່ງອອກເປັນສອງຝ່າຍ. ຄືຝ່າຍທີ່ເຂົ້າຂ້າງນາງຈັນທາແລະນາງລຸນກໍເລົ່າລືກັນໄປວ່າ ເດັກທັງສາມແມ່ນພະອິນລົງມາເກີດ. ຝ່າຍທີ່ເຂົ້າຂ້າງນາງທັງຫົກກໍມ່ວນຊື່ນຟົດຟື້ນທີ່ບັດນີ້ເມືອງເປັງຈານມີໜໍ່ກະສັດໄວ້ສືບລາຊະບັນລັງຕາມຈຸດປະສົງຂອງພະຍາຜູ້ປົກຄອງເມືອງແລ້ວ.

ເວລາຜ່ານໄປຫຼາຍວັນພະຍາກຸສະລາດກໍອະນຸຍາດໃຫ້ມະເຫສີທັງແປດເອົາລູກໄປໃຫ້ເບິ່ງ. ພະອົງປິຕິຍິນດີຢ່າງລົ້ນເຫຼືອທີ່ເຫັນລູກຊາຍອັນເກີດຈາກນາງທັງຫົກຜູ້ເປັນສາຍເລືອດຂອງຕົນເອງ. ແຕ່ເມື່ອເຫັນເດັກທີ່ເກີດຈາກນາງຈັນທາແລະນາງລຸນຊຶ່ງມີຮູບຮ່າງຜິດມະນຸດທົ່ວໄປແລ້ວພະອົງມີຄວາມຜິດຫວັງຢ່າງແຮງແລະເອົາອັ່ງໃນໃຈເພາະຢ້ານວ່າເດັກທີ່ເກີດມາຈະແພ້ບ້ານແພ້ເມືອງ.

ພະອົງກ່າວວ່າ: "ມັນຜິດເຊື້ອຜິດແຊງບໍ່ຄວນລ້ຽງໄວ້ເພາະຢ້ານ

ເສັດຢ້ານຂວງ. ຊິເຮັດໃຫ້ບ້ານເມືອງຫຼົ້ມຈົມ..."

ຄຳເວົ້າຂອງພະຍາຜູ້ເປັນພໍ່ຂອງເດັກເອງຕຳຕ້ອງຫົວໃຈນາງທັງສອງຈົນພວກນາງແຄ້ນອັ່ງແໜ້ນແລ້ວຫຼັ່ງລົ້ນອອກມາເປັນນ້ຳຕາໄຫຼອາບແກ້ມ. ພວກນາງປະຕິເສດທີ່ຈະປະຕິບັດຕາມຈຸດປະສົງຂອງພະຍາແລະກ່າວວ່າ: "ເຖິງແມ່ນລູກຊິເປັນສັດເດຍລະສານກໍຕາມພວກຂ້ານ້ອຍຂໍລ້ຽງໄວ້ເພາະໄດ້ໄຫວ້ວອນຂໍນຳພະອິນແລ້ວ, ຖືວ່າມັນຄືຕີນຄືມືຂອງທຸກໆຄົນບໍ່ມີໃຜຊິຕັດຖິ້ມໄດ້. ຖ້າເອົາລູກໄປປ່ອຍປ່າພວກຂ້ານ້ອຍກໍຊິໄປຢູ່ນຳ. ຖ້າເອົາໄປຝັງດິນຫຼືຜູກຈົມນ້ຳຂ້ານ້ອຍກໍຂໍແນບຢູ່ຂ້າງລູກຂໍຕາຍນຳລູກເພາະບໍ່ອາດປະລະໄລໄກຈາກລູກໄປໄດ້..."

ນາງຈັນທາແລະນາງລຸນອຸ້ມກອດລູກແລ້ວລົງຈາກຜາສາດຂອງພະຍາກຸສະລາດດ້ວຍນ້ຳຕານອງໜ້າ. ພວກນາງໄດ້ຕັດສິນໃຈແລ້ວຢ່າງເດັດຂາດທີ່ຈະບໍ່ປະຖິ້ມລູກ.

ພະຍາກຸສະລາດຄິດແຕ່ວ່າລູກທີ່ມີຮູບຮ່າງຜິດມະນຸດນັ້ນຄືໂຕອຸບາດທີ່ຈະເຮັດໃຫ້ເກີດຄວາມຫາຍະນະ, ດັ່ງນັ້ນ ເພື່ອຫາທາງກຳຈັດໄພອັນຕະລາຍແຕ່ຫົວທີ ພະອົງຈຶ່ງຮຽກໂຮມເສນາອາມາດທັງຫຼາຍເພື່ອປຶກສາຫາຮືກ່ຽວກັບວິທີການເຮັດໃຫ້ໂຕອຸບາດຈັງໄຣພົ້ນໄປຈາກເມືອງບ້ານເປັງຈານ. ທາງສຽງສ່ວນຫຼາຍກໍແມ່ນວ່າບໍ່ຄວນລ້ຽງເດັກປະຫຼາດນີ້ໄວ້ເພາະຈະແພ້ພະຍາຜູ້ເປັນກະສັດຄອງເມືອງທັງຈະເກີດຄວາມສັບສົນອົນລະຫົນແລ້ວພາໃຫ້ບ້ານເມືອງເສົ້າໝອງຫຼົ້ມຈົມ, ຈຳເປັນຕ້ອງເອົາເດັກໄປປ່ອຍປ່າ.

ແລ້ວພະຍາກຸສະລາດຜູ້ຖືກພິດຢາແຝດຈົນຂາດສະຕິສຳປະຊັນຍະ ກໍສັ່ງໃຫ້ເສນາໄປບອກນາງຈັນທາແລະນາງລຸນເອົາລູກໄປປ່ອຍໃນປ່າໃຫ້ພົ້ນຫູພົ້ນຕາໄວໆນັບແຕ່ວັນນັ້ນ.

ມັນເປັນວັນແຫ່ງທຸກຂະເວທະນາທີ່ຫາຄຳບັນຍາຍໄດ້ຍາກ. ນາງທັງສອງເອົາຜ້າຕຸ້ມລູກນ້ອຍທັງສາມ. ສັ່ງລາຜູ້ຄົນແລ້ວຍ່າງມຸ່ງໜ້າສູ່ປ່າ. ພວກບ່າວໄພ່ຜູ້ຈົງຮັກພັກດີພາກັນຕິເອີກເປັນທຸກນຳທັງນ້ຳຕານອງໜ້າ. ມັນເປັນການອຳລາທີ່ມີສຽງສະອື້ນຊື່ງເປັນສັນຍານເຕືອນວ່າບໍ່ມີວັນທີ່ຈະຕ່າວຄືນມາເຫັນໜ້າອີກ.

ນາງຈັນທາ ແລະ ນາງລຸນພາລູກບຸກເຂົ້າປ່າໄພໜາໄປໄກໆຈົນຖືກຕັດຂາດຈາກໂລກພາຍນອກ. ພວກນາງຍອມສະຫຼະທຸກຢ່າງແມ່ນແຕ່ຊີວິດຂອງຕົນເອງເພື່ອລູກນ້ອຍ ໂດຍຍອມທົນທຸກທໍລະມານ ໃຊ້ຊີວິດຢູ່ກາງປ່າຫາໝາກໄມ້ ຫົວເຜືອກ ຫົວມັນມາລ້ຽງລູກດ້ວຍຄວາມຖະໜອມແພງ. ເອົາຮົ່ມໄມ້ ແລະ ງ່ອນຜາເປັນບ່ອນຊຸ້ນບັງ ແດດບັງຝົນ ເອົາເດືອນດາວເປັນເພື່ອນທາງໃຈແລະເປັນແສງສະຫວ່າງເຍືອງທາງໃນຄ່ຳຄືນອັນດຳມືດ.

ຊີວິດໃນປ່າ

ນາງຈັນທາແລະນາງລຸນພາລູກຜະຈົນໄພຢູ່ໃນປ່າ.ປະສົບຄວາມລຳບາກຍາກແຄ້ນແສນສາຫັດ. ບາງຄັ້ງຕ້ອງກິນໝາກໄມ້ທີ່ເປັນເງື່ອນຂອງລີງຂອງບ່າງທີ່ເຮັດຫຼູດຕົກລົງມາຈາກເທິງຕົ້ນໄມ້. ການດັ້ນປ່າຜ່າດົງດຳເນີນໄປໂດຍບໍ່ມີຈຸດໝາຍ. ບ່ອນໃດມີເຄື່ອງກິນຫຼາຍກໍພັກເຊົາຢູ່ຫຼາຍມື້ແລ້ວກໍຍ້າຍໄປໜ້າເລື້ອຍໆ. ບາງມື້ທ້າຊີວິດຕ້ອງແຂ່ງຝົນຈົນປຽກອອບຍອບ. ຮ່າງກາຍສັ່ນສະທ້ານຍ້ອນຄວາມໜາວເຢັນແລະຍ້ອນຖືກນາບຂູ່ຈາກສຽງສັດປ່າອັນມີ ນົກເຄົ້າ ນົກຂີ້ຖີ່ແລະທີ່ເຢັນຈ້ອຍໆກໍແມ່ນສຽງທະນີຮ້ອງດັງກ້ອງຜາ.

ນາງທັງສອງໄດ້ຍິນສຽງເຫຼົ່ານີ້ແລ້ວກໍຢ້ານຈົນສັ່ນເຊັນແຕ່ກໍຈຳໃຈພາລູກຜ່ານຜ່າ ອຸປະສັກຂວາງກັ້ນທຸກຢ່າງ ແລ້ວມຸ່ງໄປໜ້າເລື້ອຍໆ. ສ່ວນທາງໃຈກໍໄຫວ້ວອນຫາພະອິນ ໃຫ້ລົງມາຊ່ອຍເບິ່ງແຍງຍາມ ຍາກໂດຍສະເພາະມາຊ່ອຍໃຫ້ລູກນ້ອຍທັງສາມພົ້ນທຸກ ພົ້ນຍາກ ທີ່ພວມຜະເຊີນຢູ່ໃນຂະນະນີ້.

ຊີວິດຢູ່ໃນປ່າຜ່ານໄປນຶ່ງເດືອນທ່າມກາງທຳມະຊາດທີ່ບໍ່ຄ່ອຍອຳນວຍສຳລັບແມ່ຍິງລ້ຽງລູກອ່ອນ ຄວາມເດືອດຮ້ອນຈຶ່ງທັບຖົມກອງເປັນໝື່ນຊັ້ນແສນຊັ້ນ. ພະອິນຫຼິງລົງມາຍັງໂລກລຸ່ມເຫັນຊີວິດນີ້ພວມປະສົບເຄາະກຳຢ່າງໜັກໜ່ວງ ຈຶ່ງເນລະມິດຜາສາດອັນວິຈິດສວຍງາມຂຶ້ນໃຫ້ນຶ່ງຫຼັງ. ວັນນັ້ນນາງທັງສອງອູ້ມລູກເລາະປ່າດົງ, ຂຶ້ນຫວິດຈາກເຫວຊັນແລ້ວແນມໄປທາງທິດເໜືອກໍເລີຍເຫັນລັດສະໝີເປັນສີສົ້ວຮຸ່ງໃສຢູ່ອື່ງຕື່ງ. ເມື່ອຫຍັບເຂົ້າໄປໃກ້ໆກໍພົບວ່າແມ່ນຜາສາດຫຼັງງາມຕັ້ງຢູ່ກາງປ່າພົງໄພ. ສະຕິລະວັງໄພພາໃຫ້ພວກນາງຄິດວ່າຢ້ານແມ່ນຜີປ່າມາເຮັດລວງຫຼອກໄວ້ຈຶ່ງພາກັນລັ່ງເລໃຈບໍ່ກ້າເຂົ້າໄປໃນ.

ນາງຈັນທາເວົ້າວ່າ: "ຫາກຊີວິດພວກເຮົາເລາະຢູ່ໃນປ່າແຫ່ງນີ້ແມ່ນພ້ອມທີ່ຈະປະເຊີນກັບຄວາມຕາຍທຸກເມື່ອທຸກຍາມ. ເປັນແນວໃດກໍເປັນກັນ. ມາພາລູກເຂົ້າໄປເບິ່ງເທາະ!"

ແລ້ວເມື່ອກ້າວຂາເຂົ້າໄປພວກນາງກໍພາກັນຕົກສະເງີ້ດ້ວຍຄວາມປະຫຼາດໃຈເພາະທີ່ປາກປະຕູມີປ້າຍຂຽນບອກວ່າ: "ອັນນີ້ແມ່ນຜາສາດທີ່ພະອິນເນລະມິດໄວ້ໃຫ້ເປັນທານແກ່ເຊື້ອວົງກະສັດທັງຫ້າພະອົງ" ພ້ອມທັງມີຊື່ທ້າວນ້ອຍທັງສາມຂຽນໄວ້ຢ່າງບັນຈົງ.

ນາງຈັນທາແລະນາງລຸນອູ້ມລູກເຂົ້າໄປອາໄສຢູ່ໃນຜາສາດອັນວິຈິດພິດສະດານຫຼັງນີ້. ພວກນາງຍ່າງເລາະເບິ່ງຫ້ອງນັ້ນຫ້ອງນີ້ດ້ວຍ

ຄວາມອັດສະຈັນ, ຫ້ອງນຶ່ງມີເຄື່ອງກິນຫຼາຍຊະນິດຖືກຈັດກຽມໄວ້ແລະພວມສົ່ງກິ່ນຊວນແຊບລອຍມາເຂົ້າດັງ. ຫ້ອງນຶ່ງມີເຄື່ອງນຸ່ງເຮັດດ້ວຍແຜ່ນແພອັນຈົບງາມສີສັນສະດຸດຕາ ມີຫຼາຍຊຸດຫຼາຍຂະໜາດສຳລັບທັງຫ້າຄົນທີ່ພວມສະພັດສະພອຍຢູ່ດຽວນີ້. ຢູ່ຕາມຝາມີຮູບສັດໃນລີລາຕ່າງໆເຊັ່ນຊ້າງຢູ່ໃນທ່າມ້ວນງວງ, ມີທັງຊ້າງນ້ອຍແນບຕິດຂ້າງແມ່ໂດຍເອົາງວງຈ່ອງນົມແມ່ໄວ້, ມ້າຫ້າວຄະນອງມີພາກທີ່ງແຂວນໄວ້ທີ່ຄ່ຢູ່ໃນທ່າທະຍານໄປໜ້າ, ຄວາຍແມ່ນອນດົມລູກ, ບາງໂຕຢືນຢູ່ໂດຍມີລູກຢືນຕິດຂ້າງບໍ່ຍອມຫ່າງ, ຮູບນົກນາໆຊະນິດເຊັ່ນ: ນົກທົງ, ນົກເຂົາ, ຫ່ານ, ແຫຼວ, ບາງພ່ອງພວມຈອບກິນກຸ້ງ ກິນປາ, ບາງພ່ອງບິນເວີ່ນຢູ່ກາງເວຫາ. ນອກນັ້ນຍັງມີເຄື່ອງຫຼິ້ນອີກຈຳນວນນຶ່ງສຳລັບກຸມານທັງສາມເພື່ອຄວາມເບີກບານມ່ວນຊື່ນຈິດໃຈ.

ທັງຫ້າເຊື້ອວົງກະສັດມີຊີວິດຢູ່ຢ່າງສະໜຸກສະບາຍປາສະຈາກຄວາມທຸກຮ້ອນໃດໆໃນຜາສາດກາງປ່າພົງໄພ. ວັນເວລາຜ່ານໄປ, ສິນໄຊໃຫຍ່ຂຶ້ນພວມຮຽນປາກຮຽນເວົ້າ, ມີແວວສະຫຼາດຫຼັກແຫຼມ, ທ້າວເວົ້າອອກມາຢ່າງຄົນມີປັນຍາຮອບຮູ້ຫຼາຍສິ່ງຫຼາຍແນວຈົນປ້າກັບແມ່ຊີນຳບໍ່ທັນ.

ແລ້ວວັນນຶ່ງສິນໄຊກໍຖາມຂຶ້ນວ່າ: "ທະນູກັບດາບທີ່ມີມາກັບລູກໃນມື້ເກີດນັ້ນເດຢູ່ໃສ?ຂໍແມ່ແລະປ້າຢ່າຊູ່ອັດອຳລູກເນີ."

ນາງລຸນເວົ້າອອຍລູກວ່າ: "ລູກຍັງເປັນເດັກນ້ອຍຢູ່ ບໍ່ຄວນຖືດາບຖືທະນູ, ຖ້າໃຫ້ໃຫຍ່ສາກ່ອນຈຶ່ງຈັບບາຍເຄື່ອງເຫຼົ່ານັ້ນແມ່ມ້ຽນໄວ້ໃຫ້ລູກຢ່າງດີແລ້ວ, ບໍ່ມີໃຜເອົາໄປດອກ."

ສິນໄຊອ້ອນວອນແມ່ແລະປ້າໃຫ້ເອົາເຄື່ອງເຫຼົ່ານັ້ນມາໃຫ້ເບິ່ງເພາະຢາກສະແດງລິດເດດໃຫ້ເປັນທີ່ປະຈັກຕາ. ທ້າວກ່າວວ່າ: "ລູກຢາກ

ລອງສາດຕະສິນໃຫ້ແມ່ແລະປ້າເບິ່ງວ່າຜູ້ນ້ອຍໆຄືຈັ່ງລູກນີ້ກໍມີລິດເດດເກັ່ງກ້າໃດເນີ. ເຫັນແລ້ວແມ່ແລະປ້າຈະຕ້ອງທະນົງໃຈແລະເຊົາເປັນທຸກເປັນຮ້ອນໃນໃຈ."

ນາງລຸນບໍ່ຢາກຂືນໃຈລູກ. ແລ້ວຕໍ່ມາແມ່ແລະປ້າກໍເຫັນດີນຳກັນ ມອບດາບແລະທະນູໃຫ້ສິນໄຊ. ທ້າວນ້ອຍເອົາດາບຂັດແອວ ສ່ວນມືຖືທະນູໄວ້ດ້ວຍທ່າທາງທະນົງອົງອາດ. ແມ່ກັບປ້າແຍງເບິ່ງທ້າວດ້ວຍຄວາມປະເອີບໃຈ ທັງເອົາມືລູບຄຳສິນໄຊດ້ວຍຄວາມຊື່ນຊົມຖະໜອມແພງ.

ຊີວິດຢູ່ທ່າມກາງປ່າໄມ້ດົງໝາເຮັດໃຫ້ສິນໄຊຊິນເຄີຍກັບທຳມະຊາດຊຶ່ງມີທັງສິ່ງທີ່ເອື້ອອຳນວຍ ແລະ ສິ່ງທີ່ເປັນອັນຕະລາຍ. ອ້ອມຜາສາດນັ້ນເປັນປ່າດົງດິບ ຊຶ່ງທ້າທາຍໃຫ້ສິນໄຊຄິດຢາກຜະຈົນໄພລອງເບິ່ງ. ດັ່ງນີ້ວັນນຶ່ງສິນໄຊຈຶ່ງຈັບເອົາທະນູມາຍິງ ດ້ວຍຄວາມຫ້າວຫານອງ. ລູກສອນພຸ່ງຕັດອາກາດເກີດສຽງດັງສະນັ່ນຟ້າສະເທືອນດິນແລ້ວແຜ່ນຜະຫຍອງຂຶ້ນສູ່ເວຫາທະລຸກ້ອນເມກລ່ວງຂ້າມຟ້າໄປເຖິງແດນສິມພະລີທີ່ເປັນບ່ອນຢູ່ຂອງພະຍາຄຸດພ້ອມດ້ວຍບໍລິວານນັບບໍ່ໄຫວ ພະຍາຄຸດຕື່ນຕົກໃຈເຮັດອີ່ເລີເປີເສີ, ແຕ່ເມື່ອລູກສອນບໍ່ເປັນອັນຕະລາຍຕໍ່ຄຸດທັງຫຼາຍພະຍາຄຸດຈຶ່ງຕັ້ງສະຕິແລະສຳນຶກໄດ້ວ່ານີ້ແມ່ນລູກສອນຂອງພະໂພທິຍານຜູ້ທີ່ໄດ້ລົງມາເກີດໃນໂລກມະນຸດເປັນຜູ້ສົ່ງມາບອກເຕືອນໃຫ້ຮູ້, ຄຸດທັງຫຼາຍສົມຄວນໄປຂາບໄຫວ້ເພື່ອສະແດງຄວາມຈົງຮັກພັກດີ. ແລ້ວພະຍາຄຸກໍຄາບເອົາລູກສອນແລະອວານເອົາບໍລິວານຄຸດທັງໝົດບິນໄປຍັງຈຸດທີ່ມາຂອງລູກສອນ.ພວກຄຸດບິນເປັນແພຈົນມືດຟ້າມົວດິນເບິ່ງຄືເມກດຳທີ່ເຄື່ອນໄຫວໄປຢ່າງບໍ່ມີຍາມສຸດຍາມສ້ຽງ.ບໍ່ດົນພວກຄຸດກໍໄປຮອດສະຖານທີ່ຂອງສິນໄຊໂດຍເອົາສັງວານຄຳໄປມອບໃຫ້ເປັນຂອງຂວັນທັງຂັນອາສາເຮັດທຸກສິ່ງທຸກຢ່າງ.ສິນໄຊສະແດງຄວາມຊື່ນຊົມຍິນດີຕໍ່ພະຍາຄຸດທີ່ພາບໍລິວານມາຂາບໄຫວ້ແລະເລົ່າເຫດການສູ່ພະຍາຄຸດຟັງວ່າຕົນກັບນ້ອງຄືສັງທອງແລະອ້າຍສີໂຫພ້ອມທັງແມ່ແລະປ້າຖືກບິດາໄລ່ໜີຈາກເມືອງມາຢູ່ກາງດົງກາງປ່າຢ່າງສະພັດສະພອຍ.ມີແຕ່ຄວາມຫງອຍເຫງົາເສົ້າໂສກາຈຶ່ງຢາກໃຫ້ພະຍາຄຸດນຳບໍລິວານມາຢູ່ເປັນເພື່ອນໃນຕອນກາງເວັນເປັນປະຈຳ. ເມື່ອຊາບ ຈຸດປະສົງດັ່ງນັ້ນພະຍາຄຸດກໍສັ່ງໃຫ້ບໍລິວານອັນມີເຫຼົ່າປັກສີຫຼາຍຊະນິດຈັດມະໂຫລະສົບຄົບງັນຂຶ້ນຢ່າງມ່ວນແມ້ງ. ນົກກໍລະວິກສົ່ງ

ສຽງຮ້ອງດັງກ້ອງໄພສຽງມ່ວນກວ່າສຽງດົນຕີໃດໆ.ພວກນາງກິນນະລີ ຢຽດແຂນຟ້ອນເປັນຈັງຫວະພ້ອມກັບງາມບ້າສະອອນ.ເຫັນແລ້ວກໍ ຫາຍທຸກຫາຍໂສກ.

ພໍຮອດຍາມຄ່ຳມາ ພວກຄຸດກໍພາກັບລາກັບຄືນສູ່ ແດນສິມພະລີ ອັນເປັນປ່າໄມ້ງື້ວຂຽວອຸ່ມທຸ່ມຕະຫຼອດປີ. ຕໍ່ຈາກນັ້ນ ສິນໄຊ ກໍເອົາທະນູ ມາຍິງອີກ.ບັດນີ້ລູກສອນໄປຕົກທີ່ເມືອງນາກ. ມະຫາສະມຸດເກີດປັ່ນປ່ວນ ເປັນຟອງຍວກຍູ້ກະທົບກະເທືອນໄປທົ່ວຊາວນາກທັງໝົດ. ພະຍານາກ ເກີດສະທ້ານຢ້ານກົວ ເພາະລູກສອນຕົກລົງໃນຜາສາດຕໍ່ໜ້າຕໍ່ຕາ. ພະ ຍານາກຄິດສະເດືອກທັນທີດັ່ງດຽວກັບພະຍາຄຸດ ຄືຮີບຄາບເອົາລູກ ສອນ ແລ້ວອວານເອົາບໍລິວານນາກທັງໝົດ ເຫາະເຫີນໄປຍັງຜາສາດ ບ່ອນທີ່ພະອິນເນລະມິດຂຶ້ນໄວ້ໃຫ້ທ້າວສິນໄຊຢູ່ກາງປ່າ. ບໍ່ດົນຊາວນາກ ນັບເປັນລ້ານກໍມາຮອດມາເຖິງ.

ພະຍານາກກ່າວວ່າ: "ທັນທີທີ່ຂ້ານ້ອຍຮູ້ຂ່າວວ່າ ພະອົງມາເກີດ ໃນໂລກມະນຸດຂ້ານ້ອຍ ກໍຮີບຈັດບໍລິວານມາຂາບໄຫວ້. ຊາວນາກຂໍອາ ສາເຮັດທຸກຢ່າງຕາມຄວາມປະສົງຂອງພະອົງ."

ສິນໄຊເລົ່າສູ່ພະຍານາກຟັງເຖິງເລື່ອງທີ່ບິດາໄປຟັງຄຳສັບສົ່ ຈາກຜູ້ຄິດລ້ຽວແລ້ວຂັບໄລ່ມະເຫສີທັງສອງ ພ້ອມດ້ວຍລູກທັງສາມອອກ ຈາກເມືອງເປັງຈານ. ຊີວິດຢູ່ປ່າເປັນໄປຢ່າງສະພັດສະພອຍຫງອຍ ເຫງົາຈຶ່ງຢາກໃຫ້ພະຍານາກມາຢູ່ເປັນໝູ່ເພື່ອສ້າງບັນຍາກາດສິດຊື່ນ ຕື່ນຕາຍາມກາງຄືນ.

ດັ່ງນັ້ນການເສບລະບຳຂັບຮ້ອງຈາກຊາວເມືອງນາກກໍດັງລະງົມ ຟົດຟື້ນຕະຫຼອດຄືນຢູ່ປ່າແຫ່ງນີ້ຊຶ່ງແຕ່ກ່ອນເຄີຍຫງຽບເຫງົາປ່ຽວ ພອຍ.ພວກນາກບ່າວສາວທັງຫຼາຍແປງເພດເປັນມະນຸດພາກັນໃສ່ສາຍ

ບໍ່ຮຽງບ້າຍທີ່ປະດັບດ້ວຍເມັດແກ້ວເຫຼື້ອມຍິບຍັບແລ້ວກໍຟ້ອນປິ່ນໄປປິ່ນມາເປັນເຫຼື້ອງຫຼ້າງ. ແສງເຫຼື້ອມຈາກເມັດແກ້ວຮຸ່ງມາບແມບໄປທົ່ວປ່າເປັນທີ່ຕື່ນຕາຕື່ນໃຈເມື່ອຍາມໄດ້ເຫັນ. ມະໂຫລະສົບຄົບງັນດຳເນີນໄປຈົນອະລຸນເບີກຟ້າ. ພະຍານາກຈຶ່ງອຳລາຈາກໄປໂດຍມອບແກ້ວວິເສດແລະສາຍສັງວານຄຳໃຫ້ແກ່ສິນໄຊໄວ້ເປັນເຄື່ອງຄ້ຳຂອງຄູນ.

ຄຸດແລະນາກຜັດປ່ຽນກັນມາເຝົ້າຮັກສາເຊື້ອວົງກະສັດທັງຫ້າຢູ່ເປັນປະຈຳຢ່າງສະເໝີຕົ້ນສະເໝີປາຍ. ຄືນແລະວັນຜ່ານໄປດ້ວຍຄວາມມ່ວນແມ້ງອອນຊອນໃຈ. ທ້າວທັງສາມພາກັນຈະເລີນໄວເຕີບໃຫຍ່ຂຶ້ນໂດຍບໍ່ມີໂພຍໄພໃດໆ. ສິນໄຊມີລິດເດດເກັ່ງກ້າພໍປານພະອິນ. ສັງທອງຜູ້ເກີດຮ່ວມທ້ອງແມ່ດຽວກັນມີຕົນຕົວໃສກ້ຽງປານແກ້ວຜະລຶກສາມາດດຸດມ້າງພູໃຫ້ມຸ່ນທະລາຍ. ສ່ວນສີໂຫທີ່ງາຂາວກ້ຽງກົມງາມສາມາດສຽບແທງແລະງັດຫີນຜາໃຫ້ແຕກມ້າງພັງທະລາຍເປັນຝຸ່ນ. ນັບແຕ່ວັນທີ່ໄດ້ພັດພາກຈາກເມືອງມາຢູ່ປ່າຍ້ອນຖືກບິດາຂັບໄລ່ຈົນຮອດດຽວນີ້ກໍໄດ້ເຈັດປີພໍດີ. ມັນເປັນເວລາເຈັດປີແຫ່ງການມີຊີວິດຢູ່ໂດຍຕັດຂາດຈາກໂລກມະນຸດຫຼືໂລກແຫ່ງເມືອງເປັງຈານ.

ທ້າວທັງທົກ

ຢູ່ເມືອງເປັງຈານລູກຊາຍທີ່ເກີດຈາກນາງທັງທົກກໍໃຫຍ່ກ້າໜ້າບານແລະມີສຽງເລົ່າລືກັນວ່າເປັນພວກຜູ້ມີບຸນມາເກີດ. ພວກທ້າວຮຽນຮູ້ຮີດຄອງປະເພນີໃນລາຊະວັງແລະມີຄວາມສະຫຼາດຫຼັກແຫຼມໃນການເວົ້າຈາ ແຕ່ກໍມີທາງສຽງວ່າທັງທົກສະຫຼາດໃນດ້ານຫຼິບລີ້ນປິ້ນຄວາມຄືປາກເວົ້າແນວນຶ່ງແຕ່ຕົວຈິງເຮັດແນວນຶ່ງ. ແນວໃດກໍຕາມ ພະ

ຍາກຸສະລາດກໍຮັກແພງລູກຊາຍປານແກ່ນຕາແລະຖືວ່າເປັນບຸນຂອງພະອົງທີ່ໄດ້ລູກຊາຍສົມຄວາມປາຖະໜາ. ເປົ້າໝາຍອັນບໍ່ປ່ຽນແປງທີ່ພະອົງຕັ້ງໄວ້ໃກ້ຈະເປັນຄວາມຈິງເຂົ້າໄປເລື້ອຍໆນັ້ນຄືພະອົງຈະມອບໜ້າທີ່ໃຫ້ລູກຊາຍທັງຫົກໄປປາບຍັກແລ້ວ ນຳເອົາອາສຸມຸນທາກັບຄືນມາ. ຖ້າໜ້າທີ່ນີ້ບໍ່ໄດ້ຮັບການປະຕິບັດໃຫ້ສຳເລັດລຸລ່ວງໄປຄວາມແຄ້ນເລິກໆຈະຍັງຄົງເຮັດໃຫ້ດວງຈິດຂອງພະອົງບໍ່ມີຄວາມສະຫງົບໄດ້.

ແລ້ວວັນນຶ່ງພະຍາກຸສະລາດກໍເອີ້ນລູກຊາຍທັງຫົກມາພົບແລ້ວບອກຈຸດປະສົງໃຫ້ລູກທຸກຄົນຮູ້.

ພະອົງວ່າ: "ເມື່ອປາບຍັກລົງໄດ້ ແລະ ເອົາອາຄືນມາແລ້ວພໍ່ຈະມອບເມືອງເປັງຈານໃຫ້ລູກນັ່ງຄອງ. ຜູ້ໃດຊິອັບອາສາລ້າງແຄ້ນແທນພໍ່ກໍໃຫ້ກຽມຕົວກຽມໃຈ, ຕ້ອງອົດທົນເຂັ້ມແຂງ, ມີໃຈກ້າຫານແລະບໍ່ງໍ້ງ່ຽງຕໍ່ສິ່ງໃດໆ."

ທ້າວທັງຫົກຕອບຮັບພ້ອມກັນເພືອບໆວ່າ :

"ພວກລູກຂໍອັບອາສາໄປປາບຍັກມານໃຫ້ໄດ້ເຖິງວ່າວຽກງານຈະຫຍຸ້ງຍາກກັນດານປານໃດກໍຕາມ. ແຕ່ວ່າພວກລູກນີ້ຍັງບໍ່ມີວິຊາອາຄົມໃດໆ.ດັ່ງນັ້ນຈຶ່ງຂໍໄປຊອກຮຽນຮູ້ຝຶກຝົນຕົນເອງໃຫ້ເກັ່ງກ້າ, ມີຄວາມສາມາດໃນເລື່ອງສາດຕະສິນສາກ່ອນ."

ພະຍາກຸສະລາດເຫັນດີຕາມຄວາມປະສົງຂອງພວກລູກທີ່ຈະໄປຮຽນວິຊາໃຫ້ມີລິດເດດ ໝາຍຄວາມວ່າທ້າວທັງຫົກຈະຕ້ອງເຂົ້າປ່າໄປຫາພະລືສີຜູ້ມີລິດເດດທີ່ຈຳສິນຢູ່ກາງປ່າແລະຈະຕ້ອງໃຊ້ເວລາດົນສົມຄວນ. ມັນເປັນເລື່ອງຈຳເປັນທີ່ລູກຊາຍຂອງພະຍາຫຼືກະສັດຈະຕ້ອງເກັ່ງກ້າໃນດ້ານສາດຕະສິນທັງນີ້ ເພື່ອປົກປ້ອງບ້ານເມືອງແລະປາບປາມພວກຍັກມານທີ່ຈະມາຮາວີຕີປຸ້ນ ໂດຍສະເພາະໃນການສູ້ກັບຍັກກຸມພັນ



ແລ້ວຈະຕ້ອງມີລິດເດດເກັ່ງກ້າເປັນຍອດຄົນຈຶ່ງຈະສູ້ໄຫວ. ພະອິງແນມເບິ່ງໜ້າລູກຊາຍທັງຫົກດ້ວຍຄວາມປະເອີບໃຈແລ້ວກໍມອບຄໍາໃຫ້ພວກລູກຈໍາບອນເທົ່າໆກັນເພື່ອໄວ້ແຮຖົງ. ແລ້ວທ້າວທັງຫົກກໍຂາບລາພໍ່ລົງຈາກລາຊະວັງໄປ.

ພະຍາກຸສະລາດເຊື່ອໝັ້ນວ່າໃນບໍ່ດົນນີ້ສັດຕູຄູ່ອາຄາດຈະຕ້ອງດັບດິ້ນປະລາໄຊຢ່າງສິ້ນນໍ້າໜ້າ.

ທ້າວທັງຫົກຈັດແຈງແຕ່ງເຄື່ອງຂອງສໍາລັບເດີນທາງໄກແລະພາຍຫຼັງສັ່ງລາແມ່ທັງຫົກແລ້ວພວກທ້າວກໍອອກເດີນທາງມຸ່ງໜ້າສູ່ສາຍພູທີ່ທັບກັນເປັນລັ່ນຢູ່ສຸດຂອບຟ້າທ່າມກາງຄວັນໝອກຈາງໆ. ບະຈຸດນຶ່ງໄກໆພຸ້ນລືກັນວ່າພະລືສີຜູ້ມີມົນຄາຖາເຂັດຢໍາດໍາລົງຕົວຢູ່ຢ່າງສັນໂດດທ່າມກາງທໍາມະຊາດອັນສະຫງົບ.

ຫົກອ້າຍນ້ອງຂຶ້ນພູສູງເລາະລຽບເຫວຊັນຫຼຽວລົງລຸ່ມເຫັນນໍ້າຕົກໂຕນລົງຕາດຫີນດັງອຶງຄະນຶງ. ອາຍນໍ້າເປັນຄວັນຂາວໆລອຍກົ້ວ

ປົກຄຸມປາຍໄມ້ສີຂຽວອຸ່ມທຸ່ມ. ພວກລີງ ພວກຄ່າງ ແລະ ທະນີ ພາກັນເຕັ້ນໂຕນໂຍນໂຕໄປຕາມງ່າໄມ້ແລະເຄືອເຂົາ. ແມງພູ່ແມງກະເບື້ອບິນສວ່ານສິນຕອມດອກໄມ້ອັນມີດອກເຜີ້ງ. ດອກກຽງລົມ. ດອກສ້ຽວທີ່ພວມບານເຮືອງເຮື່ອຢູ່ທົ່ວປ່າດົງ. ພວກທ້າວເດີນທາງເລາະປ່າໄດ້ສາມເດືອນປາຍ. ໄດ້ຜ່ານຜາດ່າງແລະຜາກະໄດແລ້ວກໍເລີຍຫຼົງທາງ. ທັງຫົກວົນວຽນໃນດົງທີ່ມີສັດປ່າເຊັ່ນຊ້າງ ກະທິງ ໝີ ເໝືອຍ ແຮດ ແລະອື່ນໆ... ໄດ້ຍິນສຽງສັດຮ້ອງແລ້ວກໍພາກັນຢ້ານສັ່ນເຊັນຮີບກ້າວຍ່າງໄປໄວໆເພື່ອໃຫ້ຫວີດຈາກດົງສັດຮ້າຍ. ທັງຫົກຍ່າງໄປໜ້າເລື້ອຍໆຄິດວ່າໄປໄກຫຼາຍໂຍດແຕ່ແລ້ວຊ້ຳພັດກ້ຽວຄືນມາບ່ອນເກົ່າ. ເທິງຟ້າເມກດຳກໍປົກຄຸມໄປທົ່ວທຸກທິດເຮັດໃຫ້ທ້າວທັງຫົກອຸກອັ່ງຄັ່ງແຄ້ນຈົນປັນຍາ ເພາະຕັ້ງແຕ່ເກີດມາຍັງບໍ່ເຄີຍລຳບາກກາກກຳຢ່າງແສນສາຫັດປານນີ້ຈັກເທື່ອ. ແລ້ວພວກທ້າວກໍພາກັນໄຫວ້ວອນຫາສິ່ງສັກສິດທີ່ຢູ່ຕາມພູຜາປ່າໄມ້ໃຫ້ມາຊ່ອຍຊີ້ທາງເພື່ອໄປຖືກບ່ອງລ່ອງຖືກແລວ. ປາກົດວ່າໃນເວລາຕໍ່ມາເມກດຳໄດ້ມະຫັບມະຫາຍໄປ. ຫົນທາງແຈ້ງສະຫວ່າງເປັນແລວໄປຢ່າງໜ້າອັດສະຈັນ. ພວກທ້າວພາກັນໄຕ່ຕາມທາງນັ້ນໄປຈົນຮອດບໍລິເວນອັນເປັນທີ່ຢູ່ຂອງສິນໄຊ.

ທ້າວທັງຫົກໄປພໍ້ສິນໄຊ

ພະຍາຄຸດພ້ອມດ້ວຍບໍລິວານທີ່ເຝົ້າຮັກສາອານາ ບໍລິເວນອ້ອມແອ້ມຜາສາດໄດ້ຍິນສຽງຄົນຕ່າງຖິ່ນຈຶ່ງບິນໄປບອກສິນໄຊ. ເມື່ອຮູ້ດັ່ງນັ້ນສິນໄຊກໍຟ້າວໄປຍັງສະຖານທີ່ດັ່ງກ່າວທັນທີໂລດ. ທ້າວສົ່ງສຽງເອີ້ນໄປໃສ່ດັງໆຈົນທັງຫົກອ້າຍນ້ອງຕົກໃຈດ້ວຍຄວາມຢ້ານກົວແລ້ວກໍພາກັນ

ປີບແລ່ນເຕັ້ນໂຕນລົງໄປລີ້ຢູ່ກ້ອງເງີບຫີນທີ່ລຸ່ມເຫວ

"ແມ່ນໃຜຫັ້ນ?" ສິນໄຊເອີ້ນໄປໃສ່ອີກ.

ທ້າວທັງທິກຟັງຄັກໆແລ້ວຮູ້ວ່າແມ່ນສຽງຄົນບໍ່ແມ່ນສຽງຜີສາງນາງໄມ້ໃດໆຈຶ່ງພາກັນປີນຂຶ້ນມາປາກເຫວແລ້ວກໍເຫັນສິນໄຊຜູ້ມີຜິວພັນຜ່ອງໃສຢືນຢູ່ດ້ວຍທ່າທາງສະຫງ່າຜ່າເຜີຍ. ທ້າວທັງທິກດີໃຈທີ່ພາຍຫຼົງຫຼົງທາງຢູ່ກາງປ່າມາບັດນີ້ໄດ້ມາເຖິງບ່ອນມີຜູ້ຄົນຈຶ່ງພາກັນເຂົ້າ

ໄປຂາບໄຫວ້ຍໍມອບກາຍຖະຫວາຍຕົວຕໍ່ສິນໄຊ. ແຕ່ດ້ວຍສັນຊາດຍານຢ້ານກົວອັນຕະລາຍທ້າວທັງຫົກກໍມີອາການສັ່ນເຊັ່ນຈົນໜ້າຕາຫຼ່າເຫຼືອງຄືປູຈີ່ ທີ່ເຫັນພວກຄຸດຈຳນວນຫຼວງຫຼາຍເຕັມໄປທົ່ວບໍລິເວນ. ສິນໄຊເຫັນອາການດັ່ງກ່າວນັ້ນກໍມີໃຈອີ່ດູ ແລ້ວກໍບອກໃຫ້ພະຍາຄຸດພ້ອມດ້ວຍບໍລິວານແລະສັດອື່ນໆຫຼີກໜີໄປຫ່າງໆ.

ສິນໄຊສໍ້ຖາມພວກທ້າວທັງຫົກວ່າ:

"ພວກເຈົ້າເປັນເຊື້ອແນວຜູ້ໃດ. ມາແຕ່ເມືອງໃດ. ມີຄວາມທຸກຮ້ອນແນວໃດຈຶ່ງພາກັນພົ້ນປ່າຜ່າດົງຈົນມາຮອດມາເຖິງແຫ່ງນີ້."

ທ້າວທັງຫົກຕອບວ່າພວກຕົນຢູ່ເມືອງເປັງຈານ. ພາກັນອອກເດີນທາງດັ້ນປ່າຜ່າດົງມານັບເປັນເວລາຫຼາຍວັນຫຼາຍເດືອນແລ້ວໄດ້ພົບກັບຄວາມລຳບາກກາກກຳຫຼາຍເພາະຫຼົງທາງ. ບໍ່ຮູ້ຮອມທາງໄປຈຶ່ງຕົກມາເຖິງແຫ່ງນີ້.

ເມື່ອຮູ້ວ່າທ້າວທັງຫົກເປັນໃຜມາແຕ່ໃສແລ້ວສິນໄຊຈຶ່ງພາໄປຍັງຫໍຄຳອັນເປັນທີ່ພັກຂອງຕົນເພື່ອພົບກັບແມ່ແລະປ້າ. ທ້າວທັງຫົກເຫັນຫໍຄຳຫຼືຜາສາດຢູ່ກາງປ່າກໍພາກັນຕື່ນຕາຕື່ນໃຈທັງງຶດງໍ້ອັດສະຈັນໃນຄວາມວິຈິດສວຍງາມປານວ່າຢູ່ເມືອງສະຫວັນຊັ້ນຟ້າ. ດ້ວຍຄວາມຮູ້ສຶກຈິງຈຳຮຸມພວກທ້າວໝອບໆຄານໆແລະຂາບລົງຕໍ່ໜ້າແມ່ແລະປ້າຂອງສິນໄຊທັງເລົ່າວ່າພວກຕົນເປັນລູກຂອງພະຍາເມືອງເປັງຈານໄດ້ພາກັນເດີນທາງເຂົ້າປ່າຫາຮຽນສາດຕະສິນເພື່ອຈະນຳໄປໃຊ້ປາບຍັກຜູ້ຊຶ່ງໄປລັກເອົາອາສຸມຸນທາໜີໄປແຕ່ຫຼາຍປີມາແລ້ວ,ທີ່ຕ້ອງເຂົ້າປ່າແລະມາຕົກເຂດນີ້ກໍແມ່ນປະຕິບັດຕາມຈຸດປະສົງຂອງພະຍາຜູ້ເປັນພໍ່.

"ນັບເປັນບຸນແທ້ໆທີ່ພວກຂ້ານ້ອຍຫຼົງທາງແລ້ວມີເທວະດາຊີ້ບອກທິດທາງຈົນໄດ້ມາຮອດມາເຖິງແຫ່ງນີ້." ພວກທ້າວກ່າວຖະແຫຼງ

ຄວາມ.

ເມື່ອຮູ້ວ່າທ້າວທັງທິກບໍ່ແມ່ນຜູ້ອື່ນໄກແຕ່ແມ່ນເຊື້ອສາຍອັນດຽວກັບນາງຈັນທາແລະນາງລຸນຈຶ່ງບອກຄວາມຈິງວ່າພວກຕົນບໍ່ແມ່ນຊາວພູດອຍຫຼືໄທອື່ນໄທໄກແຕ່ຢ່າງໃດ. ຫາກແຕ່ແມ່ນມະເຫສີຂອງພະຍາກຸສະລາດແຫ່ງເມືອງເປັງຈານຜູ້ເປັນພໍ່ຂອງທ້າວທັງທິກນີ້ເອງ.

ແຕ່ເນື່ອງຈາກວ່າພະຍາມີຈິດໃຈບໍ່ທ່ຽງທຳເຫັນຜິດເປັນຖືກຈຶ່ງມີຄຳສັ່ງໃຫ້ໄລ່ຫ້າຊີວິດຄືທັງເມຍແລະລູກຂອງຕົນເອງໜີອອກຈາກເມືອງເປັງຈານ. ລູກເມຍຕ້ອງລຳບາກກາກກຳນອນກາງດິນກິນບໍ່ອີ່ມບໍ່ເຕັມ. ແຕ່ຍ້ອນບຸນສົມພານຂອງລູກນ້ອຍທັງສາມນີ້ພະອິນແນມລົງມາເຫັນສະພາບອັດຕະຄັດແສນສາຫັດຈຶ່ງເນລະມິດຜາສາດຂຶ້ນໃຫ້ນຶ່ງຫຼັງຢູ່ທ່າມກາງປ່າດົງພົງໄພແຫ່ງນີ້. ສ່ວນໝູ່ເພື່ອນທີ່ມາຫຼິ້ນນຳຫຼືມາເຝົ້າຮັກສາກໍມີແຕ່ໝູ່ສັດເຊັ່ນ ຄຸດ ນາກ ເສືອ ສິງ ຊ້າງ ແຮດ ເປັນຕົ້ນ.

ທ້າວທັງທິກເຫັນວ່າສິນໄຊມີລິດເດດສາມາດບັນຊາໃຫ້ສັດຕ່າງໆມາເປັນບໍລິວານໄດ້ ຈຶ່ງພາກັບລົ້ມລົງຂາບໄຫວ້ຫຼາຍເທື່ອຫຼາຍທີແລະຂໍຮຽນຮູ້ສາດຕະສິນນຳໂດຍຂໍເອົາຄຳເປັນຄ່າຕັ້ງຄາຍຫຼືເວົ້າໃຫ້ແປນໆແມ່ນເອົາຄຳເປັນຄ່າຈ້າງຮຽນວິຊາອາຄົມ.

ແຕ່ສິນໄຊກ່າວວ່າ: "ຂ້ອຍບໍ່ຮູ້ເວດມົນ ເພື່ອເສກເປົ່າຫຍັງດອກ. ການທີ່ພວກສັດອັນມີນາກ. ຄຸດມາເຝົ້າຮັກສາຢູ່ບ່ອນນີ້ກໍແມ່ນລູກສອນໄປໄລ່ຕ້ອນເອົາມາຕ່າງຫາກ. ຂ້ອຍເອງພຽງແຕ່ຍິງລູກສອນອອກໄປຊື່ໆ."

ທ້າວທັງທິກບໍ່ລົດລະຄວາມພະຍາຍາມ ຍັງນົບນອບໄຫວ້ວອນຕໍ່ຈົນນັບຄັ້ງບໍ່ຖ້ວນ ເພື່ອໃຫ້ສິນໄຊສອນວິຊາອາຄົມໃຫ້ຕາມຈຸດປະສົງເດີມທີ່ຕັ້ງເອົາໄວ້ກ່ອນຈາກເມືອງມາ.

ພວກທ້າວເວົ້າອອຍ, ເວົ້າຍົວະເຍົ້າສິນໄຊດ້ວຍການຖະແຫຼງແປງລິ້ນວ່າ: "ພະຍາພໍ່ຈົ່ມຫານີ້ລະພັບເທື່ອ, ເພິ່ນຮູ້ສຶກກິນແໜງທີ່ໄດ້ໄລ່ທ້າຊີວິດພວກເຈົ້າໜີຈາກເມືອງແລະເຊື່ອວ່າພວກເຈົ້າເສຽຊີວິດແຕ່ດົນແລ້ວເພິ່ນຈົ່ມມຸກວ່າທີ່ຊາຕາກຳເປັນໄປແນວນີ້ກໍຍ້ອນເວນກັມທີ່ທຳໄວ້ແຕ່ປາງກ່ອນ. ບັດນີ້ພວກຮົາໄດ້ມາເຫັນກັບຕາ ຈຳເປັນຕ້ອງເອົາເລື່ອງນີ້ໄປບອກເລົ່າສູ່ເພິ່ນຟັງ. ແນວໃດເພິ່ນກໍຕ້ອງໃຫ້ເສນາອາມາດເຊີນເອົາພວກນ້ອງກັບຄືນເມືອເມືອງຢ່າງແນ່ນອນ."

ສິນໄຊ ເວົ້າວ່າ:

"ຂ້ອຍບໍ່ຂືນຄວາມດອກ ຖ້າພະຍາພໍ່ຢາກໃຫ້ກັບຄືນເມືອ. ຈົ່ງບອກເພິ່ນວ່າດຽວນີ້ພວກຂ້ອຍທັງຫ້າຢູ່ສຸກສະບາຍດີ, ມີແຕ່ຕອນເຂົ້າປ່າທຳອິດນັ້ນສຸດແສນລຳບາກກາກກຳເພາະສາມອ້າຍນ້ອງພວກຂ້ອຍຍັງເປັນເດັກແດງຢູ່. ດຽວນີ້ພວກເຮົາໃຫຍ່ກ້າໜ້າບານແລະກຸ້ມຕົນເອງໄດ້ໝົດທຸກຢ່າງ."

ຝ່າຍທ້າວທັງຫົກເວົ້າຂຶ້ນວ່າ:

"ພວກເຮົານີ້ຢ້ານແຕ່ພະຍາພໍ່ບໍ່ເຊື່ອ. ເພື່ອຢັ້ງຢືນວ່າ ພວກນ້ອງຍັງຢູ່ໃນດົງໃນປ່າ ແລະ ພ້ອມທີ່ຈະກັບຕ່າວຄືນ ເມືອງ ຢາກໃຫ້ນ້ອງບອກໃຫ້ສັດທັງຫຼາຍຫຼັ່ງເຂົ້າໄປໃນເມືອງເປັງຈານເພື່ອເປັນສິ່ງສະແດງວ່າສິນໄຊຍັງມີຊີວິດຢູ່ແລະມີລິດເດດເກັ່ງກ້າສາມາດບັນຊາສັບພະສັດທັງຫຼາຍໃຫ້ເຮັດຕາມຈຸດປະສົງຂອງຕົນໄດ້ທຸກຢ່າງ."

ພວກທ້າວເວົ້າຫຼາຍສິ່ງຫຼາຍແນວແລ້ວກໍເອົາຄຳທີ່ພະຍາພໍ່ເອົາມານັ້ນມອບໃຫ້ສິນໄຊທັງໝົດ.

ແຜນການເຕັມໄປດ້ວຍເຈຕະນາບໍ່ດີຂອງທ້າວທັງຫົກດຳເນີນໄປໄດ້ຂັ້ນນຶ່ງແລ້ວ. ສິນໄຊບໍ່ຄາດຄິດວ່າພວກເຂົາຈະມີຈິດໃຈໂລບລ້ຽວ

ຈຶ່ງເຫັນດີຕາມທີ່ທ້າວທັງຫົກຂໍຮ້ອງແລະໄດ້ກຳນົດວັນທີ່ຈະບອກໃຫ້ສັດທັງຫຼາຍຫຼັ່ງໄຫຼເຂົ້າໄປຍັງເມືອງເປັງຈານ.

ເມື່ອເຫັນດີເຫັນພ້ອມນຳກັນແລ້ວທ້າວທັງຫົກກໍຟ້າວພາກັນຕ່າວຄືນເມືອງເປັງຈານໂດຍໄປທັງເວັນທັງຄືນ. ຂ້າມຫ້ວຍຂ້າມເຫວ, ຜ່ານປ່າຊ້າງດົງເສືອດັ້ນດຸ່ງໄປເພື່ອໃຫ້ຮອດໄວເທົ່າໃດຍິ່ງດີ ເພາະຈະໄດ້ອວດອ້າງພະຍາພໍ່ວ່າພວກຕົນໄດ້ສຳເລັດການຮຽນຮູ້ສາດຕະສິນຈິນມິລິດເດດເກັ່ງກ້າເປັນທີ່ເກງຂາມຂອງຄົນແລະສັດໃນທົ່ວແຜ່ນດິນ.

ຂະນະເດີນທາງໄປພວກທ້າວກໍລົມກັນວ່າ: "ພວກເຮົາຕ້ອງຕົວະພະຍາພໍ່ວ່າພວກເຮົາມີລິດເດດສາມາດສັ່ງໃຫ້ສັບພະສັດທັງຫຼາຍລວມທັງສັດທີ່ໂຫດຮ້າຍແລະສັດທີ່ມີພິດຮ້າຍແຮງເຮັດທຸກສິ່ງທຸກຢ່າງຕາມການບັນຊາຂອງພວກເຮົາ. ແລ້ວຄົນທັງຫຼາຍກໍຈະຢຳເກງນັບຖືພວກເຮົາພາກັນມານ້ອມກາຍຖະຫວາຍຊີວິດ..."

ລູກບໍ່ສັດຊື່

ພວກທ້າວທັງຫົກກັບຄືນມາຮອດປະຕູເມືອງໃນຍາມຄ່ຳຄືນ. ທະຫານຍາມຮັກສາປະຕູໄຕ້ໄຟເຍືອງທາງໃຫ້ ແລະພາກັນແຫນແຫ່ເປັນຂະບວນເຂົ້າໄປຍັງຜາສາດຂອງມະເຫສີທັງຫົກຊຶ່ງຄອງຄອຍລູກຊາຍດ້ວຍຄວາມເປັນຫ່ວງກັງວົນ ນັບແຕ່ວັນທີ່ພວກທ້າວຈາກໄປ. ບັນຍາກາດເບີກບານມ່ວນຊື່ນປາກົດໃຫ້ເຫັນອີກພາຍໃນຜາສາດຂອງຫົກມະເຫສີພາຍຫຼັງທີ່ງຽບເຫງົາໄປເປັນເວລາຫຼາຍເດືອນ.

ຮຸ່ງເຊົ້າມື້ໃໝ່ທ້າວທັງຫົກກໍພາກັນເຂົ້າໄປໄຫວ້ພະຍາພໍ່ຊຶ່ງຕື່ນເຕັ້ນດີໃຈເປັນພິເສດແລະຕັ້ງຄຳຖາມທັນທີທັນໃດໂລດ:

"ພວກລູກເຂົ້າປ່າພົງໄພໄປຫາຮຽນຄວາມຮູ້ສາດຕະສິນກໍຍັງໄດ້ດັ່ງລົມປະສົງບໍ່?"

ພວກທ້າວຍໍມືນົບແລ້ວເວົ້າອວດອ້າງວິຊາອາຄົມເພື່ອໃຫ້ພະຍາພໍ່ປະເອີບໃຈໃນຕົວຂອງພວກຕົນຊຶ່ງຄວາມຈິງແລ້ວເປັນການຕົວະລ່າຍຢ່າງບໍ່ກະດຽມປາກ.

ພວກທ້າວວ່າ: "ພວກລູກຮຽນຮູ້ສາດຕະສິນຄົບໝົດທຸກຢ່າງຈຶ່ງບໍ່ຢ້ານອັນສໍ່າເທວະດາອິນພົມ. ຕໍ່ໃຫ້ຫຼັ່ງກັບມາຈົບເຕັມແຜ່ນດິນຫຼືເຕັມແຜ່ນຟ້າ. ອັນເມືອງນ້ອຍໃຫຍ່ພາຍໃຕ້ລຸ່ມຟ້ານີ້ພວກລູກຊິປາບໃຫ້ຮາບຄາບແລ້ວໃຫ້ມານອບນ້ອມສິ່ງສ່ວຍເທົ່າໃດກໍໄດ້..."

ເມື່ອໄດ້ຟັງດັ່ງນັ້ນພະຍາກຸສະລາດກໍດີໃຈທີ່ເຫັນວ່າພວກລູກມີລິດເດດເກັ່ງກ້າສົມເປັນໜໍ່ກະສັດທີ່ຈະສືບທອດການຄອງລາຊະບັນລັງຕໍ່ໄປພາຍໜ້າ. ແລ້ວພະອົງກໍໃຫ້ພວກລູກສະແດງລິດເດດໃຫ້ເບິ່ງແຕ່ພວກທ້າວເວົ້າອ້ອມຄ້ອມວ່າ :

" ເທື່ອທໍາອິດນີ້ພວກລູກຊິສະແດງວິຊາອາຄົມດ້ວຍການເຕົ້າໂຮມສັດທຸກຊະນິດທັງສັດນ້ອຍສັດໃຫຍ່, ທັງສັດໂຫດຮ້າຍແລະມີພິດ. ດັ່ງນັ້ນໃນມື້ອື່ນນີ້ພວກລູກຊິຍິງສອນໄປໄລ່ຕ້ອນເອົາສັດທັງຫຼາຍໃຫ້ມາເຕົ້າໂຮມກັນຢູ່ທີ່ເມືອງເປັງຈານນີ້. ຂໍໃຫ້ພະຍາພໍ່ມີຄໍາສັ່ງໃຫ້ເສນາໄປກ່າວເຕືອນບ່າວໄພ່ລາສະດອນໃຫ້ກຽມຕົວກຽມໃຈໄວ້ເພື່ອບໍ່ໃຫ້ແຕກຕື່ນຢ້ານກົວແລະໃຫ້ຄອງຖ້າເບິ່ງສັດທັງຫຼາຍທີ່ຈະຫຼັ່ງມາຢ່າງບອກໄດ້ໃຊ້ຟັງ."

ພະຍາກຸສະລາດມີອາລົມສົດຊື່ນແຈ່ມໃສ, ຄວາມກັງວົນທີ່ເຄີຍມີມາປາກົດວ່າລົບຫາຍໄປຈົນບໍ່ມີຮ່ອງຮອຍ. ທ້າວທັງຫົກແນມເຫັນແສງສະຫວ່າງທີ່ຈະກ້າວໄປສູ່ຄວາມສໍາເລັດໃນການໃຊ້ອຸບາຍລາຍ

ຫຼູຮມ. ພວກທ້າວອັດອຳ ຄວາມຈິງອັນນີ່ງໄວ້ນັ້ນຄື ບໍ່ຍອມບອກພະຍາພໍ່ ກ່ຽວກັບເລື່ອງໄດ້ພົ້ສິນໄຊຢູ່ປ່ານັ້ນເລີຍ.

ໃນຕອນແລງວັນນັ້ນປະຊາຊົນລາສະດອນໃນເມືອງເປັງຈານໄດ້ ຮັບການບອກເລົ່າປ່າວເຕືອນວ່າ ໃນວັນຮຸ່ງຂຶ້ນລາຊະບຸດທັງຫົກຂອງ ພະຍາກຸສະລາດຈະສະແດງລິດເດດໂດຍເອີ້ນເອົາສັບພະສັດທັງຫຼາຍ ເຂົ້າເມືອງເປັງຈານ. ຂ່າວນີ້ຖືວ່າເປັນເລື່ອງສຳຄັນເປັນພິເສດເພາະເຮັດ ໃຫ້ຊາວເມືອງມີຄວາມເຫຼື້ອມໃສສັດທາໃນຕົວພວກທ້າວຜູ້ທີ່ຈະປົກ ຄອງບ່າວໄພ່ລາສະດອນໃນພາຍໜ້າ.

ໃນທີ່ສຸດກໍຮອດວັນເວລາຊຶ່ງທ້າວທັງຫົກຕົກລົງນັດໝາຍກັບ ໄວ້ກັບສິນໄຊອັນໝາຍເຖິງວັນຖັດມາທີ່ພວກທ້າວໄດ້ເຂົ້າພົບຂາບໄຫວ້ ພະຍາພໍ່ນັ້ນເອງ.

ສິນໄຊເອີ້ນບອກສັດທັງຫຼາຍໃຫ້ເຂົ້າໄປຍັງເມືອງເປັງຈານ ເພື່ອໃຫ້ພະຍາພໍ່ແລະຊາວເມືອງໄດ້ເບິ່ງໄດ້ເຫັນຢ່າງເຕັມຕາ. ພວກຄຸດ ພວກນາກນັບເປັນແສນເປັນລ້ານພາກັນເຫາະເຫີນໄປຢ່າງໄວວາຈົນ ທ້ອງຟ້າເມືອງເປັງຈານມືດມົວປານຄືນເດືອນດັບ. ທາງພາກພື້ນດິນ ພວກຊ້າງ ເສືອໂຄ່ງ ເສືອ ດາວ ແຮດ ກະທິງ ຕະຫຼອດທັງງູບາງຊະນິດ

ກໍຫຼັ່ງມາຈົນອັ່ງອໍ. ເມື່ອເປັນດັ່ງນີ້ປະຊາລາຊະດອນເລີຍພາກັນແຕກຕື່ນຢ້ານກົວ. ໃນຕົວເມືອງເກີດຄວາມສັບສົນອົນລະຫົນປານວ່າຟ້າຫຼົ່ນທັບລົງໃສ່ພະສຸທາ. ບາງຄົນແລ່ນໜີປະລູກປະເມຣ. ບາງຄົນກອດຄໍກັນໄວ້ອຸ່ມລຸ້ມເພາະບໍ່ຮູ້ອອມທາງໜີ. ມະເຫສີທັງຫົກກໍຢ້ານສັ່ນເຊັນຈົນໜ້າຫຼາຕາຕາຍ. ສ່ວນພະຍາກຸສະລາດກໍຕົກຂະມ່າບໍ່ຮູ້ວ່າຊິເຮັດສິໜ້າແບບໃດ. ພະອົງຟ້າວຣຽກເສນາມຸບຕີເພື່ອຫາທາງແກ້ໄຂສະຖານະການກ່ອນທີ່ຈະເກີດຄວາມຫາຍະນະ. ໃນທີ່ສຸດກໍມີຄຳສັ່ງໃຫ້ທ້າວທັງຫົກໃຊ້ລິດເດດບັນຊາໃຫ້ສັດທັງໝົດໜີໄປຈາກເມືອງ.

ປາກົດວ່າທ້າວທັງຫົກກໍຢ້ານຈົນຂວັນໜີຄືງເພາະຄາດບໍ່ເຖິງວ່າສັດຈະຫຼັ່ງມາຫຼາຍປານນີ້ທັງບໍ່ເຄີຍມີປະສົບການມາກ່ອນ. ພວກທ້າວແຂງໃຈທຳທ່າເປັນຜູ້ມີວິຊາອາຄົມແລ້ວຮ້ອງບອກສັດທັງຫຼາຍໃຫ້ໜີໄປ. ສ່ວນທາງໃນກໍຮູ້ສຶກວ່າທັບໃຈບໍ່ຮອດທ້ອງເພາະຢ້ານວ່າເຫດການຈະບໍ່ເປັນໄປຕາມທີ່ຕົກລົງກັນໄວ້ກັບສິນໄຊ. ນັ້ນຄືແມ່ນສິນໄຊເອງທີ່ເປັນຜູ້ສັ່ງໃຫ້ສັດຫຼັ່ງມາແລະຈະເອີ້ນໃຫ້ສັດກັບຄືນໄປ.

ໂຊກຍັງດີສຳລັບທ້າວທັງຫົກເພາະວ່າສັດທັງຫຼາຍພາກັນມະຫັບມະຫາຍໄປຈົນໝົດ. ແລ້ວສະຖານະການໃນຕົວເມືອງກໍຄືນສູ່ປົກກະຕິ. ພວກທ້າວໄດ້ຮັບການຍົກຍ້ອງສັນລະເສີນຈາກພະຍາພໍ່ແລະແມ່ມະເຫສີຕະຫຼອດທັງບ່າວໄພ່ລາສະດອນທຸກຖ້ວນໜ້າແລະໄດ້ຮັບການຍອມຮັບນັບຖືວ່າເປັນບຸລຸດຜູ້ລ້ຳເລີດ.ເປັນຜູ້ມີວິຊາອາຄົມເປັນຍອດຊົ່ວລົບທັງເມືອງໄຮ້ຮ້ອງສະດຸດີ.

ໃນໂອກາດອັນມີຄວາມໝາຍປະຫວັດສາດນີ້ພະຍາກຸສະລາດໄດ້ຈັດພິທີບາສີໃຫ້ລາຊະບຸດທັງຫົກຢູ່ໃນລາຊະວັງເພື່ອເປັນກຽດແລະເປັນສີລິມຸງຄຸນທ່າມກາງບັນຍາກາດທີ່ເຕັມໄປດ້ວຍຄວາມນັບຖື ແລະໄວ້

ເບື້ອເຊື່ອໃຈຈາກຜູ້ຄົນທົ່ວທັງເມືອງ. ພວກທ້າວທັງຫົກນັ່ງຊອນລອນຍໍ ມືນົບຕໍ່ໜ້າພານຄໍາໂດຍມີພາມຜູ້ເປັນໝໍພອນຈົ່ມຄໍາສູດຂວັນອວຍພອນໃຫ້ພວກທ້າວແກ່ນກ້າດັ່ງຕາເວັນເຂັ້ມແຂງດັ່ງຫີນຜາຜາບແພ້ໝູ່ມານທັງປວງ. ສ່ວນພະຍາກຸສະລາດບອກພວກລູກວ່າ:

"ພໍ່ນີ້ກາງຕໍ່ພວກລູກ. ເຫັນລິດເດດແລ້ວກໍວາງໃຈໄດ້ພໍ່ຈຶ່ງຂໍໃຫ້ພວກລູກໄປກໍາຈັດຍັກກຸມພັນທີ່ມາບຽດບຽນອົ່ມເຫັງນໍ້າໃຈ.ຖ້າບໍ່ດັ່ງນັ້ນກໍບໍ່ມີມື້ເຊົາແຄ້ນ. ຍັກໂຕນີ້ມາລັກເອົາອາສຸມຸນທາໄປຫຼາຍປີແລ້ວ.ຕ້ອງປາບມັນໃຫ້ດັບດິ້ນສິ້ນຊື່ໄປເລີຍ. ຢ່າຍອມມັນເນີ!"

ພວກທ້າວທັງຫົກຮັບປາກກັບພະຍາພໍ່ແລ້ວກໍກຽມຕົວອອກເດີນທາງຄາວໄກອີກເທື່ອນຶ່ງ.

ຄືນໄປຫາສິນໄຊ

ດ້ວຍພາລະກິດທີ່ແສນຫຍຸ້ງຍາກກັບດານ. ເສັ້ນທາງກໍແຮ່ງຍາວໄກພວກທ້າວທັງຫົກເດີນທາງດັ້ນປ່າ ດ້ວຍຄວາມຮູ້ສຶກມືດມົນຈົນປັນຍາ. ພວກທ້າວບໍ່ມີທາງເລືອກອື່ນໃດຈຶ່ງເປັດໜ້າໄປໃສ່ສະຖານທີ່ຢູ່ຂອງສິນໄຊ. ຂະນະເດີນທາງກໍປຶກສາຫາຮືບໍາກັນວ່າຈະຕ້ອງໄປບອກສິນໄຊໃຫ້ໄປປາບຍັກໂດຍຕົວະວ່ານີ້ເປັນຄໍາສັ່ງຂອງພະຍາພໍ່. ຖ້າບໍ່ເຮັດວິທີນີ້ກໍບໍ່ມີວິທີອື່ນນອກຈາກພາກັນໄປພົບກັບຄວາມຕາຍຢ່າງຫຼີກບໍ່ພົ້ນ.

ເມື່ອຮອດບ່ອນຢູ່ຂອງສິນໄຊທ້າວທັງຫົກເວົ້າວ່າ: "ພວກອ້າຍເລົ່າສູ່ພະຍາພໍ່ຟັງໝົດແລ້ວກ່ຽວກັບເລື່ອງທີ່ໄດ້ພົບພໍ້ນ້ອງແລະເຫັນນ້ອງຍັງມີຊີວິດຢູ່. ເພິ່ນເສຽໃຈແຮງຕໍ່ເຫດການທີ່ຜ່ານມາແລະຝາກຄວາມມານໍາວ່າຂໍໃຫ້ນ້ອງເຫັນໃຈເພິ່ນທີ່ເພິ່ນໄດ້ຫຼົງຜິດໄປແລ້ວ. ເພິ່ນ

ເອງຕື່ນເຕັ້ນດີໃຈຫຼາຍທີ່ນ້ອງມີລິດເດດເກັ່ງກ້າເພິ່ນຈຶ່ງສັ່ງມາບອກໃຫ້ນ້ອງໄປປາບຍັກທີ່ໄດ້ມາຍາດເອົາອາໄປ. ເມື່ອສຳເລັດວຽກການອັນໃຫຍ່ຫຼວງນີ້ແລ້ວພະຍາພໍ່ກໍຈະໝົດຄວາມທຸກຮ້ອນໝົດຄວາມແຄ້ນເຄືອງອຸກອັ່ງໃນໃຈ. ບັດນັ້ນເພິ່ນຈະມອບເມືອງເປັງຈານໃຫ້ນ້ອງຂຶ້ນນັ່ງຄອງສືບຕໍ່ໄປ." ສິນໄຊກ່າວຕອບວ່າ:

"ຂ້ອຍເອງສຳນຶກສະເໝີໃນບຸນຄຸນຂອງພະຍາພໍ່ທີ່ໃຫ້ກຳເນີດແກ່ຂ້ອຍມາ. ຂ້ອຍບໍ່ອາດຂືນຄຳສັ່ງຂອງເພິ່ນດອກ. ຊາໃຈຕົນເອງນີ້ພະຍາພໍ່ສັ່ງແນວໃດຈະຕ້ອງເຮັດໃຫ້ໄດ້,ບໍ່ມີຖອຍ. ແຕ່ແນວໃດກໍຕາມຂ້ອຍຕ້ອງຖາມແມ່ກັບປ້າສາກ່ອນເພາະທັງສອງເພິ່ນເປັນຜູ້ເບິ່ງແຍງລ້ຽງດູນັບແຕ່ເປັນເດັກແດງໆພຸ້ນມາດ້ວຍຄວາມລຳບາກຢ່າງແສນສາຫັດ."

ແລ້ວສິນໄຊກໍເຂົ້າໄປກົ້ມຂາບລົງຕໍ່ໜ້າແມ່ແລະປ້າຜູ້ຊຶ່ງໄດ້ເຫັນໄດ້ຍິນພວກທ້າວທັງຫົກແລ້ວກໍຮູ້ສຶກຂົມຂື່ນຕາເປັນທີ່ສຸດ.

"ເຜືອ" ຜູ້ເປັນແມ່ຄິດເຫັນຕອນເພິ່ນໄລ່ໜີຈາກເມືອງແລ້ວກໍຮູ້ສຶກເຈັບປວດໃນເອິກປານເອົາສ້ຽນຕັ້ງໝື່ນຕັ້ງແສນອັນມາສຽບແທງ. ມັນລືມບໍ່ໄດ້ງ່າຍໆແລະຈະບໍ່ມີມື້ລືມໄດ້ຜອງໃດທີ່ຍັງມີຊີວິດຢູ່. ເຊື້ອແນວໝົ່ກະສັດຢູ່ໃນວັງກໍມີຫຼາຍຄົນ. ເປັນຫຍັງຈຶ່ງບໍ່ມີໃຜອັບອາສາໄປ

ປາບແທນເພິ່ນ, ຂາດຄົນກ້າຫານປານນັ້ນພຸ້ນຫວະ?" ແມ່ຂອງສິນໄຊ ເວົ້າສຽດໃສ່ທ້າວທັງທົກ.

ຝ່າຍທ້າວທັງທົກຍາດກັນເວົ້າວ່າ: "ວຽກການອັນນີ້ມັນໃຫຍ່ຫຼວງໜັກໜ່ວງທີ່ສຸດ, ຄົນທັງໝົດໃນແຜ່ນດິນນີ້ບໍ່ມີໃຜອັນອາສາກ້າອອກໄປຕໍ່ສູ້ເລີຍນອກຈາກສິນໄຊເທົ່ານັ້ນ. ດັ່ງນີ້ພະຍາພໍ່ຈຶ່ງສັ່ງຄວາມມາບອກສິນໄຊໃຫ້ໄປແກ້ແຄ້ນແທນເພິ່ນ"

ທ້າວນຶ່ງເວົ້າດອດຂຶ້ນວ່າ: "ພະຍາພໍ່ສັ່ງຄວາມມາຫາມະເຫສີທັງສອງວ່າຂໍຂອດຄວາມຮັກຄວາມແພງຄືນ, ຂໍໃຫ້ລືມເລື່ອງບໍ່ດີບໍ່ງາມທີ່ເກີດຂຶ້ນໃນອະດີດຍ້ອນຄວາມຫຼົງຜິດ, ຂໍໃຫ້ຄິດວ່າສັດສີ່ຕີນຍັງຮູ້ພະລາດນັກປາດຍັງຮູ້ຫຼົງຄວາມໄດ້. ຄາວນັ້ນພວກເສນາມຸນຕີບໍ່ຄິດຮອບຄອບຈຶ່ງດຳເນີນກິດຈະການຜິດພາດໄປ."

ສ່ວນສິນໄຊໄດ້ຍິນຄຳບອກເລົ່າຂອງທ້າວທັງທົກກໍຮູ້ສຶກປວດຈ້າວໆທັງທ້າວທັນຢາກສະແດງຄວາມເກັ່ງກ້າຈຶ່ງອ້ອນວອນແມ່ແລະປ້າຂໍຈົ່ງໄດ້ອະນຸຍາດໃຫ້ຕົນໄປແກ້ແຄ້ນແທນພໍ່ ແລະຂໍໃຫ້ລືມຄວາມຜິດພາດຂອງພໍ່ໃນຄັ້ງອະດີດນັ້ນສາ. ຝ່າຍແມ່ແລະປ້າຂືນໃຈທີ່ສຸດທີ່ຈະປ່ອຍຕາມໃຈສິນໄຊເພາະເຫັນວ່າທ້າວຍັງນ້ອຍຢູ່. ອີກປະການນຶ່ງກໍຄືແມ່ກັບປ້າຈະຕ້ອງຢູ່ຢ່າງໂດດດ່ຽວຕາມລຳພັງພຽງສອງຄົນທັງເປັນຄັ້ງທຳອິດທີ່ລູກກັບແມ່ຈະຕ້ອງພັດພາກຈາກກັນໄປ.

ສິນໄຊເວົ້າອະທິບາຍໃຫ້ແມ່ຟັງວ່າເຖິງແມ່ນວ່າຕົນຈະຍັງນ້ອຍຢູ່ກໍຕາມແຕ່ຈິດໃຈກໍບໍ່ຫວັ່ນເກງ, ບໍ່ຢ້ານກົວສັດຕູໂຕໃດໂດຍສະເພາະເມື່ອມີທະນູກັບສອນພ້ອມທັງດາບຕິດຕົວແລ້ວສິນໄຊກໍເປັນເອກຄືບໍ່ມີຜູ້ໃດຈະເອົາຊະນະໄດ້.

ເມື່ອເວົ້າແນວໃດສິນໄຊກໍຍັງຢືນຢັນທີ່ຈະໄປປາບຍັກຢູ່ຄືເກົ່າ. ແມ່ກັບ

ປ້າຈຶ່ງປ່ອຍໃຫ້ໄປພ້ອມກັບສີໂຫແລະສັງທອງແຕ່ກໍສັ່ງແລ້ວສັ່ງອີກໃຫ້ສິນໄຊຟ້າວຕ່າວຄືນມາ. ໃຫ້ມີສະຕິລະວັງຕົວ. ຢ່າປະໝາດສັດຕູໂດຍສະເພາະຍັກກຸມພັນເພາະມັນມີລິດເດດຫຼາຍ.

ສິນໄຊຮັບປາກທີ່ຈະປະຕິບັດຕາມແມ່ສັ່ງແລ້ວກໍບອກສີໂຫກັບສັງທອງໃຫ້ກຽມຕົວກຽມໃຈເພື່ອການຜະຈົນໄພຄັ້ງໃຫຍ່ໃນຊີວິດນັ້ນຄືການໄປແກ້ແຄ້ນແທນພະຍາພໍ່.

ແລ້ວສິນໄຊກໍຖືທຽນເຂົ້າໄປຂາບລາແມ່ກັບປ້າ. ຕໍ່ມາກໍຮ້ອງສັ່ງລາພະຍາຄຸດ. ພະຍານາກໃຫ້ລະແວດລະວັງຮັກສາບໍລິເວນສະຖານທີ່ໃຫ້ມີຄວາມສະຫງົບສັນຕິ. ແລ້ວທ້າວກໍອອກເດີນທາງໂດຍເອົາສອນກັບດາບຕິດຕົວໄປພ້ອມ. ສັງທອງລ່ວງໜ້າໄປກ່ອນໂດຍເບີກທາງໃຫ້ເປັນແລວໄປເພື່ອໃຫ້ສິນໄຊກັບສີໂຫເດີນໄຕ່ສະດວກສະບາຍຕິດຕາມດ້ວຍທ້າວທັງທົກ. ມຸ່ງໜ້າສູ່ແດນຍັກທີ່ຢູ່ຄົບລະຟາກຟ້າ.

ການຜະຈົນໄພສູ້ກັບງູຊວງ

ການເດີນທາງຜ່ານໄປຫຼາຍວັນຄະນະຂອງສິນໄຊໄປພົ້ງູຊວງນອນຂົດຕັນທາງຢູ່ຄັ້ງນັ້ງສູງຈົນພົ້ນປາຍໄມ້. ງູໃຫຍ່ໄດ້ກິ່ນຄົນກໍຍໍຄໍຂຶ້ນທັງພົ່ນພິດອອກເປັນຄວັນຮ້ອນແຮງເພື່ອຂົ່ມຂູ່ຜູ້ມາລ່ວງລ້ຳແດນ. ສິນໄຊບໍ່ສະທົກສະທ້ານແຕ່ຢ່າງໃດ. ສ່ວນທ້າວທັງທົກຢ້ານຈົນໜ້າຫຼາຕາຕາຍແລະຮ້ອງຂໍໃຫ້ສິນໄຊພາໜີໄປໄວໆ.

ສິນໄຊເວົ້າວ່າ: "ບໍ່ຕ້ອງຢ້ານ, ມັນເປັນພຽງສັດເລືອຄານຊັ້ນຕ່ຳ. ພວກເຮົາມາເຈີກັບມັນຈັ່ງຊີ້ກໍເປັນການດີເພາະຈະໄດ້ລອງແຮງເບິ່ງ. ຖືວ່າເປັນການທົດສອບຂັ້ນຕົ້ນເພື່ອແຜ້ວທາງໄປສູ່ບັ້ນຮົບສຳຄັນຢູ່ທາງ

ໜ້າ"

ເວົ້າແລ້ວສິນໄຊກໍລູ່ເຂົ້າໄປໃສ່ງູຊວງໂລດ. ສ່ວນທ້າວທັງຫົກຟ້າວປົບໄປລີ້ຢູ່ໄກໆ. ສີໂຫຢູ່ຮຽງຂ້າງສິນໄຊບໍ່ຍອມຫ່າງເພື່ອຊ່ອຍເຫຼືອຊຶ່ງກັນແລະກັນ. ງູໃຫຍ່ເຫັນເດັກນ້ອຍເຂົ້າມາຫາກໍຄິດວ່າອາຫານແລ່ນມາເຂົ້າປາກ. ມັນມາຍໂຕອອກເອົາຫາງຟາດພື້ນເພື່ອອິ່ມຂູ່ສິນໄຊຈົນງ່າໄມ້ຫັກມຸ່ນອັບຢັບ. ແຕ່ສິນໄຊບໍ່ສະແດງອາການຫວັ່ນໄຫວເລີຍ. ເພື່ອໃຫ້ງູຢຸດເຊົາອາການຈອງຫອງສິນໄຊຈຶ່ງຍິງສອນເຂົ້າໃສ່ເກີດແສງມາບແມບປານຟ້າຜ່າ. ງູຊວງຖືກສອນທີ່ຫົວຈົນສະເດີດຫງາຍເງີບ.ມັນດິ້ນຫາງຈົນຕົ້ນໄມ້ໃຫຍ່ນ້ອຍລົ້ມລ່າວແປນເອີດເຕີດ. ມັນຕັ້ງໂຕໃໝ່ຍ່າງວ່ອງໄວອ້າປາກກວ້າງຕາໂລ້ແດງປານຕາເວັນ ແລ້ວໂດດສວາບສຸດແຮງຫວັງຄາບມະນຸດຕົວນ້ອຍໆແຕ່ສິນໄຊຍົກດາບຂຶ້ນປ້ອງກັນ. ອາຍ

ພິດອັນຮ້ອນແຮງຂອງງູ ປະທະກັບດາບສິນໄຊຈຶ່ງເກີດໄຟລຸກວາບປະກາຍໄຟເຮັດໃຫ້ສິນໄຊມີອາການມົວຕາໄປຂະນະນຶ່ງ. ເມື່ອເຫັນດັ່ງນັ້ນສີໂຫກໍ່ຫູບເຂົ້າໃຊ້ງາແທງທັງວັດແຮງໆຈົນງູກະເດັນຂາດເປັນທ່ອນດັ້ນດ່າວໆທ່ອນຫົວຍັງແຜງລິດໂດຍພົ່ນອາຍພິດຮ້ອນປານໄຟໄພ້ລາມໄປຫຼາຍບ່ອນ.ສິນໄຊພະຍາຍາມຫຼົບຫຼີກແລະພໍໄດ້ຈັງຫວະກໍ່ຍິງສອນໄປໃສ່ຊ້ຳອີກ. ບັດນີ້ຫົວງູຂາດຟັ້ງສະເດັນຈົນສິ້ນລິດ.ລຳຕົວຍັງເໜັງເນີບນາບຄ່ອຍໆແຕ່ບໍ່ມີພິດໄພໃດໆດັ່ງດຽວກັບຫາງຈີ້ຈ້ຽມຂາດ.

ເມື່ອຜາບງູລົງໄດ້ແລ້ວສິນໄຊກັບສີໂຫກໍ່ກວດເບິ່ງສະໜາມຕໍ່ສູ້ດ້ວຍຄວາມຮູ້ສຶກທະນົງອົງອາດເພາະຜ່ານບັ້ນຣົບມາຢ່າງມີໄຊ. ງູໂຕມະຫຶມານອນຕາຍຂວາງປ່າ. ເລືອດແດງແປດເປື້ອນໄປທົ່ວພື້ນດິນ.ແລ້ວບຸລຸດຜູ້ເກັ່ງກ້າກໍ່ເອີ້ນຫາທ້າວທັງຫົກໃຫ້ມາເບິ່ງກັບຕາໂຕເອງ. ພວກທ້າວໂປໂລຫົວອອກມາຈາກບ່ອນລີ້ດ້ວຍອາການຢຸດໆຢ່ອນໆເວົ້າຫຍັງກໍ່ບໍ່ອອກ.

ເມື່ອພັກຜ່ອນເອົາແຮງແລ້ວສິນໄຊກໍ່ພາທ້າວທັງຫົກເດີນທາງຕໍ່ໄປ. ສີໂຫຕິດຕາມອ້າງນ້ອງບໍ່ຍອມຫ່າງບາງຄັ້ງສີໂຫກໍ່ໃຫ້ສິນໄຊຂຶ້ນຂີ່ຫຼັງໄປໂດຍພາກັບຍ່າງນຳຮອຍສັງທອງທີ່ລ່ວງໜ້າໄປກ່ອນແລ້ວ. ສັງທອງໄປຮອດແມ່ນ້ຳໃຫຍ່ກໍ່ຄອງຖ້າເພາະເຫັນວ່າກະແສນ້ຳໄຫຼແຮງທັງເປັນຟອງຍວກຍູ້. ຄະນະຂອງສິນໄຊໄປຮອດບ່ອນສັງທອງຢູ່ກໍ່ພໍດີຄ່ຳທັງໝົດຈຶ່ງພາກັນພັກແຮມຄືນຢູ່ແຄມແມ່ນ້ຳແຫ່ງນີ້.

ສັງທອງ ບອກໝົດທຸກຄົນວ່າ ທາງໄປສູ່ບ່ອນຢູ່ຂອງຍັກກຸມພັນບໍ່ອາດຫຼີກເວັ້ນແມ່ນ້ຳແຫ່ງນີ້ໄປໄດ້. ຈຳເປັນພວກເຮົາຕ້ອງຂ້າມໄປ. ພວກທ້າວທັງຫົກຄິດທໍ້ຖອຍເພາະເຫັນແມ່ນ້ຳກວ້າງສຸດຊົ່ວຕາຈຶ່ງຂໍຮ້ອງໃຫ້ສິນໄຊພາກັບຄືນ. ພວກທ້າວເວົ້າວ່າ: "ພວກອ້າຍບໍ່ມີລິດເດດເກັ່ງກ້າ

ພໍທີ່ຈະຂ້າມແມ່ນ້ຳໄປໄດ້ຈຶ່ງຂໍໃຫ້ນ້ອງພາກັບຄືນໄປຫາພະຍາພໍ່.ພາກັບຄືນໄປແທ້ໆ."

ສິນໄຊໄດ້ຍິນຄຳອ້ອນວອນດັ່ງນັ້ນກໍຮູ້ເຖິງທາດແທ້ຂອງທ້າວທັງຫົກ. ພວກເຂົາບໍ່ມີມານະອົດທົນວົ້ງວ່ຽງຕໍ່ໜ້າສະພາວະການຫຍຸ້ງຍາກບໍ່ສົມກັບເປັນໜໍ່ກະສັດແຫ່ງເມືອງເປັງຈານ.

ສິນໄຊເວົ້າໃສ່ວ່າ: "ພວກເຮົາເປັນລູກຜູ້ຊາຍ, ເປັນໜໍ່ກະສັດຜູ້ສູງສັກ. ວຽກການບໍ່ທັນແລ້ວຊິວາງມືເປັນບໍ?ຖ້າຫາກໃຈບໍ່ສູ້ແທ້ໆກໍໃຫ້ຄືນໄປເອງແລ້ວສາລະພາບຕໍ່ພະຍາພໍ່ຕາມຄວາມຈິງ."

ພວກທ້າວທັງຫົກອ້ອນວອນຕໍ່ຂໍໃຫ້ສິນໄຊໄປສົ່ງພວກຕົນ. ຖ້າບໍ່ດັ່ງນັ້ນກໍມີແຕ່ຊິພາກັນໄປຕາຍລ້າໆເທົ່ານັ້ນ. ສິນໄຊບໍ່ຍອມໄປສົ່ງແຕ່ບອກທ້າວທັງຫົກໃຫ້ຄອງຖ້າຢູ່ແຄມນ້ຳແຫ່ງນີ້. ເຖິງປານນັ້ນກໍຕາມພວກທ້າວກໍຍັງຢ້ານຕາຍຢູ່ຄືຢ້ານສັດປ່າຢ້ານຜີໂພງ. ຜີສະມ່ອຍ[12] ມາທຳຮ້າຍ. ເມື່ອເປັນດັ່ງນັ້ນສິນໄຊເລີຍຕັດສິນໃຈໃຫ້ສີໂຫເຝົ້າອ້າຍທັງຫົກຢູ່ແຫ່ງນີ້ຈົນກວ່າຕົນເອງກັບສັງທອງຈະກັບຕ່າວຄືນມາ.

ຮຸ່ງເຊົ້າມື້ໃໝ່ສິນໄຊກັບສັງທອງກໍເດີນທາງຕໍ່ເພື່ອໄປໃຫ້ເຖິງຈຸດໝາຍປາຍທາງ. ສັງທອງເນລະມິດຕົວເອງເປັນຄືເຮືອສະເພົາພາສິນໄຊຂ້າມໄປລຸດໆຄາວດຽວກໍຮອດຝັ່ງກົງກັນຂ້າມ. ແລ້ວສິນໄຊກໍບອກສັງທອງບຸປ່າຜ່າດົງຂ້າມພູຜາຫ້ວຍຮ່ອງເປັນແລວຊື່ໆໄປຈົນສຸດສາຍຕາ. ສິນໄຊເອົາດາບຂັດແອວສ່ວນມືຖືທະນູແລ້ວຍ່າງນຳຮອຍສັງທອງ ໄປຄົນດຽວທ່າມກາງພູຜາສູງຊັນທີ່ທັບກັນເປັນລັ່ນຈົນສຸດຂອບຟ້າ.

ຣົບກັບຍັກໂຕທຳອິດ

ເມື່ອຂ້າມຫວິດຜາຊັນແຫ່ງໜຶ່ງສິນໄຊເລີຍໄປພໍ້ຍັກຊຶ່ງໂມໂຫແຮງທີ່ເຂດແດນຖືກຄົນເຂົ້າມາລ່ວງລໍ້າ. ສິນໄຊເຮັດໃຈດີໆໄວ້ແລະຖາມຍັກວ່າ: "ເຈົ້າເປັນເຊື້ອຊາດໃດ, ຊື່ວ່າຈັ່ງໃດນໍ?"

ຍັກຕອບວ່າ: "ກູຄືວະລຸນນະຍັກ ຜູ້ເກັ່ງກ້າຊ່ຳລືໄປທົ່ວປ່າດົງວົງກົດ. ມະນຸດໜ້າໃດຕົກມາໃນເຂດນີ້ແມ່ນຕາຍທັງນັ້ນ! ບັກນ້ອຍມຶງແມ່ນໃຜ? ມາແຕ່ໃສຈຶ່ງມາຮອດແຫ່ງນີ້? ກູຈະບໍ່ປ່ອຍໃຫ້ມຶງຫຼຸດມືໄປເດັດຂາດ!"

ສິນໄຊເວົ້າກັບຍັກຢ່າງສຸພາບວ່າ: "ເອີ...ຄວາມຕາຍນີ້ແຂວນຄໍທຸກບາດຍ່າງ ມັນເລື່ອງທຳມະດາ. ຂ້ອຍຊື່ວ່າ ສິນໄຊຜູ້ບໍ່ຄິດຢ້ານຕາຍ ຈຶ່ງກ້າຂ້າມພູຜາປ່າດົງ ມາຍຽບເຖິງຖິ່ນນີ້ຄົນດຽວ."

ຍັກໄດ້ຍິນຄຳເວົ້າອັນທ້າທາຍຂອງມະນຸດຕົວນ້ອຍໆຈຶ່ງຄຽດແຮງຈົນຮ້ອນກົກຫູວື່ໆ. ມັນຈັບຄ້ອນຫູບໄປໃສ່ແຕ່ສິນໄຊຍົກດາບຂຶ້ນຮັບຈົນອອກແສງມາບໆ. ທ້າວຮ້ອງທັ່ງໃສ່ມັນວ່າ: "ບັກຍັກຊາດຊົ່ວ! ກູບໍ່ໄດ້ຮາວີຜູ້ໃດ, ເປັນຫຍັງມຶງມາເຮັດດັ່ງນີ້ໃສ່ກູ? ເຊົາເດ! ຖ້າບໍ່ດັ່ງນັ້ນມັບເປັນຜີຕາຍໂຫງຄັກໆ!"

ແຕ່ຍັກກໍບໍ່ຍອມເສຍປຽບ, ມັນໃຈຮ້າຍສຸດຂີດທີ່ມະນຸດຕົວນ້ອຍໆເວົ້າດູລ່າຜ່າເປຍຈຶ່ງຄວ້າເອົາກ້ອນຫີນແລ່ນໃສ່ກະວ່າຊິທັບຫົວສິນໄຊ, ແຕ່ສິນໄຊກໍຫຼົບຫຼີກໄດ້ທັນຢ່າງວ່ອງໄວຈົນຍັກເຊຖະຫຼາໄປ, ພໍໄດ້ຈັງຫວະສິນໄຊກໍຍິງລູກສອນໃສ່ຍັກບັດຕາຍ, ມັນດິ້ນບິດໂຕໄປມາດ້ວຍຄວາມເຈັບປວດທັງພົ່ນໄຟອອກຈາກປາກຫວັງໃຫ້ລວບລົບຄູ່ຕໍ່ສູ້ແຕ່ສິນໄຊຢູ່ໃນທ່າເໜືອກວ່າ ຈຶ່ງຖອດດາບຟັນຄໍຍັກຂາດກະເດັນໄປ. ອາການໂມໂຫຮ້າຍຂອງວະລຸນນະຍັກດັບມອດໄປພ້ອມໆກັບຮ່າງຄີງອັນໃຫຍ່ໂຕທີ່ນອນຂວາງປ່າຢູ່ບໍ່ເໜັງບໍ່ຕີງສິ່ງກິ່ນຄາວກຸ້ມໄປທົ່ວບໍລິເວນ.



04/06/2026, 03:32 ປຶ້ມເລື່ອງ ສິນໄຊ

ຜາບແພ້ຊ້າງ

ຜ່ານການສູ້ຣົບຕົບຕີກັບຍັກລາຍທຳອິດແລ້ວ ສິນໄຊກໍຣີບຮ້ອນເດີນທາງຕໍ່ໄປ ຈົນຮອດແມ່ນ້ຳສາຍໜຶ່ງທີ່ກວ້າງສອງໂຍດ. ສັງທອງລອງຖ້າຢູ່ແຄມນ້ຳແຫ່ງນີ້ແລ້ວ. ສິນໄຊຂຶ້ນຂີ່ສັງທອງແລະພາກັນຂ້າມນ້ຳໄປຢ່າງບໍ່ມີອຸປະສັກໃດໆ. ຂຶ້ນເຖິງຝັ່ງແລ້ວສັງທອງກໍລ່ວງໜ້າໄປກ່ອນຕາມເຄີຍ. ສິນໄຊເຂົ້າສູ່ດົງຫຼວງໄປໄກເຕີບເລີຍໄປເຫັນຮອຍຊ້າງຂະໜາດໃຫຍ່ກວ້າງເກືອບສາມວາ. ທ້າວນຳຮອຍຊ້າງໄປບໍ່ໄກປານໃດກໍຈວບໝູ່ຊ້າງນັບເປັນໝື່ນເປັນແສນໂຕ. ພວກຊ້າງແຕກຕື່ນແລະພາ

https://online.fliphtml5.com/iqwiz/utcv/ 80/152

04/06/2026, 03:32

ກັນແລ່ນໄປອ້ອມຊ້າງເຜືອກຊື່ວ່າ ສັດທັນ ຊຶ່ງເປັນພະຍາຊ້າງຄຸມອານາເຂດອັນກວ້າງໄກ. ຊ້າງເຜືອກກາງຫູອອກພັ້ງວັ້ງ ດ້ວຍຄວາມໂມໂຫ ທັງເວົ້າສຽງແຂງເປັນການຂົ່ມຂູ່ວ່າຈະຈັບທ້າວນ້ອຍໂມ່ມເຂົ້າປາກກິນຕາງໜ້ຽງຄໍາດຽວເລີຍ. ມັນແກວ່ງງວງໄປມາເງີງງາຂຶ້ນລົງກຽມຕໍ່ສູ້ກັບຜູ້ທີ່ມາລ່ວງລໍ້າເຂດແດນ, ຊ້າງບໍລິວານມີໜ້າທີ່ປົກປ້ອງພະຍາຊ້າງກໍພາກັນຕັ້ງຕົວແລ້ວຫຼັ່ງມາເປັນຂະບວນຈົນມືດທຶບໄປໝົດສຽງດັງສະນັ່ນຟ້າສະເທືອນດິນ. ເມື່ອຊ້າງມາຮອດໃກ້ສິນໄຊຊຶ່ງຢືນຢູ່ຢ່າງບໍ່ຫວັ່ນໄຫວກໍເຕາະສາຍທະນູເກີດສຽງດັງປານຟ້າຜ່າ, ພວກຊ້າງຈໍານວນນັບບໍ່ໄຂ່ວພາກັນຕື່ນຕົກໃຈແລ້ວບຽດກັນໜີຈົນລົ້ມຊະລົ້ມຊາຍ. ພະຍາຊ້າງເຫັນອາການແຕກສະລຸຜຸພ່າຍ ປານແຜ່ນດິນປິ້ນຂອງບໍລິວານກໍເລີຍຍໍອ່ອນຍໍຍອມຕໍ່ສິນໄຊເພາະເຫັນວ່າທ້າວບໍ່ແມ່ນມະນຸດທໍາມະດາແຕ່ຫາກແມ່ນຜູ້ວິເສດທີ່ມີລິດເດດເຫຼືອປະມານ. ຊ້າງເຜືອກຂໍອະໄພຍະໂທດນໍາສິນໄຊທີ່ໄດ້ສະແດງອາການໂມໂຫໂຫໂສຢ່າງບັງອາດ. ຝ່າຍສິນໄຊກ່າວວ່າຕົນບໍ່ໄດ້ຄຶດອາຄາດບາດໝາງຫຼືຜູກເວນແຕ່ຢ່າງໃດມີແຕ່ຄວາມປະສົງຢາກໄປນໍາເອົາອາຢູ່ເມືອງຍັກເທົ່ານັ້ນ. ທ້າວຖາມວ່າມີຜູ້ໃດຮູ້ເຫັນຮ່ອງຮອຍການທີ່ຍັກກຸມພັນໄປລັກເອົານາງສຸມຸນທາໜີໄປຫຼືບໍ່? ພະຍາຊ້າງເລົ່າວ່າໄດ້ເຫັນຍັກກຸມພັນອູ້ມເອົານາງຜ່ານກາຍໄປເມື່ອແປດປີມາແລ້ວ. ຍັກໂຕນີ້ມີລິດເດດຫຼາຍແລະກ່ອນຈະຮອດໂຕມັນກໍຕ້ອງຜ່ານດ່ານກັບດານຊຶ່ງມີຍັກສີ່ໂຕຂວາງໜ້າຢູ່. ຜູ້ໃດກໍຕາມທີ່ຕົກເຂົ້າໄປໃນດ່ານນີ້ຈະບໍ່ລອດຊີວິດໄປໄດ້ເລີຍ. ດັ່ງນັ້ນຕ້ອງລະວັງຕົວທີ່ສຸດ

ສິນໄຊກ່າວຂອບໃຈໃນຄວາມຫວັງດີແລ້ວກໍເດີນທາງຕໍ່ໂດຍມີຂະບວນຊ້າງແຫ່ແຫນໄປສົ່ງຈົນຫວິດດົງຊ້າງ.

https://online.fliphtml5.com/iqwiz/utcv/

ບຸກດ່ານຍັກ

ສິນໄຊເລາະໄປຄົນດຽວ ລຽບຕີນພູທີ່ມີນ້ຳຕົກຕາດສຽງດັງອຶງຄະນຶງ. ຈາກບ່ອນນີ້ກໍຂຶ້ນພູເບັດໜ້າໄປສູ່ພູເງິນທີ່ຢູ່ສຸດຂອບຟ້າ. ທ້າວພັກແຮມຄືນໜຶ່ງ ຈຶ່ງມາຮອດເຂດອັນເປັນດ່ານຍັກສີ່ໂຕ. ຂະນະນັ້ນ ຍັກໂຕຊື່ວ່າຈິດຕະຍັກ ພວມກວດກາຮັກສາເຂດແດນຢູ່ເລີຍໄປພົ້ສິນໄຊທີ່ເຊົາເມື່ອຍຢູ່ພະລານຫີນ. ມັນກ່າວຖ້ອຍຄຳຮຸນແຮງ ໃສ່ທ້າວຜູ້ລ່ວງລ້ຳເຂດແດນວ່າ: "ມຶງມາຜິດທາງແລ້ວ! ສອດຫຼອດມາຈັ່ງຊີ້ແມ່ນເອົາຊີວິດມາມອບໃຫ້ກູ ຣະຣະຣາ!"

ສິນໄຊເວົ້າກັບມັນວ່າ: "ກູມາໜີ້ບໍ່ໄດ້ຢຽບຫົວມຶງຕວ່າ! ຍັກພວກ

ສູບຽດບຽນກິນສັດອື່ນໆມານັບບໍ່ຖ້ວນແລ້ວ ຍັງບໍ່ພໍເທື່ອຫວະ? ສຳລັບກູ ເລື່ອງຕາຍມັນເລື່ອງທຳມະດາເວີ້ຍ."

ຈິດຕະຍັກໄດ້ຍິນຄຳເວົ້າອັນກ້າແຂງຂອງທ້າວນ້ອຍ ກໍໂມໂຫຂຶ້ນ ວຶດໆ ມີຍັກສາມໂຕເຂົ້າມາອ້ອມສິນໄຊໄວ້ທັງຮ້ອງທັ່ງໃສ່ວ່າ: "ບັກນ້ອຍ! ມຶງເວົ້າສະຫາວຈັ່ງຊີ້ຕ້ອງຕາຍ, ມຶງແມ່ນໃຜ?"

ທ້າວຕອບຢ່າງບໍ່ສະທ້ານຢ້ານກົວວ່າ: "ກູຄືສິນໄຊເວີ້ຍ! ໜ້າໃດກໍຕາມທີ່ມາຍິ່ມຍູ່ກູແລ້ວ ຕ້ອງຖືກສອນຕາຍມັບດັບແຈບໂລດ!"

ພວກຍັກຮູ້ວ່າ ມະນຸດຕົວນ້ອຍໆລາຍນີ້ມີລິດເດດເກັ່ງກ້າ ຈຶ່ງຟ້າວຮ້ອງເອົາພັກພວກມາຊ່ອຍ, ບໍ່ດົນຍັກໃນເຂດພູເງິນ ກໍຫຼັ່ງມາເປັນພັນເປັນໝື່ນ ໂດຍມີໄມ້ຄ້ອນແລະຂວານເປັນອາວຸດຄົບມື. ສິນໄຊພະຍາຍາມຫາທາງປອງດອງໂດຍບອກຍັກໃຫ້ເຊົາອາຄາດບາດໝາງ ເພາະທ້າວເອງບໍ່ໄດ້ມາບຽດບຽນຜູ້ໃດ, ແຕ່ພວກຍັກບໍ່ຍອມຟັງ. ສິນໄຊຈຶ່ງກຽມຕົວຕໍ່ສູ້ທັງໃຈກໍໄຫວ້ວອນຫາພະອິນ ໃຫ້ມາຊ່ອຍປົກປ້ອງ. ຍັກຈ້ອງເບິ່ງທ້າວແລ້ວກໍທະຍານເຂົ້າໃສ່ ແຕ່ສິນໄຊຫຼົບຫຼີກທັນ ແລະທັນໄປເອົາຄັນທະນູສວາກໃສ່ ຈົນຍັກລົ້ມອາບຟາບ. ຍັກໂຕອື່ນໆ ຫຸ້ມມາຟາດຄ້ອນໃສ່ ແຕ່ສິນໄຊຈັບດາບກວັດແກວ່ງ ເກີດແສງມາບແມບແລະກາຍເປັນດາບເຜັດມັບເປັນພື່ນໆດວງ ສະກັດໄມ້ຄ້ອນຂອງຍັກຈົນຫຼຸດມືຫຼົ່ນລົງເດຍລະດາດຢູ່ຕາມພື້ນດິນ.

ຍັກຫຸ້ມມາໃສ່ບໍ່ຂາດສາຍ. ສຽງສູ້ຮົບດັງປານຟ້າປົ້ນແຜ່ນດິນໄຫວ. ບັດນີ້ສິນໄຊທ້າງທະນູຍິງສອນໃສ່ ສຽງດັງປານຟ້າຜ່າ ເກີດໄຟລວກໄໝ້. ພວກຍັກລົ້ມຕາຍລະເນລະນາດຢຽດໂຕຄ້ຶງນັ້ງ ປານຂຽດຖືກນ້ຳຮ້ອນ. ລູກສອນນຳໄລ່ສັງຫານພວກຫົວໜ້າຍັກ ທີ່ພະຍາຍາມຫຼົບໜີໄປລີ້ຢູ່ຖ້ຳແລະງ່ອນຜາ ຈົນຕາຍບໍ່ເຫຼືອຫຼໍ. ພໍສຳເລັດໜ້າທີ່ສັງຫານ

ສັດຕູແລ້ວ ລູກສອນກໍກັບຕ່າວຄືນມາຫາສິນໄຊຄືເກົ່າ. ທ້າວຢືນເບິ່ງສະໜາມຣົບ ຊຶ່ງບັດນີ້ກາຍເປັນປ່າຊ້າຍັກຈຳນວນນັບບໍ່ໄຫວ ແລ້ວກໍອ່ວຍໜ້າໜີ ເພື່ອຖິ້ມເຫດການດັ່ງກ່າວໃຫ້ຢູ່ເບື້ອງຫຼັງ. ເສັ້ນທາງອັນຍາວໄກຍັງບໍ່ສຸດລົງງ່າຍເທື່ອ ສຳລັບສິນໄຊ.

ພໍ້ຍັກຂິນີ

ສິນໄຊຂ້າມແມ່ນ້ຳອີກສາຍໜຶ່ງ ແລ້ວກໍມາຮອດພູອິນທະນິນ. ຕີນພູມີນ້ຳຫ້ວຍໃສເຢັນ ຊຶ່ງເຕັມໄປດ້ວຍແກ້ວມະນີຫຼາຍສີສັນ ສົ່ງແສງເຫຼື້ອມຍິບຍັບ. ທ້າວເອົາມືຟາຍຂຶ້ນມາເບິ່ງ ກໍເຫັນເມັດແກ້ວຫຼາຍຂະໜາດ. ມີທັງສີສົ້ມ, ສີແຫຼ້, ສີແດງ ແລະອື່ນໆ ຊຶ່ງລ້ວນແຕ່ມີຄ່າແພງ. ທ້າວຮູ້ສຶກດີໃຈທີ່ໄດ້ພົບເຫັນສິ່ງສົດໃສງາມຕາ. ມັນພາໃຫ້ມີຊີວິດຊີວາຂຶ້ນຕື່ມ. ແລ້ວທ້າວກໍເດີນມຸ່ງໜ້າໄປສູ່ແດນບ່ອນຟ້າແຈ້ງຈ່າງປ່າງ. ນະທີ່ນັ້ນ ແມ່ນ້ຳຫຼາຍສາຍໄຫຼມາຈອບກັນ, ມີຖ້ຳແກ້ວ, ມີວິມານຂອງພວກພະຍາທອນ ຊຶ່ງທ່ອງທ່ຽວໄປມາບໍ່ຂາດໄລຍະ. ຜ່ານຈາກບ່ອນນັ້ນສິນໄຊກໍມາຮອດແດນຂອງຍັກຂິນີ.

ຍັກໂຕແມ່ ເຫັນສິນໄຊກໍຕິດໃຈຢາກໄດ້ມາເປັນຜົວ. ມັນແປງເພດເປັນສາວງາມປານສາວສະຫວັນແລະເນລະມິດສາລາອັນວິຈິດສວຍງາມຂຶ້ນໄວ້ເພື່ອໃຫ້ທ້າວພັກເຊົາ. ແລ້ວມັນກໍຂັບລຳສຽງອ້ອຍອິ່ນເພື່ອກ່ອມອາລົມສິນໄຊໃຫ້ອ່ອນໄຫວແລະພໍອົກພໍໃຈໃນຕົວມັນ.

ສິນໄຊຫຍັບເຂົ້າໄປໃກ້ໆທັງຄຶດວ່າເປັນບຸນຂອງຕົນທີ່ໄດ້ມາພົບສາວສະຫວັນຢູ່ກາງປ່າ,ແຕ່ເມື່ອຈ້ອງເບິ່ງສັກໆ ກໍເລີຍເຫັນແຈ້ງວ່າ ແສງຕານັ້ນແຂງກະດ້າງ ທັງເຕັມໄປດ້ວຍເລ່ຫຼ່ຽມມາຍາ ມັນເປັນແສງຕາຂອງ



ນາງຍັກຂິນີ ທີ່ປອມແປງຕົວເປັນນາງຟ້າ. ສິນໄຊຍ່າງໜີໄປ ໂດຍບໍ່ເອົາຫົວຊາກັບນາງເລີຍ. ແຕ່ນາງຍັກກໍຍ່າງນໍາຫຼັງທັງເວົ້າຈາອ້ອນວອນໃຫ້ທ້າວພັກເຊົານໍາຜໍໄດ້ອຸ່ນໃຈ. ສິນໄຊບໍ່ສົນໃຈ ຄົງຍ່າງຕໍ່ໄປເລື້ອຍໆຈົນນາງຍັກຍ່າງນໍາບໍ່ທັນ ຈຶ່ງໄດ້ແຕ່ຮ້ອງດ່ານໍາຫຼັງວ່າ: "ຊາຍໂງ່ຈ້າ ຢ່າມາໃຫ້ເຫັນໜ້າອີກ!"

ສູ້ຮົບກັບພະຍາທອນ

ຫວິດຈາກເຂດນາງຍັກ ສິນໄຊມາຮອດບ່ອນໜຶ່ງທີ່ມີດອກໄມ້ບານເຮືອງເຮື່ອເປັນຫຼາຍສີ, ບາງດອກມີກີບກ້ຽງອ່ອນນວນສົ່ງກິ່ນຫອມຫວນໄປທົ່ວຄີງດອຍ. ທ້າວທ່ຽວຊົມດອກໄມ້ດ້ວຍຫົວໃຈປ່ຽມລົ້ນໄປດ້ວຍຄວາມສຸກສໍາລານປານດັ່ງໄດ້ກ່ອມກ້ຽວທ່ຽວຫຼິ້ນກັບນາງຟ້າຫຼືສາວສະຫວັນຕາມລໍາພັງ.

ຂະນະທີ່ສິນໄຊຊື່ນຊົມທໍາມະຊາດຢູ່ນັ້ນພວກພະຍາທອນກໍພາກັນເຫາະມາເປັນໝູ່ແລະຍາດກັນຊົມດອກໄມ້. ນາງພ່ອງກໍວິວາດຜິດ

ຖຽງກັນເຖິງຂັ້ນຟັນດາບກັນຢູ່ກາງອາກາດ. ພະຍາທອນຜູ້ໜຶ່ງເຫັນສິນໄຊກໍເລັ່ງໄປໃສ່ແລະຮ້າຍດ່າວ່າ: "ບັກນ້ອຍມຶງມາແຕ່ທິບໃດ?ມາທ່ຽວລັກເສບຊົມດອກໄມ້ຢູ່ໜີ້ໂຫດໜັກແທ້ໆໃດ. ມຶງມາຫາບ່ອນຕາຍແລ້ວ!"

ສິນໄຊຕອບວ່າ: "ສູພວກທອນເຖົ້າພວກຜີບາບ! ສູຊິກອງກັນຕາຍບັດນີ້ລະສູຮູ້ຈັກກູໜ້ອຍໄປ, ກູມາໜີ້ບໍ່ແມ່ນກໍ່ກຳທຳເວນຜູ້ໃດ, ຮັບຮູ້ເອົາໄວ້!"

ພະຍາທອນຄຽດແຮງທີ່ສິນໄຊມາລັກຊົມດອກໄມ້ແລ້ວຍັງເວົ້າຈາກ້າແຂງ, ມັນກຳດາບທະຍານເຂົ້າຫາຫວັງດັບຊີວິດທ້າວນ້ອຍຢ່າງງ່າຍດາຍ, ແຕ່ສິນໄຊໂດດຫຼົບຢ່າງຄ່ອງແຄ່ວວ່ອງໄວເຮັດໃຫ້ພະຍາທອນພາດເປົ້າໝາຍໄປແລ້ວຕັ້ງໂຕຫັນໜ້າມາໃໝ່, ສິນໄຊຢູ່ໃນທ່າໄດ້ປຽບແຕ່ທ້າວຈັ້ງຕົວໄວ້ທັງບອກມັນວ່າ ຄວນແພງຊີວິດໄວ້ດີກວ່າຈະມາຕາຍຍ້ອນເລື່ອງເລັກໆນ້ອຍໆ. ແຕ່ພະຍາທອນບໍ່ຍອມຟັງຍັງໂດດເຂົ້າມາອີກມືແກວ່ງດາບວຶດວັດ, ສິນໄຊຈຳຕ້ອງຍົກດາບຂຶ້ນຮັບຈົນເກີດປະກາຍໄຟມາບແມບ. ທັງສອງສູ້ຢັນກັນໄປມາທັງຟັນທັງແທງທັງແກວ່ງດາບປັດປ່າຍ. ຝ່າຍພະຍາທອນເຖົ້າແກ່ກໍອ່ອນແຮງລົງ, ສິນໄຜູ້ມີລິດເດດຍັງເຂັ້ມແຂງແລະຫຼົບຫຼີກຄົມດາບໄດ້ຢ່າງງົດງາມ. ທ້າວຫຼອກລໍ້ຝ່າຍກົງກັນຂ້າມຈົນຊິຫຼົບບໍ່ທັນ, ເມື່ອໄດ້ຈັງຫວະດີໆ ທ້າວກໍຟັນຄໍພະຍາທອນຂາດກະເດັນ, ຝ່າຍພະຍາທອນກໍເກັ່ງທາງເວດມົນອາຄົມ ມັນຄວາມືໄປຈັບເອົາຫົວມາຕໍ່ຄືນ ແລ້ວການຕໍ່ສູ້ກໍດຳເນີນຕໍ່ໄປອີກຕື່ມແລະເພີ່ມຄວາມຂ້ຽວຂາດຮຸນແຮງຂຶ້ນ ຈົນບາງຄັ້ງທັງສອງຕ້ອງເຫາະຂຶ້ນໄປສູ້ກັນຢູ່ກາງອາກາດຟາດຟັນກັນໄປມາຢ່າງສຸດແຮງ ຈົນໃນທີ່ສຸດພະຍາທອນກໍເສຍທ່າອີກ, ດາບສິນໄຊປ່າຍເອົາຄໍພະຍາທອນຂາດປຸດ, ສິນໄຊໃຊ້ຄວາມວ່ອງໄວຄວ້າຈັບເອົາຫົວພະຍາທອນແກ່ວງໄປໄກໆ. ຮ່າງຄືງ

04/06/2026, 03:32 ປຶ້ມເລື່ອງ ສິນໄຊ

ອາບເລືອດຂອງພະຍາທອນແລ່ນໄປນໍາເອົາຫົວຕໍ່ໃສ່ຄືນແລ້ວກໍແລ່ນໜີໄປເລີຍເພາະມັນເຫັນວ່າຕົນເອງບໍ່ມີທາງທີ່ຈະເອົາຊະນະໄດ້. ສ່ວນພະຍາທອນໂຕອື່ນໆກໍພາກັນໜີໄປຢ່າງບໍ່ມີຮ່ອງຮອຍ.

ສິນໄຊພັກເຊົາເອົາແຮງເພື່ອກຽມຈິດກຽມໃຈປະເຊີນກັບອຸປະສັກໃນຂັ້ນຕໍ່ໄປ ເຖິງແມ່ນວ່າເທິງເສັ້ນທາງນັ້ນສັງທອງໄດ້ບຸກເບີກເປັນແລວໄປກ່ອນແລ້ວກໍຕາມ.

ຮອດແດນຍັກ ອັດສະມຸຂີ

ເມື່ອໄປຮອດຕີນພູແຫ່ງໜຶ່ງ ສິນໄຊໄປພໍ້ຍັກອັດສະມຸຂີຊຶ່ງມີໜ້າຄືກັບໝາ. ມັນພວມຢູ່ໃນອາລົມເປົ່າປ່ຽວແລະຕື່ນເຕັ້ນດີໃຈທີ່ໄດ້ພົບພໍ້ກັບມະນຸດຮູບງາມຈຶ່ງຟ້າວເດ່ແຂນມາໂອບກອດ ອູ້ມເອົາທ້າວແລ້ວແລ່ນໄປຕາມພະລານຫີນມຸ່ງໜ້າສູ່ຖ້ຳອັນເປັນທີ່ຢູ່ຂອງມັນ. ສິນໄຊຕົກຢູ່ໃນທ່າຮັບເລີຍປ່ອຍໃຫ້ມັນອູ້ມໄປຊົ່ວໄລຍະໜຶ່ງແລ້ວຈຶ່ງຖາມມັນວ່າຈະເອົາໄປເຮັດຫຍັງ?ຍັກຕອບວ່າຈະເອົາໄປເປັນຄູ່ຊ້ອນນອນຮຽງຢູ່ໃນຖ້ຳ. ເມື່ອຮູ້ດັ່ງນັ້ນ ທ້າວຂໍຮ້ອງໃຫ້ມັນປ່ອຍໂດຍດີເພາະມີວຽກສຳຄັນຄອງຢູ່ທາງໜ້າ. ຕໍ່ຄຳຂໍຮ້ອງດັ່ງກ່າວ ນັ້ນຍັກແຮງກອດຮັດແໜ້ນເຂົ້າຕື່ມເພື່ອບໍ່ໃຫ້ສິນໄຊຫຼຸດມືໄປໄດ້. ເມື່ອຮູ້ລັກແນ່ວ່າການເວົ້າດີໆກັບນາງຍັກຈະບໍ່ເກີດຜົນແຕ່ຢ່າງໃດສິນໄຊເລີຍຈຳໃຈຖອດດາບອອກແທງ. ນາງຍັກວາງມືຈາກທ້າວປຸບປັບເພາະຄວາມເຈັບປວດບັງຄັບ. ມັນພະຍາຍາມໃຊ້ປາກສວາບກັດດັ່ງດຽວກັບໝາ. ແຕ່ສິນໄຊເຄື່ອນໄຫວໄດ້ຄ່ອງແຄ່ວກວ່າຈຶ່ງຟັນນາງຍັກຫຼາຍບາດຈົນມັນຕາຍມອດມ້ວຍໃນທີ່ສຸດ.

https://online.fliphtml5.com/iqwiz/utcv/ 88/152

ທ້າວກ່າວຄຳອະທິຖານ ໃຫ້ນາງຍັກໄປເກີດເທິງສະຫວັນຊັ້ນຟ້າ ບໍ່ໃຫ້ມາວົນວຽນຕິດພັນກັບພວກຜີຍັກອີກຕໍ່ໄປ ບໍ່ວ່າເກີດຊາດໃດ.

ຕົ້ນກັບລະພຶກ

ແລ້ວສິນໄຊກໍປີນພູຂຶ້ນໄປຈົນຮອດຈອມ. ຄວາມອິດເມື່ອຍຢຸດເຊົາໄປເກືອບທັນທີ ເມື່ອສາຍຕາໄປພົບເຫັນຕົ້ນກັບລະພຶກ ອັນເປັນຕົ້ນໄມ້ວິເສດຊຶ່ງເລົ່າສືບຕໍ່ກັນມາແຕ່ປາງປະຖົມ. ຕົ້ນໄມ້ນີ້ມີດອກໃສເຫຼື້ອມລາມຈາກກິ່ງລົງມາຕາມລຳຕົ້ນຈົນຈຳດິນ. ດອກມີຫຼາຍຮູບຫຼາຍຂະໜາດມີທັງເປັນດອກເງິນດອກຄຳມີທັງເປັນແຜ່ນແພລວດລາຍເຫຼືອງຄຳລາຍເປັນຮູບໂຕມອມ. ເຈຍ. ນົກເຄົ້າ. ບາງລາຍເປັນຮູບເຈົ້າຊີວິດນັ່ງຮຽງກັບມະເຫສີ. ຮູບເທບພະບຸດແນມນຳເທບທິດາ. ສິນໄຊຕື່ນຕາ

ຕື່ນໃຈ ທີ່ເຫັນຕົ້ນໄມ້ອອກດອກອອກຜົນເປັນຂອງທິບ ຊຶ່ງຫາຢູ່ທີ່ອື່ນໃດບໍ່ໄດ້ອີກແລ້ວໃນແຜ່ນດິນນີ້. ທ້າວຈັບເອົາຜ້າຜືນງາມທີ່ສຸດມາແປະໃສ່ຄີງເບິ່ງຄືຜ້າອຸທຸມພອນສີຟ້າແລະຜ້າໂກໄສສີສົ້ວຊຶ່ງຕ່ຳດ້ວຍໄໝຄຳ.ຜ້າໂກໄສຖືກໃຈທ້າວເປັນພິເສດທ້າວຈຶ່ງພັບຈີບດີງແລ້ວເອົາໃສ່ບັ້ງລູກສອນໄວ້. ສິນໄຊແຍງເບິ່ງຕົ້ນກັບລະພຶກດ້ວຍຄວາມອອນຊອນຄືຈະບໍ່ມີຍາມເປີດເປັນ. ແລ້ວກໍຈຳໃຈເອົາຕົວຈາກແຫ່ງນີ້ໄປດ້ວຍຄວາມເສຍດາຍ.

ສິນໄຊເລາະລຽບລົງພູໄປຮອດບ່ອນນ້ຳໄຫຼອອກຈາກຕີນຜາ, ນ້ຳໃສເຢັນຈີບຫຼຽວເຫັນເມັດແກ້ວເດຍລະດາດຕາມພື້ນມີແກ້ວມໍລະກົດ, ແກ້ວພິທູນ, ແກ້ວປັດທະມະລາດ, ແກ້ວມະນີໂຊດ, ແກ້ວພິລາແກ້ວທຳມະໂຮງ, ແກ້ວມະຫານິນ, ແກ້ວບັບພາ(ສີກ່ານ)ແລະອື່ນໆນັບບໍ່ຖ້ວນ. ສິນໄຊແນມເບິ່ງແກ້ວດ້ວຍຄວາມຊື່ນຊົມອອນຊອນແລະເອົາມືຟາຍຂຶ້ນເບິ່ງທັງລູບໄປມາດ້ວຍຄວາມຮູ້ສຶກເບີກບານສຳລານໃຈ. ຮູບພາບອັນວິດງາມຂອງທຳມະຊາດ ເຮັດໃຫ້ທ້າວລືມຄວາມຮູ້ສຶກປ່ຽວພອຍຫງອຍເຫງົາເພາະຄຶດຮອດແມ່ລົງໄດ້ເປັນຊົ່ວຄັ້ງຊົ່ວຄາວ.



ຊົມກິນນະລີລົງອາບນ້ຳ

ໂດຍເລາະລົງໄປຕາມແຄມຫ້ວຍ ສິນໄຊກໍໄປຮອດສະຖານທີ່ອັນມີນ້ຳຕົກໄຫຼລົງສູ່ວັງເວີນໃຫຍ່. ແຄມຝັ່ງເປັນພະລານຫີນສະຫວາດສະເຫວີຍ. ພວກນາງກິນນະລີຈຳນວນຫຼາຍ ພາກັນມາລົງຫຼິ້ນນ້ຳຢູ່ບ່ອນນີ້ເປັນປະຈຳ. ເມື່ອເຊີ່ນລົງເຖິງພື້ນ ພວກນາງກໍປົດປີກ ແລະຫາງອອກແລ້ວພາກັນອາບນ້ຳລອຍຫຼິ້ນຢ່າງມີຄວາມສຸກ. ແຕ່ລະນາງຮ່າງອ່ອນແອ້ນ, ຜິວຂາວນວນງາມຜ່ອງ ຜົມປານອິນແຕ້ມແຕ່ງ. ໃຜໄດ້ແຍງແລ້ວບໍ່ມີມື້ໜ່າຍເປັນ. ບາງນາງຮ້ອງຂັບລຳແລະຟ້ອນແອ່ນຢູ່ເທິງພະລານ

ຫີນ ປີ່ນຊ້າຍປີ່ນຂວາ ແລະເກາະກ້ຽວກັນເປັນຈັງຫວະ ໂດຍມີສຽງນ້ຳຕົກຕາດເປັນດົນຕີບັນເລງກ່ອມ.

ສິນໄຊຈອບເບິ່ງດ້ວຍຄວາມຕື່ນຕາຕື່ນໃຈແລະຄຶດຢາກເຂົ້າໄປຫາໃກ້ໆ ຈຶ່ງປະກົດຕົວອອກແລະຮ້ອງໄປໃສ່ພວກນາງດ້ວຍນ້ຳສຽງເປັນມິດໄມຕີ. ຝ່າຍນາງກິນນະລີພ້ອມກັນຫຼຽວມາແລະເມື່ອເຫັນສິນໄຊກໍພາກັນຫ້ວງຂຶ້ນວ່ານັ້ນແມ່ນຄົນ. ແລ້ວກໍມີສຽງປ່າວເຕືອນກັນໃຫ້ບິນໜີ. ນາງກິນນະລີສ່ວນໜຶ່ງພືປີກບິນເປັນວື່ນໆ. ສິນໄຊເລີຍຮ້ອງບອກວ່າຕົນບໍ່ໄດ້ມາທຳຮ້າຍບຽດບຽນຜູ້ໃດຫາກແຕ່ມີຈຸດປະສົງມາຂໍຂອດຮັກຂອດແພງກັບພວກນາງ. ຝ່າຍນາງກິນນະລີຮ້ອງຕອບວ່າພວກຕົນເປັນປັກສີເຊື້ອແນວເດຍລະສານ ບໍ່ອາດຈະໄຝ່ຝັນຫຼົງຕົນໄປຮັກກັບມະນຸດຜູ້ສູງສັກໄດ້. ອີກປະການໜຶ່ງ ຜູ້ເຖົ້າມັກເລົ່າສືບຕໍ່ກັນມາວ່າ ທຳມະຊາດຂອງຄົນນັ້ນມັກເວົ້າຕົວະລ່າຍເປັນແທ້ໆ. ສິນໄຊຢືນຢັນວ່າຕົນມີຄວາມຈິງໃຈຫວັງຮັກໝັ້ນຜູກພັນດ້ວຍຄວາມບໍລິສຸດ. ຂໍໃຫ້ເຫັນໃຈຊາຍພອຍເດີນປ່າ, ຖ້າພວກນາງປະຕິເສດແລ້ວຕົນເອງກໍຈະແອ່ວວອນຢູ່ບານນັບເປັນພັນປີກໍຊິບໍ່ຍອມປະລະງ່າຍໆ. ທ້າວເວົ້າອີ່ນອອຍສຽງຫວານຈົນໃນທີ່ສຸດພວກນາງກິນນະລີກໍໃຈອ່ອນ. ພວກທີ່ບິນຂຶ້ນເວີ່ນຢູ່ເທິງກໍກັບຄືນລົງມາ. ແລ້ວບໍລິເວນນັ້ນກໍເຕັມໄປດ້ວຍນາງກິນນະລີທີ່ມີລີລາຍ່າງຍ້າຍອ່ອນຊ້ອຍອໍລະຊອນ. ພວກໜຶ່ງພາກັນຟ້ອນແອ່ນສະບັດປີກແລະແພນຫາງເປັນເຫຼື້ອງຫຼ້າງ. ລຳແຂນກົມງາມແລະກົ່ງເປັນຄືຄັນສອນ. ພວກນາງເຊີນສິນໄຊຟ້ອນນຳເພື່ອເປັນການສ້າງບັນຍາກາດລົ້ງແກ່ວນສະໜິດສະໜົມ. ຄູ່ຟ້ອນຂອງທ້າວຊື່ວ່າ ນາງກຽງຄຳ ຜູ້ຊຶ່ງຕິດອົກຕິດໃຈໃນຕົວສິນໄຊເປັນພິເສດ. ທັງສອງຢູ່ໃນອາລົມເບີກບານມ່ວນຊື່ນຕ່າງຝ່າຍຕ່າງພໍໃຈຊຶ່ງກັນແລະກັນ. ດັ່ງນີ້ເສັ້ນທາງຮັກຂອງທັງສອງຈຶ່ງບໍ່

ມີສິ່ງໃດມາກີດຂວາງໄດ້. ມີແຕ່ຄວາມສົດຊື່ນຫອມຫວນຄືດັ່ງເສັ້ນທາງໃນສວນອຸດທິຍານ. ແຕ່ເວລາກັບຄວາມຮັກນັ້ນບໍ່ຄ່ອຍປະນີປະນອມກັນ. ຜູ້ທັງສອງຄອງຮັກກັນຢ່າງດູດດື່ມ ວັນເວລາກໍປະກົດວ່າຜ່ານໄປໄວກວ່າປົກກະຕິ. ທ້າວກັບນາງກຽງຄຳກອດກ້ຽວສຳພັນກັນຢູ່ເຈັດວັນ ກໍຮອດບັ້ນຕ້ອງພັດພາກຈາກກັນ. ສິນໄຊມີວຽກງານອັນຈຳເປັນຄອງຢູ່ທາງໜ້າຈຶ່ງຈຳໃຈອຳລານາງໄປທ່າມກາງສຽງອ້ອນວອນຈົ່ມຫາອາໄລຂອງກຽງຄຳຊຶ່ງຍາມໃດກໍຮຽກຮ້ອງ ໃຫ້ສິນໄຊກັບຕ່າວຄືນມາຫາອີກ. ສິນໄຊຮັບປາກວ່າຈະກັບຄືນມາໃນອີກໜຶ່ງເດືອນກັບມາຍັງພະລານຫີນແຫ່ງນີ້ບ່ອນທີ່ເປັນສັກຂີພິຍານແຫ່ງຄວາມຮັກຂອງທັງສອງ. ທ້າວກອດເອົານາງເຂົ້າມາແນບອົກເປັນຄັ້ງສຸດທ້າຍແລ້ວກໍເດີນທາງຈາກໄປ. ສ່ວນນາງກຽງຄຳພ້ອມດ້ວຍໝູ່ກິນນະລີພາກັນບິນກັບຄືນສູ່ຖ້ຳຜາຈອງ.

ສິນໄຊຕ້ອງເລັ່ງບາດຍ່າງໄວກວ່າປົກກະຕິ ເພື່ອທົດແທນເວລາທີ່ເສຍໄປນຳເຫດການປະທັບໃຈຢູ່ແຄມວັງເວີນແຫ່ງນັ້ນ. ເມື່ອໄປຮອດແຄມນ້ຳສະໜຸດໃຫຍ່ບ່ອນທີ່ສັງທອງຄອງຖ້າຢູ່ຜູ້ນ້ອງຖາມອ້າຍເຖິງສາເຫດທີ່ຊັກຊ້າ ຈົນເວລາລ່ວງໄປຕັ້ງແປດວັນ. ສິນໄຊຕອບນ້ອງໂດຍເລົ່າຄວາມຈິງທີ່ໄດ້ໄປມັກຮັກກັບນາງກິນນະລີຢູ່ກາງໄພ. ສັງທອງບໍ່ຈົ່ມບໍ່ວ່າຫຍັງແລ້ວກໍພາອ້າຍຂ້າມນ້ຳໄປຢ່າງວ່ອງໄວ. ສິນໄຊຖາມວ່າ:
"ຍັງອີກໄກປານໃດຈຶ່ງຈະຮອດຈຸດໝາຍປາຍທາງ?" ສັງທອງຕອບວ່າ:
"ຖ້າໄປຢ່າງຮີບດ່ວນ ກໍໃຊ້ເວລາສອງມື້. ນ້ອງເອງຈະລັກລອບເຂົ້າໄປຈອບເບິ່ງສາກ່ອນ ເພາະເມືອງຍັກນີ້ຕ້ອງມີວິທີແນບນຽນຈຶ່ງເຂົ້າໄປໄດ້ຢ່າງປອດໄພ. ຂໍໃຫ້ອ້າຍຄອງຖ້າຢູ່ໜີ້ສາກ່ອນ"

ສັງທອງບອກອ້າຍແລ້ວກໍລ່ວງໄປກ່ອນຕາມເຄີຍ. ສິນໄຊຄອງຖ້າຢູ່ແຄມນ້ຳ ຈົນເຊືອບຫຼັບໄປ.

ພົບອາສຸມຸນທາ

ສັງທອງເຮັດໜ້າທີ່ໄປສອດແນມເບິ່ງບ່ອນຢູ່ຂອງຍັກກຸມພັນຢ່າງລະອຽດແລ້ວກັບມາບອກສິນໄຊ. ສອງອ້າຍນ້ອງປຶກສາຫາລືນຳກັນເລື່ອງຍຸດທະວິທີແລ້ວກໍພາກັນບຸກໜ້າມຸ່ງສູ່ເມືອງອະໂນລາດ. ເມື່ອໄປຮອດຜາສາດຂອງຍັກ ສັງທອງເລາະລຽບຮັກສາຢູ່ບໍລິເວນຮອບນອກ. ຍັກກຸມພັນບໍ່ຢູ່ເພາະແມ່ນຍາມມັນໄປໂຫ່ເນື້ອຢູ່ປ່າ.

ສິນໄຊເຮັດໜ້າທີ່ເຂົ້າໄປໃນຜາສາດ ແລ້ວຕີບປະຕູເອີ້ນຫາຄົນທີ່ຢູ່ພາຍໃນເພື່ອໃຫ້ໄຂປະຕູ. ທ້າວເອີ້ນຢູ່ດົນເຕີບແຕ່ບໍ່ມີຜູ້ໃດຂານຕອບ

ຢພາຍ

ທ້າວເລີຍໃຊ້ກົນອຸບາຍໂດຍເວົ້າໝິ່ນປະໝາດວ່າ: "ໃຜຢູ່ໃນຫັ້ນມີຜົວແລ້ວຫຼືຍັງ, ຖ້າຍັງເປັນໂສດນັ້ນຂໍເປັນຄູ່ຊ້ອນນອນຮຽງແດ່, ມັກຫຼືບໍ່ມັກກໍ່ຂໍໃຫ້ໄຂປະຕູອອກມາເບິ່ງໜ້າເບິ່ງຕາດູ."

ນາງສຸມຸນທາ ໄດ້ຍິນສຽງເດັກນ້ອຍເວົ້າສະຫາວ ກໍເກີດໂມໂຫຈຶ່ງສ່ອງເບິ່ງທາງປ່ອງຢ້ຽມ, ນາງເຫັນທ້າວນ້ອຍມີໜ້າຕາຄ້າຍຄືເຊື້ອແນວຂອງຕົນຈຶ່ງສໍ້ຖາມວ່າແມ່ນໃຜ? ມາແຕ່ໃສ? ຝ່າຍສິນໄຊບອກຊື່ຕົນເອງພ້ອມທັງຊື່ພໍ່ແມ່ແລະວ່າທີ່ມານີ້ແມ່ນມານຳເອົາອາຄືນເມືອເມືອງເປັງຈານ. ນາງສຸມຸນທາໄຂປະຕູໃຫ້ ແລ້ວສິນໄຊກໍເຂົ້າໄປໃນຜາສາດ, ນາງໂຊມກອດເອົາຫຼານ ທັງຮ້ອງໄຫ້ຟາຍນ້ຳຕາດ້ວຍຄວາມ ຕື້ນຕັນໃຈ, ແຕ່ແລ້ວນາງກໍບອກຫຼານວ່າ:

"ເລື່ອງໜີກັບຄືນໄປເມືອງເປັງຈານນີ້ບໍ່ມີທາງເປັນໄປໄດ້ເພາະຍັກກຸມພັນມີລິດເດດເກັ່ງກ້າຫຼາຍມັນບໍ່ຍອມເດັດຂາດ, ດັ່ງນີ້ ຈຶ່ງໃຫ້ຫຼານກັບຄືນໄປບອກພະຍາກຸສະລາດວ່າ: "ບໍ່ພົບບໍ່ເຫັນອາເດີ."

ຝ່າຍສິນໄຊກໍເວົ້າວ່າ: "ສ່ຳກຸມພັນນີ້ບໍ່ມີຫຍັງເປັນຕາຢ້ານ, ໃຕ້ລຸ່ມຟ້ານີ້ມີໃຜແດ່ຈະມາຂັດຂວາງເສັ້ນທາງຂອງສິນໄຊໄດ້, ຕົກລົງໄດ້ຂ້າມນ້ຳສະໝຸດຂ້າມພູຜາຫຼາຍລັ່ນມາແລ້ວ ແນວໃດຫຼານກໍຕ້ອງສູ້ແບບເອົາຊີວິດເຂົ້າແລກເພື່ອເອົາອາຄືນເມືອ, ຫຼືວ່າອາຮັກແພງຍັກຫຼາຍກວ່າຜູ້ເປັນອ້າຍຄີງຂອງອາບໍ?"

ຝ່າຍອາເຫັນທ່າທາງບໍ່ຍອມຄືນງ່າຍໆຂອງຫຼານຊາຍ ຈຶ່ງບອກວ່າ: "ຂໍໃຫ້ອົດສາຖ້າຢູ່ອີກລາວໜຶ່ງ ຊາມຊາຍັກກຸມພັນກັບຄືນມາ ເພື່ອວ່າອາຈະໄດ້ສັ່ງລາຜົວສາກ່ອນ." ແຕ່ສິນໄຊບໍ່ຍອມ ເພາະວ່າຖ້າຍັກກັບມາແລ້ວ ອາດເກີດການຕໍ່ສູ້ແລ້ວຈະເສຍເວລາ. ສຸມຸນທາ ເວົ້າອີກວ່າ: "ສັນຊັ້ນຂໍໃຫ້ຫຼານລືນເມື່ອກ່ອນ, ຍາມໃດຍັກກຸມພັນກັບມາແລ້ວອາຊິຈຳໃຫ້ລາວໄປສົ່ງດອກ." ສິນໄຊບໍ່ຍອມອີກ.

ສຸມຸນທາເວົ້າອ້າງເຫດຜົນຫຼາຍອັນຫຼາຍແນວ ເພື່ອແກ່ຍາວເວລາ. ນາງຄຶດວ່າຖ້າໜີໄປ ກຸມພັນຕ້ອງນຳໄປຂັດຂວາງຢ່າງສຸດຂີດ. ນາງບໍ່ແນ່ໃຈວ່າສິນໄຊຈະມີລິດເດດເກັ່ງກ້າເໜືອກວ່າຍັກກຸມພັນ. ດັ່ງນີ້ ນາງຈຶ່ງທ້າທາຍໃຫ້ສິນໄຊສະແດງລິດເດດລອງເບິ່ງ. ສິນໄຊຍິງສອນຂຶ້ນຟ້າເກີດສຽງດັງກ້ອງສະນັ່ນໄປທົ່ວຈັກກະວານ. ລູກສອນລຸກເປັນໄຟທະຍານຂຶ້ນເວຫາຮຸ່ງເຫຼື້ອມໄປທົ່ວພິພົບປານວ່າຈະລາມໄໝ້ທຸກຢ່າງບໍ່ໃຫ້ເຫຼືອຫຼໍ. ສຸດທ້າຍລູກສອນກໍກັບຄືນມາຫາສິນໄຊ. ນາງສຸມຸນທາຢ້ານສັ່ນເຊັນຈຶ່ງກອດຫຼານໄວ້ທັງເວົ້າຍົກຍ້ອງວ່າບໍ່ມີຜູ້ໃດຈະມາທຽມທັນກັບຫຼານໄດ້.

ແນວໃດກໍຕາມ ສຸມຸນທາກໍຂໍຮ້ອງນຳຫຼານໃຫ້ເຫັນໃຈອາເພາະແນວໃດກໍໄດ້ສົມສູ່ຢູ່ນຳກັນກັບກຸມພັນດົນນານແລ້ວ ຜົວເມຍຍ່ອມມີຄວາມຜູກພັນຕໍ່ກັນ. ເມື່ອຈຳເປັນຕ້ອງພັດພາກຈາກກັນກໍຂໍໃຫ້ໄດ້ເຫັນໜ້າແລະສັ່ງລາກັນ. ນາງເຫັນວ່າລິດເດດຂອງຫຼານຊາຍນັ້ນເໜືອກວ່າກຸມພັນຈຶ່ງເຕືອນສິນໄຊວ່າຢ່າເຮັດຮຸນແຮງຈົນເຖິງຂັ້ນກຸມພັນຕ້ອງຕາຍດັບວາຍເລີຍ. ສ່ວນສິນໄຊກໍເວົ້າວ່າມັນຂຶ້ນກັບພຶດຕິກຳຂອງກຸມພັນວ່າຈະຂຶງຂັງມັງມໍສໍ່າໃດ.

ໃນທີ່ສຸດ ກໍຮອດເວລາທີ່ຍັກກຸມພັນຕ່າວຄືນມາແຕ່ປ່າ. ສັງທອງບອກສິນໄຊວ່າຍັກກຸມພັນມາຮອດໃກ້ຜາສາດແລ້ວ. ສິນໄຊກຽມຕົວມືຈັບດ້າມດາບໄວ້ແໜ້ນທ່າທາງເດັດດ່ຽວພ້ອມທີ່ຈະປະເຊີນໜ້າກັບເຫດການທຸກຢ່າງ. ນາງສຸມຸນທາຂໍຮ້ອງນຳຫຼານ ໃຫ້ຫຼີກເວັ້ນການປະທະຈຶ່ງເອົາຫຼານໄປເຊື່ອງໄວ້ຢູ່ພຸ່ມດອກໄມ້ຂ້າງເສົາພາຍໃນຜາສາດ ໂດຍບໍ່ປະຮ່ອງຮອຍໃດໆໃຫ້ເປັນທີ່ສົງໄສ.

ຍັກກຸມພັນກ້າວຂຶ້ນຜາສາດດ້ວຍອາການໂຊເຊເພາະຕາມືດມົວຍ້ອນກະທົບກັບແສງເຫຼື້ອມອັນແຮງກ້າຈາກລູກສອນໄຟເວລາຢູ່ກາງ

ປ່າ. ມັນງົມຫາວເຂົ້າປະຕູແລ້ວກໍຮູ້ສຶກໄດ້ກິ່ນແປກຕ່າງນັ້ນຄືກິ່ນຄົນແປກໜ້າ. ມັນສໍ້ຖາມເມຍແບບເອົາເລື່ອງວ່າ: "ມີພີ່ນ້ອງຂອງເຈົ້າຈາກເມືອງມະນຸດມາຫາແມ່ນບໍ່? ລີ້ຢູ່ໃສໃຫ້ບອກມາໃດ!"

ສຸມຸນທາວ່າບໍ່ມີມະນຸດໜ້າໃດໃນຜາສາດແຫ່ງເມືອງອະໂນລາດນີ້ນອກຈາກນາງຄົນດຽວ ທີ່ພວມຄອງຄອຍຜົວດ້ວຍຄວາມເປັນຫ່ວງ. ແຕ່ຍັກກຸມພັນກໍຍັງຢືນຢັນວ່າໄດ້ກິ່ນຄົນແທ້ໆ. ມັນສົງໄສ ໃນຄວາມຈົງຮັກພັກດີຂອງຜູ້ເປັນເມຍ ເພາະເຫັນສີໜ້າສຸມຸນທາບໍ່ເປັນປົກກະຕິ. ສອງຝ່າຍຜິດຖຽງກັນເຖິງຂັ້ນຮຸນແຮງ.

ສຸມຸນທາຄຽດຫຼາຍຈົນອົດບໍ່ໄດ້ຈຶ່ງເວົ້າທັ່ງໃສ່ຜົວວ່າ: "ເຈົ້າຕາມືດມົວຈຶ່ງເຫັນໜ້າຂ້ອຍບໍ່ປົກກະຕິ. ຖ້າພີ່ນ້ອງຂ້ອຍມານຳເອົາແທ້ຂ້ອຍຊິປ່ອຍໃຫ້ເຂົາຈັດການກັບເຈົ້າຈົນມຸ່ນໂລດ. ບໍ່ໃຫ້ໄດ້ຖຽງພໍຄວາມຊໍ້າ!"

ຍັກກຸມພັນເຫັນເມຍປະຕິເສດສຽງແຂງແລະຢ່າງເດັດດ່ຽວກໍເລີຍອ່ອນສຽງລົງແລ້ວກໍລົ້ມຕົວລົງນອນເພາະເມື່ອຍອ່ອນຢ່າງບໍ່ເຄີຍເປັນມາກ່ອນ ຈາກການໄປທ່ຽວໂຫ່ເນື້ອໃນປ່າ. ມັນຫຼັບແລະກົນສຽງດັງປານຊ້າງຮ້ອງ. ສິນໄຊຮູ້ວ່າຍັກຫຼັບແຈບແລ້ວກໍອອກມາຈາກບ່ອນລີ້ແລະດຶງເອົາອາອອກມາບອກເພື່ອກຽມໜີ. ແຕ່ຜູ້ເປັນອາຍັງອາໄລຫ່ວງຫາຜົວຈຶ່ງທຳທ່າລືມຜ້າສະໄບແລ້ວກໍກັບຄືນເຂົ້າໄປໃນຫ້ອງນອນ. ນາງໄປຊຸກສັ່ນກຸມພັນໃຫ້ຕື່ນແຕ່ຜົວຫຼັບແຈບຈົນປານກ້ອນຫີນ, ນາງປຸກແນວໃດຜົວກໍບໍ່ຕື່ນຈົນຫຼານອົດເປັນຫ່ວງບໍ່ໄດ້ຈຶ່ງນຳເຂົ້າໄປເບິ່ງ. ນາງຟ້າວດຶງເອົາຜ້າສະໄບແລ້ວອອກມາ. ພໍຫວິດຈາກຫ້ອງນາງກໍບອກວ່າລືມປິ່ນເກົ້າຈຶ່ງກັບຄືນເຂົ້າໄປອີກ. ສິນໄຊບອກໃຫ້ອາດ່ວນຟ້າວເພາະຢ້ານຍັກຕື່ນ. ນາງເອົາປິ່ນເກົ້າແລ້ວກໍອອກມາ ແຕ່ບັດນີ້ຊໍ້າພັດລືມຊ້ອງ. ນາງກັບລືນໄປອີກເປັນເທື່ອທີສາມ. ທຸກເທື່ອທີ່ເຂົ້າໄປໃນຫ້ອງນາງໄປ

ປຸກຜົວໃຫ້ຕື່ນທັງນີ້ເພາະນາງຮູ້ດີວ່າຕົນເອງບໍ່ອາດຂືນຄວາມຂອງ ຫຼານໄດ້ ຈຶ່ງຢາກໃຫ້ຜົວເປັນຝ່າຍຍາດຊີງເອົາຕົນໄວ້. ແຕ່ປະກົດວ່າປຸກ ເທົ່າໃດກຸມພັນກໍຍິ່ງຫຼັບລື່ນລັ້ນບໍ່ຮູ້ເມື່ອຄືງ. ຈໍາເປັນສິນໄຊໄດ້ນໍາເຂົ້າໄປ ຫາແລະເລັ່ງໃຫ້ອາອອກມາ.

ນາງສຸມຸນທາຈໍາໃຈໜີຈາກເມືອງຍັກດ້ວຍຄວາມເປັນຫ່ວງອາ ໄລຜົວຈົນນໍ້າຕາໄຫຼອາບແກ້ມ. ສິນໄຊກັບສັງທອງພາອາໄປພັກເຊົາຢູ່ ຖໍ້າແກ້ວທີ່ພູແຫ່ງໜຶ່ງຊຶ່ງແນມຈາກບ່ອນນີ້ພໍຫຼຽວເຫັນຈອມແຫຼມຂອງ ຜາສາດແຫ່ງເມືອງອະໂນລາດຢູ່ໄກໆບ່ອນສຸດຂອບຟ້າ.

ລອງແຮງ ກັບ ກຸມພັນ

ພາຍຫຼັງພັກຜ່ອນມີແຮງແລ້ວ ສິນໄຊກັບສັງທອງຕ້ອງຄືນໄປສະ ກັດກັ້ນຍັກກຸມພັນທີ່ຈະນໍາມາຂັດຂວາງການຫຼົບໜີຂອງນາງສຸມຸນທາ. ພວກທ້າວເອົາກ້ອນຫີນຕັນປາກຖໍ້າໄວ້ເພື່ອຮັບປະກັນຄວາມປອດໄພ ແລະເພື່ອບໍ່ໃຫ້ອາລັກໜີໄປ. ແລ້ວທັງສອງກໍພາກັນກັບຄືນໄປຈົນຮອດ ຜາສາດຂອງຍັກ.

ສິນໄຊເຂົ້າໄປຫາກຸມພັນເລີຍເກີດການຕໍ່ສູ້ກັນຢ່າງດຸເດືອດ.ສິນ ໄຊເອົາດາບຟັນຄໍຍັກກຸມພັນຂາດສະເດັນແຕ່ກຸມພັນກໍມີລິດເດດເກັ່ງກ້າ ໂດຍແຜງລິດເກີດເປັນຍັກຂຶ້ນມາໃໝ່ພາບດຽວເຈັດໂຕພ້ອມທັງຖືຄ້ອນ ທອງສີເຫຼືອງເຫຼື້ອມຫຸ້ມມາໃສ່ສິນໄຊ. ແຕ່ສິນໄຊກໍາດາບກວັດແກວ່ງເປັນ ແສງມາບແມບຄືດັ່ງຟ້າຜ່າ. ແສງອັນນີ້ໄປຖືກຍັກລົ້ມຕາຍອາບຟາບ ເດຍລະດາດ. ຍັກແຕ່ລະໂຕທີ່ຕາຍນັ້ນເກີດເປັນຍັກເພີ່ມຂຶ້ນມາອີກເຈັດ ໂຕແລະເປັນໄປດັ່ງນີ້ຂຶ້ນໄປລື້ມມາຫຼາຍເທື່ອຫຼາຍທີຈົນຈໍານວນຍັກເພີ່ມ



ຂຶ້ນເປັນພັນໆ. ພວກມັນຍົກຂະບວນມາຈົນຂີ້ໄຈ່ກຸ້ມມືດໄປທົ່ວທິບ ໝາຍຈະດັບສູນສິນໄຊແລະສັງທອງບໍ່ໃຫ້ເຫຼືອແມ່ນແຕ່ຮອງຮອຍ.

ບັດນີ້ ສິນໄຊຕ້ອງໃຊ້ທະນູຍິງໃສ່, ທ້າວກົ່ງຄັນສອນດ້ວຍທ່າທາງທະນົງອົງອາດແລ້ວປ່ອຍລູກສອນໄປເກີດເປັນໄຟລຸກວາບ. ລິດອັນຮ້ອນຮົນລາມໄໝ້ພວກຍັກຈົນລົ້ມລ່າວ, ໂຕໃດຍັງໂງຫົວຂຶ້ນມາໄດ້ກໍຖືກສັງທອງງັບຫົວຈົນແປ. ໂຕທີ່ເຫຼືອຕາຍຟ້າວຫຼົບໜີໄປໂດຍມຸ່ງໜ້າສູ່ປ່າໄພໜາທີ່ແນມເຫັນຢູ່ສຸດຂອບຟ້າ.

ເມື່ອຍັກໜີໄປແລ້ວສິນໄຊແລະສັງທອງກໍກັບຄືນມາຫາອາທີ່ຖ້ຳແກ້ວເພື່ອພາກັນເດີນທາງຕໍ່ໄປທາງໜ້າ. ນາງສຸມຸນທາຍັງຄຶດຫ່ວງໜ້າຫ່ວງຫຼັງ ຫຼຽວຄືນໄປເບິ່ງເມືອງອະໂນລາດດ້ວຍຈິດໃຈບໍ່ເບີກບານ.

ແຕ່ກໍຂືນຫຼາບບໍ່ໄດ້ຈຶ່ງບອກສິນໄຊໃຫ້ພາໜີໄປໄວໆ ເພາະຢ້ານກຸມພັນໄປອວນເອົາຍັກທົ່ວທັງໝົດແລ້ວຍົກມາເປັນກອງທັບໃຫຍ່ເພື່ອຍາດຊີງເອົານາງໄປ. ແຕ່ສິນໄຊບອກອາບໍ່ໃຫ້ຢ້ານກົວແຕ່ຢ່າງໃດເພາະທ້າວເຊື່ອໝັ້ນໃນຕົວເອງທີ່ຈະປົກປ້ອງອາໄວ້ໄດ້ຢ່າງປອດໄພ ແລ້ວທັງສາມກໍຍ້າຍອອກຈາກຖ້ຳແກ້ວເດີນທາງຕໍ່ໄປຈົນຮອດພູແຫ່ງໜຶ່ງ ຊຶ່ງມີຜາສາດວິດງາມຕັ້ງຢູ່ກາງປ່າ. ທັງສາມພາກັນເຂົ້າໄປພັກຢູ່ຜາສາດແຫ່ງນີ້. ພະອິນເປັນຜູ້ເນລະມິດຜາສາດດັ່ງກ່າວໄວ້ໃຫ້ເຊື້ອກະສັດທັງສາມໃນຍາມອັດຕະຄັດຂັດສົນ.

ສິນໄຊລົມກັບສັງທອງວ່າ ບັ້ນຮົບຂັ້ນຕໍ່ໄປນີ້ຈະໜັກໜ່ວງເຫຼືອປະມານ, ຈຳເປັນຕ້ອງເອີ້ນສີໂຫໃຫ້ມາຊ່ວຍ, ດັ່ງນັ້ນສິນໄຊຈຶ່ງຍິງສອນອອກໄປ, ລູກສອນໄປຕົກຕໍ່ໜ້າສີໂຫຜູ້ຊຶ່ງຢູ່ເຝົ້າເປັນໝູ່ທ້າວທັງຫົກທີ່ແຄມແມ່ນ້ຳ. ສີໂຫເຂົ້າໃຈວ່າຈະຕ້ອງເກີດເສິກໃຫຍ່ ຈຶ່ງຮີບໄປຫາສິນໄຊທັນທີໂດຍປະທ້າວທັງຫົກຄອງຖ້າຢູ່ແຄມນ້ຳແຫ່ງນັ້ນ.

ກອງທັບຍັກໄລ່ຕິດຕາມ

ຍັກກຸມພັນລອດຕາຍໜີເຂົ້າປ່າໄປເຕົ້າໂຮມໄພ່ພົນຈຳນວນຫຼວງຫຼາຍ ເພື່ອກຽມໄປຕົບມອດຝ່າຍສິນໄຊເປັນການແກ້ແຄ້ນ. ມັນຈັດກອງທັບຊ້າງໄດ້ສີ່ລ້ານໂຕ, ກອງທັບມ້າໄດ້ເຈັດແສນໂຕ, ທະຫານຖືຫອກຈຳນວນແປດກື. ເມື່ອທຸກສິ່ງທຸກຢ່າງກຽມພ້ອມ ກຸມພັນກໍສັ່ງບັນດາຂຸກຍັກຍົກກອງທັບຂະໜາດໃຫຍ່ນີ້ໄລ່ນຳສິນໄຊໄປ ຊຶ່ງປັດຈຸບັນສິນໄຊພາອາ ສຸມຸນທາ ອອກຈາກຖ້ຳແກ້ວແລ້ວໄປພັກຢູ່ຜາສາດແຫ່ງໜຶ່ງ.

ກອງທັບຍັກຈັດກຳລັງເພື່ອຕໍ່ສູ້ກັບສິນໄຊເປັນດັ່ງນີ້: ຍັກໄວຍຸເວດ

ຄຸມກອງທັບໜ້າ. ຍັກໄຄສີ ຄຸມກອງທັບປີກຊ້າຍ. ຍັກໄກສີ ຄຸມກອງທັບປີກຂວາ. ຍັກເພັດຊະໄຄຄຸມກອງທັບໜູນທາງກາງ. ແລະຍັກໄວຍຸກັບຄຸມກຳລັງສອດແນມແລະສື່ສານ.

ເວລາໃກ້ທ່ຽງ ກອງທັບໜ້າຊຶ່ງບັນຊາໂດຍຍັກໄວຍຸເວດ ກໍມາຮອດບໍລິເວນອ້ອມແອ້ມຜາສາດຂອງສິນໄຊ. ກອງທັບຍັກຫຼັ່ງມາຈົນຄັບທົບແລະມືດອື້ຕື້. ສຽງດັງປານແຜ່ນດິນຊິປິ້ນ. ບາງສຸມຸນທາຍ້ານຈົນສັ່ນເຊັນແລະບອກໃຫ້ສິນໄຊອອກໄປຍອມໂດຍດີ ເພາະເຫັນກອງທັບຍັກນັ້ນຍິ່ງໃຫຍ່ຫຼາຍ. ທ້າວທັງສາມຄືສິນໄຊ. ສັງທອງແລະສີໂຫ ປຶກສາກັນເຖິງຍຸດທະວິທີຕໍ່ສູ້ແລ້ວກໍບອກໃຫ້ອາເຮັດໃຈເຢັນໆໄວ້ເພາະສົງຄາມເທື່ອນີ້ບໍ່ມີຫຍັງເປັນໜ້າວິຕົກ. ທັງສາມຕົກລົງກັນໃຫ້ສີໂຫກັບຄືນໄປຫາອ້າຍທັງຫົກທີ່ເຝົ້າຢູ່ແຄມແມ່ນ້ຳ. ສິນໄຊກັບສັງທອງຂັບອາສາສູ້ເສິກພຽງລຳພັງເພາະເຫັນວ່າບໍ່ແມ່ນເລື່ອງສຸດວິໄສ. ສີໂຫເອົາຕົວເລັດລອດອອກຈາກຍຸດທະພູມໄປ. ສ່ວນສິນໄຊກັບສັງທອງແຕ່ງຊຸດອອກສະໜາມຮົບແລ້ວກໍປະກົດຕົວທີ່ນອກຜາສາດ. ຍັກເຫັນສິນໄຊເປັນເດັກນ້ອຍກໍພາກັນຫົວຂວັນແລະບອກກັນໃຫ້ຈັບເອົາທ້າວທັງເປັນເພື່ອໄປມອບໃຫ້ກຸມພັນ. ເພື່ອເປັນການຂູ່ຂວັນພວກຍັກສະແດງລິດເດດຕ່າງໆນາໆເຊັ່ນ ເນລະມິດຕົນເອງໃຫ້ທ່ອນຫົວເປັນຫົວຊ້າງ. ຫົວງົວ. ຫົວເມີຍ,ສ່ວນຕົນໂຕເປັນມ້າເຕັ້ນທະຍານໄປ. ຍັກບາງໂຕເປັນເຄິ່ງຄວາຍເຄິ່ງ ແຮດ. ຫຼືເຄິ່ງເສືອເຄິ່ງແບ້. ຫຼື ເຄິ່ງແຮດເຄິ່ງມັ່ງ. ຍັກບາງໂຕເຮັດໂຕໃຫ້ໃຫຍ່ສູງເທົ່າປາຍຕານແລະແລບລີ້ນປິ້ນຕາເພື່ອໃຫ້ສິນໄຊຢ້ານແຕ່ປະກົດວ່າທ້າວວາງຕົວເສີຍ ຄືດັ່ງບໍ່ມີຫຍັງເກີດຂຶ້ນຢູ່ອ້ອມຂ້າງ. ເມື່ອເປັນດັ່ງນັ້ນຍັກຈຶ່ງຫຸ້ມມາໃສ່ຫວັງຈະຈັບເອົາທ້າວທັງສອງ. ສິນໄຊ ປ້ອງກັນຕົວທັນໃດໂດຍຖອດດາບອອກມາກວັດແກວ່ງເກີດປະກາຍໄຟແມບມາບຄືດັ່ງ

ຟ້າຜ່າຍັກຖອຍຫຼັງຍ້າວ. ຈຳນວນໜຶ່ງລົ້ມລົງຕາຍເພາະລິດຮ້ອນແຮງຂອງໄຟ. ຍັກໄວຍຸເວດສັ່ງໃຫ້ທະຫານບຸກເຂົ້າມາອີກຜູ້ໃດຖອຍແມ່ນຖືກຂ້າຖິ້ມ. ບັດນີ້ສິນໄຊຊັດດາບໄປໃສ່ດາບເປັ່ງແສງເຫຼື້ອມແລ້ວແຕກອອກຄືບັ້ງໄຟດອກກາຍເປັນດາບນັບແສນນັບລ້ານດວງພຸ່ງເຂົ້າໃສ່ຝູງຍັກລົ້ມລະເນລະນາດ, ດາບສຽບຕາມຕົນໂຕ, ສຽບຄໍ ສຽບເອິກຍັກຈົນນອນຕາຍຈົມນອກເລືອດ.

ເມື່ອເຫັນກອງທັບຂອງໄວຍຸເວດເສຍໄພ່ພົນຫຼວງຫຼາຍ ຝ່າຍຍັກເພັດຊະໄຄ ຊຶ່ງຄຸມກອງທັບໜູນມາທາງຫຼັງກໍສັ່ງທະຫານໄສ້ຊ້າງເປັນຂະບວນໜາແໜ້ນແລະຍາວຢຽດມຸ່ງສູ່ສະໜາມຮົບ. ພ້ອມດຽວກັບກອງ

04/06/2026, 03:32 ປຶ້ມເລື່ອງ ສິນໄຊ

ທັບປີກຊ້າຍຊຶ່ງບັນຊາໂດຍຍັກໄຄສີ ແລະກອງທັບປີກຂວາຊຶ່ງບັນຊາໂດຍຍັກໄກສີກໍໂອບເຂົ້າມາ. ພວກຂຸນຍັກຄິດວ່າສິນໄຊບໍ່ມີທາງສູ້ແລະບໍ່ມີທາງໜີແລ້ວ. ເຂົາຈະຈັບເອົາສິນໄຊໄປເປັນຂອງຂວັນມອບໃຫ້ຍັກກຸມພັນ. ເມື່ອເຫັນທະຫານຝ່າຍຍັກຫຼວງຫຼາຍຈົນມືດມົວໄປໝົດສັງຫອງຊຶ່ງຢູ່ຮຽງຂ້າງສິນໄຊຕະຫຼອດເວລາກໍແຜງລິດເດດໂດຍເສກມົນເກີດເປັນນ້ຳນອງໄຫຼຖ້ວມ ແລະພັດເອົາພວກຍັກ ຈົມນ້ຳຕາຍຫຼວງຫຼາຍ. ຍັກເພັດຊະໄຄເສກມົນເປົ່າໃຫ້ນ້ຳແຫ້ງແລ້ວທັບຍັກຊຸດໃໝ່ກໍ່ໜູນຂຶ້ນມາອີກ.

ຍັກໄກສີແລະຍັກໄຄສີ ສັ່ງໃຫ້ທະຫານຕີໂອບເຂົ້າມາຈາກປີກຂວາປີກຊ້າຍ. ບັດນີ້ສິນໄຊຕ້ອງໃຊ້ທະນູ. ທ້າວຍິງສອນສຽງດັງສະນັ່ນຟ້າສະເທືອນດິນ. ລູກສອນເປັນໄຟລຸກພຸ່ງເຂົ້າໃສ່ລາມໄໝ້ຝູງຍັກຈົນຕາຍລະເນລະນາດ. ຍັກໄກສີ ເສກມົນເປັນກ້ອນຫີນຕົກລົງມາປານຫ່າຝົນເພື່ອຫວັງດັບມອດໄຟ. ແຕ່ສິນໄຊຍົກດາບຂຶ້ນກວັດແກວ່ງເຮັດໃຫ້ກອງຫີນຟົ້ງໄປຕົກທີ່ອື່ນແລະຕົກໃສ່ຫົວຍັກເອງຕາຍນັບບໍ່ໄຫວ. ຍັກໄກສີບໍ່ຍອມງ່າຍໆ. ບັດນີ້ ມັນຍິງສອນຂຶ້ນເທິງຟ້າແລ້ວເກີດເປັນໄຟຕົກລົງມາລາມໄໝ້ໄປຕາມພື້ນດິນ. ສິນໄຊກໍມີວິທີມອດໄຟ. ທ້າວຍິງສອນຂຶ້ນຟ້າເຊັ່ນດຽວກັນ. ລູກສອນເຮັດໃຫ້ຝົນຕົກລົງມາຫ່າໃຫຍ່ນ້ຳນອງແຜ່ນດິນຈົນໄຟມອດໝົດ. ໄກສີໂມໂຫແຮງໄສຊ້າງພຸ່ງເຂົ້າ ໃສ່ສິນໄຊ ແຕ່ສິນໄຊຮ້ອງໃສ່ຊ້າງແຮງໆຈົນຊ້າງຢຸດແລ້ວຫັນກັບຫຼັງ. ໄກສີໂດດລົງຈາກຄໍຊ້າງແລ້ວຫູບໃສ່ສິນໄຊໂດຍມີດາບເປັນອາວຸດ ທັງສອງຟັນກັນໄປມາ. ຄາວໜຶ່ງດາບທັງສອງຝ່າຍຄ້ຳກັນຢູ່ ຝ່າຍສິນໄຊເລີຍຈັບເອົາສອນທົ່ງໃສ່ດາບຂອງໄກສີຈົນຫັກທ່ອງ. ສິນໄຊຢູ່ໃນທ່າເໜືອກວ່າໃຊ້ດາບຟັນໄກສີຈົນຕາຍ.

https://online.fliphtml5.com/iqwiz/utcv/ 104/152

ຍັກໄວຍຸກັບເຫັນໄກສີຕາຍກໍຍິ່ງຄຽດແຄ້ນ. ມັນບັນຊາທະຫານລູ່ເຂົ້າມາຈົນແຜ່ນດິນໄງ່ກຸ້ມ. ສັງທອງກໍສູ້ສຸດແຮງ ໂດຍເອົາໂຕກິ້ງທັບພວກຍັກຕາຍນັບບໍ່ໄຂ່ວ. ສິນໄຊບໍ່ຢາກໃຫ້ນ້ອງລຳບາກຫຼາຍກໍຍິງສອນໃສ່ພວກຍັກຕື່ມ ສອນພຸ່ງໄປເປັນແປວໄຟຮ້ອນຮົນລວກລົນຍັກຕາຍປານແມງເມົ່າຖືກໄຟ. ຍັກໄວຍຸກັບກໍຕາຍກາງສະໜາມຮົບດ້ວຍ.

ເມື່ອເຮັດແນວໃດກໍບໍ່ແພ້ສິນໄຊ ຂຸນຍັກທີ່ຍັງເຫຼືອຢູ່ກໍຄິດຄົ້ນຫາອຸບາຍທຸກຢ່າງ. ຍັກໄຄສີຜູ້ຄຸມກອງທັບປີກຊ້າຍປອມໂຕເປັນທ້າວນ້ອຍຊົງຄືສິນໄຊແລ້ວເຂົ້າໄປຫາທຳທ່າເປັນມິດທີ່ລຶ້ງເຄີຍສະໜິດສະໜົມກັນ, ພໍໄດ້ໂອກາດຍັກໄຄສີກໍຜີປອງຍາດເອົາດາບ, ແຕ່ສິນໄຊລະວັງຕົວຢູ່ແລ້ວຈຶ່ງປ້ອງກັນຕົວໄວ້ທັນແລະໃຊ້ລູກສອນຊັດໃສ່ຄໍຍັກຕາຍກັບບາດ.

ສ່ວນຍັກເຜັດຊະໄຄປອມໂຕເປັນພາມແບກໄຫນ້ຳເຂົ້າໄປຫາ ແລະບອກສິນໄຊດື່ມນ້ຳເຢັນ. ສິນໄຊຫຼົງເຊື່ອ ເພາະເຫັນວ່າເປັນພາມເຖົ້າແກ່ເມື່ອເຂົ້າຮອດຕົວທ້າວແລ້ວພາມກໍຖອກນ້ຳໃສ່ຊຶ່ງເປັນນ້ຳຮ້ອນທີ່ສຸດ,ສິນໄຊຫຼົບຫຼີກແລ້ວຖອດດາບຟັນຄໍເຜັດຊະໄຄຕາຍກັບທີ່.ນ້ຳຮ້ອນຖືກສິນໄຊໜ້ອຍໜຶ່ງ ສັງທອງຈຶ່ງພົ່ນນ້ຳເຢັນໃສ່ໃຫ້ເຊົາຮ້ອນ.

ຍັກໄວຍຸເວດເຫັນວ່າໄພ່ພົນລົ້ມຕາຍເດຍລະດາດ ຈົນນັບບໍ່ຖ້ວນຈຶ່ງສັ່ງຖອຍທັບກັບຄືນໄປຫາກຸມພັນ. ມັນໄສຊ້າງອອກຈາກສະໜາມຮົບ ຊຶ່ງບັດນີ້ກາຍເປັນປ່າຊ້າຂອງໄພ່ພົນຍັກຈຳນວນມະຫາສານ ມຸ່ງໜ້າກັບຄືນໄປຍັງທິດທາງສູ່ເມືອງອະໂນລາດ ຕິດຕາມດ້ວຍກຳລັງພົນທີ່ລອດຕາຍຈຳນວນບໍ່ເທົ່າໃດ.

ສ່ວນສິນໄຊກັບສັງທອງພາອາສຸມຸນທາເດີນທາງຕໍ່ໄປຕາມເປົ້າໝາຍເດີມ. ທ້າວທັງສອງມີຄວາມທະນົງອົງອາດເພີ່ມຂຶ້ນຫຼັງຈາກທີ່ຜ່ານບັ້ນຮົບມາຢ່າງມີໄຊ.

ບັ້ນຮົບຕັດສິນ

ຍັກໄວຍຸເວດລອດຕາຍ ແລ້ວກັບຄືນໄປລາຍງານຕໍ່ຍັກກຸມພັນກ່ຽວກັບຄວາມປະລາໄຊ ໃນການຍົກທັບໄລ່ຕິດຕາມ ເອົານາງສຸມຸນທາ. ກຸມພັນໃຈຮ້າຍ ອາລົມຮ້ອນວີ່ໆ ແລ້ວກໍຮີບຈັດການເກນໄພ່ພົນ ເຂົ້າເປັນທະຫານໄດ້ຈຳນວນສີ່ກື. ຈັດກອງທັບຊ້າງໄດ້ສາມລ້ານໂຕ. ກຸມພັນບັນຊາກອງທັບເອງ ອອກຈາກເມືອງອະໂນລາດ ໂດຍມີຂຸນຍັກທີ່ເປັນມືຂວາຄື ໄວຍຸເວດແລະມືຊ້າຍ ຄື ວັນລຸວາ. ກອງທັບຍັກຖືດາບແລະດ້າງເປັນຊາບລາບບຸກເຂົ້າໄປໜ້າຈົນແຜ່ນດິນໄງ່ກຸ້ມມືດໄປທົ່ວທິບ.

ເມື່ອມາຮອດໃກ້ຜາສາດຂອງສິນໄຊ ກອງທັບຍັກກໍທຳການປິດລ້ອມຢ່າງແໜ້ນໜາ,ຫຼຽວໄປທາງໃດປະກົດມີແຕ່ທະຫານຍັກເຕັມໄປໝົດ.

ນາງສຸມຸນທາ ເຫັນກອງທັບຍັກແໜ້ນອີ່ຕີ່ກໍຢ້ານສັ່ນເຊັນແລະປຸກສິນໄຊໃຫ້ຕື່ນຂຶ້ນມາເບິ່ງ. ແຕ່ສິນໄຊບໍ່ຫວັ່ນແຕ່ຢ່າງໃດ. ໃນຂະນະນັ້ນສີໂຫຊຶ່ງຄິດເປັນຫວ່ງສິນໄຊຢູ່ບໍ່ເຊົາກໍທະຍານມາທາງອາກາດທັນເຫດການພໍດີ. ສັງທອງສັງເກດເບິ່ງສະໜາມຮົບຢ່າງລະອຽດເພື່ອບອກສິນໄຊໃຫ້ກຳສະພາບການໄດ້ຢ່າງຊັດເຈນ. ຕໍ່ມາທັງສາມທ້າວກໍອອກສູ່ສະໜາມຮົບດ້ວຍເຄື່ອງນຸ່ງເຕັມຍົດໂດຍມີອາສຸມຸນທາຢູ່ຮຽວຂ້າງຫຼານບໍ່ຍອມຫ່າງ.

ກຸມພັນມາບເຫັນໜ້າສິນໄຊແລ້ວ ກໍປານກັບບັ້ງໄຟແສນທີ່ພວມຈະທະຍານໄປທາງໜ້າໂດຍບໍ່ມີສິ່ງໃດສາມາດຢຸດຈັ້ງໄວ້ໄດ້. ມັນຂີ່ຊ້າງຊື່ວ່າ ອ້າຍຊຽງດາວ ລູ່ໃສ່ສິນໄຊຫວັງຈະຢຽບໃຫ້ມຸ່ນຄາຕີນ. ຊ້າງມາຮອດໄລຍະພໍເໝາະສິນໄຊຢືນຈົ້ງຢ່າງໝັ້ນຄົງຖອດດາບອອກມາຕັ້ງຮັບ

ຢ່າງບໍ່ສະທົກສະທ້ານ. ຊ້າງຢຸດກັບທີ່ແລ້ວຫັນຫຼັງຄືນໂດຍບໍ່ຍອມປະຕິບັດຕາມການບັນຊາຂອງກຸມພັນ. ເມື່ອເປັນດັ່ງນີ້ກຸມພັນກໍຮ້ອງຂຶ້ນເພັ້ງໆແລະສັ່ງທະຫານໃຫ້ໄປທາງໜ້າຜູ້ໃດຖອຍແມ່ນຕາຍບໍ່ເຫຼືອ.

ສິນໄຊ ກວັດແກວ່ງດາບເຫຼື້ອມມາບແມບ ເກີດເປັນດາບຄົມແວວວາວ ນັບເປັນແສນດວງ ເລັ່ງລື້ວໃສ່ໝູ່ຍັກລົ້ມຕາຍເປັນລ່າວ ປານມີລົມມິດແຖພັດນໍ່າ. ແຕ່ບໍ່ທັນດົນ ທະຫານຍັກກໍຖືຄ້ອນຫຸ້ມມາອີກ ສິນໄຊເອົາທະນູຍິງໃສ່ສຽງດັງປານແຜ່ນດິນໄຫວ, ລູກສອນເປັນໄຟພຸ່ງເຂົ້າລວບໄໝ້ຝູງຍັກຕາຍນັບບໍ່ໄຫ່ວ. ຍັກອີກຝູງໜຶ່ງຖືຂວານແລະກ້ອນຫີນທະຍານມາທາງອາກາດ, ສີໂຫດີດຜະຫຍອງຂຶ້ນໄປເອົາງາແທງຍັກຕາຍຈົນເລືອດຕົກລົງດິນປານຫ່າຝົນ.ສ່ວນສັງທອງກໍເອົາໂຕກິ້ງທັບທັງເອົາປາກງັບຍັກຈົນຫົວແປຫົວແປ໊ດ. ສະໜາມຣົບບາງບ່ອນມີດິນ

ໄວ້ກຸ້ມ.ບາງບ່ອນມືດມົວໄປດ້ວຍຄວັນໄຟ.ທະຫານຍັກນອນຕາຍເດຍລະດາດຢູ່ທົ່ວພື້ນສະໜາມ.

ການຕໍ່ສູ້ດຳເນີນໄປຫຼາຍຮູບແບບ. ຄັ້ງໜຶ່ງສີໂຫໃຫ້ສິນໄຊແລະອາສຸມຸນທາຂຶ້ນຂີ່ຫຼັງແລ້ວທະຍານຂຶ້ນສູ່ເວຫາ. ຍັກກຸມພັນກໍບັງຄັບຊ້າງເຫາະຂຶ້ນໄປເພື່ອໄລ່ຕິດຕາມແລ້ວກໍເອົາທ້ອງຟ້າເປັນສະໜາມຕໍ່ສູ້ກັນ. ກຸມພັນ ເສກມົນເປົ່າເປັນໄຟລາມໄໝ້ຢູ່ກາງອາກາດ, ສິນໄຊກວັດແກວ່ງດາບເກີດເປັນລົມແດງດັບມອດໄຟກ່ອນທີ່ຈະລາມມາເຖິງຕົວ. ສູ້ກັນຢູ່ເທິງຟ້າບໍ່ໄຫວສິນໄຊແລ້ວກຸມພັນກໍລົງສູ່ພື້ນດິນ. ມັນສັ່ງທະຫານບຸກເຂົ້າໃສ່ສິນໄຊຈາກສອງປີກຄື ໄວຍຸເວດ ຄຸມປີກຂວາ, ວັນລຸວາ ຄຸມປີກຊ້າຍ, ສ່ວນກຸມພັນເອງຕີເຂົ້າທາງໜ້າ. ຟັງສຽງດັງສະນັ່ນຟັ່ນຟື້ນ. ສິນໄຊເຫັນຍັກມາຫຼາຍຈົນຄັບທີບກໍກົ່ງທະນູຍິງສອນເຂົ້າໃສ່.ລູກສອນແຕກອອກເປັນປະກາຍໄຟແລ້ວກາຍເປັນດາບເຜັດພຸ່ງເຂົ້າໃສ່ຝູງຍັກລົ້ມລະເນລະນາດ. ກຸມພັນເຫັນໄພ່ພົນລົ້ມຕາຍ,ບາງພວກກໍຖອຍໜີຢ່າງບໍ່ເປັນລະບຽບມັນຈຶ່ງສັ່ງໃຫ້ຂຸນຍັກສະກັດລັດໄວ້ແລ້ວລະດົມກຳລັງຂຶ້ນມາອີກໃໝ່.ກຸມພັນທັງເຫຼືອໃຈໃຫ້ລູກນ້ອງ ທັງ ໂມໂຫໃຫ້ສິນໄຊ ຈຶ່ງໜ້າແດງດ້ວຍເລືອດແຄ້ນ. ມັນຊີ້ໜ້າສິນໄຊທັງດ່າວ່າຢ່າງເຕັມສິບເຕັມປາກ. ກຸມພັນ: "ເຖິງຈະແມ່ນໂຄດເຊື້ອຂອງມຶງ ແຕ່ນາງເປັນເມຍຂອງກູແລ້ວ. ເລື່ອງຜິດມັນເລື່ອງເກົ່າເລື່ອງຫຼັງແຕ່ກໍຄວນເວົ້າກັນຕາມທາງທີ່ຊອບທີ່ຄວນ. ອັນນີ້ມາເຮັດຫັກໜ້າຫັກຕາກັນກູທົນບໍ່ໄດ້, ມາເລວກັນໃຫ້ເຫັນດຳເຫັນແດງເລີຍ!" ,ສິນໄຊວ່າ: "ຊິເລວກັນໄປຮອດໃສ, ເຫັນຕວ່າໄພ່ພົນຍັກຕາຍເດຍລະດາດຈົນນັບບໍ່ໄຫວ. ເຊົາສາຢ່າເສຍເລືອດຕື່ມເທາະ!" ຍັກກຸມພັນເຫັນວ່າສິນໄຊອ່ອນສຽງລົງເລີຍໄດ້ໃຈທັງເວົ້າຂຶ້ນວ່າ: "ຄັນຢ້ານຕາຍກໍປ່ອຍເມຍກູຄືນມາກູຊິໄວ້ຊີວິດມຶງ. ຖ້າບໍ່ປ່ອຍກູຊິນໍາຍ່ອງຈົນຮອດ

ເມືອງ - ຕາຍໝົດທັງໂຄດໂລດ!"

ສິນໄຊຕອບວ່າ: "ບໍ່ຕ້ອງເວົ້າຮອດເລື່ອງປ່ອຍອາສຸມຸນທາຄືນໄປ. ເລືອກເອົາວ່າເຈົ້າຊິໜີໄປ ຫຼືຊິຕາຍໃຫ້ໝູ່ແຮ້ງໝູ່ກາມ້ຽນຄາບ."

ກຸມພັນຮູ້ສຶກຮ້ອນຮົນປານມີໄຟລຸກວື່ໃນຫົວໃຈ. ມັນຮ້ອງໃສ່ນາງສຸມຸນທາວ່າ: "ນ້ອງລືມອ້າຍແລ້ວຫວະ? ບັກນັ້ນແມ່ນຜົວຫຼືພີ່ນ້ອງແນວໃດກັນແທ້? ຄືນມາຫາອ້າຍສາ, ຖ້າບໍ່ດັ່ງນັ້ນອ້າຍຈຳເປັນຕ້ອງສູ້ຢ່າງຖະຫວາຍຊີວິດເພື່ອເອົານ້ອງຄືນມາ."

໔ ສຸມຸນທາເວົ້າປົນສຽງສະອື້ນວ່າ: "ທ້າວນີ້ແມ່ນຫຼານແທ້ໆມີລິດເດດເກັ່ງກ້າຜາບຂຸນຍັກລົງມາແລ້ວທຸກລາຍ. ໃຫ້ອ້າຍຄືນໄປສາ,ຢ່າມານຳຫາເທາະ, ນ້ອງຢ້ານອ້າຍຕາຍປະໄພ່ພົນລ້າໆ."

ສຸມຸນທາ ເວົ້າແລ້ວກໍຮ້ອງໄຫ້ຫຼັ່ງນ້ຳຕາ. ກຸມພັນເຫັນດັ່ງນັ້ນກໍເຊື່ອວ່າເມຍຍັງເປັນໃຈກັບຕົນຢູ່, ມັນຈຶ່ງໄສຊ້າງພຸ່ງເຂົ້າໃສ່ສິນໄຊ, ທ້າວນ້ອຍເອົາດາບສະກັດຄົມຂວານຂອງຍັກ ຈົນກຸມພັນຟົ້ງຕົກຈາກຊ້າງກິ້ງໄປຫຼາຍສິບວາ. ມັນລຸກຂຶ້ນເອົາມືຕົບເອິກຕົນເອງຢູ່ຕຸບໆ ແລ້ວບອກໃຫ້ຂຸນຍັກຄືໄວຍຸເວດແລະວັນລຸວາຍົກກຳລັງເຂົ້າຕະລຸມບອນ. ສອງຂຸນຍັກປະຕິຍານວ່າຈະສູ້ແບບຖະຫວາຍຊີວິດ ເພື່ອກຽດສັກສີຂອງກຸມພັນ.ພວກມັນໄສຊ້າງປີ່ນຊ້າຍປີ່ນຂວາເພື່ອກັນບໍ່ໃຫ້ທະຫານໜີທັບແລ້ວສັ່ງໃຫ້ກຳລັງທະຫານລູ່ເຂົ້າມາຈົນມືດອື້ຕື້. ສິນໄຊເວົ້າກັບສີໂຫວ່າບັນຮົບເທື່ອນີ້ເອົາເປັນເອົາຕາຍເປັນບັ້ນຮົບຕັດສິນ, ຕ້ອງໃຫ້ມັນສິ້ນສຸດລົງໄວໆເພື່ອບໍ່ໃຫ້ແກ່ຍາວເວລາ. ແລ້ວສີໂຫກໍທະຍານເຂົ້າຫາຝູງຍັກທີ່ບັນຊາໂດຍໄວຍຸເວດໄລ່ແທງອຸດຕະຫຼຸດ. ຝ່າຍສັງທອງກໍລຸຍຈົນມອມແມມທັງກິ້ງທັບທັງວັບຫົວຍັກທີ່ບັນຊາໂດຍວັນລຸວາຈົນທັບຍັກແຕກຊະນະໂມ, ວັນລຸວາທ້ອງໂປດໄສ້ໂລ່ອອກມາແລ້ວກໍຕາຍກາງສະໜາມ, ກຸມ

ພັນຖືດາບເຫຼື້ອມມາບໆຮ້ອງໃສ່ທະຫານໃຫ້ຕະລຸມບອນເຂົ້າໄປ. ສິນໄຊຍິງສອນໃສ່ຖືກກຸມພັນລົ້ມຟຸບລົງມັນສົ່ງສຽງຮ້ອງໂອຍຄາງ. ໄພ່ພົນຍັກຄິດວ່າຫົວໜ້າຕາຍແລ້ວກໍພາກັນໜີຕະເຫຼີດເປີດເປີງປະປ່ອຍກຸມພັນໃຫ້ດີ້ນດ່າວຢູ່ຜູ້ດຽວ. ມັນກີ້ງເກືອກໄປມາຈົນລູກສອນຫຼຸດອອກຮູ້ເມື່ອຄືງເປັນປົກກະຕິແລ້ວມັນກໍທະຍານຂຶ້ນສູ່ເວຫາເພື່ອເບິ່ງສະພາບສະໜາມຮົບ. ປະກົດວ່າໄພ່ພົນຍັກແຕກໜີບໍ່ເປັນລະບຽບ. ກຸມພັນເຫັນວ່າບໍ່ມີທາງຈະສູ້ຮົບໃຫ້ແພ້ສິນໄຊຈຶ່ງເສກມົນແລ້ວປະກົດຜາສາດເກີດຂຶ້ນພ້ອມກັບມີນາງລະຄອນອ່ອນແອ້ນງົດງາມຮ້ອງລຳຢູ່ໃນນັ້ນ. ມັນເປັນເລ່ກົນຂອງກຸມພັນທີ່ວາງໄວ້ເພື່ອຈະໃຫ້ສິນໄຊເຂົ້າໄປໃນຜາສາດແລ້ວມັນກໍຈະຈັດການເຜົາ. ຄາວໜຶ່ງສິນໄຊເລາະລຽບເບິ່ງສະໜາມຮົບມາເຫັນຜາສາດທັງມີນາງລະຄອນເຊີນຊວນເຂົ້າໄປສິນໄຊມີສະຕິລະວັງຕົວແລະພິຈາລະນາເບິ່ງຄັກໆແລ້ວກໍຮູ້ວ່າເປັນສິ່ງປອມແປງທີ່ຍັກເຮັດຂຶ້ນມາ. ທ້າວລອງຍິງສອນເຂົ້າໃສ່ ຜາສາດກໍເລີຍພັງທະລາຍມຸ່ນອັບຍັບ.

ຍັກກຸມພັນເຫັນວ່າ ກົນອຸບາຍບໍ່ໄດ້ຜົນກໍເລີຍໂສສຸດ, ມັນຈັບດາບລູ່ເຂົ້າໃສ່ສິນໄຊອີກແຕ່ສິນໄຊຕັ້ງທ່າກຽມພ້ອມຢູ່ແລ້ວ, ທ້າວຈັບສອນຊັດໃສ່ມືກຸມພັນຈົນດາບຫຼຸດລົງດິນ, ກຸມພັນຕົກຢູ່ໃນທ່າຈົນຕາແຈຄືແປເຮືອນຫຼຸຍາມຝົນຕົກແຮງ, ມັນທະຍານບິນສູ້ແບບຖະຫວາຍຊີວິດຈົນໃນທີ່ສຸດກໍຖືກດາບສິນໄຊຕາຍຄາສະໜາມຮົບ. ຮ່າງກຸມພັນແປດເປື້ອນໄປດ້ວຍເລືອດແດງນອນຢູ່ກັບພື້ນດິນທ່າມກາງທະຫານຍັກຈຳນວນນັບບໍ່ໄຫວທີ່ເອົາສະຖານທີ່ແຫ່ງນີ້ເປັນປ່າຊ້າຂອງຕົນ.

ນາງສຸມຸນທາຮ້ອງໄຫ້ສະອື້ນນຳຜົວນ້ຳຕາໄຫຼອາບແກ້ມບໍ່ມີຍາມແຫ້ງ. ນາງເອົາມືລູບຮ່າງຄີງກຸມພັນດ້ວຍຄວາມເປັນຫວ່ງອາໄລຫາ. ສິນໄຊທີ່ຢືນຢູ່ໃກ້ໆ ຊວນອາກັບຄືນເຂົ້າໄປຜາສາດເພື່ອພັກຜ່ອນ.

04/06/2026, 03:32

ນາງລຸກຂຶ້ນຊ້າໆແລ້ວເວົ້າກັບຫຼານວ່າ:

"ອາຍັງມີເລື່ອງອຸກອັ່ງເຫງົາໃຈຢູ່ອີກ ຄືວ່າອາເປັນຫວ່ງນຳລູກສາວຊື່ ສີດາຈັນ, ດຽວນີ້ນາງໄປຢູ່ນຳຜົວທີ່ເມືອງນາກ ແຕ່ເກົ່າມາຫຼັງກໍໄດ້ຕິດຕໍ່ພົວພັນກັນເປັນປະຈຳ, ແຕ່ບັດນີ້ພໍ່ກໍມາຕາຍອາເອງຊ້ຳຊິກັບຄືນໄປເມືອງເປັງຈານ ສີດາຈັນ ກໍຕ້ອງຖືກຕັດຂາດຈາກພີ່ຈາກນ້ອງ, ເຮັດແນວໃດຈຶ່ງຊິຕິດຕໍ່ຖາມຂ່າວຄາວກັນໄດ້? ອາຊິບໍ່ມີໂອກາດພົບພໍ້ກັບລູກອີກແລ້ວຕໍ່ໄປນີ້ . . ."

ສິນໄຊເວົ້າວ່າ: "ຂໍອາຢ່າໄດ້ເປັນທຸກກັງວົນເລີຍ,ຫຼານອາສາເຮັດທຸກຢ່າງທີ່ອາຕ້ອງການ,ຂໍເວລາສາມມື້ທໍ່ນັ້ນຫຼານຊິໄປນຳເອົານາງຄືນມາໃຫ້ໄດ້."

ສິນໄຊອ່ວາຍໜ້າໄປເວົ້າກັບສີໂຫຼຸຄ່າ: "ມັດນີ້ໄປນ

ລົງໄດ້ຢ່າງຮາບຄາບແລ້ານ.

ກ່ອນ, ນ້ອງເອງຊິໄດ້ລົງໄປຍັງພື້ນມະຫາສະໝຸດ ເພື່ອນຳເອົາພີ່ນ້ອງຂອງພວກເຮົາຊື່ນາງ ສີດາຈັນ."

ສີໂຫສັ່ງລາແລ້ວກໍທະຍານຂຶ້ນສູ່ເວຫາ. ສິນໄຊ ສັງທອງແລະອາສຸມຸນທາພາກັນປີ່ນຫຼັງໃຫ້ສະໜາມຮົບທີ່ເຕັມໄປດ້ວຍຊາບຍັກແລ້ວຄືນສູ່ຜາສາດ.

ຄືນນັ້ນ ສຸມຸນທາ ສະອື້ນໄຫ້ຮ່ຳໄຮຫາຜົວຕະຫຼອດຄືນ.

https://online.fliphtml5.com/iqwiz/utcv/

04/06/2026, 03:32 ປຶ້ມເລື່ອງ ສິນໄຊ

ໄປເມືອງນາກ

ສິນໄຊ ຄອບລາອາສຸມຸນທາແລ້ວກໍເດີນທາງໄປຍັງເມືອງ ນາກ ຊຶ່ງຢູ່ໃຕ້ມະຫາສະໝຸດ. ສັງທອງລົງໄປໃນນ້ຳກ່ອນ. ປະກົດວ່ານ້ຳຍະອອກເປັນທີນທາງອັນຍາວຢຽດແລ້ວທ້າວທັງສອງກໍພາກັນໄຕ່ໄປຕາມທາງຢ່າງສະດວກສະບາຍ. ເມື່ອຮອດເມືອງນາກສິນໄຊເຂົ້າໄປພົບກັບເສນາຜູ້ໃຫຍ່ຂອງພະຍານາກແລະແຈ້ງຈຸດປະສົງວ່າຢາກມາຫຼິ້ນໝາກສະກາສູ້ກັບພະຍານາກລອງເບິ່ງ ເພາະມີຂ່າວເລົ່າລືກັນວ່າພະຍາເມືອງນີ້ຫຼິ້ນໝາກສະກາເກັ່ງເປັນຍອດ. ເສນານຳເອົາຄວາມໄປແຈ້ງຕໍ່ພະຍາວະລຸນນະລາດຜູ້ເປັນເຈົ້າຄອງເມືອງແຫ່ງໃຕ້ມະຫາສະໝຸດ. ພະຍາອົງນີ້ສົນໃຈເປັນພິເສດທີ່ໄດ້ຍິນວ່າເດັກນ້ອຍຈາກແດນໄກ ມີຄວາມອາດຫານທີ່ຈະມາຫຼິ້ນໝາກສະການຳພະອົງ. ແລ້ວພະຍານາກກໍສັ່ງໃຫ້ເສນາພາເອົາທ້າວນ້ອຍເຂົ້າໄຫວ້ທີ່ຜາສາດ. ຕາມທາງມຸ່ງສູ່ທໍາຄໍາຊາວນາກທັງຍິງທັງຊາຍແປງເພດເປັນມະນຸດ ແລ້ວພາກັນມາຫຸ້ມເບິ່ງສິນໄຊກັບສັງທອງດ້ວຍຄວາມຊື່ນຊົມດີໃຈ ເພາະສິນໄຊແຕ່ງຊຸດເຕັມຍົດໜ້າຕາສົດໃສ ວາດຢ່າງເປັນສະຫງ່າ. ທ້າວໄປປະກົດຕົວຕໍ່ໜ້າພະຍານາກໂດຍເອົາມືຖືຫອຍສັງວາງລົງຕໍ່ໜ້າເພາະຕອນນີ້ສັງທອງແປງເພດເປັນຫອຍສັງທຳມະຊາດ. ສິນໄຊ ເລົ່າວ່າທີ່ຕົນໄດ້ມາຮອດມາເຖິງແຫ່ງນີ້ກໍຍ້ອນວ່າພະຍາພໍ່ສັ່ງໃຫ້ໄປສືບຫານ້ອງສາວຊື່ວ່າສຸມຸນທາຊຶ່ງຍັກກຸມພັນໄດ້ໄປຫຼອນລັກເອົາແຕ່ເຫິງນານແລ້ວ. ຫຼັງຈາກທີ່ໄດ້ພົບພໍ້ກັບອາສຸມຸນທາແລ້ວຝ່າຍອາຊໍ້າບອກວ່າມີລູກສາວຊື່ວ່າ ສີດາຈັນ ຊຶ່ງມາເປັນມະເຫສີຂອງພະຍາຢູ່ເມືອງໃຕ້ມະຫາສະໝຸດພີ້ ຈຶ່ງໄດ້ນຳມາ

https://online.fliphtml5.com/iqwiz/utcv/ 112/152

ຢ້ຽມຢາມຖາມຂ່າວແລະຫວັງຂອດໄມຕີກັບເມືອງນີ້ໄວ້ເພື່ອວ່າໃນອະນາຄົດຈະໄດ້ຕິດຕໍ່ທ່ອງທ່ຽວຫາກັນ.

ພະຍານາກກ່າວຕ້ອນຮັບສິນໄຊດ້ວຍຄວາມປິຕິຍິນດີແລ້ວຖາມວ່າ: "ເສນາບອກເຮົາວ່າໂຕຢາກຫຼິ້ນພາກສະກາກັບເຮົາແມ່ນບໍ? ໂຕຄືຊິເກັ່ງຫຼາຍເນາະ!" ສິນໄຊວ່າ: "ຂ້ານ້ອຍໄດ້ຍິນຊື່ສຽງວ່າ ພະຍາຫຼິ້ນເກັ່ງຫຼາຍຈຶ່ງຢາກມາລອງເບິ່ງ, ຕາງມາຮຽນຮູ້ເອົາປະສົບການກໍພຽງເທົ່ານັ້ນ." ພະຍານາກ: "ແລ້ວໂຕຊິເອົາຫຍັງ ມາຕັ້ງເປັນຄ່າພະນັນລະ?" ສິນໄຊ: "ຂ້ານ້ອຍມີຫອຍສັງ, ສອນ ແລະດາບ ເປັນຄ່າພະນັນ."

ພະຍານາກ: "ສິ່ງຂອງເຫຼົ່ານີ້ ມີລິດເດດແນວໃດ?"

ສິນໄຊ: "ແລ້ວແຕ່ພະຍາຈະຄຶດເອົາ, ຄືພະຍາຄຶດສິ່ງໃດກໍຈະໄດ້ສິ່ງນັ້ນ,

ຝ່າຍພະຍາເດ ຈະເອົາສິ່ງໃດເປັນຄ່າພະນັນ?" ພະຍານາກ: "ເຮົາເອົາເມືອງເປັນຄ່າພະນັນ." ພະຍານາກເວົ້າດັ່ງນີ້ ເພາະເຊື່ອໝັ້ນຕົນເອງວ່າຈະເປັນຝ່າຍແພ້ແລະຫວັງຢ່າງຍິ່ງວ່າຈະໄດ້ຄອບຄອງສິ່ງຂອງສາມຢ່າງນັ້ນ.

ການຫຼິ້ນໝາກສະກາເລີ່ມຕົ້ນຂຶ້ນໂດຍເສນາເອົາແປ້ນໝາກສະກາມາຕັ້ງກາງເຄິ່ງລະຫວ່າງພະຍາກັບສິນໄຊ. ການຍ້າຍລູກສະກາດຳເນີນໄປຢ່າງເຄັ່ງຂຶມ. ເວລາຜ່ານໄປສິນໄຊຍ້າຍລູກສະກາໄດ້ຢ່າງຖືກຈຸດແລະຢູ່ໃນທ່າເໜືອກວ່າ. ພະຍານາກຕົກຢູ່ໃນທ່າເສຍແຕ້ມແລະມີສີໜ້າກະວົນກະວາຍ. ແລ້ວໃນທີ່ສຸດສິນໄຊກໍເປັນຝ່າຍແພ້ໃນກະດານທີໜຶ່ງ. ການຫຼິ້ນຕັ້ງຕົ້ນໃໝ່ອັນເປັນກະດານທີສອງແລະຕໍ່ມາກໍແມ່ນກະດານທີສາມ. ປະກົດວ່າສິນໄຊເປັນຝ່າຍແພ້ທັງໝົດ.

ພະຍານາກ ຜູ້ເສຍພະນັນມີໜ້າຕາບໍ່ເບີກບານຈົ່ມພຸມພຳວ່າ: "ກຳເວນມາຮອດແລ້ວ, ກູເສຍບ້ານເສຍເມືອງແລ້ວບາດນີ້!"

ພະອົງຫັນໄປເວົ້າກັບໝູ່ເສນາວ່າ: "ເຮົາເຫັນວ່າ ແມ່ນເດັກນ້ອຍຈຶ່ງໄດ້ເອົາເມືອງເປັນຄ່າພະນັນ, ເທື່ອນີ້ ໂຊກບໍ່ເປັນຂອງເຮົາແລ້ວ. ເຮົາຕົກຕ່ຳເສຍບ້ານເມືອງແລ້ວເສນາເອີຍ."

ພວກເສນາມຸນຕີແລະບໍລິວານທັງຫຼາຍເວົ້າວ່າ: "ອັນເດັກນ້ອຍລ້າໆບໍ່ໃຫ້ຫຍັງມັນເລີຍກໍຊິມີຫຍັງເກີດຂຶ້ນ! ມັນມາຕົກຢູ່ທ່າມກາງພວກເຮົາຊາວນາກມັນເຮັດຫຍັງພວກເຮົາບໍ່ໄດ້ດອກ."

ສິນໄຊໄດ້ຍິນດັ່ງນັ້ນກໍເວົ້າວ່າ: "ຖ້າພະຍາບໍ່ມອບເມືອງໃຫ້ຂ້ານ້ອຍກໍຂໍເອົາແຕ່ນາງສີດາຈັນຄືນເມືອເທົ່ານັ້ນ."

ປະກົດວ່າຄຳເວົ້າອັນນີ້ເຮັດໃຫ້ພະຍານາກໂມໂຫແຮງເພາະເປັນການຢຽບຢ່ຳສັກສີ, ເປັນຄຳເວົ້າທີ່ສະຫາວ ບໍ່ຢຳເກງກັນເລີຍ.

"ເມຍບອນຮຽງຂ້າງກູແທ້ໆມຶງຊິມາຍາດເອົາໄປເປັນຊູ້ຊັ້ນຫວະ! ນີ້ສູ ເອົາມັນໄປຂັງຄອກໄວ້!" ພະຍານາກສັ່ງບອກເສນາ.

ແລ້ວເສນານາກກໍແລ່ນຫຸ້ມມາຫວັງຈະຈັບກຸມຮັດກັຽວສິນໄຊໃຫ້ຕາຍກັບທີ່. ສິນໄຊຈໍາຕ້ອງປ້ອງກັນຕົວຈຶ່ງຍິງສອນໄປໃສ່ເຮັດໃຫ້ພວກນາກຕາຍຢຽດຄັ້ງນີ້ງ. ພາຍໃນຫໍຄໍາຂອງພະຍານາກເກີດສັບສົນວຸ່ນວາຍ. ພວກນາກທີ່ເຫຼືອຕາຍແລ່ນສວ່ານສົນບໍ່ເປັນລະບຽບ. ສິນໄຊອອກຈາກຫໍຄໍາໄປທີ່ສະໜາມໄຊເຝົ້າສັງເກດເບິ່ງສະພາບວຸ່ນວາຍແລະລະວັງເພື່ອບໍ່ໃຫ້ໄດ້ຮັບອັນຕະລາຍ.

ພະຍານາກຮຽກລະດົມພົນ ໂດຍເລືອກເອົາຂຸນນາກໂຕເກັ່ງກ້າແລ້ວແຈກງ້າວໃຫ້. ຕໍ່ໄປພວກຂຸນນາກກໍຈັດແຈງກໍາລັງເປັນວຸ່ນໆໂດຍເອີ້ນເອົາພວກງູພິດ. ພວກເງືອກທີ່ພົ່ນໄຟແດງອອກຈາກປາກມາໂຮມກັບຕັ້ງຫຼວງຫຼາຍ. ຫຼຽວໄປທາງໃດເຫັນແຕ່ເກັດເຫຼື້ອມເປັນແສງຍິບຍັບສ່ວນພະຍານາກກໍສະແດງລິດເດດເສກມົນເກີດມີຫຼາຍຫົວທອນແດງຮອນໆຍໍຄໍຂຶ້ນພົ້ນນາກໂຕອື່ນໆ. ຕໍ່ມາກອງທັບນາກກໍອອກສູ່ສະໜາມຣົບ. ສິນໄຊກັບສັງທອງກຽມຕົວສູ້ແບບຖະຫວາຍຊີວິດ ເພາະຝ່າຍຕົນບໍ່ມີຄວາມຜິດຫຍັງ. ຫາກແຕ່ຖືກພະຍານາກສໍ້ໂກງແບບດ້ານໆ. ເມື່ອກອງທັບນາກມາຮອດໃກ້ສັງທອງກໍເຂົ້າຕະລຸມບອນໂດຍກິ້ງທັບທັງວັບນາກຈົບຕົວແປຕາຍເດຍລະດາດ. ແຮງຕາຍນາກກໍແຮງຫຼັ່ງໄຫຼມາຢ່າງບໍ່ຂາດສາຍທັງເອົາຫາງຟາດທັງພົ່ນອາຍພິດຮ້ອນປານໄຟ. ແຕ່ສິນໄຊບໍ່ຫວັ່ນບໍ່ທໍ້ຖອຍແຕ່ຢ່າງໃດ. ທ້າວຍິງສອນໄປໃສ່ເກີດແສງແມບເຫຼື້ອມຮ້ອນແຮງແລະລວກໄໝ້ພວກນາກຕາຍນັບບໍ່ໄຫວ.ພະຍານາກສັ່ງໃຫ້ໝູ່ນາກລຸຍເຂົ້າໄປຕີກຽ. ກອງທັບນາກບຽດກັນມາຈົນລັບຫີບທອນແດງຊ້ອງຊິບລິບ.ແຕ່ແລ້ວທອນແດງທີ່ເຕັມທົ່ວສະໜາມນັ້ນ

ກໍຍຸບຍອບລົງເມື່ອລູກສອນພຸ່ງເຂົ້າໃສ່. ລູກສອນລອຍດຸ່ງຈາກບ່ອນໜຶ່ງແລ້ວໄປສູ່ອີກບ່ອນໜຶ່ງຕາມໃຈບັນຊາຂອງຜູ້ຍິງສອນ. ພວກບາກນອນຕາຍທັບກັນຈົນບໍ່ມີບ່ອນຫວ່າງ. ພວກທີ່ເຫຼືອຕາຍກໍແລ່ນອິເລີເປີເສີໄປຫາພະຍາບາກຜູ້ຊຶ່ງພວມຢູ່ໃນອາການຮ້ອນຮົນກະວົນກະວາຍເພາະເຫັນທ່າວ່າຈະສູ້ບໍ່ໄຫວແລ້ວ. ຂຸນບາກບອກພະຍາບາກວ່າໝົດກຳລັງທີ່ຈະຕໍ່ສູ້ຕໍ່ໄປແລ້ວມີທາງດຽວທີ່ຈະລອດຊີວິດຄືຫຼົບໜີໄປລີ້ຢູ່ຕາມຮ່ອມຫ້ວຍຫຼືຫຼືບຫີນໃນປ່າດົງວົງກົດ. ພະຍາບາກນ້ຳຕາພັງຍ່າວເພາະພວກຂຸນບາກ. ພວກມະຫາດເລັກ ຕະຫຼອດພວກນາງສະໜົມພາກັນແຕກຊະກະຈັດກະຈາຍ. ໃນທີ່ສຸດ ພະຍາວະລຸນນະລາດ ຜູ້ປົກຄອງເມືອງນາກກໍຍອມຈຳນົນໂດຍຍໍມອບຕົວຕໍ່ສິນໄຊດ້ວຍຄວາມນອບນ້ອມຢຳເກງ.

ພະຍາບາກກ່າວວ່າ: "ໂດຍໃຫ້ເປັນໄປຕາມຈຸດປະສົງຂອງທ່ານຕໍ່ໄປນີ້ໃຫ້ນາງສີດາຈັນຢູ່ໃນຄວາມເບິ່ງແຍງຂອງທ່ານ, ເຫຼົ່າເສນາມຸນຕີທີ່ຍັງເຫຼືອພ້ອມທັງໄພ່ພົນທັງໝົດນີ້ຂໍໃຫ້ເປັນຂ້າໃຊ້ຂອງທ່ານ,ສົມບັດອັນໃດທີ່ມີຢູ່ໃນເມືອງນາກທັງໝົດຂ້ານ້ອຍຂໍມອບແກ່ທ່ານທຸກປະການ"

ສິນໄຊເວົ້າວ່າ: "ເຮົາບໍ່ໄດ້ຫວັງຈະມາຂົ່ມເຫງຫຼືປອງຮ້າຍ ຕໍ່ຜູ້ໃດ. ເຮົາມາຂໍຫຼົ້ນພາກສະກາເພື່ອລອງເສັງກັບທ່ານ ແຕ່ທ່ານບໍ່ແພ້ກໍເລີຍໃຈຮ້າຍ, ແນວໃດກໍຕາມການທີ່ມາເຫັນກັນເທື່ອດຽວແລ້ວຮັກກັນໂລດນັ້ນບໍ່ໝັ້ນຄົງເທົ່າໃດດອກ, ຊັງກັນກ່ອນແລ້ວພາຍລຸນມາຈຶ່ງຮັກກັນນັ້ນໝັ້ນຄົງດີ. ຕໍ່ໄປນີ້ສອງຝ່າຍພວກເຮົາຈະຕິດຕໍ່ພົວພັນກັນໃຫ້ແໜ້ນແກ່ນຍິ່ງຂຶ້ນ, ເຮົາມອບໃຫ້ທ່ານເປັນພະຍາຄອງເມືອງສືບຕໍ່ໄປ . . ."

ສິນໄຊ ໄດ້ຖາມເຖິງຮີດຄອງແຕ່ດັ້ງເດີມມີແນວໃດແດ່, ຝ່າຍພະຍາບາກບອກວ່າ ຕົນເປັນຜູ້ໂງ່ຈ້າເພາະໄດ້ປະລະຮີດເກົ່າຄອງເດີມເສຍແລ້ວ, ນັບແຕ່ເປັນພະຍາແທນພໍ່ເປັນຕົ້ນມາບໍ່ຮູ້ອັນໃດມັນສູງສິ່ງມັນຄ້ຳ

ຄູນ. ດັ່ງນີ້ສິນໄຊຈຶ່ງແນະນຳພະຍາບາກກ່ຽວກັບວາດວິທີດຳລົງຊີວິດອັນດີງາມ. ສິນໄຊເວົ້າວ່າ, ... ເຮົາຈັກແຕ່ງຕັ້ງທ່ານໃຫ້ເປັນພະຍາຄອງເມືອງສືບຕໍ່ໄປ. ປະຊາລາສະດອນທັງໝົດປຽບຄືຮາກຕົ້ນໄມ້, ພວກເສນາມຸນຕີປຽບຄືລຳຕົ້ນໄມ້, ພວກພະນັກງານທົ່ວໄປປຽບຄືກິ່ງງ່າຕົ້ນໄມ້ສ່ວນພະຍາຫຼືກະສັດ ປຽບຄືຍອດຕົ້ນໄມ້, ຕົ້ນໄມ້ນັ້ນ ຖ້າຮາກບໍ່ໝັ້ນແກ່ນແລ້ວຕ້ອງຕາຍແນ່ນອນ, ການປົກຄອງບ້ານເມືອງກໍປຽບຄືຕົ້ນໄມ້ນັ້ນເອງ.

ປະການໜຶ່ງ ເມື່ອອອກນັ່ງກາງທີ່ປະຊຸມເສນາມຸນຕີຕ້ອງເຮັດວາດຊົງໃຫ້ຄ່ຽມຄົມສະຫງ່າອົງອາດ, ໃຫ້ຮີບສືບສວນຕັດສິນບັນຫາທີ່ເສນາມຸນຕີຍົກຂຶ້ນມາ ທັງນີ້ເພາະມັນກ່ຽວຂ້ອງກັບຜົນປະໂຫຍດຂອງປະຊາລາສະດອນ, ຢ່າໃຫ້ເຂົາເຈົ້າຕ້ອງພົບບັນຫາເຂົ້າຂາດແລງຂາດງາຍ, ປະຊາລາສະດອນປຽບຄືລູກຂອງເຮົາ, ຜູ້ໃດເຮັດຜິດຮີດຜິດຄອງຢ່າປ່ອຍຕາມໃຈຈົນເຂົາລະເຫຼີງໃຈຕ້ອງເອົາມາບອກສອນ. ຜູ້ໃດມີຄຸນງາມຄວາມດີຕ້ອງເອົາລາງວັນໃຫ້ຫຼືເລື່ອນຍົດເລື່ອນຊັ້ນໃຫ້ສົມຄູ່ກັບຜົນງານນັ້ນ, ໃຫ້ສັງຊອມເບິ່ງຈົນຮູ້ແຈ້ງວ່າຜູ້ໃດເຮັດດີຜູ້ໃດເຮັດຊົ່ວ, ຢ່າຕິລາຄາວ່າສະເໝີກັນໝົດ, ຢ່າເຮັດຕາມໃຈມັກຂອງພີ່ນ້ອງໂຄດວົງຈົນໂພດໄປເພາະຈະເສຍຜົນປະໂຫຍດຂອງສ່ວນລວມແລ້ວຊິບໍ່ເປັນບ້ານເປັນເມືອງ. ຮອດລະດູເດືອນຫົກໃຫ້ເລາະລຽບເບິ່ງທ້ອງຖິ່ນຕ່າງໆ. ເມື່ອເຫັນພວກແມ່ຮ້າງນາງໝ້າຍ ຄົນທຸກຂະໝອດສະພັດສະພອຍ ໃຫ້ສົງເຄາະລ້ຽງເກືອ. ຄົນທີ່ຄວນຫຼີກເວັ້ນຄື: ຄົນບ້າເມົາບຳແຕ່ການຫຼິ້ນ, ຄົນຂີ້ຄ້ານ ນອນບໍ່ຮູ້ຈັກຄ່ຳຈັກເວັນ, ຄົນມັກຕົວະລ່າຍຫຼອກຕົ້ມເອົາສິ່ງຂອງຜູ້ອື່ນ, ຄົນທີ່ເປັນນັກເລງອັນຕະພານ ບໍ່ມີເຮືອນຊານແນ່ນອນ.

ປະການໜຶ່ງ ໃຫ້ຫຼີງຫາອັນຕາຍທີ່ຈະເກີດຂຶ້ນ, ຈົ່ງກຳຈັດເສຍແຕ່ຫົວທີຢ່າໃຫ້ລຸກລາມໃຫຍ່ໂຕ. ໃຫ້ຈັດແຈງປ້ອງກັນຮັກສາເມືອງໄວ້ຄົບ

04/06/2026, 03:32 ປຶ້ມເລື່ອງ ສິນໄຊ

ທັງແປດດ້ານ. ຊັບສິນຂອງປະເທດນັ້ນແມ່ນດິນນາອັນກວ້າງຂວາງ. ຮັກສາຊັບສິນໄວ້ໄດ້ປະເທດກໍຮຸ່ງເຮືອງໝັ້ນຄົງ. ດັ່ງນີ້ ໃຫ້ຈັດແຈງແຕ່ງຕັ້ງຄົນໃຫ້ສົມຍົດສັກໃຫ້ສົມກຽດ. ໃຫ້ຄຶດວ່າພວກຂຸນເສນາມຸນຕີປຽບຄືຊ້າງສານ. ກະສັດຫຼືພະຍາຜູ້ເປັນເຈົ້າແຜ່ນດິນປຽບຄືຄວານຊ້າງ. ເມື່ອພວກຂຸນເສນາມຸນຕີໄດ້ຮັບຍົດສັກຄາດຄຽນສາຍໄໝ ອັນເປັນສາຍສະພາຍຍົດສັກແລ້ວ ເມື່ອເຂົ້າສູ່ສົງຄາມກໍສາມາດຜາບແພ້ສັດຕູ. ໃຫ້ໝັ່ນສົ່ງຂ່າວຫຽວໄປຢັ້ຽມຢາມຜູ້ທີ່ເປັນທ້າວຂຸນຫຼືພະຍາທີ່ຄອງເມືອງຕ່າງໆ ກະສັດອົງໃດທ້າງທາອາວຸດແຮໄວ້ແລະມີກໍາລັງພົນກຽມສູ້ຮົບໄວ້ທຸກເວລາ ກະສັດອົງນັ້ນກໍມີຜູ້ຢໍາເກງ. ສ່ວນຂ້າເສິກກໍຫຼີກເວັ້ນໄປທາງໄກ.

ຄອນແພງສິນທໍາຍິ່ງກວ່າລູກເມຍ. ສັດຈະທໍາຍິ່ງເປັນຂອງລະອຽດອອນກໍຄອນແພງຍິ່ງກວ່າເນື້ອຄີງຂອງຕົນ. . .

ສິນໄຊ ສັ່ງສອນພະຍານາກຫຼາຍສິ່ງຫຼາຍແນວແລ້ວມອບໃຫ້ຄອງເມືອງນາກສືບຕໍ່ໄປ. ຕໍ່ມາສິນໄຊກໍພານາງສີດາຈັນກັບຄືນໄປຫາແມ່ໂດຍມີໄພ່ພົນຊາວນາກແຫ່ແຫນໄປສົ່ງຕະຫຼອດທາງ.

ນາງສີດາຈັນ ພົບພໍ່ແມ່

ຄະນະຂອງສິນໄຊເດີນທາງຈາກເມືອງນາກຄືນມາຮອດບ່ອນທີ່ນາງສຸມຸນທາຄອງຖ້າຢູ່ອັນເປັນເຂດແດນຍັກ. ນາງສີດາຈັນໄດ້ພົບພໍ່ແມ່ຫຼັງຈາກພັດພາກກັນໄປດົນນານ. ທັງສອງກອດຈູບດົມກັນດ້ວຍຄວາມຮັກອັນດູດດື່ມແລະເວົ້າລົມກັນເຖິງຄວາມເກົ່າຄວາມຫຼັງແລ້ວກໍສະອື້ນໄຫ້ນໍ້າຕາໄຫຼດ້ວຍຄວາມຕື້ນຕັນໃຈ.

https://online.fliphtml5.com/iqwiz/utcv/ 118/152

ນາງສຸມຸນທາເວົ້າວ່າ: "ແມ່ບໍ່ຄອງວ່າຊິໄດ້ເຫັນໜ້າລູກອີກຈົນເທົ່າມື້ຕາຍ. ໂຊແດ່ແຕ່ມີສິນໄຊມາຊ່ອຍ. ບໍ່ຮູ້ວ່າສິນໄຊຈໍເອົາລູກຄືນມາໂດຍດີ ຫຼືວ່າໄປສູ້ຮົບຕົບຕີກັບຈົນບ້ານເມືອງຂຸ່ນມົວ."

ນາງສີດາຈັນເລົ່າເຫດການຕາມຄວາມເປັນຈິງສູ່ແມ່ຟັງໝົດທຸກແນວ.ນາງເວົ້າກັບແມ່ວ່າ: "ນັບແຕ່ພັດພາກຈາກແມ່ໄປລູກເປັນທຸກທີ່ສຸດ. ລູກດີໃຈຫາອັນປຽບບໍ່ໄດ້ ທີ່ໄດ້ກັບມາຫາແມ່ອີກ. ບັດນີ້ ອ້າຍສິນໄຊຊິພາເມືອເມືອງເປັງຈານໄປອາໄສເພິ່ງບຸນລຸງພຸ້ນແມ່ນບໍ?"

ນາງສຸມຸນທາມີສີໜ້າປ່ຽນໄປເພາະເຫັນໜ້າລູກສາວແລ້ວກໍຄຶດຫວ່ງອາໄລຜົວເພາະຍັງບໍ່ໄດ້ມ້ຽນຄາບສິ່ງສະການເທື່ອ. ນາງເວົ້າກັບລູກຊ້າໆວ່າ: "ບັດນີ້ພໍ່ຂອງລູກ ໄດ້ຕາຍຈາກພວກເຮົາໄປແລ້ວແຕ່ຍັງບໍ່ທັນໄດ້ເຮັດພິທີສິ່ງສະການເທື່ອ. ລູກຈົ່ງເວົ້ານຳສິນໄຊໃຫ້ຈັດພິທີໃຫ້ຖືກຕ້ອງສາກ່ອນ. ມັນເປັນໂອກາດສຸດທ້າຍທີ່ລູກຈະເຮັດແນວໃດແນວໜຶ່ງເພື່ອຕອບບຸນແທນຄຸນພໍ່."

ນາງສີດາຈັນໄດ້ບອກອ້າຍຕາມທີ່ແມ່ສັ່ງ ທັງເວົ້າລົມນຳສິນໄຊກ່ຽວກັບດິນແດນແຫ່ງນີ້ວ່າເປັນຂອບແດນເມືອງຂອງພໍ່. ແຕ່ດຽວນີ້ເສນາມຸນຕີຂຸນຍັກທັງຫຼາຍໄດ້ຕາຍໝົດແລ້ວ. ນາງຂໍຮ້ອງນຳອ້າຍໃຫ້ເຮັດທຸກສິ່ງທຸກຢ່າງເພື່ອໃຫ້ເມືອງຍັກກັບເມືອງຄົນມີສາຍໄມຕີທ່ອງທ່ຽວກັນເພື່ອວ່າຂອບແດນເມືອງຄົນຈະໄດ້ຂະຫຍາຍກວ້າງອອກໄປໃນພາຍໜ້າ.

ສິນໄຊຮັບປາກວ່າຈະຟື້ນຄືນເຊື້ອສາຍຂອງຍັກກຸມພັນເພື່ອໃຫ້ມີຜູ້ສືບຕໍ່ປົກຄອງເມືອງຍັກຕໍ່ໄປ. ແລ້ວສິນໄຊກໍຈັດການເຕົ້າໂຮມພວກ ທີ່ເຫຼືອຕາຍແລະຖືໂອກາດນີ້ບອກກັບໄພ່ພົນຍັກວ່າ ຕົນບໍ່ມີເຈດຕະນາຈະກໍ່ກຳທຳເວນຕໍ່ຜູ້ໃດແຕ່ເຫດການບັງຄັບເລີຍພາໃຫ້ບ້ານເມືອງມົວໝອງ.

ສ່ວນຍັກໄວຍຸເວດຜູ້ເປັນຫຼານຊາຍຂອງກຸມພັນກໍນຳພາໄພ່ພົນຍັກເຫຼົ່ານີ້ເຂົ້າຂາບໄຫວ້ແລະຂໍອະໄພຍະໂທດນຳສິນໄຊດ້ວຍຄວາມນອບນ້ອມຄາລະວະ. ສິນໄຊລົມກັບພວກຍັກດ້ວຍຄວາມເວົ້າຈົບງາມທັງເວົ້າໃຫ້ກຳລັງໃຈພວກເຂົາວ່າຈົ່ງເຊົາໂສກເສົ້າເສຍໃຈໃນເຫດການທີ່ຜ່ານມາແລ້ວມາພາກັນກະກຽມພິທີສົ່ງສະການຍັກກຸມພັນ ທີ່ເຄີຍມີບຸນຄຸນຕຸ້ມຫອມປົກປ້ອງໄພ່ພົນຍັກທັງຫຼາຍໃນເວລາຜ່ານມາ.

ແລ້ວການສົ່ງສະການຍັກກຸມພັນ ກໍດຳເນີນໄປຢ່າງສົມກຽດ. ຫໍພະເມນໃຫຍ່ທີ່ບັນຈຸຄາບກຸມພັນ ໄດ້ຮັບການປະດັບປະດາຢ່າງງົດງາມມີທຸງທິວປັກອ້ອມ, ສຽງກອງມະໂຫລະທຶກດັງນີ່ນັນ ຂະນະທີ່ຂະບວນແຫ່ເຄື່ອນອອກໄປສູ່ປ່າເຮ່ວ ໂດຍມີພົນຍັກຖືດາບແຫ່ເປັນສາຍຍາວຍຶດ.ນາງສຸມຸນທາແລະນາງສີດາຈັບຖືທຸງຍ່າງອອກໜ້າໝູ່ ດ້ວຍອາການໂສກເສົ້າໜົ່ນໝອງ. ເມື່ອຮອດປ່າເຮ່ວແລະຕັ້ງຫໍພະເມນໄວ້ເປັນທີ່ຮຽບຮ້ອຍແລ້ວນາງສຸມຸນທາແລະລູກສາວກໍປິດຜ້າອອກ ເອົານ້ຳຫອມທົດສົງຄາບກຸມພັນທັງແນມເບິ່ງດ້ວຍອາການສະຫງົບ. ນາງສຸມຸນທາເວົ້າສັ່ງວ່າ: "ໃຫ້ເຈົ້າໄປເກີດຢູ່ເທິງຟ້າເທິງສະຫວັນພຸ້ນ, ຢ່າໄດ້ມາວົນວຽນເກືອກກົ້ວຢູ່ນຳໝູ່ຍັກອີກ..." ຕໍ່ມານາງສຸມຸນທາຢາດນ້ຳລົງໃສ່ແຜ່ນທໍລະນີໂດຍກ່າວຄຳອະທິຖານຫາຜົວເປັນຄັ້ງສຸດທ້າຍ. ຫຼັງຈາກນັ້ນກໍມີການຈູດບັ້ງໄຟມ້າສຽງດັງຜ៊ຶາດ! ບັ້ງໄຟແລ່ນໄປຕາມສາຍເຊືອກທີ່ເນັ່ງໄວ້ໄປກະທົບຫໍພະເມນເກີດໄຟລຸກວົບໄໝ້ເປັນແປວຮ້ອນແຮງ.

ກຸມພັນຕາຍດັບສູນໄປແລ້ວເຫຼືອໄວ້ແຕ່ກະດູກທີ່ປ່າເຮ່ວແຫ່ງນັ້ນ.

ຫຼັງຈາກພິທີສົ່ງສະການຍັກກຸມພັນແລ້ວສິນໄຊກໍສືບຫາຜູ້ທີ່ຢູ່ໃນຖານະຈະເປັນພະຍາຄອງເມືອງຜູ້ຕໍ່ໄປ. ປະກົດວ່າຍັງມີອ້າຍຄີງຂອງ

04/06/2026, 03:32

ກຸມພັນຜູ້ໜຶ່ງຊື່ວ່າພັນບຸລາຜູ້ຊຶ່ງນອນຫຼັບບໍ່ຕື່ນຈັກເທື່ອເມື່ອດົນມາແລ້ວຢູ່ໃນຜາສາດແຫ່ງໜຶ່ງ. ໄວຍຸເວດບອກວ່າບໍ່ມີໃຜສາມາດປຸກໃຫ້ພັນບຸລາຕື່ນຂຶ້ນມາໄດ້. ດັ່ງນີ້ສິນໄຊຈຶ່ງຍິງສອນໄປປຸກຈົນພັນບຸລາລຸກພະເວີພະວາ ຂຶ້ນມາເພາະລູກສອນໄປແຍ່ເຂົ້າຮູຫູ. ທຳອິດພັນບຸລາໃຈຮ້າຍທີ່ຖືກລົບກວນຍາມຫຼັບນອນແລະເມື່ອຕື່ນຂຶ້ນມາແລ້ວຊາບວ່າກຸມພັນໄດ້ເສຍຊີວິດຍ້ອນສູ້ຮົບກັບສິນໄຊທີ່ມານຳເອົາອາຄົນເມືອພັນບຸລາກໍແຮ່ງໂມໂຫແລະກ່າວວ່າຈະແກ້ແຄ້ນແທນນ້ອງຊາຍໃຫ້ໄດ້. ແຕ່ໄພ່ພົນຍັກບອກວ່າສິນໄຊມີລິດເດດເກັ່ງກ້າຫຼາຍ. ກອງທັບຍັກຕາຍເປັນລ້ານໆໃນສົງຄາມທີ່ຜ່ານມາ. ຂຸນຍັກຜູ້ເຂັ້ມແຂງກໍຕາຍເກືອບໝົດລວມທັງກຸມພັນ.

https://online.fliphtml5.com/iqwiz/utcv/

ຄຽວນີ້ສິນໄຊຢາກໄດ້ຜູ້ເປັນເຊື້ອສາຍຄຽວກັນກັບກຸມພັນເພື່ອຄອງເມືອງຍັກຕໍ່ໄປ. ດັ່ງນີ້ ຈຶ່ງມີແຕ່ຍອມຮັບແລະຍອມອ່ອນນ້ອມຕໍ່ທ້າວດີກວ່າຈະໄປສູ້ຮົບກັນອີກ.

ພັນບຸລາຫຼຽວໄປອ້ອມຕົວເຫັນໄພ່ພົນຍັກເຫຼືອພຽງໜ້ອຍດຽວ. ເມື່ອຕື່ນຈາກນອນຫຼັບອັນຍາວນານ ເຂົາກໍມາຮູ້ແຈ້ງສະພາບທີ່ເປັນຈິງຫຼາຍຂຶ້ນ. ເຂົາຄຶດທວງຳຢູ່ຂະນະໜຶ່ງ ແລ້ວກໍຕັດສິນໃຈໄປພົບສິນໄຊ ເພື່ອຂໍອ່ອນຍອມແລະຂໍປະຕິບັດຕາມຈຸດປະສົງຂອງທ້າວນ້ອຍຜູ້ເກັ່ງກ້າ.

ແລ້ວທຸກສິ່ງທຸກຢ່າງກໍດຳເນີນໄປຢ່າງຮຽບຮ້ອຍ. ສິນໄຊຊື່ນຊົມຍິນດີທີ່ພັນບຸລາຖືທຽນເຂົ້າມາຂາບໄຫວ້. ແລ້ວທ້າວກໍສັ່ງສອນຜູ້ທີ່ຈະເປັນພະຍາຄອງເມືອງຍັກສືບຕໍ່ຈາກກຸມພັນ ໃຫ້ຮູ້ຈັກຮີດບ້ານຄອງເມືອງຮູ້ຈັກສືບທຳອັນຈະນຳໄປສູ່ຄວາມຈະເລີນແລະພາປະຊາລາສະດອນຢູ່ເຢັນເປັນສຸກຕະຫຼອດການະນານ.

ພາຍຫຼັງເຮັດພິທີສິ່ງສະການຍັກກຸມພັນ ແລະຕັ້ງພັນບຸລາເປັນພະຍາຄອງເມືອງຍັກສືບຕໍ່ໄປແລ້ວ ສິນໄຊກໍພາອາສຸມຸນທາ ແລະນາງສີດາຈັນ ເດີນທາງກັບຄືນໄປບ່ອນທີ່ທ້າວທັງທົກ ກັບສີໂຫຄອງຖ້າຢູ່.

ສິນໄຊຖືກປອງຮ້າຍ

ການເດີນທາງຜ່າປ່າດົງທີ່ມີດອກໄມ້ບານເຮືອງເຮື່ອ ທ່າມກາງສຽງນົກຮ້ອງດັງກ້ອງໄພ ຜ່ານໄປເຈັດວັນຄະນະຂອງສິນໄຊກໍມາຮອດບ່ອນທີ່ທ້າວທັງທົກຄອງຖ້າຢູ່. ສີໂຫແລະທ້າວທັງທົກຕ້ອນຮັບສິນໄຊອາສຸມຸນທາແລະນາງສີດາຈັນດ້ວຍຄວາມຕື່ນເຕັ້ນຍິນດີເປັນຢ່າງຍິ່ງໂດຍ

ສະເພາະທ້າວທັງຫົກນັ້ນເຫັນວ່າການພາເອົານາງທັງສອງກັບຄືນມາໄດ້ເປັນຄວາມສຳເລັດທີ່ພວກເຂົາເຄີຍຄິດວ່າບໍ່ອາດເປັນໄປໄດ້ດັ່ງນີ້ ພວກເຂົາຈຶ່ງດີໃຈເອົາແທ້ເອົາວ່າ. ແຕ່ໃນຂະນະທີ່ໜ້າຕາສະແດງຄວາມປິຕິຍິນດີນັ້ນໃນໃຈພວກເຂົາຊ້ຳອິດສາບັງບຽດສິນໄຊຢ່າງຮຸນແຮງ.ສ່ວນສິນໄຊຖືວ່າທ້າວທັງຫົກເປັນລູກຮ່ວມພໍ່ດຽວກັນກັບຕົນແລະການທີ່ຕົນໄດ້ຊ່ອຍເຫຼືອພວກອ້າຍໃນເລື່ອງສະໜອງຕາມຈຸດປະສົງຂອງພະຍາພໍ່ນັ້ນເປັນພຽງການເສຍສະຫຼະເລັກໆນ້ອຍໆ. ທ້າວຈຶ່ງກ່າວດ້ວຍຄວາມບໍລິສຸດໃຈວ່າ: "ບັດນີ້ ຂ້ອຍໄດ້ນຳເອົາອາສຸມຸນທາພ້ອມດ້ວຍນາງສີດາຈັນ ມາໄດ້ແລ້ວໃຫ້ພວກອ້າຍຕຸ້ມຫອມເບິ່ງແຍງເພິ່ນທັງສອງ ແລະພາໄປສົ່ງຮອດພະຍາພໍ່. ສ່ວນຂ້ອຍຊິແຍກໄປຕ່າງຫາກເພື່ອໄປຫາແມ່ທີ່ຄອງຖ້າຢູ່ກາງປ່າ."

ແຕ່ທ້າວທັງຫົກຂໍຮ້ອງໃຫ້ສິນໄຊເປັນຜູ້ພາທາງໄປສົ່ງໃຫ້ຫລີກຈາກປ່າຊ້າດົງເສືອກ່ອນ ເພື່ອຮັບປະກັນບໍ່ໃຫ້ເກີດເຫດຮ້າຍໃດໆ. ສິນໄຊຕົກລົງແລະບອກໃຫ້ສີໂຫຟ້າວແຍກໄປຫາແມ່ກັບປ້າກ່ອນ. ສ່ວນສັງທອງລ່ວງໜ້າໄປກ່ອນຕາມເຄີຍ. ທ້າວທັງຫົກຮູ້ວ່າສິນໄຊເປັນຜູ້ເກັ່ງກ້າສາມາດຜາບແພ້ພວກຍັກພວກມານຮ້າຍຕ່າງໆຈົນສາມາດເອົາອາສຸມຸນທາຄືນມາໄດ້ດັ່ງນີ້. ແນ່ນອນສິນໄຊຈະເປັນຈຸດລວມຂອງທຸກຄົນ.ພະຍາພໍ່ຕ້ອງຮັກແລະເຊື່ອໝັ້ນໃນສີມືຂອງສິນໄຊ. ເສນາມຸນຕີທັງຫຼາຍໃນເມືອງເປັງຈານຈະຕ້ອງເຄົາລົບຢຳເກງທ້າວຜູ້ດຽວ. ປະຊາລາສະດອນຈະຮັກຮໍ່ຖະໜອມແພງແຕ່ສິນໄຊ. ສ່ວນພວກທ້າວທັງຫົກເອງ ຈະໝົດຄວາມສຳຄັນແລະຈະບໍ່ມີຜູ້ໃດເອົາໃຈໃສ່ແທນແທ່ ດັ່ງນີ້ພວກເຂົາຈຶ່ງວາງແຜນການກຳຈັດສິນໄຊໃຫ້ດັບສູນໄປ.

ການເດີນທາງຕໍ່ໄປອີກ ຈົນຮອດບ່ອນນ້ຳຕົກຕາດໃຫຍ່ທີ່ມີສຽງ

ດັ່ງໂຫດໆ.ນ້ຳເປັນຟອງຟາດຟົ້ງສິ່ງອາຍນ້ຳເປັນຄືຄວັນໝອກກຸ້ມໄປທົ່ວບໍລິເວນ.ບັນຍາກາດຊຸມຊື່ນເຢັນສະບາຍດັ່ງນີ້ຄະນະເດີນທາງຈຶ່ງປົງສິ່ງຂອງລົງທີ່ພະລານຫີນພາກັນເຊົາເມື່ອຍເອົາແຮງ. ທ້າວທັງທິກຊວນສິນໄຊລົງອາບນ້ຳໂດຍພາກັນໄປຍັງໂຂດຫີນຊຶ່ງຢູ່ຫ່າງອອກໄປ. ບ່ອນນີ້ກະແສນ້ຳຍາດກັນໄຫຼລົງແປວດ້ວຍຄວາມໄວທີ່ຮຸນແຮງແລະລົງສູ່ເບື້ອງລຸ່ມຊຶ່ງເຫັນຍອດຕົ້ນໄມ້ຄືດັ່ງວ່າຍອດຫຍ້າຕິດຢູ່ພື້ນດິນ, ມີສຽງອຶງຄະນຶງດັງໄປທົ່ວບໍລິເວນຄືດັ່ງວ່າທໍລະມານເຈັບປວດ ແລ້ວໂອຍຄາງເພາະຖືກກະແສນ້ຳທັ່ງໃສ່ຢ່າງບໍ່ອີດູກູນາມາບັບແສນບັບລ້ານປີ. ໂຂດຫີນຕ້ອງຂອດກົ່ວເປັນຮ່ອງເປັນຮູຍ້ອນນ້ຳໄຫຼເຊາະວັນແລ້ວວັນເລົ່າ.

ຂະນະທີ່ອາບນ້ຳຕາມສະບາຍຢູ່ນັ້ນ ສິນໄຊກໍຖືກທ້າວທັງທິກຊຸກລົງແປວນ້ຳທີ່ໄຫຼທັ່ງ ຊຸເອົາທ້າວຕົກລົງເຫວເລິກຢ່າງປຸບປັບໄວວາ, ມີແຕ່ຟ້າເທົ່ານັ້ນທີ່ທັນຮູ້ເຫັນເປັນພະຍານ.

ບາງສຸມຸນທາແລະບາງສີດາຈັບນັ່ງຢູ່ແຄມຝັ່ງພວມກິນໝາກໄມ້ທີ່ຫາເກັບມາໄດ້ຈາກຕົ້ນແຄມປ່າທັງໃຈກໍຄຶດເລື່ອນລອຍ. ພວກນາງພວມຄິດເຖິງວັນເວລາທີ່ຕົນເອງໄປຮອດເມືອງເປັງຈານທັງແວດລ້ອມໄປດ້ວຍຜູ້ຄົນທີ່ຮັກແພງແລ້ວຫຼັງຈາກພັດພາກກັນໄປດົນນານກໍໄດ້ກັບຕ່າວມາພົບພໍ້ກັນອີກ. ແຕ່ຄວາມຄຶດອັນເຕັມໄປດ້ວຍຄວາມຍິນດີຄວາມຕື່ນເຕັ້ນນັ້ນກໍຢຸດຊະງັກລົງທັນໃດເມື່ອທ້າວທັງທິກມາບອກວ່າສິນໄຊຕົກເຫວຈົມນ້ຳລັບຫາຍໄປແລ້ວ. ບາງສຸມຸນທາກັບລູກສາວພາກັນຮ້ອງໄຫ້ຮ່ຳໄຮຢ່າງໜ້າເວທະນາ."ເອົາອາຖິ້ມລົງນ້ຳໃຫ້ຕາຍໄປນຳກັນຊ້ຳສາ. ບໍ່ມີສິນໄຊຊີວິດອາກໍກະວັ່ງກະເວ.ໂອຍເວນກຳອີ່ຫຍັງຈຶ່ງຈຳໃຫ້ພັດພາກຈາກກັນແບບນີ້..." ສຸມຸນທາຈົ່ມທຸກ.

ທ້າວທັງທິກເວົ້າວ່າ: "ມັນເປັນໄປຕາມໂຊກຊາຕາຂອງລາວ

ເອງ ແນວໃດກໍຕາມສິນໄຊຕາຍແລ້ວກໍຍັງມີເຊື້ອພີ່ເຊື້ອນ້ອງອີກ.ພວກຫຼານເອງກໍຕັ້ງທັກຄືນ. ຊິໄປເສຍດາຍລາວຫຍັງກະດໍ້."

ຄຳເວົ້າຂອງທ້າວທັງຫົກເປັນທີ່ໜ້າສົງໄສ ພາໃຫ້ນາງສຸມຸນທາຄິດວ່າ ພວກເຂົາຕ້ອງຮ່ວມຫົວກັນກຳຈັດສິນໄຊເພື່ອຫວັງຜົນປະໂຫຍດສຳລັບພວກເຂົາເອງໃນພາຍໜ້າ. ນາງບໍ່ຢາກເຊື່ອວ່າສິນໄຊໄດ້ຕາຍຈາກໂລກນີ້ໄປແລ້ວ. ດັ່ງນັ້ນນາງຈຶ່ງເອົາສິ່ງຂອງສາມຢ່າງໄປສ່ຽງໄວ້ຄືເອົາປັກປິ່ນເກົ້າຊ້ອງແລະຜ້າສະໄບແຂວນໃສ່ຄັນແລ້ວປັກໄວ້ທີ່ແຄມນ້ຳ. ນາງອະທິດຖານວ່າ ຖ້າສິນໄຊຍັງມີຊີວິດຢູ່ຂໍໃຫ້ພະອິນແລະສິ່ງສັກສິດທັງປວງຈົ່ງດົນບັນດານໃຈໃຫ້ມີຜູ້ໄປພົບເຫັນແລ້ວນຳສິ່ງຂອງສາມຢ່າງໄປສົ່ງຄືນແກ່ນາງ. ຖ້າຫາກສິນໄຊຕາຍແທ້ກໍຂໍໃຫ້ສິ່ງຂອງດັ່ງກ່າວ

ສູນຫາຍໄປເລີຍ. ນາງຈິ່ມພຸມພໍາສະອື້ນຮ່ໍາໄຮຫາສິນໄຊບໍ່ມີຍາມເຊົາ ຈົນທ້າວຫົກທັງບໍ່ພໍໃຈ, ພວກເຂົາໃຊ້ວາຈາບໍ່ສຸພາບເລັ່ງໃຫ້ນາງກັບລູກສາວອອກເດີນທາງຕໍ່ໄປ. "ມົວໄຫ້ນໍາກັນຢູ່ຈັ່ງຊີ້ໄປບໍ່ຮອດໃສເດີ! ຮ້ອງໄຫ້ຈັ່ງໃດມັນກໍບໍ່ຄືນມາຫາດອກ. ໄປຮີບໄປ!" ພວກທ້າວເວົ້າໃສ່ອາກັບລູກສາວ.

ແລ້ວການເດີນທາງດ້ວຍຄວາມທຸກໂສກຂອງນາງສຸມຸນທາ ແລະລູກສາວກໍດໍາເນີນຕໍ່ໄປດ້ວຍຄວາມອິດອ່ອນໝົດກໍາລັງໃຈ ໂດຍມີທ້າວທັງຫົກພາທາງແກມບັງຄັບໄປ. ນາງເທື່ອນາງສີດາຈັນກໍຖືກຄວັກເອີ່ຍຈາກມືຈັງໄຮຂອງພວກທ້າວທີ່ສວຍໂອກາດຍາມບຸປ່າໝົ້ນດົງ. ນາງສີດາຈັນເວົ້າຈິ່ມກັບແມ່ວ່າ: "ເປັນຕາຊັງພວກນີ້ນໍາແມ່. ປານໃດຈິ່ງຊິຮອດບ້ານເມືອງຂອງລຸງ. ລູກຮູ້ສຶກທໍລະມານທັງກາຍທັງໃຈ."

ນາງສຸມຸນທາຄ່ອຍໆເວົ້າອອຍລູກແລະເວົ້າໃຫ້ກໍາລັງໃຈວ່າອີກບໍ່ເທິງບໍ່ດົນກໍຈະຮອດທີ່ໝາຍແລ້ວ.

ນາງສຸມຸນທາ ກັບຄືນສູ່ເປັງຈານ

ກາໂຕໜຶ່ງບິນມາຈັບຍອດຊໍ່ຟ້າຜາສາດຂອງພະຍາກຸສະລາດແລ້ວສົ່ງສຽງຮ້ອງດັງຄ້າຍໆຄືວ່າ "ນາງມາ!" ພະອົງໄດ້ຍິນແລ້ວກໍຄຶດຫານາງສຸມຸນທາໂລດ ພ້ອມດຽວກັນກໍຮູ້ສຶກວ່າຕາລະເມັ່ນຍິບໆຢູ່ເບື້ອງຊ້າຍອັນເປັນລາງສັງຫອນວ່າຈະມີຂ່າວດີໃນໄວໆນີ້.

ໃນເວລາດຽວກັນນີ້ ທ້າວທັງຫົກໄດ້ພານາງສຸມຸນທາແລະນາງສີດາຈັນມາຮອດເມືອງຫົງອັນເປັນເມືອງດ່ານໜ້າຂອງເມືອງເປັງຈານ ທ້າວທັງຫົກບອກເຈົ້າເມືອງວ່າພວກຕົນໄປສູ້ຮົບຕົບຕີກັບພະຍາຍັກ

ແລະພະຍາບາກຈົບສຳເລັດມີໄຊແລ້ວເອົານາງທັງສອງນີ້ຄືນມາຕາມຄຳສັ່ງຂອງພະຍາກຸສະລາດຜູ້ເປັນພໍ່. ບັດນີ້ ໃຫ້ເຈົ້າເມືອງຫົງສົ່ງຄົນໄປບອກທາງເມືອງເປັງຈານ ເພື່ອໃຫ້ຈັດຂະບວນມາຮັບເອົາ. ໃນເວລາດຽວກັນກໍໃຫ້ແຕ່ງແປງສາລາໃຫຍ່ ເພື່ອເປັນບ່ອນພັກເຊົາຂອງພວກທ້າວເອງ. ແລະໃຫ້ຈັດບ່ອນຢູ່ໃຫ້ນາງສຸມຸນທາກັບລູກສາວໄວ້ຕ່າງຫາກ ໂດຍໃຫ້ຢູ່ບ່ອນລັບບັງທັງນີ້ເພື່ອບໍ່ໃຫ້ຄົນອື່ນໆເຂົ້າໄປໃກ້.

"ນາງສຸມຸນທາໄປຢູ່ນຳຍັກດົນຫຼາຍຈິດໃຈກໍປ່ຽນຄ້າຍຄືພວກຍັກພວກຜີບໍ່ຄືມະນຸດທຳມະດາ. ສ່ວນນາງສີດາຈັນຜູ້ສືບເຊື້ອສາຍມາຈາກຍັກກໍບໍ່ຕ່າງກັບແມ່-ຄືເວລາຫຼຽວເຫັນຄົນອື່ນໆ ແລ້ວທັງສອງຄືຈັ່ງວ່າເຫັນຕ່ອນຊີ້ນຕ່ອນປາ. ດັ່ງນີ້ ໃຫ້ທຸກຄົນລະວັງຢ່າເຂົ້າໄປໃກ້ຢ້ານໄດ້ຮັບອັນຕະລາຍ!" ທ້າວທັງຫົກອະທິບາຍ.

ເຈົ້າເມືອງຫົງປະຕິບັດຕາມຄຳສັ່ງຢ່າງນອບນ້ອມເພາະເກງກົວລິດເດດແລະຫວັງເພິ່ງບຸນບາລະມີ ທີ່ພວກທ້າວເປັນລູກພະຍາເມືອງເປັງຈານ ດັ່ງນີ້ ຂຸນນໍລະໂຊດເສນາຄົນສຳລັບຈຶ່ງໄດ້ຮັບຄຳສັ່ງ ໃຫ້ຂີ່ມ້າເລັ່ງໄປຍັງເມືອງເປັງຈານເພື່ອສົ່ງຂ່າວ. ຂຸນນໍລະໂຊດຂີ່ມ້າລ່ວງເຖິງສະໜາມຫຼວງແລ້ວກໍເຂົ້າໄຫວ້ພະຍາກຸສະລາດທີ່ທໍ່ຄຳແລະແຈ້ງຂ່າວເລື່ອງທີ່ທ້າວທັງຫົກໄປຜາບແພ້ສັດຕູໝູ່ມານ ແລ້ວເອົານາງສຸມຸນທາ ພ້ອມດ້ວຍລູກສາວຊື່ສີດາຈັນກັບຄືນມາ. ດຽວນີ້ພວມພັກເຊົາຢູ່ເມືອງຫົງ. ພະຍາກຸສະລາດຕື່ນເຕັ້ນດີໃຈເປັນຢ່າງຍິ່ງທີ່ຂ່າວຕາມທີ່ກາຣ້ອງບອກນັ້ນຈະກາຍເປັນຈິງ. ພະອົງຟ້າວບອກເສນາອາມາດໃຫ້ຈັດແຈງແຕ່ງຂະບວນໄປຕ້ອນຮັບຢ່າງສົມກຽດ. ຂ່າວນີ້ດັງໄປທົ່ວເມືອງເປັງຈານ. ໄພ່ຟ້າປະຊາກອນພາກັນເບີກບານມ່ວນຊື່ນເພາະຈະໄດ້ເຫັນໜ້ານາງສຸມຸນທາຜູ້ເປັນມິ່ງເມືອງອີກຫຼັງຈາກພັດພາກຈາກໄປດົນ

ບານ. ພວກມະເຫສີທີ່ເປັນແມ່ຂອງທ້າວທັງຫົກກໍດີໃຈຫາອັນປຽບບໍ່ໄດ້ທີ່ລູກຊາຍຂອງພວກຕົນໄປປະຕິບັດໜ້າທີ່ຕາມຄຳສັ່ງຂອງພະຍາຜູ້ເປັນພໍ່ຈົນສຳເລັດກັບຕ່າວຄືນມາ. ພວກນາງຈັດເອົາເຄື່ອງນຸ່ງຢ່າງດີທີ່ໃຊ້ສຳລັບລາຊະພິທີໄປໃຫ້ລູກຊາຍນຸ່ງເພື່ອໃຫ້ສົມກຽດແລະສະຫງ່າລາສີໃນເວລາເຂົ້າສູ່ເມືອງເປັງຈານ.

ການກະກຽມຂະບວນໄປຕ້ອນຮັບດຳເນີນໄປຢ່າງຟົດຟື້ນຄືດັ່ງປາງບຸນໃຫຍ່. ພະຍາກຸສະລາດສັ່ງໃຫ້ຈັດແຕ່ງກວຽນຄຳຫຽມດ້ວຍມ້າໄປຮັບນາງທັງສອງ, ຈັດຊ້າງແລະມ້າໃຫ້ພຽງພໍໂດຍມອບໃຫ້ຂຸນຫຼວງມະຫາເສນານຳພາຂະບວນໄປ. ເມື່ອທຸກສິ່ງຢ່າງພ້ອມແລ້ວຂະບວນກໍອອກເດີນທາງແຕ່ເຊົ້າ, ມີມະເຫສີທັງຫົກຮ່ວມເດີນທາງໄປດ້ວຍ, ນອກນັ້ນກໍມີບໍລິວານທີ່ເຄີຍຮັບໃຊ້ໃກ້ຊິດຂອງນາງສຸມຸນທາ, ຕະຫຼອດທັງປະຊາລາສະດອນຈຳນວນຫຼວງຫຼາຍທີ່ຢາກເຫັນໜ້າເຫັນຕາຜູ້ເປັນມິ່ງເມືອງ.

ເມື່ອໄປຮອດເມືອງຫົງ ຂຸນຫຼວງມະຫາເສນາກໍໄດ້ຟັງເລື່ອງລາວທີ່ບໍ່ເປັນມຸງຄຸນຈາກປາກຂອງທ້າວທັງຫົກຢ່າງບໍ່ຄາດຄິດມາກ່ອນໂດຍສະເພາະ ເລື່ອງທີ່ວ່ານາງສຸມຸນທາກັບລູກສາວມີຈິດໃຈເປັນຄືຍັກທັງບໍ່ຢາກກັບຄືນສູ່ບ້ານເກົ່າເມືອງເດີມ. ພວກທ້າວເວົ້າວ່າຈຳເປັນໄດ້ບັງຄັບໜີບເຕັງແລະເຮັດທຸກວິທີທາງເພື່ອໃຫ້ພວກນາງທັງສອງມານຳ. ທັງແມ່ແລະລູກຄືນມາດ້ວຍຄວາມຂົມຂື່ນໃຈ, ດັ່ງນີ້ໜ້າຕາຈຶ່ງບໍ່ເບີກບານມີແຕ່ຫງ່ອມເຫງົາຢູ່ຕະຫຼອດເວລາ.

ແນວໃດກໍຕາມເມືອງຫົງກໍຢູ່ໃນບັນຍາກາດຂອງປາງບຸນໃຫຍ່ເພາະມີແຂກສຳຄັນມາພັກແຮມ. ເຈົ້າເມືອງຫົງໄດ້ສົ່ງຂ່າວໄປຍັງເມືອງຕ່າງໆທີ່ເປັນເມືອງໜ້າດ່ານຢູ່ໃກ້ຄຽງ. ແຕ່ລະເມືອງກໍໄດ້ສົ່ງໄພ່ພົນມາຊ່ວຍປຸກສາລາແລະນຳເຂົ້າປາອາຫານມາປະກອບສ່ວນໃນພິທີຕ້ອນ

ຮັບແຂກເມືອງ. ພວກເຈົ້າເມືອງໄດ້ນຳເຄື່ອງບັນນາການມາມອບໃຫ້ທ້າວທັງທິກເພື່ອສະແດງຄວາມຈົງຮັກພັກດີ. ບັນຍາກາດເມືອງທົງຟົດຟື້ນເປັນທີ່ຕື່ນຕາຕື່ນໃຈຢ່າງບໍ່ເຄີຍເປັນມາກ່ອນ. ສຽງເສບມະໂຫລີສຽງຂັບລຳດັງສະນັ່ນໄປທົ່ວເມືອງ.

ຂຸນຫຼວງມະຫາເສນາ ພະຍາຍາມປະຕິບັດໜ້າທີ່ຢ່າງຮອບຄອບທີ່ສຸດເພື່ອບໍ່ໃຫ້ແຕະຕ້ອງຈິດໃຈຝ່າຍໃດຝ່າຍໜຶ່ງ ໂດຍສະເພາະບໍ່ໃຫ້ເສຍບັນຍາກາດທີ່ເມືອງທົງພວມເບີກບານມ່ວນຊື່ນໃນການຕ້ອນຮັບແຂກເມືອງ. ເພິ່ນຮັບຟັງການບອກເລົ່າຂອງທ້າວທັງທິກແລະພ້ອມດຽວກັນກໍປະຕິບັດຕົນຕໍ່ນາງສຸມຸນທາຢ່າງບໍ່ມີອັນບົກພ່ອງ ຕາມທີ່ໄດ້ຮັບມອບໝາຍຈາກພະຍາກຸສະລາດ. ທຸກສິ່ງທຸກຢ່າງດຳເນີນໄປດ້ວຍຄວາມ

ຮຽບຮ້ອຍ. ແລ້ວການເດີນທາງກັບຄືນສູ່ເມືອງເປັງຈານກໍເລີ່ມຕົ້ນເມື່ອຕາເວັນຂຶ້ນພົ້ນພູໃນມື້ຖັດມາ. ທ້າວທັງທົກຂຶ້ນຂີ່ຊ້າງ.ນາງສຸມຸນທາກັບນາງສີດາຈັນຂຶ້ນຂີ່ກວຽນຄຳແລ້ວຂະບວນແຫ່ກໍເຄື່ອນອອກຈາກເມືອງທົງເປັນແຖວຍາວຍຶດທ່າມກາງສຽງຊໍ ສຽງຊຸງ ສຽງກອງດັງລະງົມປະສົມດ້ວຍສຽງຮ້ອງສົ່ງຂອງຊາວເມືອງທົງທີ່ມາອັ່ງອໍຢູ່ສອງຂ້າງທາງ.

ຂະນະເດີນທາງນາງສຸມຸນທາບໍ່ມີຄວາມສະຫງົບໃນຈິດໃຈ,ຄິດຢ່າງໜຶ່ງນາງກໍດີໃຈທີ່ຈະໄດ້ພົບພໍ້ພະຍາກຸສະລາດຜູ້ເປັນອ້າຍ ທີ່ຍາມໃດກໍເປັນຫວ່ງນຳຕົນ, ຄິດຢ່າງໜຶ່ງກໍຮູ້ສຶກໜັກອົກໜັກໃຈເພາະມີບັນຫາບໍ່ລົງຮອຍກັບທ້າວທັງທົກ. ບໍ່ຮູ້ວ່າພະຍາກຸສະລາດຈະເຫັນເປັນແນວໃດ, ສິນໄຊຜູ້ຊຶ່ງນາງຫວັງເພິ່ງຊ້ຳພັດຕົກນ້ຳສາບສູນໄປແລ້ວ. ສ່ວນນາງສີດາຈັນກໍບໍ່ເຊື່ອໝັ້ນໃນອະນາຄົດຂອງຕົນ. ບາງມີຄວາມອຸກອັ່ງແລະຈົ່ມກັບແມ່ວ່າ: "ພວກເຮົາຊິໄປເພິ່ງໃຜທີແມ່. ຈັ່ງໃດພວກເຂົາທັງທົກກໍຕ້ອງເວົ້າສັບສໍ່ລຸງວ່າ ລູກນີ້ເປັນເຊື້ອແນວຍັກຈິດໃຈຍັກແລ້ວລຸງກໍຊິບໍ່ເບິ່ງບໍ່ແຍງ. ຊິປ່ອຍລູກໃຫ້ຢູ່ໂດດດ່ຽວຕັດຂາດຈາກພີ່ຈາກນ້ອງ."

ນາງສຸມຸນທາໄດ້ຍິນດັ່ງນັ້ນກໍຮູ້ສຶກສະດຸ້ງໃຈແລະເວົ້າອອຍລູກວ່າ: "ພວກເຮົາເປັນເຊື້ອແນວຂອງລຸງ, ເພິ່ນເອງຈະເບິ່ງແຍງຊ່ອຍຄ້ຳຊູພວກເຮົາ. ລຸງຮັກແລະເປັນຫວ່ງຫາພວກເຮົາຈຶ່ງໃຫ້ສິນໄຊໄປນຳຫາ, ຈັ່ງໃດລຸງກໍຕ້ອງອຸປະກາລະພວກເຮົາໃຫ້ສົມເປັນເຊື້ອແນວກະສັດ."

ການເດີນທາງຜ່ານໄປ ຈົນຕາເວັນຄ້າຍອວ່າຍລົງແລງ, ພົນຂີ່ມ້າຄົນໜຶ່ງຟ້າວເລັ່ງມ້າໄປຮອດເມືອງເປັງຈານກ່ອນ ເພື່ອແຈ້ງໃຫ້ພະຍາຮູ້ລ່ວງໜ້າ. ພະອົງຊາບຂ່າວດ້ວຍຄວາມຊື່ນຊົມຍິນດີ ແລ້ວຂີ່ຊ້າງອອກໄປຕ້ອນຮັບໂດຍຕົນເອງທີ່ປາກປະຕູເມືອງ. ປະຊາລາສະດອນກໍພາກັນຫຼັ່ງໄຫຼໄປຕ້ອນຮັບຈົນຄັບຄັ່ງອັ່ງອໍ, ທຸກຄົນສະແດງຄວາມຍິນດີ

04/06/2026, 03:32 ປຶ້ມເລື່ອງ ສິນໄຊ

ຈົນສຽງດັງຟົດສະນັ່ນ ເມື່ອຂະບວນຂອງນາງສຸມຸນທາຫຍັບມາໃກ້.ພະຍາກຸສະລາດໃຫ້ຈັດແຖວຊ້າງແລະມ້າທີ່ເອ້ຍ້ອງຢ່າງສະຫງ່າງາມຄອງຖ້າຢູ່ທາງເຂົ້າປະຕູເມືອງ. ສຽງເສບດົນຕີດັງຂຶ້ນຢ່າງແຮງເມື່ອນາງສຸມຸນທາມາຮອດແລ້ວພະຍາກຸສະລາດກໍຂີ່ຊ້າງອອກໄປອວນເອົາຂະບວນຂອງນາງເຂົ້າສູ່ເມືອງເປັງຈານມຸ່ງໜ້າສູ່ພະລາຊະວັງ.

ຂະບວນແຫ່ເປັນແຖວຍາວຍືດ, ພົນກັ້ງຄັນຮົ່ມລຽນກັນເປັນແຖວນັບເປັນຈຳນວນພັນໆ.ພວກພົນຖືດາບຍ່າງອອກໜ້າແລະນຳຫຼັງຄ່ອຍໆເຄື່ອນໄປຈົນເຖິງຜາສາດ.ທີ່ນີ້ມີພາບາສີຖືກຈັດກຽມໄວ້ເພື່ອເຮັດພິທີອັນເປັນສິລິມຸງຄຸນສຳລັບຜູ້ກັບຕ່າວຄືນມາ. ພະຍາກຸສະລາດກັບນາງສຸມຸນທາຂຶ້ນນັ່ງແທ່ນບັນລັງ, ນາງສີດາຈັບນັ່ງຕິດຂ້າງແມ່,ພວກສາວໃຊ້ພາກັນພັດວີຄຳຢູ່ເວີບວາບ, ທ້າວທັງທົກນັ່ງຢູ່ຕ່າງຫາກ.ບັນດາເສນາມຸນຕີຕະຫຼອດທັງພວກນາງສະໜົມແລະບໍລິວານທັງໝົດພາກັນນັ່ງນົບນອບເປັນຖັນແຖວ. ຫ້ອງກວ້າງໃຫຍ່ປະດັບດ້ວຍແກ້ວມະນີສີສົດໃສເຫຼື້ອມຍິບຍັບງາມອາດຕາ, ພື້ນປູດ້ວຍພົມລາຍເປັນດອກດວງວິຈິດສວຍງາມ,ສຽງເສບດົນຕີດັງລະງົມ.

ເມື່ອໄດ້ລືກງາມຍາມດີພາມຜູ້ເປັນໝໍພອນກໍເລີ່ມຕົ້ນພິທີໂດຍກ່າວຄຳອວຍພອນວ່າ: "ບັດນີ້ກຸມມານທັງທົກໄດ້ດັ້ນປ່າຜ່າດົງໄປນຳເອົາອາສຸມຸນທາຄືນມາຮອດບ້ານຮອດເມືອງ. ບ່າວໄພ່ລາສະດອນທັງຫຼາຍສຸດແສນດີໃຈທີ່ເຈົ້ານາງຜູ້ເປັນນິ່ງແກ້ວຂວັນເມືອງໄດ້ກັບຕ່າວຄືນມາ, ບັດນີ້ໝົດກຳແລ້ວ. ຂໍເຊີນຂວັນກຸມມານທັງທົກກັບຄືນມາເປັນເຈົ້າເປັນໃຫຍ່ສືບສ້າງບ້ານເມືອງ. ຂໍໃຫ້ຂວັນເຈົ້ານາງທັງສອງກັບມາຢູ່ເນື້ອຢູ່ຄີງມາສະຖິດຢູ່ໃນຫໍຜາສາດຢ່າໄດ້ໄປເຜືອຝັນຢູ່ນຳຍັກນຳເງືອກງູໃນຮູໃນຖ້ຳ, ສິ່ງຊົ່ວຮ້າຍໃດໆຢ່າມາຕ້ອງ, ຢ່າໄດ້ເຖົ້າແກ່ຊະ

https://online.fliphtml5.com/iqwiz/utcv/ 131/152

ລາ.ອາຍຸໃຫ້ຍືນຍາວພັ້ນພັນປີຄູ່ຟ້າ. ຂໍຢ່າໃຫ້ມີຄວາມໂສກເສົ້າໂສກາໃດໆເທີ້ນ..."

ເມື່ອພາມກ່າວສ້ຽງສຸດລົງ ພະຍາກຸສະລາດກໍເວົ້າຫາຜີຄ້ຳໂດຍຈົ່ມພຸມພຳວ່າ: "ຂໍເຊີນຜີປູ່ຍ່າ ຜີອາຮັກທັງຫຼາຍ ຈົ່ງມາຮັບເອົາຂອງທານ. ມາປົກປ້ອງເບິ່ງແຍງເຈົ້ານາງທັງສອງໃຫ້ມີອາຍຸໝັ້ນຍືນຍາວໄດ້ພັນປີປາສະຈາກໂພຍໄພແລະອັນຕະລາຍທັງປວງເຖີ້ນ..." ຕໍ່ມາພະອົງກໍເອົານ້ຳເຫຼົ້າມາວິດຟາຍເພື່ອຄວາມເຂັດຢຳຕາມຄວາມເຊື່ອທີ່ສືບຕໍ່ກັນມາ.

ຫຼັງຈາກນັ້ນພວກເສນາອາມາດ,ພວກນາງສະໜົມແລະບໍລິວານທັງຫຼາຍກໍຖືທຽນເຂົ້າມາຂາບໄຫວ້ດ້ວຍຄວາມຈົງຮັກພັກດີ, ສຽງລ້ອງສຽງກອງດັງຂຶ້ນຟົດສະນັ່ນ ຄືວ່າຂັບໄລ່ຄວາມໂສກເສົ້າກັງວົນທັງປວງໃຫ້ຈາງຫາຍໄປຈາກໃບໜ້າຂອງນາງສຸມຸນທາແລະລູກສາວຈົນບໍ່ເຫຼືອຮ່ອງຮອຍໃຫ້ຜູ້ໃດສັງເກດເຫັນໄດ້. ພະຍາກຸສະລາດຢູ່ໃນອາລົມເບີກບານສຳລານໃຈຢ່າງບໍ່ເຄີຍເປັນມາກ່ອນແລະເຊື່ອວ່າຄວາມປາຖະໜາອັນແຮງກ້າຂອງພະອົງໄດ້ຮັບການຕອບສະໜອງດ້ວຍຄວາມຮຽບຮ້ອຍເປັນຢ່າງດີແລະມີມຸງຄຸນ.

ຈັບຜູ້ຄິດລ້ຽວ

ນາງສຸມຸນທາຄືນມາຢູ່ຫ້ອງເດີມຂອງຕົນແລະແວດລ້ອມແຫ່ແໜນໄປດ້ວຍບໍລິວານຮັບໃຊ້ເກົ່າ ທີ່ຍັງຈົງຮັກພັກດີຕໍ່ນາງຢ່າງສະເໝີຕົ້ນສະເໝີປາຍ, ແຕ່ຫາກວ່ານາງບໍ່ເບີກບານແຈ່ມໃສຄືເກົ່າມາຫຼັງທັງນີ້ເພາະຕະຫຼອດເວລານາງຄິດຫວ່ງອາໄລຫາສິນໄຊ ຜູ້ທີ່ໄດ້ກອບກູ້ເອົາ

ນາງກັບຄືນມາຢູ່ບໍ່ເຊົາ. ນາງກັບລູກສາວຢູ່ໃນອາການທ່ວມເຫງົານໍ້າຕາໄຫຼອາບແກ້ມແລະກິນເຂົ້າບໍ່ລົງທັງທີ່ອາຫານຄາວແລະຫວານຖືກຈັດແຕ່ງໄວ້ຢ່າງອຸດົມສົມບູນໃນພານຄຳ. ບໍ່ດົນເລື່ອງນີ້ກໍດັງໄປຮອດຫູພະຍາກຸສະລາດ. ພະອົງຮູ້ສຶກສະດຸ້ງໄວຕໍ່ບັນຫາລະອຽດອ່ອນນີ້ແລ້ວກໍສັ່ງໃຫ້ທ້າວທັງຫົກເຂົ້າໄຫວ້. ພະຍາພໍ່ສໍ້ຖາມບຸດຊາຍທັງຫຼາຍກ່ຽວກັບພຶດຕິກຳຕ່າງໆໃນການໄປນຳເອົາອາກັບຄືນມາ.

ພວກທ້າວເວົ້າເປັນສຽງດຽວກັນວ່າ: "ເວລາພວກລູກສູ້ຮົບກັບກອງທັບຍັກຢູ່ນັ້ນອາສຸມຸນທາເຂົ້າຂ້າງຜົວ ແລະເຮັດທຸກຢ່າງເພື່ອໃຫ້ຍັກກຸມພັນຜາບແພ້ພວກລູກ. ແຕ່ຍ້ອນບຸນບາລະມີຂອງພະຍາພໍ່ຊ່ອຍຕຸ້ມຫອມພວກລູກຈຶ່ງເອົາຊະນະພວກຍັກໄດ້ໃນທີ່ສຸດ. ເມື່ອກຸມພັນຕາຍແລ້ວ ອາສຸມຸນທາຊໍ້າຍັງເຝືອຝັ້ນຫວງຫາອາໄລບໍ່ຍອມຫ່າງໄປໃສ. ຈຳເປັນພວກລູກຕ້ອງໄດ້ຕົວະຍົວະຫຼອກລໍ້ແກມບັງຄັບອາຈຶ່ງຍອມມານຳ. ສ່ວນຜູ້ລູກສາວນັ້ນ ກໍໄປເປັນເມຍພະຍານາກຢູ່ໃຕ້ນໍ້າສະໝຸດ ພວກລູກກໍໄປເອົາມາຢ່າງຍາກລຳບາກ ເພາະຕ້ອງສູ້ຮົບກັບພວກນາກ ຈົນນໍ້າສະໝຸດຂຸ່ນມົວ. ພວກນາກບໍ່ແພ້ຈຶ່ງຍອມມອບນາງສີດາຈັນໃຫ້ພວກລູກເອົາມານຳ.ທັງສອງແມ່ລູກນີ້ເປັນດັ່ງດຽວກັນຄືຈິດໃຈພວກເຂົາຍັງເຝືອຝັ້ນຢູ່ນຳພວກຍັກພວກມານພຸ້ນ."

ພະຍາກຸສະລາດຮັບຟັງແລ້ວກໍຄຶດໜັກແຕ່ບໍ່ເຊື່ອທັງໝົດ.ພະອົງຄຶດຮ່ຳເພິງຫຼາຍຫຼີບຫຼາຍຕ່າວແລະເຫັນມີຂໍ້ສົງໄສຢູ່. ເມື່ອທ້າວທັງຫົກຂາບລາລົງໄປແລ້ວ. ໃນເວລາຕໍ່ມາພະອົງກໍສັ່ງໃຫ້ນາງສຸມຸນທາກັບລູກສາວເຂົ້າໄຫວ້. ພະຍາເມືອງເປັງຈານເລົ່າຄືນຄວາມເກົ່າຄວາມຫຼັງ ຄືນັບຕັ້ງແຕ່ມື້ນ້ອງສາວພັດພາກຈາກໄປແລ້ວຕົນເອງກໍມີແຕ່ທ່ວມເຫງົາກິນເຂົ້າບໍ່ແຊບນອນບໍ່ຫຼັບຈຳເປັນເລີຍໄດ້ອອກເດີນທາງໄປນຳຫາ

ນ້ອງແຕ່ບໍ່ພົບ.

ພະອົງເວົ້າຕອບໜຶ່ງວ່າ: "ພໍດີມາໄດ້ລູກຊາຍເປັນຜູ້ມີລິດເດດເກັ່ງກ້າຄືທ້າວທັງທັກນີ້ເອງຈຶ່ງໃຊ້ໃຫ້ໄປນຳເອົາອາຄືນມາ.ອ້າຍປະເອີນໃຈທີ່ສຸດຈົນບໍ່ມີອັນປຽບໄດ້ທີ່ນ້ອງກັບຕ່າວຄືນມາ, ມັນຄືກັບວ່ານ້ອງກັບອ້າຍຕາຍຈາກກັນແລ້ວເກີດມາພົບກັນອີກໃໝ່. ທ້າວທັງທັກນີ້ເປັນລູກລີ້ງທີ່ເກີດຈາກນາງທັງທັກ, ສ່ວນລູກອີກຈຳນວນໜຶ່ງທີ່ເກີດຈາກມະເຫສີເອກແລະມະເຫສີຜູ້ຫຼ້າສຸດນັ້ນອອກມາປະຫຼາດຕ່າງທັງເປັນຮູບສັດບັນດາເສນາອາມາດ ແລະພໍ່ໂຫນບອກວ່າເຂັດຂວງຈຶ່ງໄດ້ໄລ່ໜີຈາກເມືອງທັງແມ່ທັງລູກລວມກັບທ້າຊີວິດ. ດຽວນີ້ບໍ່ຮູ້ວ່າໄປຕົກຢູ່ແຫ່ງໃດ. ອ້າຍຢາກຮູ້ວ່າທີ່ພວກທ້າວທັງທັກໄປສູ້ຣົບເພື່ອຍາດແຍ່ງເອົານ້ອງກັບລູກສາວກັບຄືນມານີ້ມີອັນໃດທີ່ນ້ອງຂັດຂ້ອງໃນໃຈບໍ່?"

ເມື່ອໄດ້ຍິນດັ່ງນັ້ນ ນາງສຸມຸນທາກັບນາງສີດາຈັນກໍຮູ້ສຶກສັບສົນພົກໄພ້ໃນໃຈ ເພາະສິ່ງທີ່ໄດ້ຍິນນີ້ມັນປັ້ນກັບຄວາມຈິງທັງມວນ. ແລ້ວນາງສຸມຸນທາກໍເລົ່າເລື່ອງຕາມຄວາມເປັນຈິງ ສູ່ພະຍາກຸສະລາດຟັງ.

ນາງວ່າ: "ຕອນຂ້ານ້ອຍຖືກຍັກຫຼອນລັກເອົາໄປນັ້ນ ທຳອິດກໍຄິດວ່າມັນຊິຂ້າຊິແກງ, ແຕ່ເມື່ອໄປເຖິງເຂດແດນຍັກແລ້ວ ຍັກກໍຂໍເອົາເປັນເມຍແລະໃຫ້ຢູ່ໃນຜາສາດຫຼັງວິດວານ. ຕໍ່ມາກໍໄດ້ລູກສາວຊື່ສີດາຈັນ ຊຶ່ງພະຍານາກມາຂໍເອົາໄປເປັນມະເຫສີຢູ່ເມືອງໃຕ້ສະໝຸດ."

ກ່ອນຂ້ານ້ອຍກັບລູກສາວຈະໄດ້ຕ່າວຄືນມານີ້ ແມ່ນຍ້ອນສິນໄຊເອົາຊີວິດເຂົ້າສ່ຽງດ້ວຍການຕໍ່ສູ້ຢ່າງອົງອາດກັບພວກຍັກພວກມານ. ສິນໄຊບອກວ່າຕົນກັບສັງທອງທີ່ມານຳກັນເປັນລູກຊາຍຂອງພະຍາເມືອງເປັງຈານແລະໄດ້ຮັບຄຳສັ່ງຈາກພະຍາພໍ່ ໃຫ້ມານຳເອົາອາຄືນ

ເມືອ. ທັງສອງທ້າວນີ້ເກີດຈາກແມ່ດຽວກັບຊື່ນາງລຸນ. ກວ່າຊິພາກັນອອກຫວິດເມືອງຍັກທ້າວທັງສອງກໍໄດ້ສູ້ຮົບຕົບຕີກັບກອງທັບຍັກ ນັບເປັນລ້ານໆ. ຂະນະທີ່ສິງຄາມດຳເນີນໄປຢ່າງເອົາເປັນເອົາຕາຍ ກໍມີສີໂຫມາຊ່ອຍ,ທ້າວນີ້ເປັນລູກຂອງນາງຈັນທາຜູ້ເປັນມະເຫສີເອກຂອງພະອິງອ້າຍ.

ເມື່ອສິງຄາມຕໍ່ສູ້ກັບຍັກຜ່ານພົ້ນໄປຢ່າງມີໄຊ. ອ້ານ້ອຍກໍໃຫ້ສິນໄຊໄປນຳເອົາລູກສາວທີ່ເມືອງນາກ. ສິນໄຊກັບສັງທອງໄປເມືອງໃຕ້ສະ

ໝຸດແລະໄປຫຼິ້ນໝາກສະກາກັບພະຍານາກ ເພື່ອວ່າຈະໄດ້ເອົານາງສີດາຈັນກັບຄືນມາໂດຍດີ. ພະຍານາກຫຼິ້ນບໍ່ແພ້, ຊ້ຳບໍ່ໜຳຍັງຊິຈັບສິນໄຊໄວ້ອີກ. ທ້າວຈຳເປັນຕ້ອງຕໍ່ສູ້ຈົນເມືອງໃຕ້ສະໝຸດຂຸ່ນໝອງ. ນາກຕາຍນັບບໍ່ໄຫວ. ພະຍານາກຈຶ່ງຍອມມອບນາງສີດາຈັນໃຫ້ມາ.

ສິນໄຊຕຸ້ມຫອມເອົາເຜືອແມ່ລູກທັງສອງ ເດີນທາງໄກຕັ້ງຫຼາຍໂຍດ ຈຶ່ງມາຮອດບ່ອນທີ່ທ້າວທັງທິກກັບສີໂຫຄອງຖ້າຢູ່ກາງປ່າໂດຍສີໂຫເປັນຜູ້ຮັກສາຄວາມປອດໄພໃຫ້. ທ້າວທັງທິກນ້ອມໄຫວ້ສິນໄຊຈົນຫົວຈຸດິນເພາະນັບຖືໃນຄວາມເກັ່ງກ້າຂອງສິນໄຊ.

ຈາກບ່ອນນັ້ນ ທັງໝົດຄະນະຈຶ່ງເດີນທາງຕໍ່ຍົກເວັ້ນສີໂຫຊຶ່ງຂໍແຍກທາງຟ້າວໄປຫາແມ່ ຢູ່ອີກບ່ອນໜຶ່ງຕ່າງຫາກ. ເມື່ອມາຮອດນ້ຳຕົກຕາດໃຫຍ່ ຄະນະກໍພາກັນພັກຜ່ອນ, ທ້າວທັງທິກຊວນສິນໄຊລົງອາບນ້ຳ. ເວລາຜ່ານໄປບໍ່ດົນ ພວກທ້າວກໍແລ່ນມາບອກຂ້ານ້ອຍວ່າ ສິນໄຊຕົກເຫວຕາຍແລ້ວ. ຂ້ານ້ອຍເອງກໍຍັງສົງໄສຢູ່ຈຶ່ງເອົາປັກປິ່ນເກົ້າຊ້ອງແລະຜ້າສະໄບສ່຿ງໄວ້ທີ່ແຄມນ້ຳ ໂດຍອະທິຖານວ່າ: "ຖ້າສິນໄຊຍັງມີຊີວິດຢູ່ ຂໍໃຫ້ເທບພະເຈົ້າໄປປັ່ນດົນໃຈຄົນຜູ້ມີຈິດໃຈເປັນທຳນຳເອົາຂອງສາມຢ່າງນັ້ນມາສົ່ງຄືນ..."

ພະຍາກຸສະລາດໄດ້ຍິນດັ່ງນັ້ນ ກໍມີທັງຄວາມຕື່ນເຕັ້ນດີໃຈແລະຄວາມເສຍໃຈປົນກັນດີໃຈເພາະຮູ້ວ່າລູກກັບເມຍລວມກັບຫຼາຊີວິດຍັງບໍ່ທັນຕາຍ. ເສຍໃຈເພາະໄດ້ເຮັດຜິດພາດຍ້ອນບໍ່ຄິດຮິ່ນຕອງຕັກແນ່ມົວຟັງແຕ່ຄວາມໝໍໂຫນ ຈຶ່ງສັ່ງຂັບໄລ່ລູກກັບເມຍໜີຈາກເມືອງ. ພະອົງຮູ້ສຶກກິນແໜງປານວ່າມີໄຟສຸມຢູ່ໃນຫົວໃຈ. ແຕ່ຂະນະດຽວກັນພະອົງກໍຮູ້ແຈ້ງສິ່ງໜຶ່ງນັ້ນກໍຄື ທ້າວທັງທິກເປັນຄົນຄິດລ້ຽວຢ່າງໃຫ້ອະໄພບໍ່ໄດ້. ພະຍາກຸສະລາດຄຶດໜັກແຕ່ຍັງບໍ່ໄດ້ຕັດສິນໃຈແນ່ນອນລົງໄປເພາະ

ຕ້ອງຫາພະຍານຫຼັກຖານມາປະກອບການພິຈາລະນາໃຫ້ຖີ່ຖ້ວນ. ສ່ວນເລິກແລ້ວ ພະອົງຄິດຫ່ວງຫາອາໄລນຳສິນໄຊຢູ່ບໍ່ເລີກບໍ່ແລ້ວ.

ເວລາຕໍ່ມາ ເສນາມຸນຕີພາພໍ່ຄ້ານາຍສະເພົາຈາກເມືອງຈີນເຂົ້າໄຫວ້. ນາຍສະເພົາເອົາຂອງສາມຢ່າງນັ້ນມາຖະຫວາຍແກ່ພະອົງ ໂດຍບອກວ່າຕົນໄດ້ພົບສິ່ງຂອງດັ່ງກ່າວ ຢູ່ແຄມນ້ຳໃນເວລາເດີນທາງມຸ່ງໜ້າມາຍັງເມືອງເປັງຈານ, ເຫັນວ່າມັນເປັນສິ່ງຂອງສຳຄັນ ອາດຈະກ່ຽວຂ້ອງກັບເຊື້ອວົງກະສັດຂອງເມືອງນີ້ ຈຶ່ງໄດ້ນຳມາຖະຫວາຍ. ພະຍາກຸສະລາດສັ່ງໃຫ້ນາງສຸມຸນທາເຂົ້າມາໃນຜາສາດອີກ ເພື່ອເບິ່ງຂອງສາມຢ່າງນັ້ນ, ນາງເຫັນແລ້ວກໍຕື່ນເຕັ້ນດີໃຈແລະຫຼົງຮ້ອງອອກມາຢ່າງລືມຄິງວ່າ: "ສິນໄຊ ຍັງບໍ່ຕາຍ! ສິນໄຊຍັງຢູ່! ນີ້ແມ່ນຂອງທີ່ຂ້ານ້ອຍເອົາສ່ຽງໄວ້ທີ່ແຄມນ້ຳນັ້ນແທ້ໆ. ບັດນີ້ມີຜູ້ເອົາມາສົ່ງຄືນເຖິງເຮືອນເຖິງຊານ. ປານນີ້ສິນໄຊຄົງຢູ່ນຳແມ່ທີ່ກາງປ່າພຸ້ນແລ້ວ..."

ເມື່ອມີຂໍ້ພິສູດຕື່ມດັ່ງນີ້ ພະຍາກຸສະລາດກໍເຊື່ອວ່າເລື່ອງທີ່ນາງສຸມຸນທາເລົ່າມານັ້ນແມ່ນຄວາມຈິງທຸກປະການ. ພະອົງມອບລາງວັນເພື່ອເປັນການສັນລະເສີນນ້ຳໃຈອັນສູງສົ່ງຂອງນາຍສະເພົາ, ແລ້ວແຂກຈາກແດນໄກກໍລາລົງຈາກຜາສາດໄປ.

ບັດນີ້ ພະຍາກຸສະລາດຮູ້ຈັກຄວາມຈິງແລ້ວ, ພະອົງຮູ້ສຶກຄຽດແຄ້ນເຫຼືອໃຈໃຫ້ທ້າວທັງຫົກ ທີ່ມີໃຈຄິດຄົດໂລບລ້ຽວຕົວະຮອດພໍ່ຂອງຕົນພະອົງວ່າ: "ພວກນີ້ເອງທີ່ຈິດໃຈເປັນຍັກ!"

ພະຍາກຸສະລາດເສຍໃຈຫຼາຍທີ່ໄດ້ເຮັດໃຫ້ລູກເມຍຜູ້ສັດຊື່ບໍລິສຸດຕ້ອງລຳບາກກາກກຳຢ່າງແສນສາຫັດ. ວິທີດຽວທີ່ພະອົງຈະສວ່າງເຊົາຈາກຄວາມກິນແໜງທີ່ຝັງເລິກຢູ່ໃນອົກກໍຄື ສັ່ງຈັບພວກທ້າວທັງຫົກພ້ອມທັງຜູ້ທີ່ຄິດຄົດໂລບລ້ຽວທັງໝົດ. ແລ້ວຕໍ່ມາຄຸກທີ່ມີກຳແພງໜາແ

ໜັ້ນ ສັນກຳແພງມີຫຼາວແຫຼມຊ້ອງຊິບລັບ ກໍເປັນບ່ອນກັກຂອງທ້າວທັງ ທີກ ພ້ອມກັບແມ່ທັງທີກລວມທັງແມ່ຢາແຝດ ແລະ ໝໍໂຫນຜູ້ກິນສິນບົນ. ພວກເຂົາຖືກລົງໂທດສັບພະທຸກໂດຍຖືກໃສ່ໂສ້ຍັງໄວ້.

ພະຍາກຸສະລາດ ໄປຊອກຫາສິນໄຊ

ພະຍາກຸສະລາດຮ້ອນຮົນໃນໃຈ ເພາະຢາກໄປເຫັນລູກທັງສາມ ກັບມະເຫສີທັງສອງທີ່ຢູ່ໃນປ່າ. ດັ່ງນັ້ນພະອົງຈຶ່ງມອບໃຫ້ອັກຄະມະຫາເສ ນາຮັກສາເມືອງແທນ. ແລ້ວພະອົງ ກໍພາໄພ່ພົນຈຳນວນຫຼວງຫຼາຍ ເຂົ້າປ່າ ເພື່ອໄປຊອກຫາສິນໄຊ. ຂະບວນເດີນທາງມີ ຊ້າງ ມີມ້າ ນັບ ເປັນພັນໆໂຕ. ພົນຖືດາບແຫ່ແຫນໄປເປັນແຖວຍາວຍືດ. ນາງສຸມຸນທາ ກັບນາງສີດາຈັນລວມທັງໝໍໂຫນແລະບໍລິວານນັບເປັນຮ້ອຍໆ ກໍຮ່ວມ ເດີນທາງໄປນຳກັນ. ເມື່ອໄປຮອດປ່າຫິມະວັນອັນເປັນບໍລິເວນທີ່ ສິນໄຊ ສູນຫາຍໄປ ພະຍາກຸສະລາດກໍໃຫ້ຂະບວນເດີນທາງຢຸດພັກເຊົາ ແລ້ວ ສ້າງຄ້າຍພັກແຮມຂຶ້ນຢູ່ກາງປ່າເອີ້ນວ່າຄ້າຍວຽງໄຊ. ກາງຄືນມາມີ ການລິບງັນມ່ວນຊື່ນ, ສຽງເສບມະໂຫລີດັງກ້ອງລະງົມໄປທົ່ວປ່າດົງ ດອຍ. ໝໍໂຫນກໍທວາຍເບິ່ງວ່າສິນໄຊຈະຢູ່ທາງທິດໃດ, ປະກົດຕາມ ເລກມໍ່ນັ້ນບອກວ່າສິນໄຊຍັງມີຊີວິດຢູ່ແລະໃຫ້ຊອກຫາໄປທາງທິດເໜືອ. ດັ່ງນັ້ນຂຸນເສນາທີ່ຊຳນານປ່າກໍໄດ້ຮັບຄຳສັ່ງໃຫ້ທ່ຽວຊອກຫາໄປຈົນທຸກ ຮ່ອມຫ້ວຍດົງໜາ. ແຕ່ປະກົດວ່າບໍ່ພົບຮ່ອງຮອຍສິນໄຊເລີຍ.

ພະຍາກຸສະລາດອຸກອັ່ງກັງວົນເພາະຢ້ານວ່າ ລູກຈະຕາຍປະ ໂດຍທີ່ຕົນບໍ່ໄດ້ເຫັນໜ້າບໍ່ໄດ້ຊື່ນຊົມຄວາມເກັ່ງກ້າສາມາດລື່ນໂລກຂອງ ຜູ້ເປັນລູກເລີຍ. ພະອົງຈັດທຳພະລີກຳໂດຍໃຫ້ເສນາປຸກຮ້ານຂຶ້ນແລ້ວ

ໄດ້ທູບທຽນບູຊາບະບິນຫາເທບພະເຈົ້າໃຫ້ມາຊ່ອຍຊີ້ບອກທາງໄປຫາບ່ອນຢູ່ຂອງສິນໄຊ. ແລ້ວການຊອກຫາ ກໍດຳເນີນຕໍ່ໄປ...

ໃນເວລາດຽວກັນນີ້ຢູ່ອີກເບື້ອງໜຶ່ງຂອງປ່າໄພໜາ ນາງຈັນທາ ນາງລຸນກັບລູກໆອັນມີ ສິນໄຊ ສັງທອງແລະສີໂຫ ພາກັນພັກຜ່ອນຢູ່ໃນຜາສາດງາມອາດຕາ. ຕອນທີ່ທ້າວທັງຫົກຊຸກສິນໄຊລົງເຫວນັ້ນພະອິນຫຼິງລົງມາຍັງໂລກລຸ່ມເຫັນສິນໄຊຕົກເຫວ ຈຶ່ງມາຊ່ອຍກອບກູ້ເອົາໄວ້ທັນແລ້ວພາມາຫາແມ່ກັບປ້າຢູ່ບ່ອນນີ້, ສ່ວນສີໂຫກັບສັງທອງເດີນທາງມາຮອດກ່ອນແລ້ວ. ສິນໄຊເລົ່າເລື່ອງຄວາມໃຈດຳອຳມະຫິດຂອງທ້າທັງຫົກສູ່ທຸກຄົນຟັງ. ພະອິນໄດ້ເນລະມິດເມືອງຂຶ້ນໄວ້ໃຫ້ແກ່ທ້າຊີວິດທີ່ເປັນເຊື້ອວົງກະສັດຢູ່ຢ່າງສິມກຽດແລະໃສ່ຊື່ວ່າເມືອງຊຽງສິນ. ມີພະຍາຄຸດ, ພະຍານາກພ້ອມດ້ວຍບໍລິວານຈຳນວນຫຼາຍເຝົ້າຮັກສາຄວາມປອດໄພໃຫ້ຢ່າງຮອບດ້ານ.

ແລ້ວຄືນໜຶ່ງ ພໍພະຈັນລອຍຂຶ້ນພົ້ນຂອບຟ້າສົ່ງແສງສີນວນອາບໄປທົ່ວປ່າດົງກໍມີສຽງຟົດສະນັ່ນດັງມາຮອດເມືອງຊຽງສິນ ໄພ່ພົນນາກທີ່ເຝົ້າຮັກສາກໍເຂົ້າໄປແຈ້ງຕໍ່ສິນໄຊວ່າສຽງດັງສະນັ່ນແຮງປານນີ້ຢ້ານແມ່ນຂ້າເສິກສັດຕູຈາກຕ່າງແດນຍົກກຳລັງມາ. ສິນໄຊຮັບຟັງແລ້ວກໍແຍ້ມຫົວທັງເວົ້າຂຶ້ນວ່າ: "ອາດຈະແມ່ນພີ່ນ້ອງເຊື້ອສາຍຂອງເຮົາມານຳຊອກຫາກໍເປັນໄດ້ໃຫ້ແຕ່ງພົນຜູ້ກ້າຫານໄປສືບເບິ່ງເພື່ອຄວາມແນ່ນອນ."

ເສນານາກໂຕໜຶ່ງປະຕິບັດຕາມຄຳສັ່ງ ໂດຍແປງເພດເປັນ ຊາຍໜຸ່ມຮູບງາມແລ້ວໄປສືບເບິ່ງບ່ອນທີ່ມີສຽງດັງອຶງຄະນຶງ. ເມື່ອໄປຮອດບ່ອນພະລານຫີນກວ້າງໆກໍເຫັນແສງໄຟຮຸ່ງໄປທົ່ວບໍລິເວນ. ມີໄພ່ພົນເຕັມເດຍລະດາດ. ເສນານາກເຂົ້າໄປສອບຖາມຈຶ່ງຮູ້ວ່າແມ່ນພະຍາ

ເມືອງເປັງຈານພາໄພ່ພົນອອກເລາະປ່າຊອກຫາສິນໄຊເພື່ອໃຫ້ກັບຄືນເມືອເມືອງແຕ່ຊອກບໍ່ເຫັນຈັກເທື່ອ. ເສນາບາກຈຶ່ງພາພະຍາກຸສະລາດພ້ອມດ້ວຍບໍລິວານລັດປ່າຜ່າດົງໄປຍັງບ່ອນສິນໄຊຢູ່ເມື່ອເຂົ້າໄປໃນເມືອງຊຽງສິບ ເສນາບາກກໍພາເຂົ້າໄປນັ່ງຢູ່ທໍາມົນດົບແລ້ວເສນາບາກກໍເຂົ້າໄຫວ້ລາຍງານຕໍ່ສິນໄຊ.

ຢູ່ອີກຫ້ອງໜຶ່ງພາຍໃນຜາສາດ, ພາຍຫຼັງຮູ້ຂ່າວຈາກເສນາບາກແລ້ວ ສິນໄຊປຶກສາກັບແມ່ແລະປ້າ ເລື່ອງການກັບຄືນເມືອເມືອງເປັງຈານ. ປະກົດວ່າທັງສອງເພິ່ນບໍ່ຂັດຂ້ອງຄືເອົາແຕ່ສິນໄຊເຫັນສົມຄວນ.ສິນໄຊຍັງປຶກສານໍາພະຍາຄຸດກັບພະຍາບາກ ທີ່ເປັນຜູ້ອາວຸໂສວ່າຄວນໃຫ້ພະຍາພໍ່ເຂົ້າມາຫາຫຼືວ່າຕົນເອງຄວນອອກໄປຫາເພິ່ນ. ມີການແນະນໍາໃຫ້ສິນໄຊເປັນຝ່າຍອອກໄປຫາພໍ່ເພື່ອສະແດງວ່າຜູ້ເປັນລູກຮູ້ຈັກຮີດຄອງອັນດີງາມແລະຮູ້ຈັກເຄົາລົບນັບຖືຜູ້ໃຫ້ກໍາເນີດ.

ແລ້ວການພົບພໍ້ກັບຄັ້ງປະຫວັດສາດອັນສະເທືອນອາລົມລະຫວ່າງພໍ່ກັບລູກກໍມີຂຶ້ນ. ຝ່າຍພະຍາກຸສະລາດແວດລ້ອມໄປດ້ວຍນາງສຸມຸນທາກັບນາງສີດາຈັນແລະບໍລິວານແຫ່ແຫນ. ຝ່າຍສິນໄຊມີສອງປ້າແມ່,ສີໂຫ,ສັງທອງກັບທັງພະຍາຄຸດພະຍາບາກ. ພະຍາກຸສະລາດຮູ້ສຶກວ່າຫົວໃຈທັກທວາມໆເພາະຄວາມຕື້ນຕັນໃຈຈົນນໍ້າຕາໄຫຼຍາວໆ. ພະອົງຍອມຮັບວ່າຕົນເຂົ້າໃຈຜິດໃນຄາວກ່ອນຍ້ອນມີຜູ້ສັບສໍ່ຫາເລື່ອງໃສ່ກັນ. ພະອົງວ່າ: "ບັດນີ້ ຂໍໃຫ້ລູກແລະມະເຫສີທັງສອງລືມສາເລື່ອງຄາວຫຼັງທີ່ພໍ່ໄດ້ພາດພັ້ງໄປ. ດຽວນີ້ຮູ້ແຈ້ງແລ້ວພໍ່ຈຶ່ງຈາກລາຊະວັງພາໄພ່ພົນມານໍາຊອກຫາເພື່ອໃຫ້ກັບຕ່າວຄືນເມືອງທັງໝົດ. ໃຫ້ລູກໄປຢູ່ສືບສ້າງເປັນເຈົ້ານັ່ງເມືອງ."

ສິນໄຊ: "ພະຍາພໍ່ມີຄວາມປະສົງແນວນັ້ນກໍສົມຄວນຢູ່. ແຕ່ວ່າ

ຢູ່ພະລາຊະວັງພຸ້ນກໍມີພວກອ້າຍຫົງຫິກຢູ່ເດ. ຂ້ານ້ອຍເອງເປັນພຽງລູກຜູ້ຫຼ້າບໍ່ສົມຄວນຈະມາຍົກຂຶ້ນແທນພະຍາພໍ່ເລີຍ. ລູກຢ້ານວ່າຈະເກີດເຄາະເຂັນຈົນເຮັດໃຫ້ບ້ານເມືອງຂຸ່ນໝອງຫຼົ້ມຈົມ."

ພະຍາກຸສະລາດ: "ຖ້າລູກກັບມະເຫສີທັງສອງບໍ່ເອົາຫົວຊາບໍາການທີ່ພໍ່ມາຊອກຫາ ເພື່ອໃຫ້ຄືນເມືອນີ້ແລ້ວ ພໍ່ກໍຄົງຈະຕາຍມອດມ້ວຍຍ້ອນຄວາມກິນແໜງ."

ສິນໄຊຄິດຫຼີບໄປຫຼີບມາຫຼາຍຕ່າວແຕ່ກໍຍັງຢືນຢັນວ່າ: "ພະອົງພໍ່ຄວນໃຫ້ອ້າຍຫົງຫິກຂຶ້ນຄອງເມືອງກ່ອນ. ຂ້ານ້ອຍຢູ່ຕາມດົງຕາມປ່າຕໍ່ໄປກໍໄດ້ ເພາະນັບແຕ່ມື້ເກີດກໍດໍາລົງຊີວິດຢູ່ດັ່ງນີ້ຕະຫຼອດມາ ມີສັດສາວາສິ່ງເປັນໝູ່ເພື່ອນຫາກິນໝາກໄມ້ຫົວມັນຕາມຍະຖາກໍາໄປ."

"ພໍ່ໄດ້ສັ່ງຈັບພວກເຂົາຂັງໃສ່ຄອກແລ້ວ ເພາະພວກເຂົາເປັນຄົນຄິດລ້ຽວ. ຕົວະຮອດພໍ່ຂອງຕົນ, ດັ່ງນີ້ຈຶ່ງຕັດພໍ່ຕັດລູກແລ້ວ." ພະຍາກຸສະລາດກ່າວ ແລ້ວອ່ວາຍມາຫາມະເຫສີທັງສອງ: "ຂໍໃຫ້ນ້ອງທັງສອງກັບຄືນເມືອເມືອງເປັງຈານ, ຖ້າບໍ່ຄືນໄປອ້າຍກໍມີແຕ່ຊິຂົນເຄື່ອງມາຢູ່ບໍາພີ້ເພື່ອໃຫ້ໄດ້ເຫັນໜ້າມະເຫສີທັງສອງແລະລູກທັງສາມ. ເຖິງແມ່ນຕາຍກໍຊິບໍ່ກິນແໜງ."

ມະເຫສີທັງສອງເວົ້າວ່າ: "ພວກຂ້ານ້ອຍທັງສອງນີ້ຢາກໃຫ້ພະອົງຄິດຮື່ນຕອງເບິ່ງໃຫ້ມັນຄັກ. ພວກຂ້ານ້ອຍຮັກບູຊາພະອົງແລະໄດ້ອະທິດຖານນ້ອມໄຫວ້ຫາພະອິນເພື່ອໃຫ້ສິ່ງຜູ້ມີບຸນມາເກີດນໍາ, ບາດລູກເປັນຕົນເປັນໂຕຂຶ້ນມາຄືດັ່ງພະອົງເຫັນຢູ່ນີ້ລະເຖິງຈະເປັນຮູບຮ່າງແນວໃດກໍບໍ່ຄວນເຮັດຮ້າຍໃສ່, ບໍ່ຄວນໄລ່ໜີ..."

ພະຍາກຸສະລາດຕົກຢູ່ໃນທ່າຮັບເວົ້າບໍ່ໄດ້ເຕັມປາກ ຈຶ່ງມີແຕ່ຂໍຍອມຮັບຜິດແລະຂໍອະໄພຍະໂທດນໍາມະເຫສີແລະລູກ. ນາງສຸມຸນທາທີ່ນັ່ງຢູ່ຂ້າງເປັນຜູ້ເວົ້າຊ່ອຍວ່າ: "ຖ້າສິນໄຊບໍ່ເຮັດຕາມຄວາມປະສົງຂອງພະຍາພໍ່ແລ້ວ ເມືອງເປັງຈານທີ່ເຄີຍຮຸ່ງເຮືອງເຫຼືອງເຫຼື້ອມແລະມີຊື່ລືຊາຜາກົດໄປທົ່ວທະວີບກໍຈະເສົ້າໝອງ ເສື່ອມສະຫຼາຍກາຍເປັນເມືອງຮ້າງຢ່າງແນ່ນອນ. ດັ່ງນີ້ ຫຼານຄວນກັບຄືນເມືອເປັນເຈົ້ານັ່ງເມືອງເພື່ອສືບສ້າງໃຫ້ຈະເລີນຕໍ່ໄປພາຍໜ້າ. ມີແຕ່ຫຼານຜູ້ດຽວເທົ່ານັ້ນທີ່ຈະເຮັດໃຫ້ເມືອງເປັງຈານເຂັ້ມແຂງແລະເປັນທີ່ເກງກົວຂອງເມືອງຕ່າງໆຢູ່ຕໍ່ໄປ. ຊື່ສຽງຂອງຫຼານນັ້ນດັງກ້ອງໄປທົ່ວທະວີບແລ້ວ."

ສິນໄຊຄິດທວຳຮ່ຳເພິງເບິ່ງໄປມາແລະເຫັນວ່າເມືອງຕ່າງໆ ທີ່ຂຶ້ນສ່ວຍຕໍ່ເມືອງເປັງຈານກໍຫຼາຍ.ຖ້າມີຂ່າວວ່າເມືອງເປັງຈານອ່ອນກຳລັງລົງ ແນ່ນອນວ່າເມືອງສ່ວຍຕ່າງໆຈະເຄື່ອນໄຫວແບບກະດ້າງ

ກະເດື່ອງ ຊຶ່ງໃນຈຳນວນນີ້ອາດມີເມືອງຍັກເມືອງນາກສົມທົບເຂົ້າອີກ. ທ້າວຄິດວ່າອາສຸມຸນທາເວົ້າມີເຫດຜົນຈຶ່ງພໍໃຈແລ້ວກໍຕົກລົງ. ທ້າວຂໍໃຫ້ທັງສອງແມ່ປ້າອະໄພຍະໂທດໃຫ້ພະຍາພໍ່. ທັງສອງມະເຫສີເຫັນດີນຳແລ້ວບັນຍາກາດກໍແຈ່ມໃສຂຶ້ນ.

ຕໍ່ມາເສນາມຸນຕີທີ່ແຫ່ແຫນມານຳພະຍາກຸສະລາດກໍຍໍຂັນທຽນບິລະມົນຍື່ນຕໍ່ສິນໄຊ. ທ້າວຮັບເອົາດ້ວຍທ່າທາງຄຽມຄົມ. ທຸກຄົນມີສີໜ້າເບີກບານມ່ວນຊື່ນພາກັນຮ້ອງສາທຸການ. ໄພ່ພົນພາກັນຫວ່ານດອກໄມ້ຫຼາຍສີສັນຢັ່ງຢາຍເດຍລະດາດ. ມີສຽງປ່າວເຕືອນດັງໄປທົ່ວວ່າມື້ອື່ນນີ້ຈະມີພິທີແຫ່ສິນໄຊເຂົ້າສູ່ເມືອງເປັງຈານ. ເສນານາກຜູ້ໜຶ່ງໄດ້ຮັບຄຳສັ່ງດ່ວນໃຫ້ນຳສານໄປເຊີນຍັກພັນນຸລາແລະນາກວະລຸນນະລາດມາຮ່ວມພິທີແຫ່ຄັ້ງສຳຄັນນີ້ດ້ວຍ.

ສິນໄຊ ຄືນເມືອເປັງຈານ

ເຊົ້າມື້ໃໝ່ ສິນໄຊຕື່ນນອນແລ້ວອອກໄປຢືນທີ່ຫໍຄອຍແນມເບິ່ງພວກສັດທັງຫຼາຍທີ່ຢູ່ຕາມທຳມະຊາດອ້ອມແອ້ມຜາສາດ. ທ້າວເອົາອາຫານໃຫ້ພວກສັດກິນເປັນເທື່ອສຸດທ້າຍເຊັ່ນນົກຍູງ ນົກສາລິກາ ນົກແກ້ວກະຮອກ ກະແຕ ລີງ ຄ່າງ ແລະ ອື່ນໆ. ສັດໃຫຍ່ທີ່ອາໄສຢູ່ໃນປ່າອ້ອມຜາສາດກໍມີຊ້າງ ເສືອ ໝີ ເມີຍ ກວາງ ຟານ. . . ສັດເຫຼົ່ານີ້ລ້ວນຄືສັດລ້ຽງທົ່ວໄປເພາະສິນໄຊເອົາອາຫານໃຫ້ກິນເລື້ອຍທັງປົກປ້ອງແລະຊ່ວຍເຫຼືອຄາວຈຳເປັນຢ່າງທົ່ວເຖິງກັນ. ທ້າວກ່າວອຳລາສັດດ້ວຍຄວາມເປັນຫ່ວງຜູກພັນແລະບອກໃຫ້ສັດຮັກແພງກັນ, ຢ່າບຽດບຽນຂົ່ມເຫັງກັນ, ແລ້ວທ້າວກໍກັບຄືນສູ່ຜາສາດເພື່ອກຽມອອກເດີນທາງ.

ເມື່ອຕາເວັນຂຶ້ນອ່າວສູງເປັນເວລາຍາມງາຍແລ້ວຂະບວນເດີນທາງກໍກຽມພ້ອມ. ສິນໄຊ ສີໂຫ ສັງທອງແລະສອງແມ່ປ້າຂຶ້ນນັ່ງເທິງສະລ່ຽງສີຄຳເຫຼືອງເຫຼື້ອມ. ສຽງກອງດັງຂຶ້ນຕຸ້ມໆເພື່ອປ່າວເຕືອນໃຫ້ໝູ່ໝູ່ທຸກກອງອອກເດີນທາງ. ພະຍາກຸສະລາດຂີ່ຊ້າງພາຍຂວັນອອກໜ້າໄປກ່ອນ. ຖັດມາແມ່ນນາງສຸມຸນທາກັບນາງສີດາຈັບຂີ່ຊ້າງພັງ. ຄົນຖືຄັນຮົ່ມນັບເປັນພັນໆຍ່າງເປັນແຖວ. ມີຄັນຮົ່ມສີຂາວ ສີຂຽວຫຼວແດ່ໄກຄືດອກເຫັດທີ່ເຄື່ອນໄຫວໄປໄດ້ ຂະບວນແຫ່ມີຊ້າງມ້າແລະໄພ່ພົນຊາວເມືອງເປັງຈານຍ່າງເປັນແຖວຍາວຈົນສຸດສາຍຕາ.ສຽງກອງຕະໂພນ ສຽງແສ່ງ ສຽງຊວງ ດັງຟົດສະນັ່ນປານແຜ່ນດິນຊິເຄື່ອງ. ເຂົ້າຮ່ວມໃນຂະບວນແຫ່ກໍມີໄພ່ພົນຂອງພະຍາສິມພະລີທີ່ເປັນຊາວຄຸດ. ໄພ່ພົນຂອງພະຍານາກທີ່ມາເຝົ້າຮັກສາສິນໄຊຕັ້ງແຕ່ຕອນເຂົ້າປ່າໄລຍະທຳອິດ. ນອກນັ້ນກໍມີຍັກພັນບຸລາ ແລະ ນາກວະລຸນນະລາດທີ່ດ່ວນມາຕາມຄຳສັ່ງໃນສານ.

ຂະບວນແຫ່ເຄື່ອນໄປຢ່າງມີຊີວິດຊີວາ. ສຽງເສບ ສຽງຂັບລຳດັງວິວ່ອນໄປຕະຫຼອດທາງ. ຜູ້ທີ່ເບີກບານສຳລານໃຈກວ່າຜູ້ອື່ນໃດທັງໝົດກໍແມ່ນພະຍາກຸສະລາດເພາະພະອົງໄດ້ສົມປາຖະໜາທຸກປະ ການ.

ການເດີນທາງອັນຍາວໄກຫຼາຍໂຍດຜ່ານພົ້ນໄປຢ່າງໄວເພາະພະຍາອິນໄດ້ຫຍໍ້ແຜ່ນດິນໃຫ້ສັ້ນເຂົ້າ. ພະຍາອິນມາຮ່ວມໃນຂະບວນແຫ່ເພື່ອຊື່ນຊົມຍິນດີນຳສິນໄຊທີ່ພະອົງເອງໄດ້ສົ່ງລົງມາເກີດໃນຄັ້ງນັ້ນ.ແຕ່ພະອົງແປງເພດເປັນມະນຸດທຳມະດາຈົນບໍ່ມີຜູ້ໃດສັງເກດເຫັນໄດ້. ແລ້ວໃນທີ່ສຸດ ຂະບວນເດີນທາງກໍມາຮອດປະຕູເມືອງເປັງຈານໃນຕອນຄ້າຍແລງຂອງວັນໜຶ່ງຊຶ່ງອາກາດແຈ່ມແຈ້ງໃສດີ. ຊາວເມືອງອອກມາຕ້ອນຮັບຢ່າງສັບສົ່ງອັ່ງອໍ່ ພາກັນຖືທຸງແລະສົ່ງສຽງຮ້ອງສະແດງຄວາມຍິນ

ດີ. ເອົາເຈົ້າພາກັນຫວ່ານດອກໄມ້ເດຍລະດາດເຕັມທົ່ວທາງ. ບັນຍາ ກາດຟົດຟື້ນຕື່ນຕາຢ່າງບໍ່ເຄີຍເປັນມາກ່ອນ. ຜູ້ຄົນພາກັນລົງສູ່ຖະໜົນ ແລະພາກັນຫຼິ້ນມ່ວນຊື່ນຫຼາຍວາດຫຼາຍແນວ.

ພະຍາກຸສະລາດພາເຊື້ອກະສັດທັງຫ້າເຂົ້າສູ່ພະລາຊະວັງແລ້ວ ລົງຈາກພາຫະນະຍ່າງໄປເທິງຜ້າພົມທີ່ປູລາດໄປຮອດບັນລັງໃນຫໍຄຳ ທ່າມກາງສາຍຕານັບບໍ່ຖ້ວນທີ່ເຝົ້າເບິ່ງຢ່າງຈົດຈໍ່. ຜູ້ຄົນຍໍມືນົບເປັນ ຊອບລອບພ້ອມໆກັນ. ແລ້ວສຽງຄ້ອງສຽງກອງກໍດັງຂຶ້ນຟົດສະນັ່ນ.

ຂ່າວການເດີນທາງຂອງສິນໄຊຄືນສູ່ເມືອງເປັງຈານດັງໄປທົ່ວ ທຸກແຫ່ງ. ແຕ່ລະເມືອງໄດ້ສົ່ງເຄື່ອງບັນນາການມາໃຫ້ເພື່ອສະແດງ ຄວາມຊົມຊື່ນຍິນດີແລະຫວັງເພິ່ງບຸນບາລະມີຂອງທ້າວທີ່ເກັ່ງກ້າລື່ນ ໂລກ.

ມື້ຕໍ່ມາ ພິທີອະພິເສກສິນໄຊຂຶ້ນຄອງລາຊະບັນລັງກໍຖືກຈັດຂຶ້ນ ຕາມປະເພນີ. ພະຍາກຸສະລາດ ອະທິບາຍວ່າ ຕົນເຂົ້າສູ່ປັດສົມໄວແລ້ວ ຈຶ່ງຍົກໃຫ້ລູກຊາຍຜູ້ເກັ່ງກ້າຂຶ້ນນັ່ງເມືອງແທນ ພະອົງສັ່ງໃຫ້ຈັດແຕ່ງ ຮາງລົນຄຳແລະຫໍສົງ ຊຶ່ງປະດັບປະດາດ້ວຍເມັດແກ້ວເຫຼື້ອມຍິບຍັບ. ເສດຕະສັດຖືກຕັ້ງສູງເດັ່ນເປັນສະຫງ່າຢູ່ໃນບໍລິເວນພິທີ. ມີການປູກຕົ້ນ ກ້ວຍ ຕົ້ນອ້ອຍ ຂຽວອຸ່ມທຸ່ມ. ພໍໄດ້ລືກງາມຍາມດີ ພະຍາກຸສະລາດຈູງ ແຂນສິນໄຊເຂົ້າສູ່ຫໍສົງ ໂດຍມີພົນຖືດາບຖືດ້າງແຫ່ຈາກຜາສາດໄປສູ່ ຫໍສົງ ທ່າມກາງສຽງຄ້ອງສຽງກອງ. ພະອົງເອົາຄົນໂທນ້ຳຫອມຖອກ ລົງຮາງລົນນ້ຳໄຫຼລົງທີ່ຫໍສົງຢູ່ອີກເບື້ອງໜຶ່ງ. ຜູ້ອາວຸໂສແລະເສນາມຸນຕີ ທຸກຖ້ວນໜ້າພາກັນຫົດສົງເພື່ອເປັນສິລິມຸງຄຸນແກ່ສິນໄຊ. ກິ່ນນ້ຳຫອມ ລອຍກຸ້ມໄປທົ່ວບໍລິເວນ.

ຫຼັງຈາກນັ້ນ ສິນໄຊກໍນຸ່ງເຄື່ອງເຕັມຍົດແລະກັບຄືນໄປທີ່ຜາສາດ

ເພື່ອຮ່ວມພິທີບາສີ. ທ້າວນັ່ງລົງທີ່ບັນລັງ.ດ້ານຂວາມີມີສີໂຫ. ດ້ານຊ້າຍມີມີສັງທອງ. ຕໍ່ໜ້າມີພາບາສີ. ພາມປຸໂລຫິດແປດຄົນກ່າວນະມັດສະການ ແລະອວຍພອນແລ້ວກໍປະກາດກ້ອງນາມະຍົດຂອງສິນໄຊວ່າ: ພະຍາສັງສິນໄຊມະຫາຈັກກະພັດຕິລາດ. ສ່ວນອີກສອງທ້າວມີນາມະຍົດວ່າ: ສີຫະຈັກກະລາຊາ ແລະສັງຂາລະຈັກ.

ນອກຈາກແຂກພາຍໃນແລ້ວຍັງມີແຂກຈາກຕ່າງແດນ ຄືບັນດາເມືອງຕ່າງໆກໍມາຮ່ວມພິທີນີ້ດ້ວຍ ເພື່ອເປັນສັກຂີພິຍານໃນການຂຶ້ນຄອງລາຊະບັນລັງຂອງທ້າວນ້ອຍຜູ້ເກັ່ງກ້າ.

ສິນໄຊ ທໍາການປົກຄອງບ້ານເມືອງຢ່າງມີສິນທໍາ. ປະຊາລາສະດອນ ຢູ່ເຢັນເປັນສຸກສະໜຸກສ້າງບ້ານແປງເມືອງ. ຜູ້ຄົນຫຼັ່ງໄຫຼມາ ສູ່ເມືອງເປັງຈານຈາກທຸກທິດທຸກທາງເພື່ອອາໄສຮົ່ມບຸນບາລະມີຂອງທ້າວ. ສີໂຫກັບສັງທອງເປັນຄືເງົາຫຽມຕົວສິນໄຊໄປທຸກແຫ່ງ. ບາງເທື່ອ

ທັງສອງກໍແປງເພດເປັນມະນຸດຮູບງາມ.

ບໍ່ດົນຕໍ່ມາ ສິນໄຊໄດ້ສັ່ງປ່ອຍທ້າວທັງຫິກພ້ອມກັບນາງທັງຫິກທີ່ເປັນແມ່ແລະສິ່ງກັບຄືນໄປເມືອງຈຳປາ. ນັນທະເສດຖີຜູ້ເປັນພໍ່ເຖົ້າຮູ້ຈັກຄວາມຜິດຂອງຫຼານຊາຍທັງຫິກທີ່ໄດ້ທຳການຄິດຄົດປອງຮ້າຍອ້າຍນ້ອງພໍ່ດຽວກັນ ຈຶ່ງເອົາຄຳໜັກເທົ່າຕົນຕົວຂອງສິນໄຊມາມອບໃຫ້ເພື່ອເປັນການໄຖ່ໂທດໃຫ້ທ້າວທັງຫິກ.

ສ່ວນວະລຸນນະລາດທີ່ເປັນເຈົ້າປົກຄອງເມືອງນາກຢູ່ໃຕ້ສະໝຸດນັ້ນພາຍຫຼັງມາຮ່ວມພິທີແຫ່ສິນໄຊເຂົ້າເມືອງ ແລ້ວກັບຄືນເມືອເລີຍປ່ອຍບໍ່ມີຍາມເຊົາໜ້າຕາຫຼ່າເຫຼືອງຈິດໃຈບໍ່ຢູ່ກັບເນື້ອກັບຄີງເພາະເອົາແຕ່ຄິດຄະນຶງຫານາງສີດາຈັນຢູ່ທຸກທິວາລາຕີ. ໃນທີ່ສຸດວະລຸນນະລາດກໍຕັດສິນໃຈເດີນທາງສູ່ເມືອງເປັງຈານອີກເທື່ອໜຶ່ງແລະຂໍເອົານາງສີດາຈັນຄືນໄປເປັນມິ່ງມະເຫສີ. ສິນໄຊກັບອາສຸມຸນທາປຶກສາກັນແລະເຫັນດີຕາມຄຳຂໍ. ແລ້ວທັງສອງຄືວະລຸນນະລາດກັບນາງສີດາຈັນກໍກັບຄືນໄປສືບສ້າງເມືອງໃຕ້ສະໝຸດທ່າມກາງຄວາມຍິນດີຊົມຊື່ນຂອງໄພ່ພົນນາກທັງປວງ.

ສິນໄຊ ສີໂຫ ສັງທອງ ພ້ອມກັບປ້າແລະແມ່ຄື ນາງຈັນທາ ກັບນາງລຸນ ແລະອາສຸມຸນທາພາກັນຢູ່ສຸກສະບາຍຫາຍທຸກຫາຍຮ້ອນ ສຸຂີກັນທຸກຖ້ວນໜ້າ ຢູ່ທີ່ເມືອງເປັງຈານ.

ຈົບບໍລິບູນ

ອະທິບາຍຄຳສັບ

[1] ພະໂພທິຍານ : ຜູ້ບັນລຸທຳສູງສຸດ ຫຼື ຕັດສະຣູ້ແລ້ວຈະເປັນ
ພະພຸດທະເຈົ້າ.

[2] ກັງສະດານ : ລະຄັງວົງເດືອນຮູບມົນໆຄືເດືອນເພັງ.

[3] ຊ້າງຖ່າວ : ຊ້າງໜຸ່ມພວມຫັນມັງ.

[4] ຊ້າງພັງ : ຊ້າງແມ່

[5] ຄັນທະເສນ : ນ້ຳຫອມ.

[6] ຊັ່ງ : ໜັກ 80 ບາດ.

[7] ສຸດຍັ້ງມ : ແຫງນເບິ່ງຈົນສຸດຂີດເທົ່າທີ່ຈະແຫງນໄດ້.

[8] ເກີຍຂວາງ : ບ່ອນຫຽບຊ້າງສຳລັບຄົນຂຶ້ນ ຫຼື ລົງຈາກຊ້າງ.

[9] ນ້ຳອຸດຕະມະ : ນ້ຳທີ່ຜ່ານການສູດມົນ ອວຍພອນໃຫ້ຢູ່ເຢັນເປັນສຸກ.

[10] ເລກຫໍລະຄຸນ : ວິທີການຄິດໄລ່ເພື່ອເຮັດປະຕິທິນ ແລະ ທຳນາຍ
ເຫດການຮ້າຍດີ ຕາມປິຈຸລະສັງກາດ.

[11] ເຜືອ : ພວກຂ້ອຍ, ພວກເຮົາ

[12] ຜີສະມ່ອຍ : ລີງໃຫຍ່ຢູ່ຕາມປ່າດົງດິບ, ຖ້າແມ່ນປາໃຫຍ່ຢູ່ທະເລ
ເອີ້ນວ່າ ປາສະມ່ອຍ.

ທາສີໂດຍ...

ໂຮງຮຽນ...

ວັນທີ ເດືອນ ປີ...

ວັນກຳນົດສົ່ງ
DATE DUE

10 SEP 2014
29 SEP 2014
10 JUL 2014

07 JUN 2011	10 SEP 2012
21 JUL 2011	10 OCT 2012
07 SEP 2011	30 OCT 2012
13 SEP 2011	21 NOV 2012
13 OCT 2011	22 JAN 2013
15 NOV 2011	13 MAR 2013
06 DEC 2011	12 SEP 2013
20 DEC 2011	12 DEC 2013
03 JAN 2012	13 FEB 2014
17 JAN 2012	13 MAR 2014
13 MAR 2012	27 MAR 2014
04 APR 2012	10 APR 2014
09 JUL 2012	23 APR 2014
17 AUG 2012	

ເລກໝູ່ໜັງສື..................

95484685 = . ສົມທອງ lovely

ຫນັງສືເລື່ອງ ສັງສິນໄຊ ຂອງ ທ່ານປາງຄຳ ນັກກະວີເອກແຫ່ງລ້ານຊ້າງ
ຖືວ່າເປັນສຸດຍອດຂອງວັນນະຄະດີບູຮານລາວ.
ສຳນວນທີ່ຮຽບຮຽງມາຈາກໃບລານ ໂດຍມະຫາ ສີລາ ວີຣະວົງສ໌ ນີ້
ຖືວ່າເປັນສະບັບສົມບູນກວ່າໝູ່ ແລະພິມອອກຫຼາຍເທື່ອ ໃນຊຸມປີ ພ.ສ. ໒໔໙໐ປີ.
ສຳລັບ ສະບັບປີ ພ.ສ. ໒໕໕໓ ນີ້ ພິມເປັນປີແຫ່ງການສະເຫຼີມສະຫຼອງວຽງຈັນ ເປັນນະຄອນຫຼວງ ຄົບຮອບ ໔໕໐ ປີ.
ເປັນວາລະໂອກາດອັນດີທີ່ງ ທີ່ເລື່ອງສັງສິນໄຊ ທີ່ມີອາຍຸເກືອບ ໔໕໐ ປີ ເລື່ອງນີ້
ໄດ້ພິມອອກເປັນຂຶ້ນໃໝ່ສຳນວນທຳນ້ຳທຳນອງ ເຂົ້າໃຈງ່າຍ ເໝາະສົມກັບຜູ້ອ່ານຮຸ່ນໃໝ່
ແລະເພື່ອໃຫ້ມະຫາຊົນເຂົ້າເຖິງວັນນະຄະດີບູຮານລາວ ໄດ້ງ່າຍຂຶ້ນກວ່າເກົ່າ

NLL 32339

ສຳນັກພິມ ດອກເກດ
ໂທ (+856+21)263748
www.dokked.com
e-mail dokked@veetoo.net
35,000 Kip
ISBN 9932-07-013-0
9789932070138